ເອກະສານ

# ກອງປະຊຸມໃຫຍ່ຄັ້ງທີ VI
# ຂອງ
# ພັກປະຊາຊົນປະຕິວັດລາວ

1996

# ເອກະສານ

## ກອງປະຊຸມໃຫຍ່ ຄັ້ງທີ VI

## ຂອງ

## ພັກປະຊາຊົນປະຕິວັດລາວ

1996



ຄຳໄຕ ສີພັນດອນ

ປະທານ ຄະນະບໍລິຫານງານສູນກາງ ພັກປະຊາຊົນປະຕິວັດລາວ


ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫມັ້ນຍືນ
ພັກປະຊາຊົນ ປະຕິວັດລາວ ທີ່ມີກຽດສະຫງ່າ ຫມັ້ນຍືນ
ກອງປະຊຸມໃຫຍ່
ຄັ້ງທີ VI





**ສູນທອນພົດ**

**ຂອງ ສະຫາຍ ຄຳໄຕ ສີພັນດອນ**

**ປະທານຄະນະບໍລິຫານງານສູນກາງພັກ**

**ກ່າວໄຂກອງປະຊຸມໃຫຍ່ ຄັ້ງທີ VI**

**ຂອງພັກປະຊາຊົນປະຕິວັດລາວ**

**( ວັນທີ 18 ມີນາ1996 ທີ່ວຽງຈັນ )**

---

ຄະນະປະທານທີ່ນັບຖື,

ບັນດາແຂກພາຍໃນ ແລະຕ່າງປະເທດ ທີ່ນັບຖື,

ບັນດາສະຫາຍຜູ່ແທນ ທີ່ຮັກແພງ,

ໃນທ່າມກາງບັນຍາກາດ ທີ່ທົ່ວພັກ ທົ່ວປວງຊົນເຮົາຊື່ນຊົມເບີກບານຕໍ່ຜົນສຳເລັດອັນສຳຄັນໃນຫລາຍດ້ານ ທີ່ບັນລຸໄດ້ໃນການດຳເນີນ ພາລະກິດປ່ຽນແປງໃຫມ່; ມື້ນີ້ກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ ໄດ້ໄຂຂຶ້ນຢ່າງສະຫງ່າຜ່າເຜີຍ !

ໃນນາມຄະນະບໍລິຫານງານສູນກາງພັກ ແລະ ຄະນະປະທານ ກອງປະຊຸມໃຫຍ່, ຂ້າພະເຈົ້າ ຂໍສະແດງຄວາມຄຳນັບຊົມເຊີຍອັນອົບອຸ່ນ ບັນດາສະຫາຍຜູ່ແທນ ເຊິ່ງເປັນຕົວແທນ ໃຫ້ແກ່ສະມາຊິກພັກ ໃນທົ່ວປະເທດກວ່າ 78.000 ສະຫາຍ ຢ່າງສຸດອົກສຸດໃຈ ! ຂໍນະມັດສະການ ພະເຖລານຸເຖລະ ແລະຂໍສະແດງຄວາມຄຳນັບຊົມເຊີຍ ບັນດາສະຫາຍພະນັກງານ ສະມາຊິກພັກອາວຸໂສ ແລະແຂກພາຍໃນປະເທດ ທີ່ໄດ້ມາຮ່ວມ ກອງປະຊຸມໃຫຍ່ຂອງພວກເຮົາໃນຄັ້ງນີ້ ຢ່າງສຸດອົກສຸດໃຈ !

ກອງປະຊຸມໃຫຍ່ ຂອງພວກເຮົາ ສະແດງຄວາມຄໍານັບຊົມເຊີຍ ຄະນະຜູ້ແທນພັກກອມມູນິດຫວຽດນາມ ນໍາໂດຍ ສະຫາຍ ເລຂາທິການໃຫຍ່ ໂດເມືອຍ, ຄະນະຜູ້ແທນ ພັກກອມມູນິດຈີນ ນໍາໂດຍ ສະຫາຍ ອຸນຈາປາວ, ກໍາມະການສໍາຮອງກົມການເມືອງ, ເລຂາໃນຄະນະເລຂາສູນກາງພັກ ທີ່ໄດ້ນໍາເອົາຄວາມສາມັກຄີ ມິດຕະພາບ ຖານສະຫາຍ ອ້າຍນ້ອງ ແລະການສະໜັບສະໜູນ ມາສູ່ພວກເຮົາ ຢ່າງສຸດອົກສຸດໃຈ ! ພວກເຮົາສະແດງຄວາມຊົມເຊີຍ ຄະນະຜູ້ແທນ ພັກປະຊາຊົນກໍາປູເຈຍ ນໍາໂດຍ ສົມເດັດເຈຍສີມ ແລະ ຄະນະຜູ້ແທນ ພັກຟຸນຊິນເປັກ ນໍາໂດຍ ສົມເດັດ ກົມພະ ໂນໂຣດົມ ຣະນະຣິດ ທີ່ໄດ້ນໍາເອົາຄວາມສາມັກຄີ ມິດຕະພາບ ອັນເປັນມູນເຊື້ອ ຂອງປະຊາຊົນກໍາປູເຈຍ ມາສູ່ພວກເຮົາ ຢ່າງສຸດອົກສຸດໃຈ !

ໃນບັນຍາກາດອັນເຄັ່ງຂຶມ ແລະ ມີຄວາມໝາຍອັນເລິກເຊິ່ງນີ້, ກອງປະຊຸມໃຫຍ່ຂອງພວກເຮົາ ອາໄລຫາ ປະທານ ໄກສອນ ພົມວິຫານ ທີ່ເຄົາລົບຮັກ, ຜູ້ທີ່ໄດ້ນໍາພາກໍ່ຕັ້ງພັກ ຂອງພວກເຮົາ ແລະນໍາພາລິເລີ່ມພາລະກິດປ່ຽນແປງໃໝ່ ຢູ່ປະເທດເຮົາ. ພ້ອມກັນນີ້ກໍອາໄລຫາ ບັນດາສະຫາຍຜູ້ນໍາອື່ນໆ ຂອງພັກ ແລະລັດ ທີ່ໄດ້ລ່ວງລັບໄປ ໃນລະຫວ່າງສອງກອງປະຊຸມໃຫຍ່ຂອງພວກເຮົາ ຄື : ສະຫາຍ ສຸພານຸວົງ, ສະຫາຍ ພູມີ ວົງວິຈິດ, ສະຫາຍ ພູນ ສີປະເສີດ ແລະ ສະຫາຍ ສີສົມພອນ ລໍວັນໄຊ ຜູ້ນໍາອາວຸໂສ ຮຸ່ນທໍາອິດຂອງພັກເຮົາ, ສະຫາຍ ສົມລັດ ຈັນທະມາດ ກໍາມະການກົມການເມືອງສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ; ສະຫາຍ ມາ ໄຊຄໍາພິທູນ, ສະຫາຍ ຈັນມີດວງບຸດດີ ແລະ ສະຫາຍ ທອງໄຫລ ກົມມະສິດ, ອະດີດກໍາມະການສູນກາງພັກ ຕະຫລອດເຖິງພະນັກງານ, ສະມາຊິກພັກ, ນັກຮົບ ແລະປະຊາຊົນ ບັນດາຊົນຄົນ ທີ່ໄດ້ເສຍສະຫລະ ເພື່ອອຸດົມຄະຕິອັນສູງສົ່ງຂອງພັກ ແລະຂອງຊາດພວກເຮົາ. ເພື່ອສະແດງຄວາມຮູ້ບຸນຄຸນ ແລະຄວາມອາໄລຮັກ ຕໍ່ບັນດາສະຫາຍທີ່ໄດ້ລ່ວງລັບໄປ, ຂ້າພະເຈົ້າ ສະເໜີສະຫາຍທັງຫລາຍ ຈົ່ງລຸກຂຶ້ນກົ້ມຫົວໄວ້ອາໄລ ໜຶ່ງນາທີ !

ບັນດາສະຫາຍ ທີ່ຮັກແພງ,

ໃນຊຸມປີທີ່ໄດ້ດໍາເນີນການປ່ຽນແປງໃໝ່ ໂດຍສະເພາະ ແມ່ນພາຍຫລັງ ກອງປະຊຸມໃຫຍ່ຄັ້ງທີ V ມານີ້ ພາລະກິດແຫ່ງການກໍ່ສ້າງ ແລະຂະຫຍາຍ ລະບອບປະຊາທິປະ

ໄຕປະຊາຊົນ ໄດ້ດຳເນີນໄປ ຢ່າງເປັນຂະບວນອັນຕັ້ງໜ້າ ແລະ ໄດ້ຮັບຜົນອັນໜ້າຊື່ນຊົມຍິນດີ ໃນຫລາຍດ້ານ. ເວົ້າສະເພາະແຕ່ໃນໄລຍະກະກຽມ ໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ຄັ້ງທີ VI ນີ້, ໃນທົ່ວປະເທດ ກໍໄດ້ມີຂະບວນການ ທີ່ສຳຄັນຫລາຍຢ່າງເກີດຂຶ້ນໃນທຸກຂົງເຂດວຽກງານ. ອັນພົ້ນເດັ່ນ ແມ່ນການກະກຽມກອງປະຊຸມໃຫຍ່ຄັ້ງນີ້ ໄດ້ດຳເນີນໄປ ໂດຍຕິດພັນກັບການປັບປຸງປົວແປງພັກ ໃນຂອບເຂດທົ່ວປະເທດ, ດຳເນີນຊີວິດການເມືອງພາຍໃນຢ່າງກວ້າງຂວາງ, ເລິກເຊິ່ງດ້ວຍຫລາຍບາດກ້າວ ແນ່ໃສ່ປັບປຸງ ບູລະນະພັກເຮົາ ທາງດ້ານການເມືອງ-ແນວຄິດ ແລະການຈັດຕັ້ງ, ເຮັດໃຫ້ສະມາຊິກພັກ ໄດ້ຮັບການບຳລຸງຍົກລະດັບ ທາງດ້ານຄວາມຮັບຮູ້, ທັດສະນະຫລັກໜັ້ນ ແລະ ມີການປ່ຽນແປງຕົນເອງ ໃຫ້ກ້າວໜ້າກວ່າເກົ່າ. ອັນພົ້ນເດັ່ນ ທີ່ສຳຄັນອີກອັນໜຶ່ງ ແມ່ນການເສີມຂະຫຍາຍປະຊາທິປະໄຕພາຍໃນພັກ ແລະໃນທົ່ວສັງຄົມ ເຊິ່ງສະແດງອອກ ໃນການປະກອບຄວາມເຫັນຢ່າງກວ້າງຂວາງ ຂອງສະມາຊິກພັກ, ພະນັກງານ, ຕົວແທນຂອງປະຊາຊົນ ບັນດາຊັ້ນຄົນໃນທົ່ວປະເທດ ເຂົ້າໃສ່ຮ່າງລາຍງານການເມືອງ ແລະ ເອກະສານສຳຄັນຕ່າງໆຂອງກອງປະຊຸມໃຫຍ່ ກໍຄືບັນຫາບຸກຄະລາກອນ. ການເປີດກວ້າງ ແລະ ເສີມຂະຫຍາຍປະຊາທິປະໄຕ ໃນບັ້ນນີ້ ເປັນຂີດໝາຍສຳຄັນ ແຫ່ງການເຕີບໃຫຍ່ຂະຫຍາຍຕົວ ທາງດ້ານສະຕິການເມືອງ ໃນສັງຄົມເຮົາ, ຊ່ວຍໃຫ້ພັກເຮົາໃນການຄົ້ນຄວ້າ ກຳນົດແນວທາງແຜນນະໂຍບາຍ ໂດຍສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ຂອງປະຊາຊົນ. ສິ່ງດັ່ງກ່າວ ຢືນຢັນເຖິງ ຄວາມສຳພັນອັນສະໜິດແໜ້ນ ແບບກາຍຍະອິນຊີ ລະຫວ່າງພັກກັບມະຫາຊົນ ແລະສະແດງໃຫ້ເຫັນຢ່າງເດັ່ນຊັດວ່າ: ພັກເຮົາກໍຄືປະຊາຊົນທຸກເຜົ່າ, ທຸກຊັ້ນຄົນ ມີຄວາມເປັນຫ່ວງ ເປັນໄຍ ແລະມີຄວາມຮັບຜິດຊອບສູງ ຕໍ່ຊະຕາກຳ ແລະອະນາຄົດ ຂອງປະເທດຊາດ ບ້ານເມືອງ. ກອງປະຊຸມໃຫຍ່ ຂໍສະແດງຄວາມຊົມເຊີຍ ຕໍ່ຄວາມຮັບຜິດຊອບການເມືອງ ແລະການປະກອບສ່ວນອັນລ້ຳຄ່ານັ້ນຢ່າງສຸດອົກສຸດໃຈ !

ສະຫາຍທີ່ຮັກແພງທັງຫລາຍ,

ກອງປະຊຸມໃຫຍ່ ຄັ້ງທີ VI ຂອງພັກເຮົາໄຂຂຶ້ນໃນສະພາບແວດລ້ອມອັນອຳນວຍຫລາຍປະການ. ສະພາບການສາກົນ ແລະ ພາກພື້ນ ເຖິງວ່າ ຈະມີຄວາມສັບສົນ ແລະມີບາງດ້ານເປັນສິ່ງທ້າທາຍທົດສອບໃໝ່ກໍຕາມ, ແຕ່ດ້ານທີ່ເປັນເງື່ອນໄຂສະດວກ ແລະ

ເປັນກາລະໂອກາດ ສຳລັບສືບຕໍ່ພັດທະນາສ້າງສາປະເທດຊາດ ຂອງພວກເຮົານັ້ນ ກໍຍັງມີຫລາຍ. ສ່ວນຢູ່ພາຍໃນປະເທດພວກເຮົານັ້ນ ກໍມີປັດໄຈໃຫມ່ ຫລາຍຢ່າງ ພົ້ນເດັ່ນຂຶ້ນ ເຊິ່ງຈະເປັນພື້ນຖານ ໃຫ້ແກ່ການກ້າວສູ່ຄວາມວັດທະນະຖາວອນ ໄດ້ເປັນກ້າວໆ.

ເພື່ອສືບຕໍ່ພາປະເທດຊາດກ້າວຂຶ້ນສູ່ຈຸດຫມາຍ, ກອງປະຊຸມໃຫຍ່ຂອງພວກເຮົາຈະໄດ້ພ້ອມກັນທົບທວນຄືນ ການດຳເນີນພາລະກິດປ່ຽນແປງໃຫມ່ ແລະ ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງພັກ, ຕີລາຄາຜົນໄດ້ຮັບ ແລະ ຂໍ້ຂາດຕົກບົກພ່ອງຢ່າງພາວະວິໄສ, ພ້ອມທັງສະຫລຸບ ແລະ ຖອດຖອນບົດຮຽນໃຫ້ຈະແຈ້ງ. ບົນພື້ນຖານໄຈ້ແຍກທ່າອ່ຽງລວມ ຂອງສາກົນ ແລະ ສະພາວະຄວາມເປັນຈິງ ຂອງປະເທດຊາດ, ກອງປະຊຸມໃຫຍ່ ຈະໄດ້ກຳນົດແຜນນະໂຍບາຍໃຫຍ່, ວາງທິດທາງຫນ້າທີ່ ດ້ານພາຍໃນ ແລະ ຕ່າງປະເທດ ແນໃສ່ສືບຕໍ່ປະຕິບັດແນວທາງພື້ນຖານ ແຫ່ງການກໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນ, ສ້າງພື້ນຖານ ແລະ ຖ່ວງທ່າອັນຫນັກແຫນ້ນ ສຳລັບການກ້າວສູ່ ສະຕະວັດທີ 21.

ກອງປະຊຸມໃຫຍ່ຄັ້ງນີ້ ຍັງຈະໄດ້ພິຈາລະນາ ແລະຮັບຮອງເອົາກົດລະບຽບ ສະບັບດັດແປງ ເຊິ່ງຈະເປັນຂີດຫມາຍສຳຄັນ ໃນການບູລະນະແນວທາງ ການຈັດຕັ້ງ ຂອງພັກເຮົາ ໃຫ້ສອດຄ່ອງຍິ່ງຂຶ້ນ ກັບແນວທາງການເມືອງ, ແນໃສ່ສ້າງພັກເຮົາ ໃຫ້ນັບມື້ນັບເຕີບໃຫຍ່ເຂັ້ມແຂງ, ເປັນແກນນຳທີ່ແທ້ຈິງ ໃນລະບົບການເມືອງ ຂອງລະບອບປະຊາທິປະໄຕປະຊາຊົນ.

ຫນ້າທີ່ສຳຄັນອັນຫນຶ່ງອີກ ຂອງກອງປະຊຸມໃຫຍ່ ແມ່ນການເລືອກຕັ້ງຄະນະບໍລິຫານງານສູນກາງພັກ ສະໄຫມທີ VI, ເຊິ່ງຈະເປັນຫມູ່ຄະນະນຳພາ ຮຸ່ນສືບທອດ ຕໍ່ເນື່ອງທີ່ມີຄວາມສາມັກຄີ ເປັນເອກະພາບສູງ, ແນໃສ່ນຳພາທົ່ວພັກ, ທົ່ວປວງຊົນເຮົາ ປະຕິບັດມະຕິ ຂອງກອງປະຊຸມໃຫຍ່ຄັ້ງນີ້ ໃຫ້ປະກົດຜົນເປັນຈິງ.

ດ້ວຍຫນ້າທີ່ອັນສຳຄັນດັ່ງກ່າວນັ້ນ, ກອງປະຊຸມໃຫຍ່ຄັ້ງທີ VI ຈຶ່ງມີຄວາມຫມາຍອັນໃຫຍ່ຫລວງທີ່ສຸດ, ມັນແມ່ນຂີດຫມາຍໃຫມ່ ແຫ່ງການເຕີບໃຫຍ່ເຂັ້ມແຂງ ຂອງພັກເຮົາ ບົນເສັ້ນທາງ ແຫ່ງການສ້າງປະເທດເຮົາ ໃຫ້ເປັນປະເທດ ສັນຕິພາບ, ເອກະລາດ,

ປະຊາທິປະໄຕ, ເອກະພາບ ແລະ ວັດທະນະຖາວອນ. ຂ້າພະເຈົ້າຫວັງວ່າ ບັນດາສະຫາຍຜູ່ແທນ ຈະຕັ້ງໜ້າເສີມຂະຫຍາຍ ຄວາມຮັບຜິດຊອບ ຂອງຕົນຕໍ່ພັກ ແລະ ຊະຕາກຳ ຂອງປະເທດຊາດ ດ້ວຍການສຸມສະຕິປັນຍາ ແລະ ເຫື່ອແຮງ ເຂົ້າໃນການຄົ້ນຄວ້າຕົກລົງບັນຫາຕ່າງໆ ຢ່າງຖືກຕ້ອງ, ເຮັດໃຫ້ກອງປະຊຸມໃຫຍ່ ບັນລຸຜົນສຳເລັດຢ່າງສະຫງ່າງາມ.

ໃນນາມຄະນະປະທານ ຂ້າພະເຈົ້າ ຂໍປະກາດໄຂກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ ຢ່າງເປັນທາງການນັບແຕ່ບັດນີ້ເປັນຕົ້ນໄປ.



ລາຍງານການເມືອງ
ຂອງຄະນະບໍລິຫານງານສູນກາງພັກ
ຕໍ່ກອງປະຊຸມໃຫຍ່ຄັ້ງທີ VI
ຂອງພັກປະຊາຊົນປະຕິວັດລາວ
( ໃນວັນທີ 18 ມີນາ 1996 )
ສະເຫນີໂດຍ
ສະຫາຍ ຄຳໄຕ ສີພັນດອນ
ປະທານຄະນະບໍລິຫານງານ
ສູນກາງພັກປະຊາຊົນປະຕິວັດລາວ

------------

ຮຽນ ຄະນະປະທານ,
ນະມັດສະການພະເຖລານຸເຖລະ,
ແຂກພາຍໃນ ແລະຕ່າງປະເທດ ທີ່ນັບຖື,
ຜູ່ແທນກອງປະຊຸມໃຫຍ່ ທີ່ຮັກແພງທັງຫລາຍ,

ໃນນາມ ຄະນະບໍລິຫານງານສູນກາງພັກ, ຂ້າພະເຈົ້າ ຂໍສະເຫນີ ລາຍງານການເມືອງ ຕໍ່ກອງປະຊຸມໃຫຍ່ ຂອງພັກເຮົາ.

ພາຍຫລັງ ພາລະກິດ ຕໍ່ສູ້ ປົດປ່ອຍຊາດ ໄດ້ຮັບໄຊຊະນະ ສົມບູນ ໃນປີ 1975, ດ້ວຍຄວາມຈົງຮັກພັກດີ ຕໍ່ຜົນປະໂຫຍດຂອງຊາດ ແລະ ຄວາມມຸ່ງມາດປາຖະຫນາ ຂອງປະຊາຊົນບັນດາເຜົ່າ, ພັກເຮົາໄດ້ນຳພາທົ່ວປວງຊົນ ກ້າວເຂົ້າສູ່ໄລຍະໃຫມ່ ຂອງການປະຕິວັດ, ໄລຍະແຫ່ງການສ້າງລະບອບປະຊາທິປະໄຕປະຊາຊົນ ຕາມທິດກ້າວຂຶ້ນສູ່ສັງຄົມນິ

ຍົມ. ນັ້ນແມ່ນການເລີ່ມຕົ້ນສັງກາດໃໝ່-ສັງກາດແຫ່ງການສ້າງປະເທດລາວ ໃຫ້ເປັນປະເທດ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະວັດທະນະຖາວອນ.

ຜ່ານຍ່ານທາງທຳອິດ ແຫ່ງການກ້າວຂຶ້ນ ຕາມເສັ້ນທາງດັ່ງກ່າວ, ພັກເຮົາໄດ້ເອົາໃຈໃສ່ຖອດຖອນບົດຮຽນຈາກພຶດຕິກຳ ທີ່ມີທັງຜົນສຳເລັດ ແລະຂໍ້ຂາດຕົກບົກພ່ອງ, ບູລະນະແນວທາງ ທີ່ວາງອອກ ໃຫ້ມີຄວາມສອດຄ່ອງຍິ່ງໆຂຶ້ນ ກັບສະພາວະຄວາມເປັນຈິງຂອງ ປະເທດເຮົາ ແລະ ທ່າອ່ຽງລວມ ຂອງໂລກ. ກອງປະຊຸມສູນກາງ ຄັ້ງທີ 7 ( ສະໄໝທີII ) ປີ 1979 ໄດ້ມີຄວາມຄິດລິເລີ່ມ ກ່ຽວກັບການຫັນໄປສູ່ກົນໄກຄຸ້ມຄອງເສດຖະກິດໃໝ່ທີ່ມີປະສິດທິຜົນ. ຈາກນັ້ນມາ ແຜນນະໂຍບາຍດັ່ງກ່າວ ກໍໄດ້ຮັບການປັບປຸງເສີມຂະຫຍາຍ ໃຫ້ຈະແຈ້ງ ແລະຫັນເປັນອັນລະອຽດຢ່າງຕໍ່ເນື່ອງມາເປັນກ້າວໆ ເຊິ່ງຂີດໝາຍສຳຄັນ ແມ່ນກອງປະຊຸມຄົບຄະນະຄັ້ງທີ 5 ແລະຄັ້ງທີ 8 (ສະໄໝທີ IV).

ມາເຖິງກອງປະຊຸມໃຫຍ່ຄັ້ງທີ V ຂອງພັກ, ບັນດາແຜນນະໂຍບາຍປ່ຽນແປງໃໝ່ເຫລົ່ານັ້ນ ໄດ້ຮັບການກຳນົດເປັນແນວທາງປ່ຽນແປງໃໝ່ຮອບດ້ານ ຢ່າງມີ ຫລັກການ.

*ຜົນງານປະຫວັດສາດ ອັນສຳຄັນນັ້ນ ຢັ້ງຢືນຢ່າງຈະແຈ້ງວ່າ ພັກເຮົາໄດ້ມີຄວາມສະດຸ້ງໄວ, ມີຄວາມກ້າຫານປະດິດສ້າງ, ມີຄວາມສະຫລາດສ່ອງໃສ ແລະ ມີຄວາມຮັບຜິດຊອບຢ່າງເຕັມປ່ຽມ ໃນການນຳພາປະເທດຊາດ ເຊິ່ງໃນນັ້ນ ປະທານໄກສອນ ພົມວິຫານ ທີ່ເຄົາລົບຮັກ ໃນຖານະຜູ້ນຳພາລິເລີ່ມພາລະກິດປ່ຽນແປງໃໝ່ໄດ້ມີຜົນງານການປະກອບສ່ວນອັນໃຫຍ່ຫລວງທີ່ສຸດ.*

## *ພາກທີ I*

## *ຜົນການດຳເນີນພາລະກິດປ່ຽນແປງໃໝ່ ແລະການຈັດຕັ້ງປະຕິບັດມະຕິ ກອງປະຊຸມໃຫຍ່ຄັ້ງທີ V*

### *1. ໝາກຜົນທີ່ບັນລຸໄດ້.*

ບັນດາສະຫາຍທີ່ຮັກແພງ,

ໃນ 10 ປີ ທີ່ຜ່ານມາ ສະພາບແວດລ້ອມສາກົນ ໄດ້ມີການຫັນປ່ຽນຢ່າງສັບສົນ, ແຕ່ພວກເຮົາໄດ້ຍຶດໝັ້ນໃນອຸດົມຄະຕິຂອງຕົນຢ່າງບໍ່ຄອນແຄນ, ຈັດຕັ້ງຜັນຂະຫຍາຍແນວທາງປ່ຽນແປງໃໝ່ ແລະມະຕິຂອງກອງປະຊຸມໃຫຍ່ຄັ້ງທີ V ຂອງພັກ ຢ່າງມີຜົນສຳເລັດ. ອັນພົ້ນເດັ່ນ ແມ່ນການປະກາດໃຊ້ລັດຖະທຳມະນູນ ສະບັບທຳອິດ ຂອງສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ແລະແຜນພັດທະນາເສດຖະກິດ-ສັງຄົມ ສຳລັບໄລຍະແຕ່ປີ 1993 ຮອດປີ 2000 ທີ່ເປັນຂີດໝາຍສຳຄັນ ແຫ່ງການຫັນແນວທາງຂອງພັກ ເປັນກົດໝາຍພື້ນຖານຂອງລັດ ແລະເປັນຍຸດທະສາດການພັດທະນາປະເທດ. ພ້ອມດຽວກັນນັ້ນພວກເຮົາກໍໄດ້ນຳພາທົ່ວພັກ, ທົ່ວປວງຊົນ ເສີມຂະຫຍາຍຈິດໃຈເອກະລາດ, ເປັນເຈົ້າຕົນເອງ ແລະມານະຈິດບຸກບືນ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເຮັດໃຫ້ປະເທດເຮົາໄດ້ມີການຫັນປ່ຽນອັນຕັ້ງໜ້າໃນຫລາຍດ້ານຄື: ສະຖຽນລະພາບທາງການເມືອງ ມີຄວາມໜັກແໜ້ນ ແລະຄວາມສະຫງົບປອດໄພໃນສັງຄົມ ມີການຮັບປະກັນໂດຍພື້ນຖານ; ເສດຖະກິດ-ສັງຄົມ ມີການຂະຫຍາຍຕົວຢ່າງຈະແຈ້ງ, ຊີວິດການເປັນຢູ່ ຂອງປະຊາຊົນ ໄດ້ຮັບການປັບປຸງດີຂຶ້ນ; ປະຊາຊົນບັນດາເຜົ່າ ມີຄວາມສາມັກຄີເປັນປຶກແຜ່ນ ແລະມີຄວາມເຊື່ອໝັ້ນ ຕໍ່ແນວທາງຂອງພັກ ແລະອະນາຄົດ ຂອງປະເທດຊາດ; ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ມີເພື່ອນມິດນັບມື້ນັບກວ້າງຂວາງ.

ໝາກຜົນທີ່ບັນລຸໄດ້ໃນແຕ່ລະຂົງເຂດມີດັ່ງຕໍ່ໄປນີ້:

### *ໃນຂົງເຂດເສດຖະກິດ*

ຜົນສຳເລັດອັນພົ້ນເດັ່ນແມ່ນເສດຖະກິດແຫ່ງຊາດໄດ້ຂະຫຍາຍຕົວຕໍ່ເນື່ອງດີຂຶ້ນ; ໃນ ຊຸມປີ 1986-1990 ຍອດຜະລິດຕະພັນພາຍໃນ (GDP) ໄດ້ເພີ່ມຂຶ້ນສະເລ່ຍ 4,8% ຕໍ່ປີ ແລະໃນຊຸມປີ 1991-1995 ໄດ້ເພີ່ມເປັນ 6,4% ຕໍ່ປີ; ອັນສຳຄັນໃນນີ້ ແມ່ນພວກເຮົາກໍ່ສ້າງໄດ້ພື້ນຖານວັດຖຸ-ເຕັກນິກ ແລະໂຄງລ່າງໃໝ່ຈຳນວນໜຶ່ງ ທີ່ເປັນປັດໄຈຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ ໃຫ້ມີບາດກ້າວ ແລະຖ່ວງທ່າໃໝ່ ໃນຕໍ່ໜ້າ.

ເວົ້າສະເພາະໃນຂົງເຂດ ກະສິກຳ-ປ່າໄມ້, ຊາວກະສິກອນ ໄດ້ກ້າວຫັນປະຕິບັດແຜນນະໂຍບາຍຫັນເສດຖະກິດທຳມະຊາດ ໄປສູ່ເສດຖະກິດສິນຄ້າໂດຍເອົາຄອບຄົວເປັນຈຸດເລີ່ມ ແລະ ເປັນຫົວໜ່ວຍຕົ້ນຕໍ. ສິ່ງທີ່ເປັນໜ້າສັນລະເສີນ ແມ່ນຄອບຄົວຕົວແບບ

ດ້ານການເຮັດກະເສດສຸມ, ປູກຝັງລ້ຽງສັດເປັນສິນຄ້າ ໄດ້ເລີ່ມແຜ່ຂະຫຍາຍຫລາຍ ຂຶ້ນຢູ່ຫລາຍທ້ອງຖິ່ນ. ດ້ວຍການສົມທົບກຳລັງແຮງຂອງລັດກັບປະຊາຊົນ, ພື້ນຖານວັດຖຸ-ເຕັກນິກ ດ້ານການກະສິກຳ ໄດ້ຮັບການປັບປຸງ ແລະຂະຫຍາຍຕື່ມ; ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ-ປ່າໄມ້ ເລີ່ມມີຫນໍ່ແຫນງຢູ່ບາງບ່ອນ. ປະກົດການອັນຕັ້ງຫນ້າອີກອັນຫນຶ່ງ ແມ່ນປະຊາຊົນບັນດາເຜົ່າ ຢູ່ຫລາຍບໍລິເວນ ໄດ້ນັບມື້ນັບເຫັນແຈ້ງຜົນຮ້າຍຂອງການຖາງປ່າເຮັດໄຮ່ ແລະຄ່ອຍຫັນໄປສູ່ການເຮັດອາຊີບອື່ນ. ຄະນະພັກ ແລະອຳນາດການປົກຄອງ ກໍໄດ້ມີຄວາມພະຍາຍາມອັນໃຫຍ່ຫລວງ ໃນການຈັດຫາບ່ອນທຳການຜະລິດ ແລະຕັ້ງພູມລຳເນົາຖາວອນໃຫ້ປະຊາຊົນ ທີ່ໄດ້ຫັນໄປສູ່ອາຊີບອື່ນ ດ້ວຍວິທີການ ແລະມາດຕະການອັນເຫມາະສົມກັບແຕ່ລະບ່ອນ; ບາງທ້ອງຖິ່ນ ໄດ້ມີຄວາມປະດິດສ້າງ ໃນການປະຕິບັດນະໂຍບາຍມອບດິນ-ມອບປ່າ ໃຫ້ປະຊາຊົນປົກປັກຮັກສາ, ຄຸ້ມຄອງ ແລະນຳໃຊ້; ການປູກໄມ້, ການຟື້ນຟູ ບູລະນະປ່າໄມ້ ໄດ້ມີບາດກ້າວຂະຫຍາຍຕົວ ໃນເບື້ອງຕົ້ນ ຢູ່ບາງບໍລິເວນ.

ເພື່ອສ້າງການຫັນປ່ຽນໃຫມ່ໃນຊົນນະບົດ ພວກເຮົາໄດ້ມີແຜນນະໂຍບາຍພັດທະນາຊົນນະບົດຮອບດ້ານ. ມາເຖິງປະຈຸບັນ ກຸ່ມເສດຖະກິດ-ວັດທະນະທຳ ໃນເຂດຈຸດສຸມຕ່າງໆ ໄດ້ເກີດເປັນຮູບເປັນຮ່າງຂຶ້ນເປັນກ້າວໆ ດ້ວຍຄວາມເປັນເຈົ້າການຂອງປະຊາຊົນ, ສົມທົບກັບການຊ່ວຍຫນູນ ຂອງລັດ ແລະ ການປະກອບສ່ວນຂອງພາກສ່ວນເສດຖະກິດຕ່າງໆ. ຜົນສຳເລັດດັ່ງກ່າວ ໄດ້ເຮັດໃຫ້ຊົນນະບົດຢູ່ຫລາຍບ່ອນ ມີໃບຫນ້າໃຫມ່ ແລະລະບົບການເມືອງຢູ່ຮາກຖານມີຄວາມຫນັກແຫນ້ນ ເຊິ່ງສະແດງອອກຢ່າງເດັ່ນຊັດ ແມ່ນປະຊາຊົນມີຄວາມສາມັກຄີປຸ້ມລຸມກັນ ເປັນເຈົ້າການສ້າງສາບ້ານຊ່ອງ, ຫ້າວຫັນເຮັດການຜະລິດສິນຄ້າ ເຊິ່ງສ້າງລາຍຮັບໃຫ້ແກ່ຄອບຄົວໄດ້ຫລາຍຂຶ້ນ. ພ້ອມກັນນັ້ນ ກໍໄດ້ກໍ່ສ້າງກິດຈະການ ສາທາລະນະປະໂຫຍດຂຶ້ນ ເຊັ່ນ: ໂຮງຮຽນ, ສຸກສາລາ, ຊົນລະປະທານ, ເສັ້ນທາງຊົນນະບົດ. ປະກົດການ ທີ່ຄວນເສີມຂະຫຍາຍ ແມ່ນປະຊາຊົນໄດ້ຮ່ວມທຶນກັນຂະຫຍາຍຕາຫນ່າງໄຟຟ້າ ຢູ່ໃນຫມູ່ບ້ານຕ່າງໆ ດ້ວຍການຕິດຕັ້ງເຄື່ອງຜະລິດໄຟຟ້າ ຂະຫນາດນ້ອຍ ອັນໄດ້ສ້າງເງື່ອນໄຂອຳນວຍ ໃຫ້ແກ່ການຜະລິດ ແລະການຍົກລະດັບຄຸນນະພາບຊີວິດ ຂອງປະຊາຊົນ.

ກ່ຽວກັບດ້ານອຸດສາຫະກຳ, ພວກເຮົາໄດ້ສຸມໃສ່ສ້າງອຸດສາຫະກຳ ທີ່ເປັນທ່າແຮງ.

ມາເຖິງປະຈຸບັນ ຫນໍ່ແໜງອຸດສາຫະກຳພະລັງງານ, ບໍ່ແຮ່, ອຸດສາຫະກຳຜະລິດວັດສະດຸກໍ່ສ້າງ, ອຸດສາຫະກຳເບົາ ແລະ ອຸດສາຫະກຳຂະຫນາດນ້ອຍ ທີ່ຜະລິດເພື່ອຕະຫລາດພາຍໃນ ແລະເພື່ອຂາອອກ ໄດ້ມີການຂະຫຍາຍຕົວ; *ການຫັດຖະກຳ* ທີ່ເປັນມູນເຊື້ອ ບໍ່ພຽງແຕ່ໄດ້ຮັບການປົກປັກຮັກສາ, ແຕ່ຍັງໄດ້ຮັບການຊຸກຍູ້ສົ່ງເສີມ ຢ່າງກວ້າງຂວາງ, ຜະລິດຕະພັນ ສິລະປະຫັດຖະກຳ ກໍເປັນທີ່ນິຍົມຂອງຊາວຕ່າງປະເທດ.

*ໂດຍຮັບຮູ້ແຈ້ງຄວາມສຳຄັນ ຂອງພື້ນຖານໂຄງລ່າງ ຕໍ່ການພັດທະນາເສດຖະກິດ-ສັງຄົມ, ໃນຊຸມປີທີ່ຜ່ານມາ ພວກເຮົາໄດ້ສຸມທຶນຮອນເຂົ້າໃສ່ ການປັບປຸງ ແລະຂະຫຍາຍລະບົບຄົມມະນາຄົມ ແລະໂທລະຄົມມະນາຄົມ.* ເສັ້ນທາງຫລວງແຫ່ງຊາດ, ເສັ້ນທາງທ້ອງຖິ່ນທີ່ສຳຄັນຈຳນວນຫນຶ່ງ ໄດ້ຮັບການສ້ອມແປງ ແລະສ້າງໃຫມ່, ເຮັດໃຫ້ການໄປມາ ແລະຂົນສົ່ງມີຄວາມສະດວກ ແລະຮັບປະກັນກວ່າເກົ່າ; ທັງຄ່ອຍເຊື່ອມຕໍ່ເຂົ້າກັບເສັ້ນທາງຄົມມະນາຄົມ ຂອງອະນຸພາກພື້ນ. ວຽກງານໂທລະຄົມມະນາຄົມ ມີຄວາມກ້າວຫນ້າ ແລະພວມຫັນສູ່ທັນສະໄຫມເທື່ອລະກ້າວ. ຂົງເຂດບໍລິການທີ່ເປັນສ່ວນສຳຄັນໃນໂຄງປະກອບເສດຖະກິດແຫ່ງຊາດ ກໍໄດ້ມີການຂະຫຍາຍຕົວ, ໂດຍສະເພາະຂະແຫນງການທ່ອງທ່ຽວ.

*ເພື່ອເຮັດໃຫ້ການພັດທະນາສ້າງສາປະເທດຊາດ ດຳເນີນໄປຢ່າງຖືກຕ້ອງຕາມແນວທາງປ່ຽນແປງໃຫມ່, ພວກເຮົາໄດ້ເອົາໃຈໃສ່ປັບປຸງ ແລະເພີ່ມທະວີບົດບາດການຄຸ້ມຄອງມະຫາພາກຂອງລັດ, ກ່ອນອື່ນແມ່ນໄດ້ດຳເນີນການວາງແຜນພັດທະນາເສດຖະກິດ-ສັງຄົມ ສຳລັບໄລຍະຍາວ ແລະໄລຍະສັ້ນ, ພ້ອມກັນນັ້ນກໍໄດ້ສ້າງແຜນພັດທະນາເຂດແຄວັນ ແລະ ແຜນງານລະດັບຊາດຈຳນວນຫນຶ່ງ ແນໃສ່ ເສີມຂະຫຍາຍທ່າແຮງ ຂອງທົ່ວປະເທດ ກໍຄື ຂອງແຕ່ລະທ້ອງຖິ່ນຢ່າງແທດເຫມາະ, ທັງເປັນທິດໃຫ້ແກ່ການຍາດແຍ່ງການລົງທຶນຈາກຕ່າງປະເທດໄດ້ຈະແຈ້ງກວ່າເກົ່າ.* ດ້ານຫນຶ່ງອີກ, ພວກເຮົາກໍຕັ້ງຫນ້າ ປັບປຸງກົນໄກ ແລະນະໂຍບາຍ ທີ່ສອດຄ່ອງກັບເສດຖະກິດຕະຫລາດ, ໄດ້ປັບປຸງນະໂຍບາຍການເງິນແຫ່ງຊາດ, ເຮັດໃຫ້ວຽກງານການເງິນ ຄ່ອຍມີການຫັນປ່ຽນຕັ້ງຫນ້າ ໃນຫລາຍດ້ານ; ການຄຸ້ມຄອງການຈໍລະຈອນ ເງິນຕາ ມີຄວາມຄ່ອງຕົວດີຂຶ້ນ. ການຄ້າພາຍໃນ ແລະ ຕ່າງປະເທດ ໄດ້ເປີດກວ້າງອອກ; ລະບອບການປະສານສົມທົບລະຫວ່າງຂະແຫນງການຕ່າງໆ ທີ່ກ່ຽວຂ້ອງ ກ່ອນອື່ນຫມົດ ແມ່ນລະຫວ່າງການເງິນ,

ການຄ້າ ແລະທະນາຄານ ໄດ້ຮັບການປັບປຸງຕື່ມ. ຈາກນັ້ນຈຶ່ງສ້າງໄດ້ກຳລັງແຮງ ແລະສາມາດອຳນວຍຄວບຄຸມຕະຫລາດໄດ້ໃນລະດັບໃດໜຶ່ງ.

ໃນການຮ່ວມມືເສດຖະກິດກັບພາຍນອກ ກໍມີຄວາມກ້າວໜ້າອັນຈະແຈ້ງ. ຊາວຕ່າງປະເທດ ໄດ້ມາລົງທຶນຢູ່ປະເທດເຮົາ ນັບມື້ນັບເພີ່ມຂຶ້ນ, ໃນນັ້ນໄດ້ລົງທຶນເຂົ້າໃສ່ການກໍ່ສ້າງໂຄງການໃຫຍ່ ແລະສຳຄັນ ທີ່ເປັນທ່າແຮງຂອງປະເທດເຮົາເຊັ່ນ: ການສ້າງອຸດສາຫະກຳພະລັງງານ, ການຂຸດຄົ້ນບໍ່ແຮ່. ການພົວພັນທາງດ້ານເສດຖະກິດ ກັບນາໆປະເທດ ແລະ ເຂດແຄວັນ ໃນໂລກ ໄດ້ເປີດກວ້າງອອກ.

- ວຽກງານເຜີຍແຜ່ຂ່າວສານ ວິທະຍາສາດ ໄດ້ມີບາດກ້າວໃໝ່, ການຄົ້ນຄວ້ານຳໃຊ້ເຕັກໂນໂລຊີໃໝ່ ນັບມື້ໄດ້ຮັບການສົ່ງເສີມ. ພວກເຮົາມີຄວາມສະດຸ້ງໄວພໍສົມຄວນ ແລະ ໄດ້ວາງມາດຕະການຈຳນວນໜຶ່ງ ເພື່ອປົກປັກຮັກສາ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

*ໃນຂົງເຂດສັງຄົມ-ວັດທະນະທຳ*

*ພ້ອມກັບຄວາມເອົາໃຈໃສ່ຂະຫຍາຍເສດຖະກິດ ພວກເຮົາໄດ້ມີຄວາມພະຍາຍາມໃນການພັດທະນາສັງຄົມ ແນໃສ່ປະຕິບັດຈຸດໝາຍອັນສູງສົ່ງ ຂອງລະບອບພວກເຮົາຄື: ເພື່ອຄວາມຢູ່ດີກິນດີຂອງປະຊາຊົນ ແລະຖືວ່າປະຊາຊົນ ເປັນກຳລັງແຮງໃນການພັດທະນາປະເທດຊາດ.*

ກ່ອນອື່ນ, ພວກເຮົາ ໄດ້ເພີ່ມການລົງທຶນ ເຂົ້າໃນການປະຕິຮູບການສຶກສາ ໂດຍສຸມໃສ່ ປັບປຸງ ແລະ ຂະຫຍາຍພື້ນຖານວັດຖຸ-ເຕັກນິກ, ສັບຊ້ອນລະບົບໂຮງຮຽນຕາມທິດອັນເໝາະສົມ, ໄດ້ປັບປຸງເນື້ອໃນຫລັກສູດ, ບຳລຸງຍົກລະດັບຄູອາຈານ ແລະ ເພີ່ມທະວີວຽກງານຄຸ້ມຄອງກວດກາການສຶກສາ. ເບິ່ງທົ່ວໄປແລ້ວ ຄຸນນະພາບຂອງການສຶກສາ ໄດ້ມີການຫັນປ່ຽນດີຂຶ້ນ. ພວກເຮົາມີຄວາມຊົມຊື່ນຍິນດີທີ່ເຫັນວ່າ ການປະກອບສ່ວນຂອງສັງຄົມເຂົ້າໃນການພັດທະນາການສຶກສາ ໄດ້ເພີ່ມຂຶ້ນ, ສ້າງໂອກາດ ແລະເງື່ອນໄຂ ໃຫ້ລູກຫລານ ຂອງປະຊາຊົນບັນດາເຜົ່າ ໄດ້ເຂົ້າໂຮງຮຽນຫລາຍຂຶ້ນ; *ວຽກງານສາທາລະນະສຸກໄດ້ຮັບການປັບປຸງ ແລະຂະຫຍາຍຕາໜ່າງ ໄປຍັງທ້ອງຖິ່ນຮາກຖານ,* ວຽກງານກັບພະ

ຍາດໄດ້ຮັບຄວາມເອົາໃຈໃສ່. ຈາກນັ້ນຈຶ່ງຈຳກັດໂລກລະບາດທີ່ຮ້າຍແຮງ ໄດ້ດີພໍສົມຄວນ. ອັນພົ້ນເດັ່ນ ແມ່ນການດຳເນີນໂຄງການສັກຢາ ແລະ ຢອດຢາໃຫ້ເດັກ ໄດ້ເປັນຂະບວນອັນກວ້າງຂວາງ ເຊິ່ງຈະເຮັດໃຫ້ ປະເທດເຮົາ ປອດຈາກພະຍາດໂປລີໂອ ແລະພະຍາດອື່ນໆ. *ວຽກງານກິລາກາຍະກຳ* ໄດ້ມີຄວາມກ້າວໜ້າໃໝ່ຈຳນວນໜຶ່ງ, ຂະບວນການກິລາມະຫາຊົນ ໄດ້ຮັບການຊຸກຍູ້ສົ່ງເສີມ ໃຫ້ຂະຫຍາຍຕົວກວ້າງຂວາງ ແລະຟົດຟື້ນພໍສົມຄວນ.

ພັກ ແລະລັດເຮົາ ໄດ້ມີຄວາມພະຍາຍາມອັນໃຫຍ່ຫລວງ ໃນການປະຕິບັດລະບອບນະໂຍບາຍຕ່າງໆ ທາງດ້ານສັງຄົມເປັນຕົ້ນ ໄດ້ປັບປຸງລະບົບເງິນເດືອນ ແລະ ລະບອບປະກັນສັງຄົມຂອງລັດຖະກອນ. ພ້ອມກັນນັ້ນ ກໍເອົາໃຈໃສ່ ປະຕິບັດນະໂຍບາຍອຸດໜູນຕ່າງໆ ແກ່ພະນັກງານ, ຜູ້ອອກບຳນານ, ຜູ້ມີຜົນງານ ແລະ ມີຄຸນງາມຄວາມດີຕໍ່ການປະຕິວັດ ກໍ່ຄືຄອບຄົວຂອງຜູ້ທີ່ໄດ້ເສຍສະຫລະ ໃນສະໄໝຕໍ່ສູ້ກູ້ຊາດ. ການສົງເຄາະຊ່ວຍເຫລືອ ຜູ້ທີ່ປະສົບໄພທຳມະຊາດ, ເດັກກຳພ້າ, ກຳພອຍ ກໍໄດ້ຮັບຄວາມເອົາໃຈໃສ່ຈາກລັດ ແລະ ສັງຄົມຫລາຍຂຶ້ນ. ການພັດທະນາສີມືແຮງງານ ແລະ ການຄຸ້ມຄອງແຮງງານພາຍໃນ ແລະຕ່າງປະເທດ ໄດ້ມີການລິເລີ່ມທີ່ຕັ້ງໜ້າ.

ພວກເຮົາໄດ້ເອົາໃຈໃສ່ ຕໍ່ບັນຫາ ການຮັບປະກັນຄວາມຍຸດຕິທຳສັງຄົມ ເປັນຕົ້ນແມ່ນການຮັບປະກັນສິດສະເໝີພາບ ຕໍ່ໜ້າກົດໝາຍ ຂອງພົນລະເມືອງ. ພ້ອມກັນນັ້ນກໍໄດ້ດຳເນີນມາດຕະການຈຳນວນໜຶ່ງ ເພື່ອປົກປ້ອງຜົນປະໂຫຍດອັນຊອບທຳ ຂອງຜູ້ອອກແຮງງານ ແລະຊຸກຍູ້ໃຫ້ຊັ້ນຄົນຕ່າງໆ ປະຕິບັດພັນທະຕໍ່ລັດ ຕາມລະບຽບກົດໝາຍ, ກຳຈັດແກ້ໄຂປະກົດການລ່ວງລະເມີດສິດເປັນເຈົ້າຂອງປະຊາຊົນ.

*ວຽກງານໂຄສະນາຖະແຫລງຂ່າວ* ໄດ້ຮັບການປັບປຸງຢ່າງຕັ້ງໜ້າ ແລະສາມາດປະຕິບັດໜ້າທີ່ການເມືອງໄດ້ດີຂຶ້ນກວ່າເກົ່າ; ພື້ນຖານວັດຖຸ-ເຕັກນິກໄດ້ຮັບການປົວແປງແລະມີອັນໃໝ່, ຄວາມສາມາດ ຂອງການກະຈາຍສຽງ ຂອງວິທະຍຸ ແລະການແຜ່ພາບຂອງໂທລະພາບແຫ່ງຊາດກໍເພີ່ມຂຶ້ນ, ເນື້ອໃນ ແລະລາຍການ ກໍມີຫລາຍຮູບຫລາຍສີ.

ຜົນສຳເລັດໃນການເຄື່ອນໄຫວຕ່າງປະເທດດັ່ງກ່າວນັ້ນ ໄດ້ສ້າງສະພາບແວດລ້ອມທີ່ອຳນວຍ ສຳລັບພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງປະຊາຊົນເຮົາ.

*ກ່ຽວກັບລະບົບການເມືອງ*

***ກ່ອນອື່ນ ພວກເຮົາໄດ້ເອົາໃຈໃສ່ ປັບປຸງຍົກສູງ ຄວາມສາມາດນຳພາ ຂອງພັກ*** ໃນຖານະເປັນແກນນຳຂອງລະບົບການເມືອງ. ພວກເຮົາມີຄວາມພາກພູມໃຈ ທີ່ເຫັນ

ດ້ວຍຄວາມເອກອ້າງທະນົງໃຈຕໍ່ *ວັດທະນະທຳອັນດີງາມ* ທີ່ເປັນເອກະລັກຂອງຊາດ, ປະຊາຊົນເຮົາໄດ້ປະກອບສ່ວນຢ່າງໃຫຍ່ຫລວງ ເຂົ້າໃນການປົກປັກຮັກສາ ແລະ ເພີ່ມພູນຄູນສ້າງມູນມໍລະດົກທາງດ້ານວັດທະນະທຳຂອງຊາດ ແລະຂອງເຜົ່າຕ່າງໆ; ພ້ອມກັນນັ້ນ ກໍໄດ້ເສີມຂະຫຍາຍຄວາມປະດິດສ້າງໃນການສ້າງຜະລິດຕະພັນທາງດ້ານສິລະປະວັນນະຄະດີ, ການປະດິດຄິດແຕ່ງ ແລະການສະແດງ ກໍຕອບສະຫນອງຄວາມນິຍົມຊົມຊອບຂອງມະຫາຊົນ ໄດ້ກວ້າງຂວາງກວ່າເກົ່າ. ການແລກປ່ຽນດ້ານວັດທະນະທຳລະຫວ່າງເຜົ່າຊົນ, ເຂດແຄວ້ນພາຍໃນປະເທດ ກໍຄືລະຫວ່າງປະເທດເຮົາກັບຕ່າງປະເທດ ກໍມີການເປີດກວ້າງ ແລະມີຫລາຍຮູບຫລາຍສີກວ່າເກົ່າ.

*ໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ*

***ພວກເຮົາມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ເຫັນວ່າ ທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນເຮົາ ໄດ້ຖືເອົາການປົກປັກຮັກສາປະເທດຊາດ ເປັນຫນ້າທີ່ຍຸດທະສາດອັນດັບຫນຶ່ງ, ພ້ອມກັບປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ດ້ວຍຄວາມບຸກບືນຕັ້ງຫນ້າ, ປົກປັກຮັກສາ ຄວາມເປັນເອກະລາດ, ອະທິປະໄຕຂອງຊາດ ແລະລະບອບປະຊາທິປະໄຕປະຊາຊົນ ໄວ້ໄດ້ຢ່າງຫມັ້ນຄົງ.***

ຜ່ານການເຝິກຝົນຫລໍ່ຫລອມ ແລະເຄື່ອນໄຫວ ບັນດາກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກໍນັບມື້ນັບເຕີບໃຫຍ່ເຂັ້ມແຂງ ແລະມີຄວາມຊຳນິຊຳນານທາງດ້ານວິຊາສະເພາະ. ຖັນແຖວພະນັກງານ, ນັກຮົບ ໄດ້ເສີມຂະຫຍາຍມູນເຊື້ອອັນດີງາມ ຂອງກຳລັງປະກອບອາວຸດປະຊາຊົນ, ປະຕິບັດຫນ້າທີ່ວຽກງານ ດ້ວຍນ້ຳໃຈເສຍສະຫລະ ແລະໄດ້ຮັບຜົນສຳເລັດອັນສະຫງ່າງາມ. ພ້ອມກັນນັ້ນ ບັນດາກຳລັງປະກອບອາວຸດ ກໍໄດ້ປະກອບສ່ວນຢ່າງສຳຄັນເຂົ້າໃນການສ້າງສາພັດທະນາປະເທດຊາດ ເປັນຕົ້ນແມ່ນຢູ່ເຂດພູດອຍຊົນເຜົ່າ ແລະບໍລິເວນຫ່າງໄກສອກຫລີກ, ປະຕິບັດຢ່າງຖືກຕ້ອງຕາມທິດນຳທີ່ວ່າ ເອົາການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕິດແຫນ້ນກັບການພັດທະນາເສດຖະກິດ-ສັງຄົມ.

ຮັກສາ ຄວາມສາມັກຄີ ເປັນເອກະພາບ, ຄວາມມີລະບຽບວິໄນ ແລະ ຄວາມປອດໃສ ຂາວສະອາດ ຂອງພັກເຮົາ, ຕ້ານ ແລະສະກັດກັ້ນ ການສໍ້ລາດບັງຫລວງໃນຖັນແຖວລັດຖະກອນ.

ເພື່ອເພີ່ມທະວີຄວາມເຂັ້ມແຂງ ໜັກແໜ້ນ ຂອງລະບົບການເມືອງ, ພວກເຮົາໄດ້ຕັ້ງໜ້າປັບປຸງ ແລະເສີມຂະຫຍາຍບົດບາດ ຂອງ *ບັນດາອົງການອຳນາດແຫ່ງລັດ* ຕາມທິດທາງແຫ່ງການສ້າງລັດ ຂອງປະຊາຊົນ, ໂດຍປະຊາຊົນ ແລະເພື່ອປະຊາຊົນ. ໃນຊຸມປີທີ່ຜ່ານມາ ບັນດາອົງການອຳນາດແຫ່ງລັດ ກໍໄດ້ພະຍາຍາມປະຕິບັດພາລະບົດບາດຂອງຕົນ ແລະໄດ້ປະສານສົມທົບຢ່າງແໜ້ນແຟ້ນລະຫວ່າງອົງການນິຕິບັນຍັດ, ອົງການບໍລິຫານ ແລະອົງການຕຸລາການ ຕາມທີ່ໄດ້ລະບຸໄວ້ໃນລັດຖະທຳມະນູນ, ເປັນຕົ້ນແມ່ນໄດ້ຫັນແນວທາງແຜນນະໂຍບາຍລວມ ຂອງພັກ ເປັນຂໍ້ກຳນົດ ກົດໝາຍ, ນະໂຍບາຍລະອຽດ ແລະເຮັດໃຫ້ການຄຸ້ມຄອງລັດ ຄຸ້ມຄອງສັງຄົມ ມີຜົນສັກສິດຂຶ້ນເປັນກ້າວໆ. ແບບແຜນວິທີເຮັດວຽກ ແລະການເຄື່ອນໄຫວ ຂອງກົງຈັກລັດຂັ້ນຕ່າງໆ ໄດ້ຫັນປ່ຽນໄປຕາມທິດທີ່ມີປະສິດທິຜົນຍິ່ງຂຶ້ນ.

*ໃນໄລຍະໃໝ່ນີ້, ພັກເຮົາກໍໄດ້ເພີ່ມທະວີການນຳພາບັນດາອົງການຈັດຕັ້ງມະຫາຊົນ* ເຊິ່ງເປັນອົງປະກອບທີ່ສຳຄັນ ຂອງລະບົບການເມືອງ. ສຳລັບອົງການຈັດຕັ້ງມະຫາຊົນ ກໍໄດ້ມີຄວາມພະຍາຍາມປັບປຸງຕົນເອງ, ເຮັດໃຫ້ການເຄື່ອນໄຫວຄ່ອຍໆ ຄ່ອງຕົວຂຶ້ນ ແລະເລີ່ມມີຫລາຍຮູບຫລາຍສີ. ພວກເຮົາຊົມຊື່ນຍິນດີເປັນຢ່າງຍິ່ງ ທີ່ເຫັນວ່າ ປະຊາຊົນບັນດາເຜົ່າ, ບັນດາຊັ້ນຄົນ ໄດ້ສາມັກຄີເປັນຈິດໜຶ່ງໃຈດຽວກັນ ໃນຄອບຄົວໃຫຍ່ຂອງຊາດລາວເອກະພາບ, ພ້ອມກັນເສີມຂະຫຍາຍສິດສະເໝີພາບ ແລະຄວາມເປັນເຈົ້າເຂົ້າໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ ຢ່າງຕັ້ງໜ້າກວ່າເກົ່າ.

*ສະຫາຍທີ່ຮັກແພງທັງຫລາຍ,*

*ຜົນສຳເລັດທີ່ບັນລຸໄດ້ນັ້ນ ກ່ອນອື່ນໝົດ ແມ່ນຍ້ອນພັກເຮົາໄດ້ວາງແນວທາງປ່ຽນແປງໃໝ່ອອກຢ່າງຖືກຕ້ອງ ແລະທັນການ; ສອດຄ່ອງກັບສະພາວະຄວາມເປັນຈິງຂອງປະ*



ຫຍາຍຕົວ ແລະ ປະເທດອື່ນໆ ກໍມີທ່າຂະຫຍາຍຕົວ; ພວກເຮົາໄດ້ປະກອບສ່ວນຢ່າງເໝາະສົມໃນການເຄື່ອນໄຫວ ຂອງອົງການສະຫະປະຊາຊາດ, ຂອງຂະບວນການບໍ່ຮ່ວມກຸ່ມ ແລະ ບັນດາປະເທດທີ່ໃຊ້ພາສາຝະລັ່ງ ເພື່ອພາລະກິດສັນຕິພາບ, ມິດຕະພາບ ແລະການຮ່ວມມື ໃນທົ່ວໂລກ; ພ້ອມກັນນັ້ນ ກໍໄດ້ເພີ່ມທະວີ ການປະສານສົມທົບ ແລະ ການຮ່ວມມືກັບອົງການຈັດຕັ້ງສາກົນຕ່າງໆ.

*ເທດຊາດ ແລະ ຄວາມມຸ່ງມາດປາຖະໜາ ຂອງປະຊາຊົນ, ທັງສອດຄ່ອງກັບການຫັນປ່ຽນ ຂອງສະພາບແວດລ້ອມສາກົນ.*

*ຜົນສໍາເລັດທີ່ບັນລຸໄດ້ນັ້ນ ກໍ່ແມ່ນຜົນລວມຍອດ ແຫ່ງຄວາມສາມັກຄີ ແລະຄວາມພະຍາຍາມບຸກບືນສູ້ຊົນ ຂອງທົ່ວພັກ, ທົ່ວກອງທັບ ແລະທົ່ວປວງຊົນເຮົາ. ກອງປະຊຸມໃຫຍ່ຂອງພວກເຮົາ ຂໍຊົມເຊີຍພີ່ນ້ອງຮ່ວມຊາດທຸກເຜົ່າ, ທຸກຊັ້ນຄົນ, ທຸກເພດໄວ, ພະນັກງານ, ສະມາຊິກພັກ, ນັກຮົບ ທີ່ໄດ້ເຊີດຊູນ້ຳໃຈຮັກຊາດ, ເສີມຂະຫຍາຍຄວາມປະດິດສ້າງ, ສະຕິປັນຍາ ແລະປະກອບສ່ວນດ້ວຍກຳລັງກາຍ ແລະກຳລັງວັດຖຸ ເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງພວກເຮົາຢ່າງສຸດອົກສຸດໃຈ !*

*ຜົນສໍາເລັດອັນສະຫງ່າງາມທີ່ບັນລຸໄດ້ດັ່ງກ່າວນັ້ນ ກໍ່ແມ່ນຫມາກຜົນແຫ່ງການປະສານສົມທົບຢ່າງກົມກຽວ ລະຫວ່າງການຂຸດຄົ້ນເສີມຂະຫຍາຍກຳລັງພາຍໃນຊາດ ກັບການສະໜັບສະໜູນເປັນໃຈ ແລະການຊ່ວຍເຫລືອ ຂອງເພື່ອນມິດສາກົນທັງຢູ່ໃກ້ ແລະຢູ່ໄກ. ກອງປະຊຸມໃຫຍ່ ຂໍຕາງໜ້າ ປະຊາຊົນລາວທັງຊາດ ສະແດງຄວາມຮູ້ບຸນຄຸນ ແລະ ຄວາມຂອບອົກຂອບໃຈຢ່າງເລິກເຊິ່ງ ຕໍ່ບັນດາປະເທດອ້າຍນ້ອງເພື່ອນມິດ ກໍ່ຄືອົງການຈັດຕັ້ງສາກົນມານະໂອກາດນີ້ດ້ວຍ !*

*ຜົນສໍາເລັດທີ່ບັນລຸໄດ້ທັງຫມົດນັ້ນ ແມ່ນມີຄວາມໝາຍສຳຄັນຍິ່ງ ສຳລັບການສືບຕໍ່ເສີມຂະຫຍາຍໝາກຜົນ ຂອງການປະຕິວັດ ທີ່ປະຊາຊົນເຮົາຍາດມາໄດ້ດ້ວຍການເສຍສະຫລະອັນໃຫຍ່ຫລວງໃນຫລາຍສິບປີທີ່ຜ່ານມາ; ທັງເປັນສິ່ງປຸກລະດົມກຳລັງໃຈ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ປະຊາຊົນບັນດາເຜົ່າ ຂອງພວກເຮົາຕື່ມອີກ ຕໍ່ແນວທາງຂອງພັກ ແລະ ອະນາຄົດຂອງປະເທດຊາດ.*

*2. ຄວາມບົກພ່ອງ ແລະ**ຂໍ້ຄົງຄ້າງ**.*

ໃນຂະນະທີ່ມີຄວາມຊົມຊື່ນຍິນດີ ຕໍ່ໝາກຜົນທີ່ບັນລຸໄດ້ນັ້ນ ພວກເຮົາກໍ່ຮັບຮູ້ວ່າຍັງມີຄວາມບົກພ່ອງແລະ ***ຂໍ້ຄົງຄ້າງ*** ຈຳນວນບໍ່ຫນ້ອຍ ເຊິ່ງຈະຕ້ອງໄດ້ແກ້ໄຂຢ່າງຈິງຈັງ.

ກ່ອນອື່ນຫມົດ ພວກເຮົາເຫັນວ່າ ຄວາມຮັບຮູ້ຂອງຄະນະພັກ ແລະຂະແຫນງການຕ່າງໆ ຕໍ່ແນວທາງປ່ຽນແປງໃຫມ່ ແລະແຜນນະໂຍບາຍ ທີ່ວາງອອກນັ້ນ ຍັງມີອັນບໍ່ທັນ

ເລີກເຊື່ອງ ແລະບໍ່ທັນເປັນເອກະພາບເທື່ອ, ຍິ່ງໄປກວ່ານັ້ນ ຍັງມີຄວາມສັບສົນ ແລະຜິດເຂວໃນເວລາຈັດຕັ້ງປະຕິບັດ ເຊິ່ງສະແດງອອກທີ່ພົ້ນເດັ່ນ ດັ່ງນີ້:

ການປະຕິບັດແຜນນະໂຍບາຍສົ່ງເສີມ ໃຫ້ພາກສ່ວນເສດຖະກິດຕ່າງໆ ປະກອບສ່ວນເຂົ້າໃນການສ້າງສາ ພັດທະນາປະເທດຊາດ ຢ່າງສະເໝີພາບຕໍ່ໜ້າກົດໝາຍ ຍັງບໍ່ທັນດີ; ທັດສະນະ ຕໍ່ແຕ່ລະພາກສ່ວນເສດຖະກິດ ຍັງບໍ່ຈະແຈ້ງ, ບໍ່ເຫັນປະສິດທິຜົນດ້ານເສດຖະກິດ ແລະສັງຄົມຂອງມັນ. ຍ້ອນແນວນັ້ນ ຈຶ່ງມີປະກົດການຫັນລັດວິສາຫະກິດຈຳນວນໜຶ່ງໄປສູ່ຮູບການອື່ນແບບຟ້າວຟັ່ງ, ເຮັດໃຫ້ຊັບສົມບັດ ຂອງລັດ ຕົກເຮ່ຍເສຍຫາຍ. ກົນໄກແລະລະບຽບການຄຸ້ມຄອງ ລັດວິສາຫະກິດ ຍັງບໍ່ທັນຮັດກຸມແລະມີບາງດ້ານບໍ່ທັນສອດຄ່ອງເຊິ່ງພາໃຫ້ລັດວິສາຫະກິດຈຳນວນໜຶ່ງ ເຄື່ອນໄຫວຂາດປະສິດທິຜົນ ແລະຫລຸບທຶນ. ບັນດາອົງການລັດ ບໍ່ທັນເສີມຂະຫຍາຍໄດ້ບົດບາດ ຂອງຕົນ ໃນການຄຸ້ມຄອງເສດຖະກິດຕະຫລາດ, ມີຫລາຍດ້ານຍັງຖືກປ່ອຍປະລະເຫລີງ ເປັນຕົ້ນ ການຄຸ້ມຄອງດ້ານການເງິນ ແລະເງິນຕາ ຍັງບໍ່ທັນເປັນລະບົບທີ່ຮັດກຸມ, ໜັກແໜ້ນ ແລະເດັດຂາດເຂັ້ມງວດ, ການຄວບຄຸມຕະຫລາດ ແລະລາຄາ ກໍຄືການກຳສິນຄ້າ ເພື່ອແຊກແຊງຕະຫລາດໃນເມື່ອຈຳເປັນ ກໍຍັງບໍ່ທັນໄດ້ເຮັດຢ່າງເປັນເຈົ້າການ ແລະບໍ່ທັນມີມາດຕະການຕົວຈິງທີ່ສັກສິດ.

ແຜນນະໂຍບາຍຫັນໄປສູ່ການຜະລິດສິນຄ້າ ໂດຍຖືເອົາຄອບຄົວເປັນຫົວໜ່ວຍຕົ້ນຕໍນັ້ນ ບໍ່ທັນໄດ້ຮັບການຊຸກຍູ້ ແລະສົ່ງເສີມດ້ວຍນະໂຍບາຍ ແລະຮູບການຈັດຕັ້ງອັນລະອຽດຄົບຊຸດ. ມາເຖິງປະຈຸບັນ ພວກເຮົາບໍ່ທັນຄົ້ນຄວ້າ ແລະຈັດຕັ້ງບັນດາຮູບການເສດຖະກິດແບບຮ່ວມມື ຂອງຊາວກະສິກອນ. ຂະແໜງການບໍລິການ ແລະ ອຸດສາຫະກຳ ບໍ່ທັນກະຕຸກຊຸກຍູ້ເທົ່າທີ່ຄວນ ຕໍ່ການຫັນປ່ຽນເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າ. ການສົ່ງເສີມດຶງດູດການລົງທຶນ ເຂົ້າໃນຂົງເຂດ ການຜະລິດກະສິກຳ ຍັງເຮັດໄດ້ໜ້ອຍ. ບັນດາຂະແໜງການສູນກາງ ບໍ່ທັນຕັ້ງໜ້າຊ່ວຍໜູນຄະນະພັກ ແລະ ອຳນາດການປົກຄອງທ້ອງຖິ່ນ ໃນການພັດທະນາຊົນນະບົດ.

ການຜະລິດທັນຍາຫານ ຍັງເປັນຂໍ້ຄົງຄ້າງໃຫຍ່ອັນໜຶ່ງ, ເວົ້າສະເພາະ ການຜະລິດເຂົ້າ ບໍ່ທັນມີໂຄງການປະຕິບັດຕົວຈິງ ສຳລັບແຕ່ລະເຂດ ທີ່ງພຽງ ຈຸດສຸມ. ການປະຕິ

ຜົນສຳເລັດໃນການເຄື່ອນໄຫວຕ່າງປະເທດດັ່ງກ່າວນັ້ນ ໄດ້ສ້າງສະພາບແວດລ້ອມທີ່ອຳນວຍ ສຳລັບພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງປະຊາຊົນເຮົາ.

*ກ່ຽວກັບລະບົບການເມືອງ*

*ກ່ອນອື່ນ ພວກເຮົາໄດ້ເອົາໃຈໃສ່ ປັບປຸງຍົກສູງ ຄວາມສາມາດນຳພາ ຂອງພັກ* ໃນຖານະເປັນແກນນຳຂອງລະບົບການເມືອງ. ພວກເຮົາມີຄວາມພາກພູມໃຈ ທີ່ເຫັນວ່າ ຄະນະພັກທຸກຂັ້ນ ແລະສະມາຊິກພັກ ໂດຍທົ່ວໄປ ໄດ້ເຊື່ອມຊຶມ, ເຂົ້າໃຈ, ເປັນເອກະພາບ ແລະຈົງຮັກພັກດີ ກັບແນວທາງປ່ຽນແປງໃໝ່. ພ້ອມກັນນັ້ນ ກໍໄດ້ອອກແຮງສຶກສາອົບຮົມ ໃຫ້ປະຊາຊົນບັນດາເຜົ່າ ເຂົ້າໃຈນັບມື້ນັບເລິກເຊິ່ງ ແລະ ມີຄວາມເຊື່ອໝັ້ນຕໍ່ແນວທາງກ້າວຂຶ້ນ ແລະອະນາຄົດ ຂອງປະເທດຊາດ. ເພື່ອຍົກສູງຄວາມສາມາດນຳພາຂອງພັກຢ່າງບໍ່ຢຸດຢັ້ງນັ້ນ, ພັກເຮົາໄດ້ບູລະນະແນວທາງການຈັດຕັ້ງໃຫ້ສອດຄ່ອງກັບແນວທາງການເມືອງໃນໄລຍະໃໝ່. ອັນພົ້ນເດັ່ນ ແມ່ນໄດ້ປັບປຸງ ດັດແປງ ລະບົບການຈັດຕັ້ງ ແລະ ແບບວິທີນຳພາ ຂອງຄະນະພັກຂັ້ນຕ່າງໆ ແຕ່ສູນກາງລົງຮອດຮາກຖານ, ທັງປະຕິບັດຫລັກການລວມສູນຢ່າງເຂັ້ມງວດ, ທັງເສີມຂະຫຍາຍປະຊາທິປະໄຕພາຍໃນຢ່າງກວ້າງຂວາງ, ສຸມໃສ່ປັບປຸງການຈັດຕັ້ງຮາກຖານພັກ, ສົ່ງເສີມ ການຕິຊົມຕົນເອງ ແລະ ຕິຊົມກັນ. ຈາກນັ້ນ ສະມາຊິກພັກສ່ວນຫລວງຫລາຍ ຈຶ່ງຮັກສາໄດ້ ຄວາມເປັນແບບຢ່າງນຳໜ້າໃນການປະຕິບັດໜ້າທີ່ວຽກງານ ແລະ ໃນດ້ານຄຸນສົມບັດ ສິນທຳປະຕິວັດ. ການຂະຫຍາຍພັກ ໄດ້ດຳເນີນຢ່າງເປັນປົກກະຕິ ຕາມທິດນຳເອົາຄຸນນະພາບເປັນຕົ້ນຕໍ ແລະດ້ວຍການເຂົ້າຮ່ວມ ຂອງມະຫາຊົນ. ໃນ 5 ປີທີ່ຜ່ານມາ ຈຳນວນສະມາຊິກພັກ ໄດ້ເພີ່ມຂຶ້ນ ຫລາຍກວ່າ 15.000 ສະຫາຍ.

ຄຽງຄູ່ກັບວຽກງານສ້າງພັກ, ວຽກງານພະນັກງານ ກໍໄດ້ມີການຫັນປ່ຽນອັນຕັ້ງໜ້າໃນຫລາຍດ້ານ. ເບິ່ງລວມແລ້ວ ພະນັກງານສ່ວນຫລວງຫລາຍ ຍັງຮັກສາໄດ້ຫລັກໝັ້ນ, ທັດສະນະການເມືອງ ຂອງພັກ, ມີນ້ຳໃຈບຸກບືນເຮັດໜ້າທີ່. ໃນຊຸມປີທີ່ຜ່ານມາ ຄະນະພັກຂັ້ນຕ່າງໆ ໄດ້ເພີ່ມທະວີການນຳພາວຽກງານກວດກາ, ເຮັດໃຫ້ວຽກງານນີ້ ໄດ້ດຳເນີນຢ່າງເລິກເຊິ່ງ ເປັນລະບົບກວ່າເກົ່າ, ປະກອບສ່ວນຢ່າງສຳຄັນ ເຂົ້າໃນການປົກປັກ

ຮັກສາ ຄວາມສາມັກຄີ ເປັນເອກະພາບ, ຄວາມມີລະບຽບວິໄນ ແລະ ຄວາມປອດໃສ ຂາວສະອາດ ຂອງພັກເຮົາ, ຕ້ານ ແລະສະກັດກັ້ນ ການສໍ້ລາດບັງຫລວງໃນຖັນແຖວລັດຖະກອນ.

ເພື່ອເພີ່ມທະວີຄວາມເຂັ້ມແຂງ ໜັກແໜ້ນ ຂອງລະບົບການເມືອງ, ພວກເຮົາໄດ້ຕັ້ງໜ້າປັບປຸງ ແລະເສີມຂະຫຍາຍບົດບາດ ຂອງ *ບັນດາອົງການອຳນາດແຫ່ງລັດ* ຕາມທິດທາງແຫ່ງການສ້າງລັດ ຂອງປະຊາຊົນ, ໂດຍປະຊາຊົນ ແລະເພື່ອປະຊາຊົນ. ໃນຊຸມປີທີ່ຜ່ານມາ ບັນດາອົງການອຳນາດແຫ່ງລັດ ກໍໄດ້ພະຍາຍາມປະຕິບັດພາລະບົດບາດຂອງຕົນ ແລະໄດ້ປະສານສົມທົບຢ່າງແໜ້ນແຟ້ນລະຫວ່າງອົງການນິຕິບັນຍັດ, ອົງການບໍລິຫານ ແລະອົງການຕຸລາການ ຕາມທີ່ໄດ້ລະບຸໄວ້ໃນລັດຖະທຳມະນູນ, ເປັນຕົ້ນແມ່ນໄດ້ຫັນແນວທາງແຜນນະໂຍບາຍລວມ ຂອງພັກ ເປັນຂໍ້ກຳນົດ ກົດໝາຍ, ນະໂຍບາຍລະອຽດ ແລະເຮັດໃຫ້ການຄຸ້ມຄອງລັດ ຄຸ້ມຄອງສັງຄົມ ມີຜົນສັກສິດຂຶ້ນເປັນກ້າວໆ. ແບບແຜນວິທີເຮັດວຽກ ແລະການເຄື່ອນໄຫວ ຂອງກົງຈັກລັດຂັ້ນຕ່າງໆ ໄດ້ຫັນປ່ຽນໄປຕາມທິດທີ່ມີປະສິດທິຜົນຍິ່ງຂຶ້ນ.

*ໃນໄລຍະໃໝ່ນີ້, ພັກເຮົາກໍໄດ້ເພີ່ມທະວີການນຳພາບັນດາອົງການຈັດຕັ້ງມະຫາຊົນ* ເຊິ່ງເປັນອົງປະກອບທີ່ສຳຄັນ ຂອງລະບົບການເມືອງ. ສຳລັບອົງການຈັດຕັ້ງມະຫາຊົນ ກໍໄດ້ມີຄວາມພະຍາຍາມປັບປຸງຕົນເອງ, ເຮັດໃຫ້ການເຄື່ອນໄຫວຄ່ອຍໆ ຄ່ອງຕົວຂຶ້ນ ແລະເລີ່ມມີຫລາຍຮູບຫລາຍສີ. ພວກເຮົາຊົມຊື່ນຍິນດີເປັນຢ່າງຍິ່ງ ທີ່ເຫັນວ່າ ປະຊາຊົນບັນດາເຜົ່າ, ບັນດາຊັ້ນຄົນ ໄດ້ສາມັກຄີເປັນຈິດໜຶ່ງໃຈດຽວກັນ ໃນຄອບຄົວໃຫຍ່ຂອງຊາດລາວເອກະພາບ, ພ້ອມກັນເສີມຂະຫຍາຍສິດສະເໝີພາບ ແລະຄວາມເປັນເຈົ້າເຂົ້າໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ ຢ່າງຕັ້ງໜ້າກວ່າເກົ່າ.

*ສະຫາຍທີ່ຮັກແພງທັງຫລາຍ,*

*ຜົນສຳເລັດທີ່ບັນລຸໄດ້ນັ້ນ ກ່ອນອື່ນໝົດ ແມ່ນຍ້ອນພັກເຮົາໄດ້ວາງແນວທາງປ່ຽນແປງໃໝ່ອອກຢ່າງຖືກຕ້ອງ ແລະທັນການ; ສອດຄ່ອງກັບສະພາວະຄວາມເປັນຈິງຂອງປະ*

*ເທດຊາດ ແລະ ຄວາມມຸ່ງມາດປາຖະໜາ ຂອງປະຊາຊົນ, ທັງສອດຄ່ອງກັບການຫັນປ່ຽນ ຂອງສະພາບແວດລ້ອມສາກົນ.*

*ຜົນສຳເລັດທີ່ບັນລຸໄດ້ນັ້ນ ກໍ່ແມ່ນຜົນລວມຍອດ ແຫ່ງຄວາມສາມັກຄີ ແລະຄວາມພະຍາຍາມບຸກບືນສູ້ຊົນ ຂອງທົ່ວພັກ, ທົ່ວກອງທັບ ແລະທົ່ວປວງຊົນເຮົາ. ກອງປະຊຸມໃຫຍ່ຂອງພວກເຮົາ ຂໍຊົມເຊີຍພີ່ນ້ອງຮ່ວມຊາດທຸກເຜົ່າ, ທຸກຊັ້ນຄົນ, ທຸກເພດໄວ, ພະນັກງານ, ສະມາຊິກພັກ, ນັກຮົບ ທີ່ໄດ້ເຊີດຊູນ້ຳໃຈຮັກຊາດ, ເສີມຂະຫຍາຍຄວາມປະດິດສ້າງ, ສະຕິປັນຍາ ແລະປະກອບສ່ວນດ້ວຍກຳລັງກາຍ ແລະກຳລັງວັດຖຸ ເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງພວກເຮົາຢ່າງສຸດອົກສຸດໃຈ !*

*ຜົນສຳເລັດອັນສະຫງ່າງາມທີ່ບັນລຸໄດ້ດັ່ງກ່າວນັ້ນ ກໍແມ່ນໝາກຜົນແຫ່ງການປະສານສົມທົບຢ່າງກົມກຽວ ລະຫວ່າງການຂຸດຄົ້ນເສີມຂະຫຍາຍກຳລັງພາຍໃນຊາດ ກັບການສະໜັບສະໜູນເປັນໃຈ ແລະການຊ່ວຍເຫລືອ ຂອງເພື່ອນມິດສາກົນທັງຢູ່ໃກ້ ແລະຢູ່ໄກ. ກອງປະຊຸມໃຫຍ່ ຂໍຕາງໜ້າ ປະຊາຊົນລາວທັງຊາດ ສະແດງຄວາມຮູ້ບຸນຄຸນ ແລະຄວາມຂອບອົກຂອບໃຈຢ່າງເລິກເຊິ່ງ ຕໍ່ບັນດາປະເທດອ້າຍນ້ອງເພື່ອນມິດ ກໍຄືອົງການຈັດຕັ້ງສາກົນມານະໂອກາດນີ້ດ້ວຍ !*

*ຜົນສຳເລັດທີ່ບັນລຸໄດ້ທັງໝົດນັ້ນ ແມ່ນມີຄວາມໝາຍສຳຄັນຍິ່ງ ສຳລັບການສືບຕໍ່ເສີມຂະຫຍາຍໝາກຜົນ ຂອງການປະຕິວັດ ທີ່ປະຊາຊົນເຮົາຍາດມາໄດ້ດ້ວຍການເສຍສະຫລະອັນໃຫຍ່ຫລວງໃນຫລາຍສິບປີທີ່ຜ່ານມາ; ທັງເປັນສິ່ງປຸກລະດົມກຳລັງໃຈ ແລະສ້າງຄວາມເຊື່ອໝັ້ນໃຫ້ແກ່ປະຊາຊົນບັນດາເຜົ່າ ຂອງພວກເຮົາຕື່ມອີກ ຕໍ່ແນວທາງຂອງພັກ ແລະ ອະນາຄົດຂອງປະເທດຊາດ.*

*2. ຄວາມບົກພ່ອງ ແລະຂໍ້ຄົງຄ້າງ.*

ໃນຂະນະທີ່ມີຄວາມຊົມຊື່ນຍິນດີ ຕໍ່ໝາກຜົນທີ່ບັນລຸໄດ້ນັ້ນ ພວກເຮົາກໍຮັບຮູ້ວ່າຍັງມີຄວາມບົກພ່ອງແລະ ***ຂໍ້ຄົງຄ້າງ*** ຈຳນວນບໍ່ໜ້ອຍ ເຊິ່ງຈະຕ້ອງໄດ້ແກ້ໄຂຢ່າງຈິງຈັງ.

ກ່ອນອື່ນໝົດ ພວກເຮົາເຫັນວ່າ ຄວາມຮັບຮູ້ຂອງຄະນະພັກ ແລະຂະແໜງການຕ່າງໆ ຕໍ່ແນວທາງປ່ຽນແປງໃໝ່ ແລະແຜນນະໂຍບາຍ ທີ່ວາງອອກນັ້ນ ຍັງມີອັນບໍ່ທັນ

ເລີກເຊິ່ງ ແລະບໍ່ທັນເປັນເອກະພາບເທື່ອ, ຍິ່ງໄປກວ່ານັ້ນ ຍັງມີຄວາມສັບສົນ ແລະຜິດ ເຂວໃນເວລາຈັດຕັ້ງປະຕິບັດ ເຊິ່ງສະແດງອອກທີ່ພົ້ນເດັ່ນ ດັ່ງນີ້:

ການປະຕິບັດແຜນນະໂຍບາຍສົ່ງເສີມ ໃຫ້ພາກສ່ວນເສດຖະກິດຕ່າງໆ ປະກອບ ສ່ວນເຂົ້າໃນການສ້າງສາ ພັດທະນາປະເທດຊາດ ຢ່າງສະເໝີພາບຕໍ່ໜ້າກົດໝາຍ ຍັງ ບໍ່ທັນດີ; ທັດສະນະ ຕໍ່ແຕ່ລະພາກສ່ວນເສດຖະກິດ ຍັງບໍ່ຈະແຈ້ງ, ບໍ່ເຫັນປະສິດທິຜົນ ດ້ານເສດຖະກິດ ແລະສັງຄົມຂອງມັນ. ຍ້ອນແນວນັ້ນ ຈຶ່ງມີປະກົດການຫັນລັດວິສາຫະ ກິດຈຳນວນໜຶ່ງໄປສູ່ຮູບການອື່ນແບບຟ້າວຟັ່ງ, ເຮັດໃຫ້ຊັບສິນບັດ ຂອງລັດ ຕົກເຮ່ຍເສຍ ຫາຍ. ກົນໄກແລະລະບຽບການຄຸ້ມຄອງ ລັດວິສາຫະກິດ ຍັງບໍ່ທັນຮັດກຸມແລະມີບາງດ້ານ ບໍ່ທັນສອດຄ່ອງເຊິ່ງພາໃຫ້ລັດວິສາຫະກິດຈຳນວນໜຶ່ງ ເຄື່ອນໄຫວຂາດປະສິດທິຜົນ ແລະ ຫລຸບທຶນ. ບັນດາອົງການລັດ ບໍ່ທັນເສີມຂະຫຍາຍໄດ້ບົດບາດ ຂອງຕົນ ໃນການຄຸ້ມຄອງ ເສດຖະກິດຕະຫລາດ, ມີຫລາຍດ້ານຍັງຖືກປ່ອຍປະລະເຫລີງ ເປັນຕົ້ນ ການຄຸ້ມຄອງດ້ານ ການເງິນ ແລະເງິນຕາ ຍັງບໍ່ທັນເປັນລະບົບທີ່ຮັດກຸມ, ໜັກແໜ້ນ ແລະເດັດຂາດເຂັ້ມ ງວດ, ການຄວບຄຸມຕະຫລາດ ແລະລາຄາ ກໍຄືການກຳສິນຄ້າ ເພື່ອແຊກແຊງຕະ ຫລາດໃນເມື່ອຈຳເປັນ ກໍຍັງບໍ່ທັນໄດ້ເຮັດຢ່າງເປັນເຈົ້າການ ແລະບໍ່ທັນມີມາດຕະການຕົວ ຈິງທີ່ສັກສິດ.

ແຜນນະໂຍບາຍຫັນໄປສູ່ການຜະລິດສິນຄ້າ ໂດຍຖືເອົາຄອບຄົວເປັນຫົວໜ່ວຍ ຕົ້ນຕໍນັ້ນ ບໍ່ທັນໄດ້ຮັບການຊຸກຍູ້ ແລະສົ່ງເສີມດ້ວຍນະໂຍບາຍ ແລະຮູບການຈັດຕັ້ງອັນ ລະອຽດຄົບຊຸດ. ມາເຖິງປະຈຸບັນ ພວກເຮົາບໍ່ທັນຄົ້ນຄວ້າ ແລະຈັດຕັ້ງບັນດາຮູບການເສດ ຖະກິດແບບຮ່ວມມື ຂອງຊາວກະສິກອນ. ຂະແໜງການບໍລິການ ແລະ ອຸດສາຫະກຳ ບໍ່ ທັນກະຕຸກຊຸກຍູ້ເທົ່າທີ່ຄວນ ຕໍ່ການຫັນປ່ຽນເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າ. ການສົ່ງເສີມດຶງດູດການລົງທຶນ ເຂົ້າໃນຂົງເຂດ ການຜະລິດກະສິກຳ ຍັງເຮັດໄດ້ໜ້ອຍ. ບັນດາຂະແໜງການສູນກາງ ບໍ່ທັນຕັ້ງໜ້າຊ່ວຍໜູນຄະນະພັກ ແລະ ອຳນາດການປົກ ຄອງທ້ອງຖິ່ນ ໃນການພັດທະນາຊົນນະບົດ.

ການຜະລິດທັນຍາຫານ ຍັງເປັນຂໍ້ຄົງຄ້າງໃຫຍ່ອັນໜຶ່ງ, ເວົ້າສະເພາະ ການຜະ ລິດເຂົ້າ ບໍ່ທັນມີໂຄງການປະຕິບັດຕົວຈິງ ສຳລັບແຕ່ລະເຂດ ທີ່ງພຽງ ຈຸດສຸມ. ການປະຕິ

ບັດມາດຕະການຄຸ້ມຄອງທີ່ດິນ ບໍ່ທັນເຂັ້ມງວດ; ແຜນນະໂຍບາຍມອບດິນ, ມອບປ່າໃຫ້ປະຊາຊົນເປັນຜູ່ປົກປັກຮັກສາ, ຄຸ້ມຄອງແລະນຳໃຊ້ ບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງກວ້າງຂວາງ ແລະເປັນເອກະພາບໃນທົ່ວປະເທດ. ແຜນງານຈຳກັດການຖາງປ່າເຮັດໄຮ່ ແລະຈັດສັນອາຊີບຄົງທີ່ ໄດ້ຮັບການເຫັນດີເຫັນພ້ອມຈາກປະຊາຊົນບັນດາເຜົ່າແລ້ວ, ແຕ່ພວກເຮົາບໍ່ທັນມີມາດຕະການເຮັດຕົວຈິງ ທີ່ສອດຄ່ອງກັບຈຸດພິເສດ ຂອງແຕ່ລະບ່ອນ; ວຽກງານປົກປັກຮັກສາ, ຟື້ນຟູບູລະນະປ່າໄມ້ ແລະ ການປູກໄມ້ ບໍ່ທັນເປັນຂະບວນການອັນກວ້າງຂວາງຂອງມະຫາຊົນເທື່ອ.

ການສຳຫລວດ, ເກັບກຳຂໍ້ມູນພື້ນຖານ ສຳລັບພັດທະນາເຂດແຄວ້ນ ແລະຂະແໜງການເສດຖະກິດຕ່າງໆ ຍັງເຮັດໄດ້ໜ້ອຍ, ບໍ່ທັນມີແຜນແມ່ບົດອັນກວມລວມ ກ່ຽວກັບການພັດທະນາພື້ນຖານໂຄງລ່າງ ແລະພື້ນຖານວັດຖຸເຕັກນິກ. ບໍ່ທັນວາງມາດຕະການດ້ານຄຸນນະພາບສຳລັບໂຄງການກໍ່ສ້າງຕ່າງໆ, ທັງບໍ່ຄວບຄຸມກວດກາ ຢ່າງເຂັ້ມງວດ. ບໍ່ທັນມີນະໂຍບາຍອັນລະອຽດ ກ່ຽວກັບການສົ່ງເສີມ ແລະ ປົກປ້ອງອຸດສາຫະກຳ ແລະຫັດຖະກຳ ພາຍໃນປະເທດ.

ນອກຈາກຂໍ້ບົກພ່ອງໃນຂົງເຂດເສດຖະກິດ ດັ່ງກ່າວນັ້ນ, ຂົງເຂດສັງຄົມ-ວັດທະນະທຳ ກໍມີຂໍ້ຄົງຄ້າງຈຳນວນໜຶ່ງ. ອັນພົ້ນເດັ່ນ ແມ່ນບໍ່ທັນມີມາດຕະການ ອັນຄົບຖ້ວນສຳລັບການແກ້ໄຂ ສາຍກ່ຽວພັນລະຫວ່າງສິດ, ພັນທະ ແລະຜົນປະໂຫຍດ ຂອງພົນລະເມືອງ; ລະບຽບກົດໝາຍທີ່ວາງອອກ ບໍ່ທັນປະຕິບັດຢ່າງເຂັ້ມງວດ ອັນເປັນການແຕະຕ້ອງເຖິງສິດສະເໝີພາບ ແລະຄວາມຍຸດຕິທຳໃນສັງຄົມ. ການດັດສົມລາຍໄດ້ ແລະການແຈກຢາຍຄືນໃໝ່ ບໍ່ທັນເຮັດໄດ້ຢ່າງສົມເຫດສົມຜົນ. ການປະຕິຮູບການສຶກສາ ຍັງຊັກຊ້າ, ບໍ່ທັນກັບຄວາມຮຽກຮ້ອງຕ້ອງການຕົວຈິງ ເປັນຕົ້ນແມ່ນບໍ່ທັນມີວິທີການ ຍົກລະດັບຄວາມຮູ້ທົ່ວໄປຂອງປະຊາຊົນ ກໍຄືການສ້າງຖັນແຖວປັນຍາຊົນ ແລະນັກວິຊາຊີບ ເພື່ອຕອບສະໜອງຄວາມຕ້ອງການທີ່ເພີ່ມຂຶ້ນຂອງການພັດທະນາປະເທດຊາດໃນໄລຍະໃໝ່.

ນະໂຍບາຍ ຂອງພັກ ແລະ ລັດ ດ້ານສາທາລະນະສຸກ ບໍ່ທັນໄດ້ຮັບການປະຕິບັດເປັນຢ່າງດີ. ການນຳພາ ແລະ ສຶກສາອົບຮົມ ດ້ານແນວຄິດ, ຄຸນສົມບັດ ແລະ ຈັນຍາທຳ ໃຫ້ຖັນແຖວແພດໝໍ ຍັງມີຫລາຍດ້ານອ່ອນ; ການຄຸ້ມຄອງກວດກາຂອງລັດ ຕໍ່

ການບໍລິການດ້ານການແພດ ຍັງມີຊ່ອງວ່າງຫລາຍ. ບໍ່ທັນມີລະບຽບການອັນຈະແຈ້ງກ່ຽວກັບການປິ່ນປົວແບບເສຍຄ່າ ແລະບໍ່ເສຍຄ່າ.

ພວກເຮົາບໍ່ທັນມີວິທີການລະດົມ ກຳລັງແຮງສັງລວມ ຂອງທົ່ວສັງຄົມ ສົມທົບກັບລັດໃນການປະຕິບັດນະໂຍບາຍ ຕໍ່ຜູ້ອອກບຳນານ, ຜູ້ມີຄຸນງາມຄວາມດີ ຕໍ່ການປະຕິວັດ ແລະຄອບຄົວ ຂອງຜູ້ທີ່ໄດ້ເສຍສະຫລະເພື່ອຊາດ.

ເບິ່ງທົ່ວໄປແລ້ວ ການປົກປັກຮັກສາ ແລະ ເສີມຂະຫຍາຍວັດທະນະທຳອັນດີງາມຂອງຊາດ, ຂອງເຜົ່າຕ່າງໆ ບໍ່ທັນເປັນຂະບວນຂອງມະຫາຊົນ, ບໍ່ທັນໄດ້ຄົ້ນຄວ້າກ່ຽວກັບພື້ນຖານ ວັດທະນະທຳ ແລະຂະນົບທຳນຽມປະເພນີອັນດີງາມຂອງຊາດ; ປະກົດການຫຍໍ້ທໍ້ທາງສັງຄົມຈຳນວນໜຶ່ງ ໄດ້ເກີດຂຶ້ນ, ແຕ່ມາດຕະການ ການແກ້ໄຂບໍ່ທັນສັກສິດ ແລະທັນການ.

ແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ບໍ່ທັນໄດ້ຮັບການປະຕິບັດເປັນຢ່າງດີ ເຊິ່ງສະແດງອອກໃນການປຸກລະດົມມະຫາຊົນ ເຂົ້າຮ່ວມໃນວຽກງານນີ້ ເຮັດບໍ່ໄດ້ເປັນປົກກະຕິ; ການປະຕິບັດທິດນຳສົມທົບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກັບວຽກງານກໍ່ສ້າງຮາກຖານ, ພັດທະນາເສດຖະກິດ ແລະຂະຫຍາຍວັດທະນະທຳ ບໍ່ທັນໜັກແໜ້ນ ແລະກວ້າງຂວາງ. ການປັບປຸງ ແລະກໍ່ສ້າງກຳລັງປະກອບອາວຸດ ໂດຍສະເພາະ ແມ່ນການກໍ່ສ້າງກຳລັງປ້ອງກັນຕົນເອງ, ກຳລັງປ້ອງກັນຄວາມສະຫງົບຢູ່ທ້ອງຖິ່ນຮາກຖານ ບໍ່ທັນເຮັດໄດ້ຢ່າງເລິກເຊິ່ງເຖິງຖອງ.

ກ່ຽວກັບການເຄື່ອນໄຫວດ້ານການຕ່າງປະເທດ, ຂໍ້ຄົງຄ້າງອັນສຳຄັນ ແມ່ນເສີມຂະຫຍາຍບໍ່ທັນໄດ້ໝົດທ່າແຮງ ແລະຄວາມອາດສາມາດທີ່ມີຢູ່. ຖ້າຫາກມີການປະສານງານຢ່າງແໜ້ນແຟ້ນ ລະຫວ່າງຂະແໜງຕ່າງໆ ທີ່ກ່ຽວຂ້ອງ ແລະມີການເຄື່ອນໄຫວດ້ວຍຄວາມເປັນເຈົ້າການສູງກວ່ານັ້ນແລ້ວ ການພົວພັນຮ່ວມມືລະຫວ່າງປະເທດເຮົາກັບນາໆປະເທດ ແລະອົງການຈັດຕັ້ງສາກົນ ຍິ່ງຈະມີປະສິດທິຜົນ ແລະ ສາມາດເຊີດຊູບົດບາດ ຂອງປະເທດເຮົາໄດ້ສູງຂຶ້ນກວ່ານີ້ອີກ.

ກ່ຽວກັບລະບົບການເມືອງ, ຄວາມກ້າວໜ້າທີ່ບັນລຸຜົນໄດ້ໃນຊ່ວງເຂດນີ້ ບໍ່ທັນຕອບສະໜອງກັບການເລັ່ງທວງ ຂອງໜ້າທີ່ການເມືອງໃນໄລຍະໃໝ່. ການຈັດຕັ້ງພັກຢູ່ຫລາຍບ່ອນ ບໍ່ທັນໄດ້ຮັບການປັບປຸງໃຫ້ໜັກແໜ້ນ, ການເຄື່ອນໄຫວກໍບໍ່ເປັນປົກກະຕິ ເຊິ່ງສົ່ງຜົນສະທ້ອນບໍ່ໜ້ອຍ ເຖິງບົດບາດການນໍາພາຂອງພັກ. ການດັດແປງແບບແຜນແລະວິທີນໍາພາ ຂອງຄະນະພັກຂັ້ນຕ່າງໆ ຍັງຊັກຊ້າ. ວຽກງານສຶກສາ ອົບຮົມການເມືອງ, ນໍາພາແນວຄິດ ແລະການຄົ້ນຄວ້າທິດສະດີ ຍັງເຮັດບໍ່ເລິກເຊິ່ງແຫລມຄົມ ແລະເປັນລະບົບ; ພະນັກງານ, ສະມາຊິກພັກຈໍານວນໜຶ່ງ ບໍ່ທັນ ເສີມຂະຫຍາຍນໍ້າໃຈຮັບຜິດຊອບ, ຫົວຄິດປະດິດສ້າງ ແລະຄວາມເປັນແບບຢ່າງນໍາໜ້າ; ວຽກງານພະນັກງານ ຍັງມີຫລາຍຂອດທີ່ຄົງຄ້າງ ເຊິ່ງຈະຕ້ອງຕັ້ງໜ້າແກ້ໄຂ, ໃນນັ້ນລວມທັງການຂຶ້ນແຜນກໍານົດກໍ່ສ້າງ, ບໍາລຸງ, ການຄຸ້ມຄອງ, ນໍາໃຊ້ ແລະນະໂຍບາຍ.

ການປັບປຸງກົງຈັກການຈັດຕັ້ງ ຂອງອົງການລັດ ຂັ້ນຕ່າງໆ ເຮັດບໍ່ທັນເລິກເຊິ່ງ, ແບບແຜນວິທີເຮັດວຽກ ບໍ່ທັນປ່ຽນແປງເທົ່າທີ່ຄວນ ເປັນຕົ້ນຍັງມີປະກົດການກ້າວກ່າຍພາລະບົດບາດ ແລະໜ້າທີ່ ຂອງກັນ, ບໍ່ປະສານສົມທົບກັນຢ່າງແໜ້ນແຟ້ນ, ເຮັດໃຫ້ຄວາມສັກສິດ ຂອງການຄຸ້ມຄອງລັດ ຄຸ້ມຄອງສັງຄົມບໍ່ສູງ.

ບັນດາອົງການຈັດຕັ້ງມະຫາຊົນ ຍັງຢູ່ໃນສະພາບຫາກໍເລີ່ມປ່ຽນແປງ; ການຈັດຕັ້ງແລະການເຄື່ອນໄຫວ ຍັງມີຫລາຍດ້ານຕ້ອງໄດ້ປັບປຸງ ໃຫ້ແທດເໝາະກັບເງື່ອນໄຂໃໝ່ເພື່ອເສີມຂະຫຍາຍກໍາລັງແຮງ ຂອງປະຊາຊົນທຸກເພດໄວ, ບັນດາຊັ້ນຄົນ ເປັນຕົ້ນ ປັນຍາຊົນ, ຜູ້ຊົງຄຸນວຸດທິ ບັນດາເຜົ່າ, ພະສົງສາມະເນນ, ນັກທຸລະກິດ ເຂົ້າໃນການສ້າງສາພັດທະນາປະເທດ ໃຫ້ໄດ້ຫລາຍກວ່ານີ້.

ຄວາມບົກພ່ອງແລະຂໍ້ຄົງຄ້າງທີ່ກ່າວມາເທິງນັ້ນ ເກີດຂຶ້ນຍ້ອນຫລາຍສາເຫດທັງນອກຕົວ ແລະໃນຕົວ, ແຕ່ຕົ້ນຕໍ ກໍແມ່ນຍ້ອນຄວາມຕັ້ງໜ້າເປັນເຈົ້າການ ແລະ ຄວາມຮັບຜິດຊອບຂອງຄະນະພັກ ແລະຂະແໜງການຕ່າງໆ ໃນການຈັດຕັ້ງຜັນຂະຫຍາຍແນວທາງແຜນນະໂຍບາຍຂອງພັກ ໃຫ້ເປັນແຜນການວຽກງານອັນລະອຽດ ທີ່ແທດເໝາະກັບສະພາບຕົວຈິງ ຂອງແຕ່ລະບ່ອນບໍ່ທັນສູງ; ບໍ່ທັນໄດ້ພະຍາຍາມບຸກບືນສູ້ຊົນເຮັດແທ້ທໍາຈິງ, ການລະດົມກໍາລັງແຮງສັງລວມຂອງທົ່ວສັງຄົມ ເຂົ້າໃນການພັດທະນາ ແລະແກ້ໄຂ

ບັນຫາຕ່າງໆ ບໍ່ທັນໄດ້ເຮັດຢ່າງຕັ້ງໜ້າ ແລະເຮັດບໍ່ໄດ້ເຕັມເມັດເຕັມໜ່ວຍ. ການປະສານສົມທົບລະຫວ່າງຂະແໜງການກ່ຽວຂ້ອງ ແລະລະຫວ່າງສາຍຕັ້ງກັບສາຍຂວາງ ບໍ່ທັນກົມກຽວເປັນເອກະພາບ; ການນໍາພາ-ຊີ້ນໍາບໍ່ທັນເລິກເຊິ່ງ ແລະແທດຕົວຈິງ, ພະຍາດອາດຍາສິດ ແລະການຟຸມເຟືອຍ ບໍ່ທັນໄດ້ຮັບການແກ້ໄຂຢ່າງເຖິງຖອງ. ຍ້ອນສາຍເຫດເຫລົ່ານີ້ແຫລະ ການຈັດຕັ້ງປະຕິບັດແນວທາງຂອງພັກເຮົາຈຶ່ງບໍ່ໄດ້ຮັບຜົນເທົ່າທີ່ຄວນ. ພວກເຮົາຕ້ອງພ້ອມກັນເດັດດ່ຽວແກ້ໄຂຂໍ້ຄົງຄ້າງເຫລົ່ານີ້ໃຫ້ໄດ້.

### *3. ຂໍ້ສະຫລຸບ ແລະບົດຮຽນຂອງການດໍາເນີນພາລະກິດປ່ຽນແປງໃໝ່.*

*ສະຫາຍທີ່ຮັກແພງທັງຫລາຍ,*

ຜ່ານການດໍາເນີນພາລະກິດປ່ຽນແປງໃໝ່ ແລະການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ V ຂອງພັກ ພວກເຮົາໄດ້ມີຂໍ້ຂາດຕົກບົກພ່ອງດັ່ງທີ່ກ່າວມານັ້ນແທ້, ແຕ່ກໍ່ເຫັນແຈ້ງວ່າ ຜົນສໍາເລັດທີ່ບັນລຸໄດ້ ຍັງແມ່ນອັນພົ້ນເດັ່ນ ແລະເປັນພື້ນຖານ. ຈາກພຶດຕິກໍາອັນມີຊີວິດຊີວາ ພວກເຮົາ *ອາດຈະສະຫລຸບ ແລະຖອດຖອນບົດຮຽນ* ຈໍານວນໜຶ່ງ ດັ່ງນີ້ :

*ໜຶ່ງ : ການເພີ່ມທະວີຄວາມສາມັກຄີເປັນເອກະພາບໃນທົ່ວພັກ, ທົ່ວປວງຊົນຕິດແທ້ນັບກັບການເຊີດຊູນໍ້າໃຈຮັກຊາດ, ເສີມຂະຫຍາຍຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະສ້າງຄວາມເຂັ້ມແຂງດ້ວຍຕົນເອງ ແມ່ນປັດໃຈຕັດສິນຜົນສໍາເລັດຂອງພາລະກິດປ່ຽນແປງໃໝ່ ນີ້ແມ່ນບົດຮຽນອັນປະເສີດ ແລະ ກໍ່ແມ່ນມູນເຊື້ອອັນດີງາມຂອງພັກ* ແລະຂອງປະຊາຊົນເຮົາ ທີ່ໄດ້ສະແດງອອກ ຕະຫລອດໄລຍະຂອງການປະຕິວັດປົດປ່ອຍຊາດ ກໍຄືໃນໄລຍະປົກປັກຮັກສາ ແລະ ສ້າງສາປະເທດຊາດໃນປັດຈຸບັນ.

ບົດຮຽນດັ່ງກ່າວນັ້ນຊີ້ໃຫ້ເຫັນວ່າ, ພັກເຮົາຍາມໃດກໍ່ໄດ້ເອົາໃຈໃສ່ຈົດຈໍ່ ຕໍ່ການເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ ໃຫ້ເປັນແກ່ນສານຂອງຄວາມສາມັກຄີປອງດອງໃນວົງຄະນະຍາດແຫ່ງຊາດ, ເປັນໃຈກາງເຕົ້າໂຮມປະຊາຊົນທຸກເຜົ່າ, ທຸກເພດໄວ ແລະທຸກຊັ້ນຄົນ ທີ່ຮັກຊາດ ຮັກລະບອບໃໝ່; ຈາກນັ້ນ ຈຶ່ງສ້າງໄດ້ກໍາລັງແຮງສັງ

ລວມໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ. ເພື່ອຮັບປະກັນຄວາມສາມັກຄີເປັນເອກະພາບພາຍໃນພັກ, ກ່ອນອື່ນຫມົດ ຕ້ອງເພີ່ມທະວີຄວາມເປັນເອກະພາບພາຍໃນຄະນະພັກຂັ້ນຕ່າງໆ ແລະພິເສດແມ່ນໃນອົງການນຳສູງສຸດຂອງພັກ ບົນພື້ນຖານແນວທາງ ນະໂຍບາຍ ແລະຫລັກການຈັດຕັ້ງຂອງພັກ.

ເພື່ອກຳນົດແນວທາງແຜນນະໂຍບາຍ ແລະຕົກລົງແກ້ໄຂບັນຫາຍຸດທະສາດທີ່ສຳຄັນຂອງຊາດຢ່າງຖືກຕ້ອງ ແລະ ຈັດຕັ້ງປະຕິບັດໃຫ້ເກີດຜົນ, ພັກເຮົາໄດ້ເຊີດຊູຈິດໃຈເອກະລາດ ເປັນເຈົ້າຕົນເອງ ແລະຄວາມເປັນເຈົ້າການປະດິດສ້າງ, ກຳແຫນ້ນສະພາວະຄວາມເປັນຈິງຂອງປະເທດ ແລະຄວາມມຸ່ງມາດປາຖະຫນາຂອງປະຊາຊົນ, ທັງກຳແຫນ້ນກົດເກນ ແລະການປ່ຽນແປງຂອງສະພາບແວດລ້ອມສາກົນໃນແຕ່ລະໄລຍະ. ພ້ອມກັນນັ້ນກໍອອກແຮງສຶກສາອົບຮົມ ໃຫ້ທົ່ວພັກ, ທົ່ວປວງຊົນເຊື່ອມຊຶມແນວທາງຂອງພັກ, ເຊີດຊູຄວາມເອກອ້າງທະນົງໃຈຕໍ່ຊາດ, ອີງໃສ່ກຳລັງແຮງຂອງຄົນພາຍໃນຊາດ ແລະຊັບພະຍາກອນ ເພື່ອສ້າງຄວາມຮັ່ງມີໃຫ້ຕົນເອງ ແລະພັດທະນາປະເທດຊາດໃຫ້ຈະເລີນກ້າວຫນ້າ.

*ສອງ, ອີງໃສ່ປະຊາຊົນ, ເສີມຂະຫຍາຍກຳລັງແຮງອັນມະຫາສານ ຂອງປະຊາຊົນ ແລະເຮັດທຸກສິ່ງທຸກຢ່າງເພື່ອຜົນປະໂຫຍດ ຂອງປະຊາຊົນ.* ອັນນີ້ ກໍແມ່ນບົດຮຽນ ໃຫຍ່ ທີ່ພັກເຮົາໄດ້ປະຕິບັດມາຢ່າງສະເຫມີຕົ້ນສະເຫມີປາຍ ໃນທຸກໄລຍະຂອງການປະຕິວັດ.

ໂດຍຍຶດຫມັ້ນໃນທັດສະນະພື້ນຖານທີ່ວ່າ *ພາລະກິດປະຕິວັດແມ່ນຂອງມະຫາຊົນ ແລະມະຫາຊົນເປັນຜູ່ສ້າງປະຫວັດສາດ,* ຍາມໃດພັກເຮົາກໍອີງໃສ່ປະຊາຊົນ, ເພາະພັກເຮົາເກີດຈາກຂະບວນການຮັກຊາດ ຂອງປະຊາຊົນ. ວັດຖຸປະສົງຂອງພັກ ກໍແມ່ນການຕອບສະຫນອງຜົນປະໂຫຍດ ແລະຄວາມມຸ່ງມາດປາຖະຫນາອັນຊອບທຳ ຂອງປະຊາຊົນ. ສະນັ້ນ ພັກເຮົາຈຶ່ງເຄື່ອນໄຫວ ຕາມແນວທາງມະຫາຊົນ, ຕິດແຫນ້ນກັບຮາກຖານຢູ່ສະເຫມີ. ໃນເວລາຄົ້ນຄວ້າວາງແນວທາງ, ແຜນນະໂຍບາຍ ແລະມະຕິໃດຫນຶ່ງພັກເຮົາຈຶ່ງຖືເອົາການທາບທາມ, ຍາດແຍ່ງຄວາມຄິດຄວາມເຫັນ, ຊອກຮູ້ບັນຫາ ແລະຄວາມຮຽກຮ້ອງຕ້ອງການຂອງປະຊາຊົນເປັນຈຸດເລີ່ມ; ພ້ອມກັນນັ້ນ ກໍຄົ້ນຄວ້າວິທີການເຮັດໃຫ້ແນວທາງກາຍເປັນວັດຖຸຕົວຈິງ ທີ່ສະແດງອອກໃນຄວາມຢູ່ດີກິນດີ ຂອງປະຊາຊົນ

ແລະຄວາມໝັ້ນຄົງເຂັ້ມແຂງ ຂອງປະເທດຊາດ. ຍ້ອນແນວນັ້ນ ປະຊາຊົນທັງຊາດຈຶ່ງເດີນຕາມແນວທາງຂອງພັກ ແລະສະໜັບສະໜູນອ້ອມຂ້າງພັກຕະຫລອດມາ.

*ສາມ, ຮັບປະກັນສະຖຽນລະພາບ ທາງການເມືອງ, ຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ແມ່ນເງື່ອນໄຂອັນຈຳເປັນ ສຳລັບການປ່ຽນແປງໃໝ່. ແຕ່ ຢາກໃຫ້ພາລະກິດປ່ຽນແປງໃໝ່ ມີຜົນສຳເລັດ ຕ້ອງດຳເນີນໄປຢ່າງຄົບຊຸດ, ຮອບຄອບ ດ້ວຍບາດກ້າວ ອັນເໝາະສົມ.*

ພຶດຕິກຳຂອງປະເທດເຮົາ ແລະຂອງຕ່າງປະເທດໄດ້ຊີ້ໃຫ້ເຫັນວ່າ ພາລະກິດປ່ຽນແປງໃໝ່ ຈະບໍ່ສາມາດດຳເນີນໄປໄດ້ ຖ້າຫາກສະຖຽນລະພາບທາງການເມືອງ, ຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ ບໍ່ມີການຮັບປະກັນ. ເຫັນໄດ້ຄວາມສຳຄັນດັ່ງກ່າວນັ້ນ ພັກເຮົາຈຶ່ງໄດ້ມີທິດນຳ ປະສານສົມທົບຢ່າງແໜ້ນແຟ້ນ ລະຫວ່າງການເມືອງ ກັບເສດຖະກິດ, ວັດທະນະທຳ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ. ໃນດ້ານອື່ນ ພວກເຮົາຮັບຮູ້ວ່າການປ່ຽນແປງໃໝ່ເປັນພາລະກິດອັນໃໝ່ອ່ຽມ, ສະນັ້ນ ຈຶ່ງໄດ້ດຳເນີນໄປເທື່ອລະກ້າວຢ່າງໜັກແໜ້ນ, ທັງເຮັດ ທັງຖອດຖອນບົດຮຽນໄປນຳ; ເອົາຜົນສຳເລັດຂອງການປ່ຽນແປງໃໝ່ໃນຂົງເຂດເສດຖະກິດ ມາເປັນກຳລັງແຮງໃຫ້ແກ່ການບູລະນະ ລະບົບການເມືອງປະຊາທິປະໄຕປະຊາຊົນ ໃຫ້ມີຄວາມເຂັ້ມແຂງ ແລະມີຄວາມສັກສິດ, ອັນເປັນການເພີ່ມທະວີຄວາມມີສະຖຽນລະພາບທາງການເມືອງ ແລະເຮັດໃຫ້ສັງຄົມມີຄວາມສະຫງົບໜັກແໜ້ນຍິ່ງຂຶ້ນ.

***ສີ່. ເພີ່ມທະວີບົດບາດນຳພາ ຂອງພັກໃນທຸກຂົງເຂດວຽກງານ ແລະເຊີດຊູຄວາມສັກສິດແຫ່ງການຄຸ້ມຄອງຂອງລັດ*** ແມ່ນເງື່ອນໄຂຮັບປະກັນໃຫ້ການປ່ຽນແປງໃໝ່ດຳເນີນໄປຢ່າງຖືກຕ້ອງຕາມແນວທາງ ແລະຈຸດໝາຍຂອງພັກ.

ພັກເຮົາເປັນຜູ້ນຳພາລິເລີ່ມການປ່ຽນແປງໃໝ່ ໂດຍມີອຸດົມຄະຕິ ແລະຈຸດໝາຍອັນຈະແຈ້ງ. ສະນັ້ນ, ຍາມໃດພັກກໍເຊີດຊູຄວາມຮັບຜິດຊອບນຳພາຕໍ່ທົ່ວສັງຄົມ, ກ່ອນອື່ນແມ່ນໄດ້ເອົາໃຈໃສ່ຕໍ່ວຽກງານ ສຶກສາອົບຮົມ ການເມືອງແນວຄິດ ແລະ ໄດ້ປັບປຸງ, ຍົກສູງຄວາມສາມາດນຳພາ ຂອງຕົນຂຶ້ນຢູ່ສະເໝີ, ມີຄວາມສະດຸ້ງໄວຕໍ່ອັນໃໝ່ ແລະຂໍ້

ຊາດຕົກບົກພ່ອງຂອງຕົນ, ໄດ້ສະຫລຸບຖອດຖອນບົດຮຽນຈາກພຶດຕິກຳຂອງຕົນເອງ ສົມທົບກັບບົດຮຽນຂອງຕ່າງປະເທດ ຢ່າງປະດິດສ້າງ ເພື່ອບູລະນະແນວທາງຂອງພັກໃຫ້ບໍລິບູນຍິ່ງໆຂຶ້ນ. ພັກເຮົາໄດ້ເອົາໃຈໃສ່ ກໍ່ສ້າງ, ບຳລຸງ, ແລະປະຕິບັດນະໂຍບາຍ ຕໍ່ພະນັກງານຢ່າງເຫມາະສົມ; ມີມາດຕະການອັນເຂັ້ມງວດໃນການກຳຈັດປັດເປົ່າ ພະຍາດອາດຍາສິດ ແລະ ປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ. ຍ້ອນແນວນັ້ນ ຈຶ່ງຮັກສາ ແລະເສີມຂະຫຍາຍໄດ້ບົດບາດອິດທິພົນຂອງພັກ, ເຊີດຊູຄວາມເຊື່ອຫມັ້ນຂອງມະຫາຊົນຕໍ່ແນວທາງ ແລະການນຳພາຂອງພັກ. ໃນເງື່ອນໄຂພັກ ກຳອຳນາດ ແລະ ມີທິດທາງສ້າງລັດແຫ່ງກົດຫມາຍ ຂຶ້ນເທື່ອລະກ້າວນັ້ນ ພັກເຮົາ ໄດ້ໃຫ້ຄວາມສຳຄັນ ແກ່ການເຊີດຊູຄວາມສັກສິດແຫ່ງການຄຸ້ມຄອງຂອງລັດ, ເຮັດໃຫ້ລະບົບອຳນາດລັດເປັນ ຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນຢ່າງແທ້ຈິງ.

*ຫ້າ : ເສີມຂະຫຍາຍກຳລັງແຮງ ຂອງຊາດ ສົມທົບກັບກຳລັງແຮງ ຂອງຍຸກສະໄຫມ; ຍາດແຍ່ງເອົາການສະຫນັບສະຫນູນ ແລະການຊ່ວຍເຫລືອຈາກສາກົນຢ່າງມີຫລັກການ ແມ່ນສິ່ງທີ່ຂາດບໍ່ໄດ້ສຳລັບການສ້າງສາພັດທະນາປະເທດຊາດ .*

ສົມທົບຢ່າງກົມກຽວລະຫວ່າງກຳລັງແຮງ ຂອງຊາດ ກັບກຳລັງແຮງ ຂອງຍຸກສະໄຫມ ແມ່ນກົດເກນອັນຫນຶ່ງ ແຫ່ງໄຊຊະນະຂອງການປະຕິວັດຢູ່ປະເທດເຮົາ. ພັກເຮົາໄດ້ມີທັດສະນະອັນຈະແຈ້ງວ່າຢາກເສີມຂະຫຍາຍກຳລັງແຮງຈາກພາຍນອກ ຢ່າງມີປະສິດທິຜົນນັ້ນ ກ່ອນອື່ນຫມົດ ເລັ່ງທວງໃຫ້ເຊີດຊູມານະຈິດບຸກບືນສູ້ຊົນ ສ້າງຄວາມຮັ່ງມີເຂັ້ມແຂງດ້ວຍຕົນເອງ ແລະອີງໃສ່ກຳລັງແຮງສັງລວມພາຍໃນຊາດ. ຍ້ອນແນວນັ້ນ ກຳລັງແຮງພາຍໃນ ຈຶ່ງເປັນອັນຕົ້ນຕໍ ແລະກຳລັງແຮງພາຍນອກ ເປັນສິ່ງຊ່ວຍຫນູນ.

ບັນດາຂໍ້ສະຫລຸບ ແລະບົດຮຽນເຫົ່ງນັ້ນ ໄດ້ຜ່ານການກັ່ນຕອງ ແລະສັງລວມຈາກພຶດຕິກຳ ແຫ່ງການນຳພາຂອງພັກເຮົາ. ສະນັ້ນ ພວກເຮົາ ຕ້ອງເຊື່ອມຊຶມກຳແຫນັ້ນ ແລະຖືເປັນບ່ອນອີງ ສຳລັບການສືບຕໍ່ພາລະກິດປ່ຽນແປງໃຫມ່ໃນຊຸມປີຕໍ່ຫນ້າ.

*ພາກທີ II*

*ສືບຕໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນ, ບັນດາ ແຜນນະໂຍບາຍ ແລະທິດທາງໜ້າທີ່ໃນຊຸມປີຕໍ່ໜ້າ ແລະສໍາລັບ 5 ປີ ( 1996-2000 ).*

ບັນດາສະຫາຍທີ່ຮັກແພງ,

ເພື່ອສືບຕໍ່ພາປະເທດຊາດ ກ້າວຂຶ້ນຕາມຈຸດໝາຍທີ່ວາງໄວ້, ພວກເຮົາ ຄວນຄົ້ນຄວ້າ ວິເຄາະ ວິໄຈ ສະພາບແວດລ້ອມສາກົນ ແລະສະພາວະຄວາມເປັນຈິງ ຂອງປະເທດເຮົາ ໃຫ້ເລິກເຊິ່ງ ແນໃສ່ ວາງແຜນນະໂຍບາຍ ແລະ ທິດທາງໜ້າທີ່ ຕໍ່ໄປຢ່າງສອດຄ່ອງ.

ອີກບໍ່ເທົ່າໃດປີ ມວນມະນຸດຈະກ້າວເຂົ້າສູ່ ສະຕະວັດທີ 21. ເບິ່ງທົ່ວໄປແລ້ວ ສະພາບການ ຂອງໂລກ ຍັງຈະສືບຕໍ່ຜັນແປໄປຢ່າງສັບສົນ, ບັນດາຂໍ້ຂັດແຍ່ງ ທັງເກົ່າ ແລະໃໝ່ເກີດຂຶ້ນຢ່າງສະຫລັບສັບຊ້ອນ ເຊິ່ງມີທັງແງ່ທີ່ເປັນກາລະໂອກາດ ແລະ ເງື່ອນໄຂອໍານວຍ, ມີທັງແງ່ທີ່ເປັນສິ່ງທ້າທາຍທົດສອບ ຕໍ່ບັນດາປະຊາຊາດ. ສິ່ງດັ່ງກ່າວຈໍາໃຫ້ປະເທດຕ່າງໆ ຕ້ອງປັບປຸງຍຸດທະສາດການພົວພັນກັບພາຍນອກຂອງຕົນໃຫ້ສອດຄ່ອງ.

ໃນສະພາບການໃໝ່ນີ້ ບັນດາປະເທດສັງຄົມນິຍົມໄດ້ມີຄວາມພະຍາຍາມອັນໃຫຍ່ຫລວງ ໃນການຜ່ານຜ່າຄວາມຫຍຸ້ງຍາກ ແລະ ການທົດສອບຕ່າງໆ ນາໆ, ມີບາງປະເທດໄດ້ປະສົບຜົນສໍາເລັດອັນຈົບງາມໃນການປະຕິຮູບປ່ຽນແປງໃໝ່ ແລະຍັງສືບຕໍ່ຂະຫຍາຍຕົວກ້າວຂຶ້ນຢ່າງໜັກແໜ້ນ ເຊິ່ງສະແດງອອກໃຫ້ເຫັນຄວາມມີຊີວິດຊີວາໃໝ່ຂອງສັງຄົມນິຍົມ.

ມາເຖິງປັດຈຸບັນ ໄພຂົ່ມຂູ່ ຂອງສົງຄາມນິວຄະເລຍລ້າງໂລກ ໄດ້ຫລຸດໜ້ອຍຖອຍລົງ, ແຕ່ສົງຄາມ ແລະການປະທະກັນ ຍັງບໍ່ໝົດເທື່ອ. ຈຸດພິເສດອັນພົ້ນເດັ່ນ ຂອງໂລກແມ່ນການປະຕິວັດທາງດ້ານວິທະຍາສາດ ແລະເຕັກໂນໂລຢີ ກໍາລັງຂະຫຍາຍຕົວຢ່າງແຂງແຮງ ທີ່ບໍ່ເຄີຍມີມາກ່ອນ ອັນໄດ້ເຮັດໃຫ້ຂະບວນການຫັນເປັນສາກົນທາງດ້ານເສດຖະກິດ, ການຮ່ວມຕົວຂອງບັນດາປະເທດ ເປັນກຸ່ມເສດຖະກິດ-ການຄ້າ, ທ່າອ່ຽງທີ່ທັງຮ່ວມມືກັນ, ເພິ່ງພາອາໄສກັນ ແລະທັງແກ່ງແຍ້ງແຂ່ງຂັນກັນ ດໍາເນີນໄປຢ່າງຟົດຟື້ນ; ບັນ

ດາປະຊາຊາດລ້ວນແຕ່ວາງຍຸດທະສາດ ການພັດທະນາປະເທດໃຫ້ສອດຄ່ອງ ເພື່ອຍາດແຍ່ງເອົາກາລະໂອກາດ ແລະຜ່ານຜ່າສິ່ງທ້າທາຍໃຫມ່ທີ່ຊັບຊ້ອນ; ການຂະຫຍາຍຕົວແບບບໍ່ສະຫມໍ່າສະເຫມີກັນຍິ່ງເພີ່ມທະວີ, ການຜິດໂຕນກັນລະຫວ່າງປະເທດຮັ່ງມີ ກັບປະເທດທີ່ທຸກຍາກ ຍິ່ງຈະຫ່າງອອກ. ພວກເຮົາເຫັນແຈ້ງວ່າ ທ່າອ່ຽງເຊີດຊູສະຕິຊາດ ເອກະລາດ, ເປັນເຈົ້າຕົນເອງ ຕິດພັນກັບການເປີດກວ້າງການພົວພັນສາກົນຂອງບັນດາປະເທດໄດ້ເພີ່ມທະວີຂຶ້ນກວ່າຍາມໃດໆ. ພາກພື້ນອາຊີ-ປາຊີຟິກ ແລະ ອາຊີອາຄະເນ ເປັນພາກພື້ນຫນຶ່ງ ທີ່ມີເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ວ່ອງໄວ ແຕ່ກໍຍັງມີປັດໄຈ ຂອງຄວາມບໍ່ມີສະຖຽນລະພາບຊ້ອນແຝງຢູ່.

ສະພາບແວດລ້ອມສາກົນ ດັ່ງທີ່ກ່າວມານັ້ນ ຊີ້ບອກວ່າ ປະເທດພວກເຮົາພວມຢືນຢູ່ຕໍ່ຫນ້າກາລະໂອກາດໃຫມ່ ທີ່ອໍານວຍໃຫ້ແກ່ການພັດທະນາປະເທດຊາດ ໄປສູ່ຄວາມກ້າວຫນ້າທັນສະໄຫມ ແຕ່ພວກເຮົາ ຕ້ອງຕີລາຄາ ໃຫ້ຊັດເຈນວ່າ ບົນເສັ້ນທາງກ້າວຂຶ້ນຍັງມີອຸປະສັກອັນໃດແດ່ ເພື່ອມີວິທີຜ່ານຜ່າແກ້ໄຂ ຢ່າງຖືກຕ້ອງ. ກ່ອນອື່ນຫມົດ ພວກເຮົາຕ້ອງຮູ້ວ່າ ສະພາວະຄວາມເປັນຈິງ ຂອງປະເທດເຮົາເປັນແນວໃດ.

ປັດຈຸບັນ ປະເທດເຮົາຍັງເປັນປະເທດດ້ອຍພັດທະນາ, ປະຊາຊົນຍັງທຸກຍາກຂາດເຂີນ, ລະດັບຊີວິດການເປັນຢູ່ຍັງຫລຸດໂຕນກັນຫລາຍ ລະຫວ່າງເຂດຕົວເມືອງກັບຊົນນະບົດ, ລະຫວ່າງເຂດທົ່ງພຽງກັບເຂດພູດອຍ. ເສດຖະກິດແຫ່ງຊາດ ຍັງບໍ່ທັນມີພື້ນຖານອັນຫນັກແຫນ້ນ. ເຂດຕົວເມືອງ, ທົ່ງພຽງ ເລີ່ມມີການພັດທະນາໃນເບື້ອງຕົ້ນ, ສ່ວນເຂດພູດອຍຊົນເຜົ່າ ຍັງບໍ່ທັນໄດ້ພັດທະນາພໍທໍ່ໃດເທື່ອ. ການຫັນ ເສດຖະກິດທໍາມະຊາດ ໄປສູ່ເສດຖະກິດສິນຄ້າ ຫາກໍຢູ່ໃນບາດກ້າວເບື້ອງຕົ້ນ, ອຸດສາຫະກໍາ ແລະການບໍລິການ ຫາກໍເລີ່ມມີຫນໍ່ແຫນງ; ການຄົມມະນາຄົມໂດຍທົ່ວໄປບໍ່ທັນສະດວກ; ທ່າແຮງດ້ານຕ່າງໆ ບໍ່ທັນໄດ້ຂຸດຄົ້ນພໍທໍ່ໃດ. ເບິ່ງທົ່ວໄປແລ້ວ ກໍາລັງການຜະລິດຍັງຂະຫຍາຍຕົວຊ້າ, ຊາວກະສິກອນ ເຊິ່ງກວມສ່ວນຫລາຍຂອງພົນລະເມືອງ ຍັງທໍາມາຫາກິນດ້ວຍເຄື່ອງມືປະຖົມປະຖານ, ສະມັດຖະພາບຂອງງານຍັງຕໍ່າ; ຊາວກໍາມະກອນຍັງມີຫນ້ອຍ ແລະຜູ້ທີ່ມີຄວາມສາມາດ ດ້ານວິຊາຊີບ ຍັງບໍ່ມີຫລາຍ; ລະດັບຄວາມຮູ້ຂອງປະຊາຊົນຍັງຕໍ່າ, ພະນັກງານນໍາພາ ແລະນັກວິຊາການ ທີ່ມີຄວາມຮູ້ຄວາມສາມາດ ຍັງຂາດເຂີນ ເປັນຕົ້ນຢູ່ທ້ອງຖິ່ນ.

ການພົວພັນການຜະລິດ ຍັງບໍ່ທັນແຈ້ງ ແລະມີອັນບໍ່ສອດຄ່ອງ ກັບລັກສະນະ ແລະ ລະດັບການຂະຫຍາຍຕົວ ຂອງກຳລັງການຜະລິດ. ກົດໝາຍ ແລະ ລະບຽບການອັນຈຳເປັນຫລາຍຢ່າງ ຍັງບໍ່ທັນມີ, ປະສິດທິພາບແຫ່ງການຄຸ້ມຄອງຂອງລັດຍັງບໍ່ທັນສູງ.

ອັນນີ້ແມ່ນດ້ານໜຶ່ງ ຂອງສະພາວະຄວາມເປັນຈິງ ຂອງປະເທດເຮົາ. ພວກເຮົາເຫັນແຈ້ງວ່າ ຜ່ານໄລຍະ 20 ປີ ແຫ່ງການສ້າງສາລະບອບປະຊາທິປະໄຕປະຊາຊົນ ໂດຍສະເພາະແມ່ນ 10 ປີ ແຫ່ງການດຳເນີນພາລະກິດປ່ຽນແປງໃໝ່ມານີ້, ປະເທດຊາດຂອງພວກເຮົາ ໄດ້ມີການປ່ຽນແປງອັນຕັ້ງໜ້າ ແລະ ມີການຂະຫຍາຍຕົວໃນຫລາຍດ້ານ, ມີໜໍ່ແໜງພື້ນຖານໂຄງລ່າງ ແລະພື້ນຖານວັດຖຸເຕັກນິກ ທີ່ທັນສະໄໝຈຳນວນໜຶ່ງ, ຖັນແຖວພະນັກງານ, ນັກວິຊາການ ທີ່ມີຄວາມຮູ້ຄວາມສາມາດ ແລະມີປະສົບການຈາກຕົວຈິງ ນັບມື້ນັບເພີ່ມຂຶ້ນ; ປະຊາຊົນລາວມີມູນເຊື້ອຮັກຊາດ, ມີເອກະລັກ ທາງດ້ານວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ, ມີຄວາມສາມັກຄີ, ອົດທົນດຸໝັ່ນ, ຊື່ສັດ, ໂອບເອື້ອອາລີ ແລະມີນ້ຳໃຈໄມຕີ ຕໍ່ແຂກຕ່າງປະເທດ. ປະເທດເຮົາມີລະບອບການເມືອງທີ່ມີສະຖຽນລະພາບ, ມີຄວາມສະຫງົບປອດໄພ, ມີແນວທາງຖືກຕ້ອງ ແລະມີແຜນພັດທະນາປະເທດ ທີ່ຈະແຈ້ງພໍສົມຄວນ; ປະເທດເຮົາມີການພົວພັນກັບເພື່ອນມິດສາກົນຢ່າງກວ້າງຂວາງ.

ປັດໄຈພາຍໃນທີ່ສຳຄັນອີກ ແມ່ນປະເທດເຮົາ *ມີທ່າແຮງ ແລະຄວາມອາດສາມາດບົ່ມຊ້ອນອັນໃຫຍ່ຫລວງ* ເປັນຕົ້ນແມ່ນມີຊັບພະຍາກອນທຳມະຊາດອຸດົມສົມບູນພໍສົມຄວນຄື: ມີດິນທີ່ເໝາະສຳລັບການກະສິກຳຮອບດ້ານ; ມີປ່າໄມ້ອັນມີຄ່າສູງ; ມີແມ່ນ້ຳທີ່ເປັນແຫລ່ງຜະລິດພະລັງໄຟຟ້າ ແລະ ຊົນລະປະທານ; ມີແຮ່ທາດຊະນິດຕ່າງໆ ແລະມີທິວທັດທຳມະຊາດອັນສວຍງາມ. ພ້ອມກັນນັ້ນ ປະເທດເຮົາ ຕັ້ງຢູ່ກາງອະນຸພາກພື້ນ, ເໝາະທີ່ຈະເປັນໃຈກາງບໍລິການ ແລະ ເປັນທາງຜ່ານສຳລັບການພົວພັນ ແລກປ່ຽນທາງດ້ານເສດຖະກິດ, ການຄ້າ, ການທ່ອງທ່ຽວ ລະຫວ່າງບັນດາປະເທດເພື່ອນບ້ານໃກ້ຄຽງແລະສາກົນ.

ສະພາວະຄວາມເປັນຈິງ ຂອງປະເທດເຮົາ ດັ່ງທີ່ກ່າວມານັ້ນ ຊີ້ໃຫ້ເຫັນວ່າ ພວກເຮົາຍັງມີຄວາມຫຍຸ້ງຍາກຢູ່ບໍ່ຫນ້ອຍ ແຕ່ພວກເຮົາ ກໍມີຂໍ້ສະດວກອັນເປັນພື້ນຖານຫລາຍປະການ. ອັນສຳຄັນຕັດສິນ ແມ່ນພວກເຮົາ ຕ້ອງເຊີດຊູນ້ຳໃຈ ເປັນເຈົ້າ, ບຸກບືນເຮັດແທ້ທຳຈິງ, ທັງເປັນເຈົ້າການກຳແຫນ້ນ ແລະ ຫມູນໃຊ້ກາລະໂອກາດໃຫມ່ທີ່ອຳນວຍ.

ສະຫາຍທີ່ຮັກແພງທັງຫລາຍ,

ບົນພື້ນຖານການໄຈ້ແຍກຈຸດພິເສດ ຂອງສະພາບແວດລ້ອມສາກົນ ແລະການຊັ່ງຊາລະຫວ່າງຂໍ້ຫຍຸ້ງຍາກ ກັບທ່າແຮງບົ່ມຊ້ອນ ດັ່ງກ່າວນັ້ນ *ກໍ່ເຫັນແຈ້ງວ່າ, ພວກເຮົາມີຄວາມສາມາດພຽງພໍທີ່ຈະສ້າງສາປະເທດຊາດຂອງຕົນໃຫ້ຈະເລີນກ້າວຫນ້າໄດ້ ໂດຍຜ່ານແຕ່ລະບາດກ້າວ ອັນແນ່ນອນ. ບົນຈິດໃຈດັ່ງກ່າວນັ້ນ ພັກເຮົາກຳນົດ ຈຸດຫມາຍສຳລັບໄລຍະຮອດປີ 2020 ດັ່ງນີ້ : ສູ້ຊົນເຮັດໃຫ້ປະເທດເຮົາຫລຸດພົ້ນ ຈາກສະພາວະດ້ອຍພັດທະນາ; ເສດຖະກິດ-ສັງຄົມ ມີການພັດທະນາແລະໄດ້ມີການຫັນປ່ຽນໃຫມ່ ດ້ວຍລະດັບຕ່າງກັບສະພາບປັດຈຸບັນ ຄື: ການຜະລິດກະສິກຳ ແລະອຸດສາຫະກຳມີການຂະຫຍາຍຕົວ ແລະມີບາງດ້ານທັນສະໄຫມ, ຊີວິດການເປັນຢູ່ ທາງດ້ານວັດຖຸ ແລະວັດທະນະທຳຂອງປະຊາຊົນ ເປັນປົກກະຕິ ແລະມີຄຸນນະພາບສູງຂຶ້ນ; ພົນລະເມືອງໄດ້ຮັບການສຶກສາ ແລະການບໍລິການດ້ານສາທາລະນະສຸກຢ່າງທົ່ວເຖິງ, ວັດທະນະທຳອັນດີງາມຂອງຊາດ ໄດ້ຮັບການເສີມຂະຫຍາຍຢ່າງອຸດົມຮັ່ງມີ, ການສະຫວັດດີການສັງຄົມອັນພື້ນຖານມີການຮັບປະກັນ; ມີບຸກຄະລາກອນ ແລະກຳລັງແຮງງານ ທີ່ມີຄວາມສາມາດຕອບສະຫນອງຄວາມຕ້ອງການພື້ນຖານ ຂອງການພັດທະນາປະເທດ; ສັງຄົມມີຄວາມສະຫງົບສຸກ, ລະບົບການເມືອງປະຊາທິປະໄຕປະຊາຊົນ ທີ່ມີພັກເປັນແກນນຳ ມີຄວາມຫນັກແຫນ້ນ, ເຂັ້ມແຂງ; ປະເທດເຮົາມີການພົວພັນຮ່ວມມືອັນກວ້າງຂວາງກັບສາກົນ ແລະສາມາດຂະຫຍາຍຕົວເຈືອຈານເຂົ້າກັບທ່າອ່ຽງລວມຂອງຍຸກສະໄຫມ. ມີແຕ່ເຮັດໄດ້ແນວນັ້ນ ລະບອບປະຊາທິປະໄຕປະຊາຊົນຂອງພວກເຮົາ ຈຶ່ງຈະມີຄວາມເຂັ້ມແຂງ, ທັງສ້າງພື້ນຖານອັນຫນັກແຫນ້ນ ໃຫ້ແກ່ການສ້າງປະເທດລາວ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະວັດທະນະຖາວອນ.*

*ອີງຕາມຈຸດໝາຍລວມ ດັ່ງກ່າວນັ້ນສຳລັບ 5 ປີຕໍ່ໜ້ານີ້ (1996-2000) ແມ່ນສູ້ຊົນ ຮັບປະກັນໃຫ້ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ ໃນລະດັບ 8 ຫາ 8,5% ຕໍ່ປີ, ເມື່ອຮອດປີ 2000 ລາຍໄດ້ສະເລ່ຍຕາມຫົວຄົນໃຫ້ໄດ້ 500 ໂດລາ; ສ້າງກິດຈະການພື້ນຖານຈຳນວນໜຶ່ງ ໃຫ້ເປັນໜໍ່ແໜງ ສຳລັບການຫັນເປັນປະເທດອຸດສາຫະກຳ ແລະທັນສະໄໝໃນຂັ້ນຕໍ່ໄປ; ແກ້ໄຂຄວາມອຶດຢາກຂາດເຂີນ ແລະ ຄວາມທຸກຍາກ ຂອງປະຊາຊົນ ໃນບໍລິເວນຈຸດສຸມຈຳນວນໜຶ່ງ ດ້ວຍການພັດທະນາຊົນນະບົດຮອບດ້ານ.*

ເພື່ອບັນລຸຕົວເລກຄາດໝາຍດັ່ງກ່າວນັ້ນ ພັກເຮົາກຳນົດ *ທິດທາງໜ້າທີ່ລວມ* ດັ່ງນີ້ :

- ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ ແລະໃນທົ່ວປວງຊົນ, ຮັບປະກັນສະຖຽນລະພາບ ແລະຄວາມສະຫງົບໃຫ້ໄດ້ຢ່າງໜັກແໜ້ນ, ສ້າງເງື່ອນໄຂອັນອຳນວຍສຳລັບການທຳມາຫາກິນ ຂອງປະຊາຊົນ ແລະ ການສ້າງສາພັດທະນາປະເທດຊາດ; ປົກປັກຮັກສາເອກະລາດ ແລະອະທິປະໄຕຂອງຊາດໄວ້ຢ່າງໝັ້ນຄົງ.

- ລະດົມກຳລັງແຮງຂອງທຸກພາກສ່ວນເສດຖະກິດ ແລະທົ່ວສັງຄົມເຂົ້າໃນການພັດທະນາປະເທດຊາດ; ເສີມຂະຫຍາຍນ້ຳໃຈຮັກຊາດ ຕິດພັນກັບຮັກລະບອບໃໝ່, ເຊີດຊູສະຕິຊາດ ເອກະລາດ ເປັນເຈົ້າຕົນເອງ, ດຸໝັ່ນ ແລະປະຢັດ ໃນການສ້າງສາປະເທດຊາດ. ສູ້ຊົນໃຫ້ມີການສະສົມຈາກພາຍໃນປະເທດ, ເຮັດໃຫ້ການເງິນແຫ່ງຊາດ ມີຄວາມໝັ້ນທ່ຽງ ແລະເປັນເຈົ້າຕົນເອງເທື່ອລະກ້າວ.

- ປະຕິບັດນະໂຍບາຍດ້ານປະຊາກອນຢ່າງຕັ້ງໜ້າ, ເຮັດໃຫ້ການເພີ່ມຂຶ້ນຂອງພົນລະເມືອງ ສອດຄ່ອງກັບລະດັບການຂະຫຍາຍຕົວ ຂອງເສດຖະກິດ, ຍົກລະດັບຄວາມຮູ້ ແລະພະລະນາໄມ ຂອງປະຊາຊົນບັນດາຊົນເຜົ່າ, ກໍ່ສ້າງແຮງງານວິຊາຊີບ ແລະບຸກຄະລາກອນ ໃຫ້ສາມາດຕອບສະໜອງ ຄວາມຕ້ອງການອັນຮີບດ່ວນ ໃນສະເພາະໜ້າຂອງການພັດທະນາປະເທດ, ແກ້ໄຂບັນຫາຕ່າງໆ ທາງສັງຄົມໄປຄຽງຄູ່ກັບການຂະຫຍາຍເສດຖະກິດ, ເຮັດໃຫ້ສັງຄົມມີຄວາມສີວິໄລ ແລະຍຸດຕິທຳເປັນກ້າວໆ.

- ເພີ່ມທະວີບົດບາດ ແລະເຊີດຊູຄວາມສາມາດນຳພາຂອງພັກໃນທຸກຂົງເຂດວຽກງານ; ປັບປຸງ ແລະ ຍົກສູງປະສິດທິພາບ ແຫ່ງການຄຸ້ມຄອງດ້ວຍກົດໝາຍຂອງລັດ ຕໍ່ເສດຖະກິດ-ສັງຄົມ; ຊຸກຍູ້ຢ່າງແຂງແຮງ ການເຄື່ອນໄຫວ ຂອງບັນດາອົງການຈັດຕັ້ງມະຫາຊົນ, ເສີມຂະຫຍາຍສິດເປັນເຈົ້າ ຂອງປະຊາຊົນ.

- ເສີມສ້າງສາຍພົວພັນມິດຕະພາບກັບນາໆ ຊາດ ແລະເປີດກວ້າງການຮ່ວມມືກັບເພື່ອນມິດສາກົນ.

ບັນດາທິດທາງໜ້າທີ່ລວມເຫລົ່ານັ້ນ ສະແດງອອກ ໃນແຕ່ລະຂົງເຂດວຽກງານດັ່ງນີ້ :

1). *ໃນຂົງເຂດເສດຖະກິດ.*

ພັກເຮົາສືບຕໍ່ຢືນຢັນວ່າ ໂຄງປະກອບເສດຖະກິດ ຢູ່ປະເທດເຮົາ ແມ່ນໂຄງປະກອບເສດຖະກິດ ທີ່ມີຫລາຍພາກສ່ວນ, ຫລາຍຮູບການກຳມະສິດ ແລະຫລາຍຮູບການຈັດຕັ້ງເສດຖະກິດ ທີ່ຈະຄົງຕົວຢູ່ນຳກັນຢ່າງຍາວນານ. ແຕ່ລະພາກສ່ວນເສດຖະກິດລ້ວນແຕ່ມີສິດສະເຫມີພາບ ຕໍ່ໜ້າກົດໝາຍ ແລະເຄື່ອນໄຫວພາຍໃຕ້ການຄຸ້ມຄອງຂອງລັດຕາມກົນໄກເສດຖະກິດຕະຫລາດ ທີ່ທັງຮ່ວມມືຮ່ວມສຳພັນກັນ, ທັງແຂ່ງຂັນກັນ, ແຕ່ຫາກມີພັນທະຮ່ວມກັນຄື ປະກອບສ່ວນເຂົ້າໃນການພັດທະນາປະເທດໃຫ້ຈະເລີນຮຸ່ງມີ.

ເພື່ອຫັນເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າ ຈຳເປັນຕ້ອງມີນະໂຍບາຍສົ່ງເສີມພາກສ່ວນເສດຖະກິດຕ່າງໆຢ່າງເປັນລະບົບຄົບຊຸດກວ່າເກົ່າ, ໃນນັ້ນ ຖືເອົາຄອບຄົວເປັນຈຸດເລີ່ມ, ເຮັດໃຫ້ຄອບຄົວແບບຢ່າງດ້ານການຜະລິດ, ການປຸງແຕ່ງເປັນສິນຄ້າ ແລະການບໍລິການ ຂະຫຍາຍຕົວຢ່າງແຜ່ຫລາຍ. ພ້ອມດຽວກັນນັ້ນ ກໍ່ສົ່ງເສີມ ພາກສ່ວນເສດຖະກິດແບບຮ່ວມມື ຂອງປະຊາຊົນ ທີ່ມີຫລາຍຮູບການ, ຫລາຍຂະໜາດ ແລະຫລາຍລະດັບຕ່າງກັນເຊິ່ງຈັດຕັ້ງຂຶ້ນບົນພື້ນຖານຄວາມສະໝັກໃຈ ແລະຕາມຄວາມຮຽກຮ້ອງຕ້ອງການຕົວຈິງ ໂດຍແທດເໝາະກັບຈຸດພິເສດຂອງແຕ່ລະບ່ອນ. ເພື່ອເພີ່ມຄວາມສາມາດດ້ານການລົງທຶນ, ຍົກລະດັບເຕັກນິກ ແລະເຕັກໂນໂລຢີການຜະລິດ, ການປຸງແຕ່ງ

ແລະການບໍລິການ ໃຫ້ນັບມື້ນັບທັນສະໄໝ ແລະນໍາໃຊ້ບົດຮຽນທີ່ກ້າວໜ້າເຂົ້າໃນການຄຸ້ມຄອງ, ພວກເຮົາ ສືບຕໍ່ຊຸກຍູ້ສິ່ງເສີມຮູບການຮ່ວມສໍາພັນ ລະຫວ່າງພາກສ່ວນເສດຖະກິດຕ່າງໆ ເຊັ່ນ ລະຫວ່າງລັດກັບເອກະຊົນ, ລະຫວ່າງເອກະຊົນດ້ວຍກັນ, ລະຫວ່າງພາຍໃນກັບຕ່າງປະເທດ .

ໃນຂະນະທີ່ເສີມຂະຫຍາຍຄຸນປະໂຫຍດອັນຕັ້ງໜ້າຂອງພາກສ່ວນເສດຖະກິດຕ່າງໆນັ້ນ ໃນຊຸມປີຕໍ່ໜ້ານີ້ ພວກເຮົາເຫັນຈໍາເປັນ *ສືບຕໍ່ປັບປຸງ ແລະກໍ່ສ້າງພາກສ່ວນເສດຖະກິດຂອງລັດໃຫ້ມີປະສິດທິຜົນສູງຂຶ້ນ ດ້ວຍການຍົກລະດັບເຕັກນິກ, ເຕັກໂນໂລຢີການຜະລິດ ແລະການຄຸ້ມຄອງໃຫ້ທັນສະໄໝ, ທັງນີ້ກໍເພື່ອສາມາດດໍາລົງບົດບາດເປັນຫລັກແຫລ່ງ ໃນບາງຂະແໜງການຜະລິດ, ບໍລິການ ແລະ ຜະລິດຕະພັນທີ່ເປັນທ່າແຮງ ເພື່ອປະຕິບັດຈຸດໝາຍທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມຂອງພັກແລະລັດເຮົາໄດ້ດີກວ່າເກົ່າ, ມີກໍາລັງແຮງຮ່ວມກັບພາກສ່ວນເສດຖະກິດອື່ນໆ ເພື່ອພັດທະນາປະເທດຊາດຢ່າງຕໍ່ເນື່ອງ ແລະໜັກແໜ້ນ. ເພື່ອເສີມຂະຫຍາຍທ່າແຮງແລະຄວາມອາດສາມາດບົ່ມຊ້ອນຂອງປະເທດເຮົາເວົ້າລວມ ແລະ ຂອງເຂດແຄວ້ນຕ່າງໆ ເວົ້າສະເພາະ, ພັກເຮົາສືບຕໍ່ແຜນນະໂຍບາຍສ້າງ ໂຄງປະກອບເສດຖະກິດກະສິກໍາ-ປ່າໄມ້ຕິດແໜ້ນກັບອຸດສາຫະກໍາ ແລະການບໍລິການຕັ້ງ ແຕ່ທົ່ວທີ, ຖືເອົາການກະສິກໍາ-ປ່າໄມ້ເປັນພື້ນຖານ ແລະເອົາການສ້າງອຸດສາຫະກໍາທີ່ເປັນທ່າແຮງເປັນຈຸດສຸມເລັ່ງລັດ; ຊຸກຍູ້ສົ່ງເສີມການພັດທະນາຂະແໜງບໍລິການ ໃຫ້ຂະຫຍາຍຕົວຢ່າງແຂງແຮງໄປຕາມທິດທັນສະໄໝຂຶ້ນເປັນກ້າວໆ.*

ໃນການປະຕິບັດແຜນນະໂຍບາຍເຮັດໃຫ້ໂຄງປະກອບຂະແໜງເສດຖະກິດດັ່ງກ່າວນັ້ນ ປະກົດເປັນຈິງ ພັກເຮົາຖືສໍາຄັນ ແລະສືບຕໍ່ຊຸກຍູ້ຢ່າງແຂງແຮງ ການພັດທະນາເສດຖະກິດ-ສັງຄົມ ຕາມເຂດແຄວ້ນ ແນໃສ່ຈັດແບ່ງກໍາລັງການຜະລິດ ໃນຂອບເຂດທົ່ວປະເທດໃຫ້ສົມເຫດສົມຜົນ, ທັງຂຸດຄົ້ນຊັບພະຍາກອນອັນອຸດົມສົມບູນ ຂອງແຕ່ລະເຂດແຄວ້ນ ຢ່າງມີປະສິດທິຜົນສູງ, ທັງມີການປົກປັກຮັກສາ ແລະຟື້ນຟູບູລະນະຢ່າງແທ້ຈິງເພື່ອເປັນທຶນຮອນອັນມະຫາສານ ແລະເປັນມໍລະດົກອັນລໍ້າຄ່າຂອງຊາດ, ທິດນໍາຂອງການພັດທະນາເຂດແຄວ້ນ ແມ່ນ ສຸມໃສ່ເຂດແຄວ້ນ ທີ່ມີທ່າແຮງພຽງພໍ ແລະມີເງື່ອນໄຂກ່ອນ

ແນໃສ່ສ້າງເປັນພື້ນຖານ ແລະເປັນກຳລັງແຮງຊ່ວຍຊູຍູ້ຫນູນເຂດແຄວັນອື່ນ ໃຫ້ຂະຫຍາຍຕົວໄປນຳກັນ ໂດຍສະເພາະແມ່ນບໍລິເວນພູດອຍ ແລະຖານທີ່ຫມັ້ນເກົ່າທີ່ຍັງຫລ້າຫລັງໃນປັດຈຸບັນ. ສະນັ້ນ, ກ່ອນອື່ນຫມົດຕ້ອງດຳເນີນການຄົ້ນຄວ້າຢັ່ງສືບຢ່າງເລິກເຊິ່ງ ກ່ຽວກັບທ່າແຮງ ຂອງແຕ່ລະເຂດແຄວັນ ແລະແຕ່ລະບໍລິເວນ ເພື່ອກຳນົດໂຄງປະກອບເສດຖະກິດ ແລະ ວາງແຜນພັດທະນາໃຫ້ສອດຄ່ອງ ທັງຕິດແທນັນກັບແຜນລວມ ຂອງການພັດທະນາທົ່ວປະເທດ.

ພ້ອມກັນນີ້, ພວກເຮົາກໍ່ຕ້ອງພະຍາຍາມຊອກຮູ້, ກຳແຫນັນແຜນການ ແລະໂຄງການພັດທະນາຂອງປະເທດໃກ້ຄຽງ, ຕະຫລອດເຖິງໂຄງການຮ່ວມມືພັດທະນາຕ່າງໆ ຂອງສາກົນໃນອະນຸພາກພື້ນ ເພື່ອເຮັດໃຫ້ແຜນພັດທະນາເຂດແຄວັນຂອງພວກເຮົາ ຕິດພັນກັບໂຄງການຮ່ວມມືພັດທະນາລະຫວ່າງຊາດ. ອັນນີ້ສະແດງເຖິງຄວາມເປັນເຈົ້າການ ຂອງພວກເຮົາໃນການຫມູນໃຊ້ກາລະໂອກາດພາຍນອກ ທີ່ອຳນວຍ ເພື່ອນຳເອົາຜົນປະໂຫຍດມາໃຫ້ປະເທດເຮົາ, ທັງຮັບປະກັນຜົນປະໂຫຍດ ຂອງຄູ່ຮ່ວມມື, ປະກອບສ່ວນເຂົ້າ ໃນການຊຸກຍູ້ທ່າອ່ຽງ ແຫ່ງການຮ່ວມມື ເພື່ອການພັດທະນາໃນພາກພື້ນ ແລະໃນໂລກ.

ໃນຕໍ່ຫນ້ານີ້ ພວກເຮົາຄວນຮີບຮ້ອນຄົ້ນຄວ້າ ສ້າງແຜນຍຸດທະສາດພັດທະນາປະເທດໄລຍະຍາວ (ແຜນຍຸດທະສາດຮອດປີ 2020 ) ເພື່ອຜັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ຄັ້ງທີ VI ໃຫ້ເປັນທິດທາງ, ຫນ້າທີ່ ແລະຄາດຫມາຍສູ້ຊົນແຕ່ລະດ້ານ ລວມທັງທິດທາງນະໂຍບາຍດ້ານການລົງທຶນ, ການເຂົ້າຮ່ວມໃນການຮ່ວມມືສາກົນ, ການຂົນຂວາຍຊອກແຫລ່ງທຶນ ແລະການຍາດແຍ່ງການຊ່ວຍເຫລືອຈາກພາຍນອກ. ເພື່ອເຮັດໄດ້ແນວນັ້ນ ຈຳເປັນຕ້ອງຕັ້ງຫນ້າ ປັບປຸງສະຖາບັນຄົ້ນຄວ້າຍຸດທະສາດເສດຖະກິດ ແນໃສ່ເພີ່ມຄວາມສາມາດໃນການຄົ້ນຄວ້າ, ວິໄຈ ແລະຄາດຄະເນສະພາບເສດຖະກິດ-ສັງຄົມ ແລະທ່າອ່ຽງແຫ່ງການຂະຫຍາຍຕົວຂອງປະເທດເຮົາ ແລະຂອງພາກພື້ນ ກໍຄືຂອງໂລກ ເພື່ອວາງແຜນການຢ່າງແທດເຫມາະ.

ແຜນນະໂຍບາຍ ທີ່ສຳຄັນອັນຫນຶ່ງອີກ ຂອງພັກເຮົາ ໃນຂົງເຂດເສດຖະກິດ ແມ່ນສືບຕໍ່ປັບປຸງ ແລະ ເພີ່ມທະວີການຄຸ້ມຄອງ ຂອງລັດ ຕໍ່ເສດຖະກິດແຫ່ງຊາດ ດ້ວຍກົດຫມາຍ, ດ້ວຍລະບົບນະໂຍບາຍ ແລະເຄື່ອງມືຄຸ້ມຄອງອື່ນໆ ຢ່າງຄົບຊຸດ, ໃຫ້ທິດແນະ

ນຳພາກສ່ວນເສດຖະກິດຕ່າງໆ ຂະຫຍາຍຕົວໄປຕາມໂຄງປະກອບ ແລະແຜນກຳນົດລວມຂອງການພັດທະນາເສດຖະກິດແຫ່ງຊາດ, ທັງສ້າງເງື່ອນໄຂ ອຳນວຍຄວາມສະດວກໃຫ້ຫົວໜ່ວຍຜະລິດທຸລະກິດຂອງພາກສ່ວນເສດຖະກິດຕ່າງໆ ໄດ້ເຄື່ອນໄຫວຢ່າງມີປະສິດທິພາບ ແລະສາມາດແຂ່ງຂັນກັບຕະຫລາດຕ່າງປະເທດໄດ້.

ໃນການເພີ່ມທະວີການຄຸ້ມຄອງຂອງລັດຕໍ່ເສດຖະກິດແຫ່ງຊາດນັ້ນ ພວກເຮົາຄວນຮັບຮູ້ຄວາມສຳຄັນຂອງວຽກງານແຜນການ ເພາະມັນໃຫ້ທິດແກ່ການພັດທະນາ ແລະສ້າງຄວາມກົມກຽວລະຫວ່າງເສດຖະກິດກັບການເມືອງ, ວັດທະນະທຳ-ສັງຄົມ ແລະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ລະຫວ່າງເຂດທົ່ງພຽງກັບເຂດພູດອຍ ແລະລະຫວ່າງເສດຖະກິດກັບສິ່ງແວດລ້ອມ. ສະນັ້ນ ໃນການຄົ້ນຄວ້າວາງແຜນປະຈຳປີ ກໍຄືແຜນການ 5 ປີ ຈຶ່ງຕ້ອງມີການຄິດໄລ່ຄວາມສາມາດດ້ານທຶນຮອນ, ພາຫະນະ ແລະກຳລັງຄົນ ໃຫ້ພໍກັບຄວາມຈຳເປັນໃນການປະຕິບັດໂຄງການ. ເຮັດໄດ້ແນວນັ້ນ ແຜນການຈຶ່ງເກີດໝາກເກີດຜົນ, ທັງຮັບປະກັນການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະສອດຄ່ອງກັບການພັດທະນາໃນໂລກປັດຈຸບັນ.

ອີງຕາມບັນດາແຜນນະໂຍບາຍ ແລະທັດສະນະລວມ ທາງດ້ານເສດຖະກິດ ທີ່ກ່າວມາເທິງນັ້ນ ຂ້າພະເຈົ້າສະເໜີ *ທິດທາງ, ວຽກງານຕົ້ນຕໍຂອງແຕ່ລະຂະແໜງການ* ດັ່ງຕໍ່ໄປນີ້:

*ການພັດທະນາຊົນນະບົດ.* ປະເທດເຮົາແມ່ນປະເທດກະສິກຳ, ພົນລະເມືອງສ່ວນຫລວງຫລາຍດຳລົງຊີວິດ ແລະທຳມາຫາກິນຢູ່ຊົນນະບົດ. ສະນັ້ນ ການພັດທະນາຊົນນະບົດຈຶ່ງມີຄວາມໝາຍຍຸດທະສາດທາງດ້ານການເມືອງ, ເສດຖະກິດ ແລະສັງຄົມ. ຊົນນະບົດໄດ້ຮັບການພັດທະນາທໍ່ໃດ, ນະໂຍບາຍສາມັກຄີສະເໝີພາບລະຫວ່າງບັນດາເຜົ່າ ຈຶ່ງຈະໄດ້ຮັບການປະຕິບັດໄດ້ດີທໍ່ນັ້ນ; ກຳລັງການຜະລິດກໍຈະໄດ້ຮັບການປົດປ່ອຍແລະຂະຫຍາຍຕົວ, ການແບ່ງງານສັງຄົມຍິ່ງສົມເຫດສົມຜົນ. ເມື່ອເປັນເຊັ່ນນັ້ນ ທິດທາງການພັດທະນາຊົນນະບົດ ແມ່ນສຸມໃສ່ສ້າງເສດຖະກິດຄອບຄົວ ຊາວກະສິກອນ, ຂະຫຍາຍຄອບຄົວຕົວແບບ ແລະສ້າງໃຫ້ເກີດມີກຸ່ມເສດຖະກິດ-ວັດທະນະທຳ ເຊິ່ງໃນນັ້ນການຜະລິດສິນຄ້າ ຂະຫຍາຍຕົວ, ປະຊາຊົນ ມີຄວາມຮູ້ ແລະ ມີພະລະນາໄມ ສົມບູນ

ແລະຊີວິດການເປັນຢູ່ດີຂຶ້ນ ເທື່ອລະກ້າວ, ບ້ານຊ່ອງມີຄວາມສະຫງົບ ແລະລະບົບການ ເມືອງຢູ່ຂັ້ນບ້ານມີຄວາມໜັກແໜ້ນ. ຢາກໃຫ້ໄດ້ແນວນັ້ນ ແມ່ນຕ້ອງເສີມຂະຫຍາຍຈິດ ໃຈເປັນເຈົ້າຂອງປະຊາຊົນ ໂດຍເອົາໃຈໃສ່ຊຸກຍູ້ການຜະລິດຂອງຄອບຄົວ, ແລະສ້າງນັກ ພັດທະນາກັບທີ່ໃຫ້ໄດ້, ພ້ອມກັນນັ້ນ ລັດມີນະໂຍບາຍຊ່ວຍໜູນ ແລະສົ່ງເສີມໃຫ້ພາກ ສ່ວນເສດຖະກິດຕ່າງໆ ເຂົ້າຮ່ວມ. ສະເພາະເຂດພູດອຍຊົນເຜົ່າ ທີ່ທຸລະກັນດານ ແລະ ຖານທີ່ໝັ້ນເກົ່າ ລັດຕ້ອງເປັນຜູ້ຊ່ວຍໜູນຕົ້ນຕໍດ້ານທຶນຮອນ, ເຕັກນິກ ແລະວິຊາການ ທັງປຸກລະດົມກຳລັງແຮງທົ່ວສັງຄົມເຂົ້າຮ່ວມ. ໃນສະເພາະໜ້ານີ້ ແມ່ນເລັ່ງລັດການຂຶ້ນ ໂຄງການພັດທະນາຢູ່ແຕ່ລະບໍລິເວນຈຸດສຸມຂອງ ສູນກາງ ແລະຂອງທ້ອງຖິ່ນຕ່າງໆ ໂດຍ ມີບົດວິພາກເສດຖະກິດ-ເຕັກນິກອັນຈະແຈ້ງ, ມີການຮັບປະກັນທຶນຮອນ, ພາຫະນະສຳລັບ ປະຕິບັດໂຄງການ ແລະມີພະນັກງານຮັບຜິດຊອບນຳພາເຮັດຕົວຈິງ; ເພີ່ມທະວີການປະ ສານສົມທົບ ແລະການຊີ້ນຳໃຫ້ເປັນເອກະພາບ ແລະຕິດແທດກັບຮາກຖານ. ຖືເປັນສຳຄັນ ການຈັດຕັ້ງເຮັດທົດລອງ, ການສ້າງແບບຢ່າງ, ການສະຫລຸບຕີລາຄາ ຜົນການປະຕິບັດ ແລະການຖອດຖອນບົດຮຽນ.

*ວຽກງານກະສິກຳ-ປ່າໄມ້.* ກະສິກຳ-ປ່າໄມ້ ເປັນຂະແໜງການພື້ນຖານໃນເສດ ຖະກິດແຫ່ງຊາດ. ພວກເຮົາຕ້ອງເອົາໃຈໃສ່ພັດທະນາຢ່າງຕັ້ງໜ້າ ໂດຍຖືເອົາການຍົກ ສະມັດຖະພາບການຜະລິດໃຫ້ສູງຂຶ້ນ ຕິດແໜ້ນກັບການປົກປັກຮັກສາ, ຟື້ນຟູລະນະດິນ, ປ່າໄມ້ ແລະນ້ຳ ໃຫ້ອຸດົມສົມບູນ ເປັນໜ້າທີ່ຕົ້ນຕໍ ສູ້ຊົນຜະລິດເຂົ້າໃຫ້ກຸ້ມກິນ ແລະມີແຮ ໄວ້ສ່ວນໜຶ່ງ.

ຢາກໄດ້ແນວນັ້ນ ຕ້ອງປະຕິບັດນະໂຍບາຍສົ່ງເສີມຄອບຄົວແບບຢ່າງ ໃນແຕ່ລະ ບ້ານ, ແຕ່ລະບໍລິເວນທັງຢູ່ເຂດທົ່ງພຽງ ແລະຢູ່ເຂດພູດອຍ ເພື່ອຊຸກຍູ້ການຜະລິດກະສິກຳ ໃຫ້ເປັນສິນຄ້າຕາມທ່າແຮງຂອງແຕ່ລະບ່ອນ; ປຸກລະດົມ ແລະຈັດຕັ້ງນຳພາການເຮັດກະ ເສດສຸມຢ່າງກວ້າງຂວາງ ດ້ວຍການນຳໃຊ້ວິທະຍາການທີ່ກ້າວໜ້າ, ຂະຫຍາຍພື້ນຖານ ວັດຖຸ-ເຕັກນິກກະສິກຳ ເປັນຕົ້ນລະບົບຊົນລະປະທານ ທັງຂະໜາດກາງ ແລະຂະໜາດ ນ້ອຍ ຕາມທິດນຳ ລັດ ແລະປະຊາຊົນ ຮ່ວມກັນເຮັດ; ຂະຫຍາຍສູນຄົ້ນຄວ້າທົດລອງ ແລະຕາໜ່າງບໍລິການດ້ານການກະສິກຳໄປຍັງຈຸດສຳຄັນຂອງປະເທດ. ໃນຕໍ່ໜ້ານີ້ຕ້ອງດຳ

ເນີນໂຄງການພັດທະນາ ບັນດາເຂດຈຸດສຸມ ດ້ານກະສິກຳ ໃຫ້ເປັນຮູບປະທຳ ກ່ອນອື່ນ ເຂດທີ່ງພຽງວຽງຈັນ ເພື່ອຖອດຖອນບົດຮຽນ.

ໄປພ້ອມກັບການປູກຝັງນັ້ນ ຈະຕ້ອງສົ່ງເສີມການລ້ຽງສັດຢ່າງແຂງແຮງ ເປັນຕົ້ນຢູ່ເຂດພູດອຍ, ເຮັດໃຫ້ການລ້ຽງສັດ ກາຍເປັນທ່າແຮງ ອັນຫນຶ່ງຢ່າງແທ້ຈິງ. ຢາກໃຫ້ໄດ້ແນວນັ້ນ ຈະຕ້ອງສົ່ງເສີມການລ້ຽງສັດ ຂອງຄອບຄົວຕິດພັນກັບການເປີດກວ້າງຕາໜ່າງສັດຕະວະແພດ ຂັ້ນບ້ານ; ສ້າງຕັ້ງສູນບໍລິການດ້ານສັດຕະວະແພດ ໃນບໍລິເວນຈຸດສຸມ.

ດຳເນີນການຈັດສັນທີ່ດິນ, ກ່ອນອື່ນແມ່ນ ດິນກະສິກຳປ່າໄມ້, ປະຕິບັດນະໂຍບາຍມອບດິນ, ມອບປ່າໃຫ້ປະຊາຊົນປົກປັກຮັກສາ ແລະນຳໃຊ້ຢ່າງກວ້າງຂວາງ ໂດຍສອດຄ່ອງກັບລະບຽບກົດຫມາຍ; ສືບຕໍ່ແກ້ໄຂບັນຫາຍຸດຕິການຖາງປ່າເຮັດໄຮ່ ໂດຍສຸມໃສ່ແກ້ໄຂໃນເຂດຍອດນ້ຳລຳເຊ, ເຂດປ່າດົງດິບ, ເຂດປ່າສະຫງວນ, ແກ້ໄຂໃຫ້ສຳເລັດຢ່າງຂາດຕົວເປັນແຕ່ລະຈຸດໃນແຕ່ລະບໍລິເວນ ດ້ວຍບາດກ້າວ ແລະວິທີອັນເປັນລະບົບຄົບຊຸດ, ໃນນີ້ໃຫ້ເອົາໃຈໃສ່ຈັດຕັ້ງພູມລຳເນົາ ແລະ ຈັດອາຊີບຄົງທີ່ ທີ່ມີປະສິດທິຜົນ ໃຫ້ປະຊາຊົນ, ແກ້ໄຂທີ່ດິນເພື່ອທຳການຜະລິດໃຫ້ເຂົາເຈົ້າ. ປຸກລະດົມສົ່ງເສີມຂະບວນການປູກຕົ້ນໄມ້ນາໆ ຊະນິດ ເພື່ອໃຊ້ສອຍ ແລະເປັນສິນຄ້າ; ຄຸ້ມຄອງການຂຸດຄົ້ນໄມ້ ແລະການທຸລະກິດໄມ້ຢ່າງເຂັ້ມງວດ; ນຳໃຊ້ດິນໃຫ້ຖືກຕ້ອງຕາມເປົ້າຫມາຍ. ໃນສະເພາະຫນ້ານີ້ ໃຫ້ຄົ້ນຄວ້າ ແລະວາງຂໍ້ກຳນົດກ່ຽວກັບ ທີ່ດິນໂດຍສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດເຮົາ; ຜ່ານການປະຕິບັດໄລຍະຫນຶ່ງ ຈຶ່ງສະຫລຸບຖອດຖອນບົດຮຽນ ແລະ ວາງເປັນກົດຫມາຍກ່ຽວກັບທີ່ດິນ.

*ວຽກງານອຸດສາຫະກຳ ແລະຫັດຖະກຳ.* ເພື່ອສ້າງການສະສົມເບື້ອງຕົ້ນໃຫ້ແກ່ການຫັນເປັນອຸດສາຫະກຳ, ພວກເຮົາຈະຕ້ອງໃຫ້ຄວາມສຳຄັນ ແກ່ການພັດທະນາ ດ້ານອຸດສາຫະກຳໄປຄຽງຄູ່ກັບດ້ານການກະສິກຳ-ປ່າໄມ້ດັ່ງທີ່ກ່າວມານັ້ນ. ທິດນຳຂອງວຽກງານນີ້ ແມ່ນຕ້ອງຂຸດຄົ້ນ ຄວາມອາດສາມາດ ບົ່ມຊ້ອນຂອງຊັບໃນດິນສິນໃນນ້ຳຢ່າງມີຈຸດສຸມ, ຮັບປະກັນລັກສະນະສົມເຫດສົມຜົນ ແລະມີປະສິດທິຜົນທາງດ້ານເສດຖະກິດ-ສັງຄົມ, ທັງປົກປັກຮັກສາສິ່ງແວດລ້ອມ.

ໃນສະເພາະໜ້ານີ້ ໃຫ້ເພີ່ມທະວີວຽກງານ ສຳຫລວດສືບຄົ້ນ ດ້ານພະລັງນ້ຳ ແລະທໍລະນີສາດ ເພື່ອມີຂໍ້ມູນພື້ນຖານ ສຳລັບວາງຍຸດທະສາດ ການພັດທະນາອຸດສາຫະກຳຢ່າງເປັນລະບົບ. ອີງໃສ່ຄວາມອາດສາມາດບົ່ມຊ້ອນ ຂອງປະເທດເຮົາ, ພວກເຮົາຈະໄດ້ເລັ່ງລັດການພັດທະນາຂະແໜງພະລັງງານໄຟຟ້າ ແລະອຸດສາຫະກຳບໍ່ແຮ່. ພ້ອມກັນນັ້ນ ຊຸກຍູ້ ແລະສົ່ງເສີມການຂະຫຍາຍອຸດສາຫະກຳເບົາ, ອຸດສາຫະກຳນ້ອຍ ແລະຫັດຖະກຳ ແນໃສ່ປຸງແຕ່ງຜະລິດຕະພັນກະສິກຳປ່າໄມ້ ກໍຄືປຸງແຕ່ງວັດຖຸດິບທີ່ມີຢູ່ໃນປະເທດໃຫ້ເປັນເຄື່ອງໃຊ້ສອຍ, ເປັນວັດສະດຸກໍ່ສ້າງ ເພື່ອຮັບໃຊ້ຄວາມຕ້ອງການຢູ່ພາຍໃນປະເທດ, ລຶດຜ່ອນການນຳເຂົ້າສິນຄ້າ ທີ່ບໍ່ຈຳເປັນ, ທັງຊຸກຍູ້ການຜະລິດ ເພື່ອສົ່ງອອກອີກດ້ວຍ; ພະຍາຍາມ ສ້າງລະບົບອຸດສາຫະກຳ ໃຫ້ເປັນຕົນເປັນຕົວຂຶ້ນເທື່ອລະກ້າວ ໃນແຕ່ລະພາກຂອງປະເທດ ເປັນຕົ້ນຢູ່ເຂດໃຈກາງ ເພື່ອເປັນພື້ນຖານໃຫ້ແກ່ການຫັນເປັນອຸດສາຫະກຳໃນຂັ້ນຕໍ່ໄປ. ສົ່ງເສີມການຕິດຕັ້ງ ແລະກໍ່ສ້າງເຂື່ອນໄຟຟ້າຂະໜາດນ້ອຍ ຂອງປະຊາຊົນເພື່ອຮັບໃຊ້ການຜະລິດ ແລະຊີວິດການເປັນຢູ່.

*ວຽກງານຄົມມະນາຄົມ, ການສື່ສານ ແລະ ການກໍ່ສ້າງ.*

ການຄົມມະນາຄົມ ແລະການສື່ສານ ເປັນຂະແໜງປາຍແຫລມ ທີ່ມີຄວາມສຳຄັນຍຸດທະສາດ ສຳລັບການພັດທະນາປະເທດ ແລະເສີມຂະຫຍາຍທ່າແຮງດ້ານທີ່ຕັ້ງພູມສາດຂອງປະເທດເຮົາ. ສະນັ້ນ ຕ້ອງເຮັດໃຫ້ການຄົມມະນາຄົມ ແລະການສື່ສານ ທັນສະໄໝ, ສະດວກ, ວ່ອງໄວ ແລະທະລຸໄປສູ່ຈຸດສຳຄັນ ໃນທົ່ວປະເທດ.

ໃນຕໍ່ໜ້ານີ້ ຕ້ອງສຸມໃສ່ ປັບປຸງຍົກລະດັບຄຸນນະພາບເສັ້ນທາງຫລວງແຫ່ງຊາດທັງສາຍຕັ້ງ, ສາຍຂວາງ ແລະຂະຫຍາຍຕື່ມຈຳນວນໜຶ່ງ ເພື່ອເຊື່ອມຕໍ່ກັບເສັ້ນທາງຄົມມະນາຄົມຂອງປະເທດໃກ້ຄຽງ. ວາງແຜນກຳນົດ ກ່ຽວກັບການພັດທະນາລະບົບຄົມມະນາຄົມຂອງປະເທດສຳລັບໄລຍະຍາວ ທັງທາງລົດໂອໂຕ, ທາງລົດໄຟ, ທາງນ້ຳ ແລະທາງອາກາດ. ປັບປຸງ ແລະຂະຫຍາຍເສັ້ນທາງທ້ອງຖິ່ນ ໂດຍຮັບປະກັນໃຫ້ໄປໄດ້ເຖິງທຸກເມືອງ ແລະ ບ່ອນຈຸດສຸມທາງເສດຖະກິດ-ສັງຄົມ, ອຳນວຍຄວາມສະດວກ ໃຫ້ແກ່ການຂົນສົ່ງ ແລະໂດຍສານ. ຂະຫຍາຍຫ້ອງການໄປສະນີ ໄປທົ່ວທຸກເມືອງ ແລະເຂດສຳຄັນຂອງປະເທດ; ຮັບປະກັນໃຫ້ການຕິດຕໍ່ທາງໂທລະສັບໂດຍກົງ ລະຫວ່າງສູນກາງ ກັບທຸກໆແຂວງ

ແລະເມືອງຂອງປະເທດ ກໍຄືລະຫວ່າງພາຍໃນປະເທດກັບຕ່າງປະເທດ ໃຫ້ມີຄວາມສະດວກ ແລະຮັບປະກັນຍິ່ງຂຶ້ນ.

ວຽກງານກໍ່ສ້າງ ແລະພັດທະນາຕົວເມືອງ ນັບມື້ນັບມີຄວາມສຳຄັນ. ອັນຮີບດ່ວນສະເພາະຫນ້ານີ້ ແມ່ນຕ້ອງເອົາໃຈໃສ່ປົກປັກຮັກສາ ແລະບູລະນະຕົວເມືອງຫລວງພະບາງເຊິ່ງຖືກຮັບຮອງເປັນມໍລະດົກໂລກ ພ້ອມກັນນັ້ນກໍເອົາໃຈໃສ່ພັດທະນາ ນະຄອນຫລວງວຽງຈັນ ແລະບັນດາເທສະບານຂອງແຂວງ ໃຫ້ມີໃບຫນ້າໃຫມ່, ຖືກຕ້ອງຕາມຜັງເມືອງ, ສ່ອງແສງເຖິງສະຖາປັດຕະຍະກຳອັນເປັນເອກະລັກຂອງຊາດເຮົາ ແລະເອົາໃຈໃສ່ເປັນພິເສດຕໍ່ການຮັກສາສິ່ງແວດລ້ອມ, ຕິດພັນກັບການປັບປຸງ ແລະຂະຫຍາຍສິ່ງອຳນວຍຄວາມສະດວກພື້ນຖານ. *ຄົ້ນຄວ້າ, ວາງແຜນຜັງກໍ່ສ້າງເຂດຈຸດສຸມພັດທະນາຢູ່ຊົນນະບົດ ແລະເຂດພູດອຍ ຕາມຮູບລັກສະນະ ຂອງຕົວເມືອງນ້ອຍ ໂດຍມີກຸ່ມເສດຖະກິດ-ວັດທະນະທຳ ເປັນໃຈກາງ.*

*ວຽກງານທ່ອງທ່ຽວ.* ການທ່ອງທ່ຽວ ແມ່ນພາກສ່ວນສຳຄັນ ຂອງນະໂຍບາຍເປີດກວ້າງການພົວພັນກັບພາຍນອກ, ທັງແມ່ນທ່າແຮງໃຫມ່ອັນຫນຶ່ງ ສຳລັບການສ້າງລາຍຮັບຂອງປະເທດ. ທິດທາງ, ນະໂຍບາຍ ຂອງພວກເຮົາ ແມ່ນເປີດກວ້າງ ການທ່ອງທ່ຽວທຳມະຊາດ ແລະທ່ອງທ່ຽວວັດທະນະທຳ. ສະນັ້ນ ຕ້ອງເລັ່ງລັດສ້າງແຫລ່ງທ່ອງທ່ຽວໂດຍເອົາຄວາມງາມ ຂອງທິວທັດທຳມະຊາດ ແລະສະພາບແວດລ້ອມ ທີ່ຍັງຄົງຄຸນຄ່າອັນດັ້ງເດີມ, ເອົາເອກະລັກວັດທະນະທຳແຫ່ງຊາດ ແລະ ຂອງຊົນເຜົ່າຕ່າງໆ ເປັນສິ່ງດຶງດູດນັກທ່ອງທ່ຽວ. ຄວນປັບປຸງ ພື້ນຖານໂຄງລ່າງ ແລະ ການບໍລິການທ່ອງທ່ຽວໃຫ້ດີຂຶ້ນເພື່ອອຳນວຍຄວາມສະດວກ ແລະ ສ້າງຄວາມປະທັບໃຈແກ່ນັກທ່ອງທ່ຽວ. ຮັບປະກັນຄວາມກົມກຽວ ລະຫວ່າງການທ່ອງທ່ຽວກັບການອະນຸລັກທຳມະຊາດ ແລະວັດທະນະທຳ. ພວກເຮົາພັດທະນາ ການທ່ອງທ່ຽວຢ່າງມີຈຸດສຸມ ແລະມີການຄຸ້ມຄອງລວມສູນ ເປັນເອກະພາບ ເຮັດໃຫ້ການທ່ອງທ່ຽວ ດຳເນີນໄປດ້ວຍຄວາມເປັນລະບຽບຈົບງາມ ແລະ ຮັບປະກັນຄວາມປອດໄພ.

*ວຽກງານການຄ້າ.* ການຄ້າມີບົດບາດສຳຄັນທີ່ສຸດ ໃນການກະຕຸກຊຸກຍູ້ ແລະຂະຫຍາຍການຜະລິດ, ຫັນປ່ຽນເສດຖະກິດທຳມະຊາດ ເປັນເສດຖະກິດສິນຄ້າ, ເຮັດໃຫ້

ຕະຫລາດພາຍໃນຂະຫຍາຍຕົວ ແລະເຊື່ອມເຂົ້າກັບຕະຫລາດ ຂອງພາກພື້ນ ແລະຂອງໂລກ.

ສະນັ້ນ ຕ້ອງມີນະໂຍບາຍສົ່ງເສີມພາກສ່ວນເສດຖະກິດຕ່າງໆ ເຮັດພາລະບົດບາດບໍລິການການຄ້າຜູກພັນສອງສົ້ນ ແກ່ຄອບຄົວຊາວກະສິກອນ ຢ່າງແຜ່ຫລາຍ, ຂະຫຍາຍຮູບການແລກປ່ຽນຊື້ຂາຍ ທີ່ແທດເຫມາະກັບແຕ່ລະບໍລິເວນ, ອຳນວຍຄວາມສະດວກໃຫ້ແກ່ການຈໍລະຈອນສິນຄ້າ; ດຳເນີນການຄຸ້ມຄອງ ແລະ ດັດສົມຕະຫລາດ ຢ່າງເປັນເຈົ້າການ ໂດຍມີການແຊກແຊງ ດ້ວຍວິທີອັນເຫມາະສົມໃນເມື່ອຈຳເປັນ; ຮັບປະກັນຄວາມສະຫງົບຂອງຕະຫລາດ (ຂອງລາຄາ) ໃຫ້ໄດ້ໂດຍພື້ນຖານ. ສົ່ງເສີມການເຮັດຂາເຂົ້າພາຫະນະ ແລະອຸປະກອນການຜະລິດ ເພື່ອຊຸກຍູ້ ການຜະລິດພາຍໃນ ໃຫ້ຂະຫຍາຍຕົວ, ລົດຜ່ອນການເຮັດຂາເຂົ້າສິນຄ້າປະເພດຕ່າງໆ ຕາມນະໂຍບາຍປົກປ້ອງການຜະລິດພາຍໃນປະເທດຢ່າງເຫມາະສົມ. ເປີດກວ້າງຕະຫລາດສົ່ງອອກ ຂອງປະເທດເຮົາ, ຈັດຕັ້ງການບໍລິການດ້ານການຄ້າຜ່ານແດນ ແລະ ການເຮັດຂາອອກຕໍ່ໃຫ້ດີ, ສົ່ງເສີມການຂາອອກຂະຫນາດນ້ອຍ ຂອງປະຊາຊົນ. ບັນດາຂະແຫນງການທີ່ກ່ຽວຂ້ອງ ຕ້ອງປະສານສົມທົບກັນຢ່າງແຫນ້ນແຟ້ນ ໃນການຄົ້ນຄວ້າ ແລະຄາດຄະເນ ສະພາບຕະຫລາດ ທັງພາຍໃນ ແລະຕ່າງປະເທດ, ປັບປຸງ ແລະເພີ່ມເຕີມລະບຽບການ, ກົນໄກຄຸ້ມຄອງການຄ້າໃຫ້ເປັນລະບົບຄົບຊຸດ, ພ້ອມທັງປະຕິບັດໃຫ້ເຂັ້ມງວດ.

*ວຽກງານການເງິນ.* ການເງິນ ແມ່ນສ່ວນປະກອບພື້ນຖານ ຂອງເສດຖະກິດແຫ່ງຊາດ, ທັງເປັນເຄື່ອງມືຕົ້ນຕໍ ໃນການຄຸ້ມຄອງມະຫາພາກຂອງລັດ. ຈຸດຫມາຍສູ້ຊົນສຳລັບຊຸມປີສະເພາະຫນ້ານີ້ ແມ່ນເຮັດໃຫ້ການເງິນແຫ່ງຊາດ ມີຄວາມຫມັ້ນທ່ຽງຂຶ້ນເປັນກ້າວໆ ບົນພື້ນຖານການເພີ່ມແຫລ່ງລາຍຮັບຈາກພາຍໃນ, ຫລຸດຜ່ອນການເອື່ອຍອີງໃສ່ແຫລ່ງລາຍຮັບຈາກພາຍນອກ, ເຮັດໃຫ້ລາຍຮັບ ແລະລາຍຈ່າຍງົບປະມານແຫ່ງຊາດ ມີຄວາມດຸນດ່ຽງ ແລະມີສ່ວນສະສົມເບື້ອງຕົ້ນ

ສືບຕໍ່ປູລະນະ ລະບົບນະໂຍບາຍການເງິນແຫ່ງຊາດ, ກ່ອນອື່ນແມ່ນ ປັບປຸງນະໂຍບາຍການລົງທຶນຂອງລັດ ຕາມທິດ ຮັບປະກັນປະສິດທິຜົນ ແລະ ຮັບໃຊ້ການສ້າງໂຄງ

ປະກອບເສດຖະກິດແຫ່ງຊາດ, ເຮັດໃຫ້ແຜນການງົບປະມານ ຕິດພັນສະໜິດແໜ້ນກັບແຜນພັດທະນາເສດຖະກິດ-ສັງຄົມຂອງປະເທດ, ຊຸກຍູ້ການຜະລິດສຳເປີດກວ້າງຢ່າງແຂງແຮງ ແນໃສ່ສ້າງແຫລ່ງລາຍຮັບໃຫມ່ທີ່ຫມັ້ນຄົງ; ຄົ້ນຄວ້າ ແລະດຳເນີນການແບ່ງຂັ້ນຄຸ້ມຄອງ ທາງດ້ານການເງິນ ແລະງົບປະມານ ໃຫ້ສອດຄ່ອງກັບສະພາບຕົວຈິງ ຕາມທິດຮັບປະກັນຫລັກການລວມສູນ, ທັງເສີມຂະຫຍາຍໄດ້ຄວາມຫ້າວຫັນ ເປັນເຈົ້າການ ຮັບຜິດຊອບຂອງທ້ອງຖິ່ນ ແລະຫົວຫນ່ວຍງົບປະມານຕ່າງໆ.

ລະດົມ ແລະຂຸດຄົ້ນແຫລ່ງລາຍຮັບ ຢ່າງສຸດຂີດ, ໂດຍສົມທົບກັບຈັງຫວະ ແລະບາດກ້າວຂະຫຍາຍຕົວຂອງເສດຖະກິດ. ສືບຕໍ່ດັດແປງ, ແກ້ໄຂ ແລະເພີ່ມເຕີມ ນະໂຍບາຍພາສີອາກອນໃຫ້ສອດຄ່ອງ, ສະກັດກັ້ນການລັກໂລບ, ຫລົບຫລີກການປະຕິບັດພັນທະການເງິນ; ປະຕິບັດລະບຽບກົດຫມາຍຕ່າງໆ ກ່ຽວກັບການເງິນຢ່າງເຂັ້ມງວດ. ລະດົມແຫລ່ງການເງິນຈາກພາຍນອກຢ່າງມີຈຸດສຸມ ແລະມີການຄົ້ນຄວ້າຢ່າງຮອບຄອບ, ການກູ້ຢືມ ທຸກຢ່າງ ຕ້ອງຄຳນຶງເຖິງປະສິດທິຜົນ ແລະຄວາມອາດສາມາດທົດແທນຄືນ.

ຄຸ້ມຄອງການໃຊ້ຈ່າຍຕາມລະບຽບການ ແລະ ກຳນົດຫມາຍຢ່າງເຄັ່ງຄັດ; ຈຳກັດຢ່າງສຸດຂີດການຈ່າຍເກີນ ແລະ ຈ່າຍນອກແຜນການງົບປະມານ, ຮັບປະກັນໃຫ້ການໃຊ້ຈ່າຍຖືກຕາມເປົ້າຫມາຍ ແລະມີປະສິດທິຜົນຕົວຈິງ; ວາງມາດຕະການ ແລະລະບອບການປະຢັດອອກ ໂດຍຖືເປັນນະໂຍບາຍແຫ່ງຊາດ ແລະ ເຮັດໃຫ້ການປະຢັດ ກາຍເປັນສະຕິສຳນຶກ ແລະເປັນການກະທຳຂອງພົນລະເມືອງທຸກຄົນ.

ເພີ່ມທະວີການຄຸ້ມຄອງມະຫາພາກ ດ້ານການເງິນຂອງລັດ, ປັບປຸງອົງການກວດກາການເງິນ, ດຳເນີນການກວດກາ ການຈັດຕັ້ງປະຕິບັດ ຂໍ້ກຳນົດກົດຫມາຍຕ່າງໆ ກ່ຽວກັບການເງິນ ແລະການບັນຊີຢ່າງເຂັ້ມງວດ, ປະຕິບັດລະບອບການກວດກາຫົວຫນ່ວຍຜະລິດທຸລະກິດ ຂອງພາກສ່ວນເສດຖະກິດຕ່າງໆ ທາງດ້ານການເງິນ ຢ່າງເປັນປົກກະຕິ ແລະມີຄວາມສັກສິດ; ຍົກລະດັບຄວາມສາມາດດ້ານການຄົ້ນຄວ້າ, ວິໄຈ ແລະຄາດຄະເນສະພາບເສດຖະກິດການເງິນໃຫ້ສູງຂຶ້ນ.

ສືບຕໍ່ຄົ້ນຄວ້າ ປັບປຸງລະບົບເງິນເດືອນ ແລະ ລະບອບນະໂຍບາຍ ເປັນວັດຖຸ ນອກເງິນເດືອນ ຂອງລັດຖະກອນໃຫ້ສົມເຫດສົມຜົນ, ລຶບລ້າງການເກື້ອກູນ ອັນບໍ່ສົມຄວນ ແລະການຟຸມເຟືອຍ.

*ວຽກງານທະນາຄານ.* ນະໂຍບາຍເງິນຕາ ແມ່ນເຄື່ອງມືສຳຄັນຂອງລັດ ໃນການຄຸ້ມຄອງເສດຖະກິດຕະຫລາດ. ໃນຊຸມປີຕໍ່ຫນ້ານີ້ ຕ້ອງສູ້ຊົນ ຮັກສາສະຖຽນລະພາບດ້ານເງິນຕາ, ຄວບຄຸມດັດສະນີລາຄາສິນຄ້າ ແລະອັດຕາເງິນເຟີ້ບໍ່ໃຫ້ເພີ່ມຂຶ້ນແບບຮ້າຍແຮງ; ຮັກສາຄ່າ ແລະຄວາມສາມາດຊື້ ຂອງເງິນກີບ, ນຳໃຊ້ເງິນກີບເປັນຕົ້ນຕໍ ໃນການຊຳລະສະສາງພາຍໃນປະເທດ, ຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດໃຫ້ຖືກຕ້ອງຕາມລະບຽບການ, ເຮັດໃຫ້ອັດຕາແລກປ່ຽນລະຫວ່າງເງິນກີບ ກັບເງິນຕາຕ່າງປະເທດ ມີຄວາມສະຫງົບປົກກະຕິ.

ເສີມຂະຫຍາຍບົດບາດ ຂອງທະນາຄານແຫ່ງ ສປປລາວ ຢ່າງຕັ້ງຫນ້າໃນການຄຸ້ມຄອງການເຄື່ອນໄຫວດ້ານເງິນຕາ ໃນທົ່ວປະເທດ ແລະ ການເຄື່ອນໄຫວ ຂອງທະນາຄານທຸລະກິດຂອງລັດ ແລະຂອງເອກະຊົນ, ລວມທັງທະນາຄານຫຸ້ນສ່ວນ ແລະສາຂາທະນາຄານຕ່າງປະເທດຢ່າງມີໄຫວພິບ ແລະເຂັ້ມງວດ; ປະຕິບັດພາລະບົດບາດ ເປັນໃຈກາງບັນຊາທີ່ທັນສະໄຫມ ແລະຮັບປະກັນການບໍລິການ ທີ່ຄ່ອງແຄ້ວ, ວ່ອງໄວ ແລະມີຄວາມສັກສິດຕໍ່ບັນດາທະນາຄານ. ຄົ້ນຄວ້າ, ປັບປຸງ ແລະ ອອກຂໍ້ກຳນົດກົດຫມາຍເພີ່ມເຕີມ, ສ້າງລະບົບທະນາຄານໃຫ້ສົມບູນ, ຮີບຮ້ອນປັບປຸງທະນາຄານທຸລະກິດ ຂອງລັດໃຫ້ມີປະສິດທິພາບ; ຂະຫຍາຍສາຂາທະນາຄານ ເປັນຕົ້ນ ທະນາຄານສົ່ງເສີມກະສິກຳ ລົງສູ່ທ້ອງຖິ່ນ ເພື່ອບໍລິການແກ່ຊາວກະສິກອນໄດ້ກວ້າງຂວາງ, ທົ່ວເຖິງກວ່າເກົ່າ ແລະຊຸກຍູ້ການຜະລິດຢ່າງຕັ້ງຫນ້າ. ວາງນະໂຍບາຍດອກເບ້ຍທີ່ເຫມາະສົມ ແລະ ມີໄຫວພິບ ເພື່ອລະດົມເງິນຝາກ ພາຍໃນປະເທດໃຫ້ໄດ້ໃນລະດັບສູງ; ນຳໃຊ້ຮູບການຊຳລະສະສາງ ທີ່ທັນສະໄຫມ ເພື່ອຮັບປະກັນການບໍລິການສັງຄົມໃຫ້ໄດ້ດີ.

*ວຽກງານພົວພັນເສດຖະກິດກັບພາຍນອກ ແລະສົ່ງເສີມການລົງທຶນ ຂອງຕ່າງປະເທດ.* ການເປີດກວ້າງ ການຮ່ວມມື ທາງດ້ານເສດຖະກິດ ກັບພາຍນອກ ແລະສົ່ງເສີມການລົງທຶນຂອງຕ່າງປະເທດ ແມ່ນແຜນນະໂຍບາຍໃຫຍ່ຂອງພັກ ທີ່ແນໃສ່ຍາດແຍ່ງ

ເອົາກຳລັງແຮງ ຂອງສາກົນມາສົມທົບກັບກຳລັງແຮງພາຍໃນ ເພື່ອພັດທະນາປະເທດເຮົາ ໃຫ້ຈະເລີນກ້າວໜ້າ ແລະເຮັດໃຫ້ເສດຖະກິດ ຂອງປະເທດເຮົາເຊື່ອມເຂົ້າກັບສາກົນເທື່ອລະກ້າວ.

ຕາມແຜນນະໂຍບາຍດັ່ງກ່າວ ພວກເຮົາຈະຕ້ອງເປີດກວ້າງ ການພົວພັນຮ່ວມມືທາງດ້ານເສດຖະກິດ ກັບປະເທດຕ່າງໆ ດ້ວຍຫລາຍຮູບຫລາຍສີ, ຮັບປະກັນປະສິດທິຜົນ ແລະຜົນປະໂຫຍດ ຂອງຄູ່ຮ່ວມມືຢ່າງເໝາະສົມ. ກ່ອນອື່ນ ຕ້ອງເພີ່ມທະວີການຮ່ວມມືກັບບັນດາປະເທດໃກ້ຄຽງ ແລະ ປະເທດອື່ນໆ ໃນພາກພື້ນອາຊີອາຄະເນ. ກຽມເງື່ອນໄຂໃນທຸກດ້ານ ເພື່ອເຂົ້າຮ່ວມໃນເຂດການຄ້າເສລີ ອາຊຽນ ( AFTA ) ແລະເປັນສະມາຊິກອົງການ ການຄ້າໂລກ; ເອົາໃຈໃສ່ຖອດຖອນບົດຮຽນອັນກ້າວໜ້າ ຂອງປະເທດຕ່າງໆ ໂດຍສະເພາະແມ່ນບົດຮຽນດ້ານການຜະລິດ, ດ້ານການຄຸ້ມຄອງ ແລະການນຳໃຊ້ເຕັກໂນໂລຢີ. ດ້ານໜຶ່ງອີກ ກໍຕັ້ງໜ້າໂຄສະນາ, ຊຸກຍູ້ ນັກລົງທຶນຊາວຕ່າງປະເທດ ໃຫ້ມາລົງທຶນ ໃສ່ໂຄງການທີ່ເປັນທ່າແຮງ ໂດຍສະໜອງເອກະສານ, ຂ່າວສານ, ຂໍ້ມູນຕ່າງໆ ອັນຈຳເປັນໃຫ້ແກ່ເຂົາເຈົ້າ, ປັບປຸງນະໂຍບາຍ, ລະບອບລະບຽບການ ແລະວິທີເຮັດວຽກ ໃຫ້ກະທັດລັດ, ຮັດກຸມ ແລະວ່ອງໄວ; ເຊີດຊູຄວາມຮັບຜິດຊອບ ແລະຄວາມເປັນເຈົ້າການໃນການປະຕິບັດ ການພົວພັນເສດຖະກິດກັບພາຍນອກ ເຮັດໃຫ້ນັກລົງທຶນຊາວຕ່າງປະເທດມີຄວາມໝັ້ນໃຈ ແລະມີຄວາມພໍໃຈຕໍ່ການຮ່ວມມື ແລະລົງທຶນຢູ່ປະເທດເຮົາ.

*ວຽກງານວິທະຍາສາດ ແລະເຕັກໂນໂລຢີ* . ພຶດຕິກຳ ຂອງປະເທດຕ່າງໆ ຊີ້ໃຫ້ເຫັນວ່າ ເພື່ອພັດທະນາປະເທດ ໃຫ້ກ້າວໄປສູ່ ຄວາມທັນສະໄໝນັ້ນ ຕ້ອງໄດ້ລົງທຶນຢ່າງເໝາະສົມ ເຂົ້າໃນວຽກງານວິທະຍາສາດ ແລະເຕັກໂນໂລຢີ. ສະນັ້ນ, ບັນດາອົງການ ແລະສະຖາບັນຄົ້ນຄວ້າຕ່າງໆ ຕ້ອງຮີບຮ້ອນສຸມໃສ່ຄົ້ນຄວ້າ ບັນຫາພື້ນຖານຈຳນວນໜຶ່ງ ເພື່ອປະກອບສ່ວນ ເຊີດຊູຄວາມສາມາດນຳພາຂອງພັກ ແລະ ປະສິດທິພາບແຫ່ງການຄຸ້ມຄອງ ຂອງລັດ ໃນເງື່ອນໄຂການນຳໃຊ້ເສດຖະກິດຕະຫລາດ ແລະ ເປີດກວ້າງການພົວພັນກັບພາຍນອກ, ເຮັດໃຫ້ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ ຫຍັບເຂົ້າໃກ້ກັບວິວັດທະນາການແຫ່ງການພັດທະນາຂອງໂລກ. ພ້ອມ

ກັນນັ້ນ ກໍອອກແຮງ ຊອກຮູ້ຮໍ່າຮຽນເອົາຜົນສໍາເລັດດ້ານວິທະຍາສາດເຕັກນິກ ແລະ ເຕັກໂນໂລຢີ ຂອງໂລກ ເພື່ອຫມູນໃຊ້ຢ່າງເຫມາະສົມ ແນໃສ່ຍົກສະມັດຖະພາບການຜະລິດ ແລະຊີວິດການເປັນຢູ່ ຂອງປະຊາຊົນໃຫ້ສູງຂຶ້ນ ຢ່າງບໍ່ຢຸດຢັ້ງ, ທັງບໍ່ສ້າງຄວາມເສື່ອມເສຍຕໍ່ສິ່ງແວດລ້ອມ.

ໃນຕໍ່ຫນ້ານີ້ ຕ້ອງເປີດກວ້າງການເຄື່ອນໄຫວດ້ານຂ່າວສານວິທະຍາສາດ-ເຕັກນິກ ແລະສິ່ງແວດລ້ອມ, ທັງປັບປຸງ ແລະຂະຫຍາຍອັນທີ່ເປັນມູນເຊື້ອ, ທັງຮັບເອົາອັນໃຫມ່ທີ່ທັນສະໄຫມຈາກຕ່າງປະເທດ. ເພີ່ມທະວີການຄຸ້ມຄອງ ລິຂະສິດທາງປັນຍາ, ການຖ່າຍທອດເຕັກໂນໂລຢີ ແລະການບໍລິການດ້ານວິທະຍາສາດ, ດໍາເນີນການຄົ້ນຄວ້າ, ເກັບກໍາຂໍ້ມູນດ້ານປະຊາກອນ ແລະຂໍ້ມູນດ້ານເຕັກນິກອື່ນໆ ທີ່ຈໍາເປັນ ເພື່ອຕອບສະຫນອງຄວາມຕ້ອງການ ຂອງການພັດທະນາປະເທດຊາດ; ເປີດກວ້າງການຮ່ວມມື ດ້ານວິທະຍາສາດ ແລະເຕັກໂນໂລຢີກັບສາກົນ.

*2). ຂົງເຂດສັງຄົມ ແລະວັດທະນະທໍາ.*

ໂດຍຍຶດຫມັ້ນໃນທັດສະນະທີ່ວ່າ ເຮັດທຸກສິ່ງທຸກຢ່າງ ເພື່ອຄວາມສົມບູນພູນສຸກ ຂອງປະຊາຊົນບັນດາເຜົ່າ, ໃນຊຸມປີຕໍ່ຫນ້ານີ້ ຕ້ອງເພີ່ມ ທຶນຮອນ ແລະ ພາທະນະເຂົ້າໃສ່ການພັດທະນາສັງຄົມ ໄປຄຽງຄູ່ກັບການຂະຫຍາຍເສດຖະກິດ, ເຮັດໃຫ້ສັງຄົມມີຄວາມສີວິໄລຍຸດຕິທໍາຍິ່ງຂຶ້ນ. ພັກເຮົາໃຫ້ຄວາມສໍາຄັນ ຕໍ່ການພັດທະນາຊັບພະຍາກອນມະນຸດ ໂດຍກໍານົດຈຸດຫມາຍສ້າງຄົນໃຫ້ເປັນພົນລະເມືອງດີ, ມີນໍ້າໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ມີຄວາມຮູ້, ມີວິຊາຊີບ, ມີສຸຂະພາບພະລະນາໄມສົມບູນ, ມີຄວາມສີວິໄລທາງດ້ານຈິດໃຈ ແລະມີສະຕິເຄົາລົບກົດຫມາຍ; ສະນັ້ນ ຈະໄດ້ສຸມໃສ່ພັດທະນາການສຶກສາ, ສາທາລະນະສຸກ, ຂະຫຍາຍວັດທະນະທໍາ ແລະແກ້ໄຂບັນຫາສັງຄົມຕ່າງໆ ຢ່າງຕັ້ງຫນ້າ.

*ວຽກງານສຶກສາ.* ການສຶກສາແມ່ນວຽກງານໃຈກາງຂອງການພັດທະນາຊັບພະຍາກອນມະນຸດ ເຊິ່ງຫນ້າທີ່ຕົ້ນຕໍ ແມ່ນຍົກລະດັບຄວາມຮູ້ ຂອງປະຊາຊົນໃຫ້ສູງຂຶ້ນ,

ເຮັດໃຫ້ລູກຫລານຂອງປະຊາຊົນບັນດາເຜົ່າມີວິຊາອາຊີບປະຈຳຕົວ ແລະສ້າງຖັນແຖວປັນຍາຊົນ.

ເພື່ອບັນລຸຈຸດໝາຍດັ່ງກ່າວ ຕ້ອງເພີ່ມການລົງທຶນ ເພື່ອປະຕິບັດຍຸດທະສາດການສຶກສາຮອດປີ 2000 ໃຫ້ປະກົດເປັນຈິງ ໂດຍສຸມໃສ່ ຍົກສູງຄຸນນະພາບ ຂອງການສຶກສາທຸກຂັ້ນ; ເອົາໃຈໃສ່ຍົກລະດັບທາງດ້ານຄຸນສົມບັດສຶກສາ, ປັນຍາສຶກສາ, ສິລະປະສຶກສາ, ພະລະສຶກສາ ແລະແຮງງານສຶກສາ, ຄົ້ນຄວ້າກ່ຽວກັບການປະຕິຮູບປັຮຽນຂອງສາຍສາມັນ ເຮັດໃຫ້ລະບົບການສຶກສາແຫ່ງຊາດ ບັນລຸມາດຕະຖານສູງຂຶ້ນ ແລະ ຕາມທັດທັນສະໄໝເປັນກ້າວໆ, ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ແລະເງື່ອນໄຂ ຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດ.

ປະຕິບັດລະບອບການສຶກສາຂັ້ນປະຖົມແບບບັງຄັບ ໃຫ້ເປັນຮູບປະທຳອັນຈະແຈ້ງ; ຂະຫຍາຍການສຶກສາ ໃນເຂດຊົນນະບົດ, ພູດອຍ, ຊົນເຜົ່າ ໂດຍຖືເອົາການສ້າງໂຮງຮຽນກິນນອນຊົນເຜົ່າ ໃນບໍລິເວນຈຸດສຸມເປັນສຳຄັນ ໂດຍແມ່ນລັດ ເປັນຜູ້ຮັບພາລະໃນການລົງທຶນ; ດຳເນີນການລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງວັດທະນະທຳ ໃນໝູ່ປະຊາຊົນ; ສົ່ງເສີມການສຶກສາແມ່ຍິງ ແລະຜູ້ດ້ອຍໂອກາດ; ສົ່ງເສີມພາກສ່ວນເສດຖະກິດຕ່າງໆ ປະກອບສ່ວນເຂົ້າໃນການພັດທະນາການສຶກສາແຫ່ງຊາດ; ບູລະນະການສຶກສາສົງໃຫ້ແທດເໝາະກັບເງື່ອນໄຂໃໝ່; ປັບປຸງ, ເພີ່ມທະວີວຽກງານຄຸ້ມຄອງ ແລະກວດກາການສຶກສາໃຫ້ມີປະສິດທິພາບ, ປະຕິບັດນະໂຍບາຍຕໍ່ຄູອາຈານໃຫ້ເໝາະສົມ ລວມທັງດ້ານວິທະຍາຖານະ.

*ວຽກງານສາທາລະນະສຸກ:* ບັນຫາສຸຂະພາບ ແລະພະລະນາໄມຂອງປະຊາຊົນແມ່ນບັນຫາສຳຄັນໃນແຜນນະໂຍບາຍດ້ານສັງຄົມ ຂອງພັກ ແລະລັດເຮົາ. ສະນັ້ນ, ຕ້ອງຫັນວຽກງານສາທາລະນະສຸກ ໄປສູ່ຮາກຖານປະຊາຊົນ, ຖືເອົາການກັນພະຍາດ ແລະສົ່ງເສີມການຮັກສາສຸຂະພາບ ເປັນສິ່ງສຳຄັນຕົ້ນຕໍ, ສົມທົບລະຫວ່າງການແພດແຜນໃໝ່ ແລະການແພດພື້ນເມືອງ, ເພີ່ມທະວີການບໍລິການດ້ານສາທາລະນະສຸກໃຫ້ປະຊາຊົນເຜົ່າຕ່າງໆ ນັບມື້ນັບທົ່ວເຖິງແລະມີຄຸນນະພາບດີຂຶ້ນ; ກຳນົດລະບອບການກວດພະຍາດ ແລະປິ່ນປົວແບບເສຍຄ່າ ຫລືບໍ່ເສຍຄ່າໃຫ້ເປັນລະບົບຈະແຈ້ງ, ທັງຈັດຕັ້ງປະຕິບັດໃຫ້ຖືກຕ້ອງ.

ໃນຕໍ່ຫນ້ານີ້ ຕ້ອງຂະຫຍາຍຕາຫນ່າງສາທາລະນະສຸກໄປຍັງບັນດາເມືອງໃຫມ່, ເຂດຊົນນະບົດພູດອຍ ແລະ ເຂດຈຸດສຸມພັດທະນາ; ສືບຕໍ່ດໍາເນີນໂຄງການກັນ ແລະ ຄວບຄຸມພະຍາດ ຕາມບໍລິເວນເຂດແຄວັນ ແລະ ຕາມລະດູການ. ເອົາໃຈໃສ່ຕໍ່ການດໍາເນີນໂຄງການຮັກສາສຸຂະພາບແມ່ ແລະເດັກ, ການຈັດຫານໍ້າສະອາດ, ອະນາໄມສິ່ງແວດລ້ອມ ແລະ ການກິນຢູ່ທີ່ຖືກຫລັກອະນາໄມ. ຍົກລະດັບດ້ານເຕັກນິກວິຊາການຂອງໂຮງຫມໍຂັ້ນຕ່າງໆ ໂດຍສະເພາະປະກອບເຕັກນິກທັນສະໄຫມໃຫ້ໂຮງຫມໍຂັ້ນສູນກາງ ແລະແຂວງໃຫຍ່ຈໍານວນຫນຶ່ງ. ເອົາໃຈໃສ່ກໍ່ສ້າງ, ບໍາລຸງຍົກລະດັບພະນັກງານແພດຫມໍ ໃຫ້ມີຄວາມສາມາດ ດ້ານວິຊາການ ຕິດພັນກັບການສຶກສາອົບຮົມຍົກສູງນໍ້າໃຈ ຮັບໃຊ້ປະຊາຊົນ, ຄວາມມີມະນຸດສະທໍາ ແລະຈັນຍາທໍາ ຢ່າງເປັນປະຈໍາ; ຮີບຮ້ອນຄົ້ນຄວ້າ ແລະປະກາດໃຊ້ກົດຫມາຍ, ຂໍ້ກໍານົດ ແລະລະບຽບການທີ່ຈໍາເປັນ ແນໃສ່ຄຸ້ມຄອງການເຄື່ອນໄຫວໃນຂົງເຂດສາທາລະນະສຸກ ຕາມທິດຍົກສູງຄຸນນະພາບ ດ້ານການບໍລິການ ແລະຮັບປະກັນສຸຂະພາບຂອງປະຊາຊົນ.

*ວຽກງານກິລາກາຍະກໍາ* ມີຄຸນປະໂຫຍດຫລາຍຕໍ່ການເສີມສ້າງສຸຂະພາບພະລະນາໄມຂອງປະຊາຊົນ ແລະປະກອບສ່ວນເຂົ້າໃນການເຊີດຊູກຽດສັກສີຂອງຊາດ ກໍຄືເພີ່ມທະວີມິດຕະພາບ ກັບປະຊາຊາດຕ່າງໆ. ດ້ວຍຄວາມຫມາຍດັ່ງກ່າວນັ້ນ ຈະຕ້ອງຊຸກຍູ້ ແລະຈັດຕັ້ງຂະບວນການກິລາກາຍະກໍາ ໃນຫມູ່ມະຫາຊົນ ດ້ວຍຫລາຍຮູບແບບ ເປັນຕົ້ນແມ່ນຂະບວນການຫັດກາຍະບໍລິຫານ ແລະການຫລິ້ນກິລາປະເພດຕ່າງໆ ຂອງຊາວຫນຸ່ມ, ນັກຮຽນ, ນັກສຶກສາ. ຖືສໍາຄັນການກໍ່ສ້າງ, ບໍາລຸງ ແລະຍົກລະດັບ ຂອງນັກກິລາບາງປະເພດ ໃຫ້ມີມາດຕະຖານສູງຂຶ້ນເລື້ອຍໆ ໂດຍເອົາໃຈໃສ່ເປັນພິເສດ ຕໍ່ຜູ້ມີພອນສະຫວັນ ແລະມີຄວາມສາມາດ, ສ້າງໃຫ້ມີນັກກິລາອາຊີບ. ພ້ອມກັນນັ້ນ ກໍດໍາເນີນການກໍ່ສ້າງຖັນແຖວຄູຝຶກ ແລະພະນັກງານກິລາ ຢ່າງຕັ້ງຫນ້າ; ລົງທຶນຢ່າງເຫມາະສົມເຂົ້າໃສ່ການຂະຫຍາຍພື້ນຖານວັດຖຸ-ເຕັກນິກ, ປັບປຸງການຈັດຕັ້ງ, ການຄຸ້ມຄອງ ແລະລະບອບການອຸປະຖໍາຕ່າງໆຕໍ່ການກິລາ; ປະຕິບັດນະໂຍບາຍສິ່ງເສີມໃຫ້ເຫມາະສົມ ເພື່ອຍົກລະດັບການກິລາແຫ່ງຊາດໃຫ້ສູງຂຶ້ນ.

*ວຽກງານສະຫວັດດີການສັງຄົມ ແລະແຮງງານ* ເປັນວຽກໜຶ່ງທີ່ພັກແລະລັດເຮົາຖືເປັນສຳຄັນ, ສະນັ້ນ ຈະຕ້ອງເພີ່ມຄວາມພະຍາຍາມ ໃນການປະຕິບັດລະບອບນະໂຍບາຍຕ່າງໆ ດ້ວຍການຈັດແບ່ງງົບປະມານຢ່າງເໝາະສົມ, ທັງປຸກລະດົມສິ່ງເສີມ ບັນດາພາກສ່ວນເສດຖະກິດ, ການຈັດຕັ້ງ ແລະຊັ້ນຄົນຕ່າງໆ ໃນສັງຄົມ ປະກອບສ່ວນເຂົ້າໃນວຽກງານນີ້. ໃນສະເພາະໜ້ານີ້ ແມ່ນສືບຕໍ່ຄົ້ນຄວ້າ ແລະປັບປຸງລະບອບເງິນເດືອນ, ເງິນອຸດໜູນ ແລະນະໂຍບາຍຕ່າງໆໃຫ້ສົມເຫດສົມຜົນຕື່ມອີກ ແນໃສ່ ຊຸກຍູ້ຄວາມຫ້າວຫັນ, ປະດິດສ້າງ ແລະຄວາມຮັບຜິດຊອບ ຂອງລັດຖະກອນໃຫ້ສູງຂຶ້ນ; ພະຍາຍາມປະຕິບັດລະບອບປະກັນສັງຄົມ ສຳລັບລັດຖະກອນໃຫ້ດີກວ່າເກົ່າ, ອອກດຳລັດ ກ່ຽວກັບການສ້າງຕັ້ງປະກັນສັງຄົມສຳລັບຊາວຜູ້ອອກແຮງງານ ໃນຮາກຖານການຜະລິດທຸລະກິດ ຂອງພາກສ່ວນເສດຖະກິດຕ່າງໆ.

ປັບປຸງນະໂຍບາຍ ຕໍ່ນັກຮົບເກົ່າ, ຜູ້ທີ່ອອກບໍານານ, ຕໍ່ຄອບຄົວຂອງຜູ້ທີ່ໄດ້ເສຍສະລະຊີວິດ, ມີຄຸນງາມຄວາມດີຕໍ່ການປະຕິວັດ ແລະຈັດຕັ້ງປະຕິບັດ ໃຫ້ທົ່ວເຖິງກວ່າເກົ່າດ້ວຍການສົມທົບ ລະຫວ່າງລັດກັບສັງຄົມ; ປັບປຸງວຽກງານສັງຄົມສົງເຄາະ ໃຫ້ດີຂຶ້ນຕື່ມ, ສ້າງກອງທຶນຊ່ວຍເຫຼືອ ຜູ້ທີ່ດ້ອຍໂອກາດ, ເດັກກຳພ້າ, ຄົນພິການ, ຜູ້ປ່ວຍພອຍ ແລະທຸກຍາກ.

ດຳເນີນໂຄງການເຝິກວິຊາຊີບ ແລະການຈັດຫາວຽກເຮັດງານທຳ ສຳລັບຊາວໜຸ່ມ ເພື່ອແກ້ໄຂບັນຫາຫວ່າງງານ ເອົາໃຈໃສ່ຍົກລະດັບຄວາມສາມາດ ແລະ ພັດທະນາສີມືແຮງງານ ຂອງນາຍຊ່າງ ແລະກຳມະກອນ ຕິດພັນກັບການເຊີດຊູລະບຽບວິໄນ; ເພີ່ມທະວີການກວດກາການປະຕິບັດກົດໝາຍແຮງງານ ແລະການຄຸ້ມຄອງແຮງງານພາຍໃນປະເທດ ແລະຕ່າງປະເທດ.

*ບັນຫາການຮັບປະກັນຄວາມຍຸດຕິທຳສັງຄົມ* ແມ່ນຈຸດໝາຍສຳຄັນຂອງການສ້າງລະບອບປະຊາທິປະໄຕປະຊາຊົນ. ໃນຊຸມປີສະເພາະໜ້ານີ້ ຕ້ອງເອົາໃຈໃສ່ຢ່າງຈິດຈໍ່ຕໍ່ການຮັບປະກັນສິດສະເໝີພາບ ຂອງພົນລະເມືອງຕໍ່ໜ້າກົດໝາຍ; ໝາຍຄວາມວ່າພົນລະເມືອງທຸກຄົນ ບໍ່ວ່າຖານະຕຳແໜ່ງໃດ ແລະສາຂາອາຊີບໃດ ກໍ່ລ້ວນແຕ່ຢູ່ໃຕ້ກົດ

ຫມາຍ. ເພື່ອຮັບປະກັນສິດສະເຫມີພາບດັ່ງກ່າວນັ້ນ ພົນລະເມືອງທຸກຄົນ ຕ້ອງຮັບຮູ້ແຈ້ງ ແລະແກ້ໄຂໃຫ້ຖືກຕ້ອງສາຍກ່ຽວພັນລະຫວ່າງສິດ, ພັນທະ ແລະຜົນປະໂຫຍດ. ໂດຍເປັນລັດຂອງປະຊາຊົນ, ເພື່ອປະຊາຊົນ, ລັດເຮົາຈະປະຕິບັດມາດຕະການອັນເດັດຂາດເຂັ້ມງວດ ຕໍ່ຜູ້ຫລົບຫລີກການປະຕິບັດພັນທະ; ປົກປ້ອງ ແລະຄຸ້ມຄອງຜົນປະໂຫຍດອັນຊອບທຳ ຂອງທຸກພາກສ່ວນໃນສັງຄົມ, ກ່ອນອື່ນແມ່ນຜົນປະໂຫຍດ ຂອງຜູ້ອອກແຮງງານ, ປະຕິບັດການດັດສົມລາຍໄດ້ ຂອງພົນລະເມືອງ ແລະ ດຳເນີນການແຈກຢາຍຄືນໃຫມ່ ຢ່າງສົມເຫດສົມຜົນ; ທັງນີ້ ກໍ່ເພື່ອໃຫ້ໂຄງປະກອບສັງຄົມເຮົາບໍ່ມີການຜັນແຍກຂົ້ວທຸກ ແລະຂົ້ວຮັ່ງ ທີ່ຮ້າຍແຮງ; ເຮັດໃຫ້ສັງຄົມມີຄວາມປອງດອງ, ສະຫງົບສຸກ ແລະຍຸດຕິທຳຍິ່ງໆຂຶ້ນ. ດ້ານຫນຶ່ງອີກ, ປະຊາຊົນກໍ່ມີພັນທະຮ່ວມກັບອຳນາດລັດໃນການຕິດຕາມ ກວດກາ ແລະສະກັດກັ້ນກໍລະນີຝ່າຝືນກົດຫມາຍ, ການລະເມີດສິດທິພົນລະເມືອງໃນທຸກຮູບແບບ.

*ວຽກງານເຜົ່າ* ມີຄວາມຫມາຍສຳຄັນ ສຳລັບຄວາມເປັນປຶກແຜ່ນ ແລະຄວາມເຂັ້ມແຂງຂອງຊາດ. ສະນັ້ນ, ກ່ອນອື່ນຫມົດ ຕ້ອງເພີ່ມທະວີການສຶກສາອົບຮົມ ໃຫ້ປະຊາຊົນທຸກເຜົ່າ ມີຈິດໃຈຊາດເອກະພາບ, ມີຄວາມຮັກຫອມຕ່ອມຕຸ້ມ, ສາມັກຄີ ແລະຊ່ວຍເຫລືອເພື່ອແຜ່ກັນ; ພ້ອມກັນສະກັດກັ້ນ ແລະແກ້ໄຂການກະທຳທຸກຢ່າງ ທີ່ຈະນຳໄປສູ່ຄວາມຂັດແຍ້ງ, ຄວາມອາຄາດບາດຫມາງ ລະຫວ່າງເຜົ່າຢ່າງທັນການ; ເຮັດໃຫ້ທຸກເຜົ່າຮັບຮູ້ແຈ້ງວ່າ ການຖືຕົວສູງ, ປະຫມາດເຜົ່າອື່ນ ຫລືການຖືຕົວຕ່ຳ, ບໍ່ຕັ້ງຫນ້າບຸກບືນກ້າວຂຶ້ນໃຫ້ທຽມທັນກັບເຜົ່າອື່ນນັ້ນ ລ້ວນແຕ່ແມ່ນທັດສະນະທີ່ຜິດພາດ. ໂດຍຍຶດຫມັ້ນໃນນະໂຍບາຍສະເຫມີພາບ ລະຫວ່າງເຜົ່າ, ພັກ ແລະລັດເຮົາມີແຜນພັດທະນາເຂດຊົນເຜົ່າ, ພູດອຍ ດ້ວຍການພັດທະນາຊົນນະບົດຮອບດ້ານ, ແກ້ໄຂສະພາບຫລຸດໂຕນກັນລະຫວ່າງເຜົ່າ ໃຫ້ໄດ້ເປັນກ້າວໆ; ສ້າງເງື່ອນໄຂໃຫ້ລູກຫລານ ຂອງປະຊາຊົນບັນດາເຜົ່າ ໄດ້ເຂົ້າໂຮງຮຽນ, ມີພະນັກງານ ແລະປັນຍາຊົນ ຂອງຕົນ; ພ້ອມກັນນັ້ນ ກໍ່ເສີມຂະຫຍາຍມູນເຊື້ອວັດທະນະທຳ, ຂະນົບທຳນຽມ ແລະປະເພນີ ອັນເປັນເອກະລັກຂອງເຜົ່າຕ່າງໆ.

***ສາສະຫນາ,*** ໂດຍສະເພາະສາສະຫນາພຸດ ມີບົດບາດສຳຄັນໃນຊີວິດທາງດ້ານຈິດໃຈ ຂອງປະຊາຊົນເຮົາ, ເປັນສະຖາບັນ ທີ່ດຳລົງຄົງໄວ້ຊຶ່ງຂະນົບທຳນຽມ, ປະເພນີອັນເປັນເອກະລັກ ແລະມູນມໍລະດົກອັນລ້ຳຄ່າດ້ານວັດທະນະທຳປະຈຳຊາດເຮົາ; ພ້ອມກັນນັ້ນ ກໍຍັງມີບົດບາດສຳຄັນໃນການອົບຮົມບົ່ມສອນພຸດທະສາສະນິກະຊົນທັງຫລາຍ ໃຫ້ມີ

ຄວາມສາມັກຄີ ພ້ອມພຽງກັນ ປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນ ກໍຄືໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດໃນປະຈຸບັນ.

ພັກ ແລະ ລັດເຮົາ ສືບຕໍ່ປະຕິບັດນະໂຍບາຍເຄົາລົບສິດເສລີພາບ ໃນການເຊື່ອຖືຫລືບໍ່ເຊື່ອຖືສາສະໜາ ຂອງພົນລະເມືອງ, ເສີມຂະຫຍາຍບົດບາດອັນຕັ້ງໜ້າ ຂອງບັນດາສາສະໜາ ກໍຄືສາສະນິກະຊົນທັງຫລາຍ ເຂົ້າໃນພາລະກິດລວມຂອງຊາດ; ບໍ່ອະນຸຍາດໃຫ້ມີການກະທຳໃດໆ ທີ່ເປັນການສວຍໃຊ້ສາສະໜາ ເພື່ອມ້າງເພຄວາມເປັນເອກະພາບ ແລະຄວາມສາມັກຄີເປັນປຶກແຜ່ນ ຂອງຊາດ, ຂັດຂວາງການປະຕິບັດພັນທະ ຂອງພົນລະເມືອງ ແລະທຳລາຍຄວາມໝັ້ນຄົງຂອງລະບອບປະຊາທິປະໄຕປະຊາຊົນ.

*ວຽກງານຖະແຫລງຂ່າວ.* ວຽກງານຖະແຫລງຂ່າວ ແລະສື່ມວນຊົນ ແມ່ນພາຫະນະອັນສຳຄັນ ໃນການເຜີຍແຜ່ ແລະປົກປ້ອງແນວທາງ, ແຜນນະໂຍບາຍຂອງພັກ ແລະລັດເຮົາຕໍ່ພາຍໃນ ແລະຕ່າງປະເທດ. ສະນັ້ນ, ຄະນະພັກຕ້ອງເພີ່ມທະວີການຊີ້ນຳ-ນຳພາພາຫະນະສື່ມວນຊົນ ແລະການພິມຈຳໜ່າຍ. ໃນສະເພາະໜ້ານີ້ ຕ້ອງຕັ້ງໜ້າກໍ່ສ້າງ, ບຳລຸງ ແລະຍົກລະດັບຄຸນທາດການເມືອງ ແລະລະດັບຄວາມຮູ້ຄວາມສາມາດດ້ານວິຊາສະເພາະ ຂອງຖັນແຖວພະນັກງານ ໃນຂົງເຂດດັ່ງກ່າວ ພ້ອມກັນນັ້ນ ກໍເພີ່ມທະວີການກໍ່ສ້າງພື້ນຖານວັດຖຸເຕັກນິກອັນຈຳເປັນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການດ້ານຂ່າວສານ, ການຍົກລະດັບຄວາມຮູ້ ແລະຄວາມເບີກບານມ່ວນຊື່ນຂອງປະຊາຊົນ; ເພີ່ມລັກສະນະຄົມແຫລມ, ທັນການ ແລະຄວາມຊັດເຈນ ກໍຄືຄວາມອຸດົມຮັ່ງມີ ດ້ານເນື້ອຫາສາລະ.

***ຂົງເຂດວັດທະນະທຳ.*** ພັກເຮົາຖືວ່າ ວັດທະນະທຳ ເປັນຮາກຖານທາງສັງຄົມທີ່ຄ້ຳຊູໃຫ້ຊາດຢືນຍົງຄົງຕົວ ແລະຂະຫຍາຍຕົວ, ທັງເປັນກຳລັງຊຸກຍູ້ທີ່ສຳຄັນ ແລະເປັນຈຸດໝາຍຂອງການພັດທະນາສັງຄົມ. ໃນຊຸມປີສະເພາະໜ້ານີ້ ຕ້ອງສຸມໃສ່ ***ປົກປັກຮັກສາ ແລະເສີມຂະຫຍາຍມູນເຊື້ອມໍລະດົກວັດທະນະທຳຂອງຊາດ ແລະຂອງເຜົ່າຕ່າງໆ ຕິດພັນກັບການຮັບເອົາສິ່ງທີ່ດີງາມ ແລະກ້າວໜ້າ ຂອງໂລກ. ສ້າງວັດທະນະທຳທີ່ມີລັກສະນະຊາດ, ລັກສະນະມະຫາຊົນ ແລະກ້າວໜ້າ.***

ສະນັ້ນ ຕ້ອງເພີ່ມທະວີການສຶກສາອົບຮົມໃຫ້ທົ່ວປວງຊົນ ເປັນຕົ້ນຖັນແຖວຊາວໜຸ່ມ ເຍົາວະຊົນມີຄວາມທະນົງໃຈ ແລະມີຄວາມຖະໜອມຫອມຮັກວັດທະນະທຳທີ່ເປັນເອກະລັກຂອງຊາດ, ເປັນເຈົ້າການສະກັດກັ້ນ ສິ່ງບໍ່ດີ, ບໍ່ງາມ ທີ່ ຝືນກັບສິນທຳແລະປະເພນີອັນດີງາມຂອງລາວເຮົາ.

ເພື່ອເສີມສ້າງວັດທະນະທຳ ທາງດ້ານຈິດໃຈ ໃນໝູ່ປະຊາຊົນ ໃຫ້ເລິກເຊິ່ງຂຶ້ນເລື້ອຍໆ ຈະຕ້ອງ ຕັ້ງໜ້າຄົ້ນຄວ້າພື້ນຖານວັດທະນະທຳ ຂອງຊາດເຮົາ ແລະປະກອບເຂົ້າໃນການສິດສອນຢູ່ໃນລະບົບການສຶກສາຊັ້ນຕ່າງໆ, ຈັດຕັ້ງ ແລະສົ່ງເສີມ ກິດຈະກຳວັດທະນະທຳຢູ່ໃນໂຮງຮຽນ, ສ້າງບ້ານວັດທະນະທຳ ແລະຄອບຄົວວັດທະນະທຳ ໃຫ້ແຜ່ຫລາຍ; ປັບປຸງ ແລະ ກໍ່ສ້າງພື້ນຖານວັດຖຸ-ເຕັກນິກ ທາງດ້ານວັດທະນະທຳຢ່າງມີຈຸດສຸມ ແລະ ນຳໃຊ້ໃຫ້ມີຄຸນປະໂຫຍດສູງ; ພ້ອມກັນນັ້ນ ກໍສົ່ງເສີມວຽກງານສິລະປະ ແລະ ວັນນະຄະດີ ເຮັດໃຫ້ມັນ ກາຍເປັນການເຄື່ອນໄຫວ ຂອງມະຫາຊົນ, ຊຸກຍູ້ການປະດິດຄິດແຕ່ງ ທີ່ມີຄຸນນະພາບ, ມີຫລາຍຮູບຫລາຍສີ ເປັນທີ່ນິຍົມຊົມຊອບ ຂອງມະຫາຊົນ; ຮັບໃຊ້ພາລະກິດ ປົກປັກຮັກສາ ແລະສ້າງສາປະເທດຊາດ. ເອົາໃຈໃສ່ປະຕິບັດນະໂຍບາຍສົ່ງເສີມດ້ວຍຫລາຍຮູບການ ຕໍ່ຜູ້ທີ່ມີຜົນງານດີເດັ່ນ ດ້ານ ການປະດິດຄິດແຕ່ງ, ການສະແດງ ກໍ່ຄືການເຄື່ອນໄຫວ ໃນຂົງເຂດວັດທະນະທຳ ແລະ ສິລະປະວັນນະຄະດີ . ຮີບຮ້ອນຄົ້ນຄວ້າ ແລະປະກາດໃຊ້ກົດໝາຍ ວ່າດ້ວຍວັດທະນະທຳ.

### *3). ຂົງເຂດປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ.*

ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຍາມໃດກໍເປັນວຽກອັນສຳຄັນ ທີ່ຕ້ອງໄດ້ຮັບການປັບປຸງ ຢ່າງຕັ້ງໜ້າ ແນໃສ່ປົກປັກຮັກສາ ເອກະລາດ, ອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນ ຂອງຊາດໄວ້ໃຫ້ໝັ້ນຄົງ; ຮັບປະກັນຄວາມສະຫງົບ ແລະສະຖຽນລະພາບອັນໜັກແໜ້ນ ສຳລັບການສ້າງສາພັດທະນາປະເທດ. ສະນັ້ນ ຈຶ່ງຕ້ອງສືບຕໍ່ປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ, ເຮັດໃຫ້ວຽກງານດັ່ງກ່າວ ກາຍເປັນສະຕິແລະຄວາມຮັບຜິດຊອບ ຂອງປະຊາຊົນ, ຂອງພະນັກງານ, ຂອງ ສຳນັກງານ-ອົງການ, ຫົວໜ່ວຍຜະລິດທຸລະກິດ, ຂອງບ້ານ ແລະຮາກຖານຕ່າງໆ ໃນທົ່ວປະເທດ.

ເພື່ອເປັນຫລັກແຫລ່ງໃຫ້ແກ່ພາລະກິດປ້ອງກັນຊາດທົ່ວປວງຊົນ, ຕ້ອງເອົາໃຈໃສ່ກໍ່ສ້າງ ແລະ ປັບປຸງກອງທັບປະຊາຊົນ ໃນທຸກດ້ານ ໂດຍຖືເອົາຄຸນນະພາບເປັນຕົ້ນຕໍ; ສ້າງໃຫ້ເປັນກອງທັບປະຕິວັດທີ່ມີແບບແຜນ ແລະທັນສະໄໝເປັນກ້າວໆ. ພ້ອມກັນນັ້ນ ກໍຕັ້ງໜ້າປັບປຸງທະຫານທ້ອງຖິ່ນ ແລະທະຫານລາດກອງຫຼອນ. ເພີ່ມຄວາມເອົາໃຈໃສ່ ຕໍ່ການປັບປຸງ ແລະກໍ່ສ້າງທ່າສະໜາມປ້ອງກັນຂອງປະຊາຊົນຢູ່ຮາກຖານ ໂດຍ ຕິດພັນກັບການພັດທະນາຊົນນະບົດຮອບດ້ານ; ສົມທົບແໜ້ນແຟ້ນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ກັບການພັດທະນາເສດຖະກິດ-ສັງຄົມ.

ຕັ້ງໜ້າກໍ່ສ້າງ ແລະປັບປຸງກຳລັງປ້ອງກັນຄວາມສະຫງົບທັງຢູ່ສູນກາງ ແລະທ້ອງຖິ່ນໃຫ້ມີຄຸນນະພາບ ແລະມີຄວາມເຂັ້ມແຂງໃນທຸກດ້ານ, ມີພື້ນຖານວັດຖຸ-ເຕັກນິກທີ່ທັນສະໄໝ ແລະມີລະດັບວິຊາສະເພາະສູງຂຶ້ນຢ່າງບໍ່ຢຸດຢັ້ງ, ທັງມີລະບຽບແບບແຜນ. ປຸກລະດົມ ແລະຈັດຕັ້ງມະຫາຊົນເຂົ້າຮ່ວມ ໃນວຽກງານຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍພາຍໃນບ້ານຊ່ອງ, ສະກັດກັ້ນ ແລະກຳຈັດບັນດາໜໍ່ແໜງຂອງຄວາມບໍ່ສະຫງົບ ແລະໄພສັງຄົມຕ່າງໆ.

ເພີ່ມທະວີການນຳພາຂອງພັກ ຕໍ່ບັນດາກຳລັງປະກອບອາວຸດ ແລະຕໍ່ພາລະກິດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ອອກແຮງບຳລຸງສ້າງ ແລະຍົກລະດັບດ້ານວິຊາສະເພາະໃຫ້ແກ່ພະນັກງານ ນັກຮົບໄປຄຽງຄູ່ກັບການສຶກສາອົບຮົມ ດ້ານການເມືອງແນວຄິດ, ຮັບປະກັນໃຫ້ກອງທັບ ແລະກຳລັງປ້ອງກັນຄວາມສະຫງົບ ຍາມໃດກໍເປັນກຳລັງທີ່ຈົງຮັກພັກດີຕໍ່ປະເທດຊາດ ແລະປະຊາຊົນ; ມີມານະຈິດປະຕິວັດ ແລະສະຕິລະວັງຕົວສູງ, ມີຄວາມໜັກແໜ້ນໃນທຸກໆ ສະຖານະການ.

ປັບປຸງ ແລະຈັດຕັ້ງປະຕິບັດນະໂຍບາຍ ຕໍ່ພະນັກງານ-ນັກຮົບ ໃຫ້ດີກວ່າເກົ່າ; ເອົາໃຈໃສ່ ຕໍ່ຜູ້ທີ່ປະຕິບັດໜ້າທີ່ຢູ່ໃນເຂດຫ່າງໄກສອກຫລີກ ແລະຄອບຄົວຂອງເຂົາເຈົ້າ.

*4). ຂົງເຂດການຕ່າງປະເທດ.*

ການຕ່າງປະເທດແມ່ນພາລະກິດອັນສຳຄັນຂອງພັກແລະ ລັດເຮົາ. ຈຸດຫມາຍຂອງ ການເຄື່ອນໄຫວດ້ານການຕ່າງປະເທດ ໃນຊຸມປີຕໍ່ຫນ້ານີ້ ແມ່ນເລັ່ງໃສ່ ໃຫ້ບັນລຸເຖິງການ ສ້າງສະພາບແວດລ້ອມພາຍນອກ ອັນອຳນວຍ ສຳລັບການສືບຕໍ່ພາລະກິດປ່ຽນແປງໃຫມ່; ເສີມຂະຫຍາຍພາບພົດອັນດີງາມ ແລະເຊີດຊູບົດບາດ ຂອງ ສປປລາວ ໃນເວທີສາກົນ, ຍາດໄດ້ຄວາມເປັນມິດໄມຕີ, ການສະຫນັບສະຫນູນຊ່ວຍເຫລືອ, ການຮ່ວມມືຈາກບັນດາ ປະເທດ ແລະເພື່ອນມິດສາກົນ ນັບມື້ນັບກວ້າງຂວາງ, ພ້ອມກັນນັ້ນ ກໍ່ປະກອບສ່ວນຢ່າງ ເຫມາະສົມໃນພາລະກິດສັນຕິພາບ, ເອກະລາດແຫ່ງຊາດ, ການຮ່ວມມື ເພື່ອການພັດທະນາ ແລະຄວາມກ້າວຫນ້າທາງສັງຄົມ ຂອງບັນດາປະຊາຊາດ.

ອີງຕາມຈຸດຫມາຍດັ່ງກ່າວນັ້ນ, ພວກເຮົາຈະສືບຕໍ່ຍຶດຫມັ້ນໃນແນວທາງການຕ່າງ ປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະຮ່ວມມືກັບນາໆປະເທດ ບົນພື້ນຖານ ຫລັກການເຄົາລົບເອກະລາດ, ອະທິປະໄຕ ແລະ ບໍ່ແຊກແຊງ ເຂົ້າວຽກງານພາຍໃນຂອງ ກັນ ແລະກັນ; ສະເຫມີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະຢູ່ຮ່ວມກັນໂດຍສັນຕິ.

ເພີ່ມທະວີສາຍພົວພັນມິດຕະພາບ, ຄວາມສາມັກຄີພິເສດອັນເປັນມູນເຊື້ອ ແລະ ການຮ່ວມມືອັນເກີດດອກອອກຜົນ ກັບສາທາລະນະລັດສັງຄົມນິຍົມຫວຽດນາມ; ເສີມຂະຫຍາຍຄວາມສາມັກຄີມິດຕະພາບ, ການຮ່ວມມືຮອບດ້ານ ແລະການສະຫນັບສະຫນູນ ຊ່ວຍເຫລືອກັນ ກັບສາທາລະນະລັດ ປະຊາຊົນຈີນ ແລະປະເທດສັງຄົມນິຍົມອື່ນໆ. ຖື ສຳຄັນການເສີມສ້າງມິດຕະພາບ ແລະ ການຂະຫຍາຍການຮ່ວມມື ກັບບັນດາປະເທດໃກ້ຄຽງ, ສືບຕໍ່ຕັ້ງຫນ້າກະກຽມເງື່ອນໄຂອັນຈຳເປັນ ສຳລັບການເຂົ້າເປັນສະມາຊິກອາຊຽນ ແລະ ເປັນເຈົ້າການ ເຄື່ອນໄຫວ ຮ່ວມກັບບັນດາປະເທດສະມາຊິກ. ພ້ອມກັນນັ້ນກໍ ເປີດກວ້າງການພົວພັນຮ່ວມມືກັບປະເທດຕ່າງໆໃນໂລກ, ກັບສະຖາບັນການເງິນ ແລະອົງ ການຈັດຕັ້ງທີ່ບໍ່ແມ່ນຂອງລັດຖະບານ; ປະກອບສ່ວນຢ່າງສົມກຽດ ເຂົ້າໃນພາລະກິດສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາ ຂອງອົງການສະຫະປະຊາຊາດ ແລະ ບັນດາອົງການຈັດຕັ້ງວິຊາສະເພາະ ຂອງອົງການດັ່ງກ່າວ, ຂອງຂະບວນການ ບໍ່ຮ່ວມກຸ່ມ ແລະຂອງບັນດາປະເທດທີ່ໃຊ້ພາສາຝະລັ່ງ. ເປີດກວ້າງການພົວພັນກັບບັນດາ ພັກກຳອຳນາດ, ພັກການເມືອງ ແລະຂະບວນການຕ່າງໆ ບົນພື້ນຖານການເຄົາລົບ

ເອກະລາດ ແລະຄວາມເປັນເຈົ້າຕົນເອງ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ປະກອບສ່ວນເຂົ້າໃນການເພີ່ມທະວີມິດຕະພາບ ແລະການຮ່ວມມືລະຫວ່າງລັດຕໍ່ລັດ.

*5). ຂົງເຂດລັດ*

ການປັບປຸງ ແລະກໍ່ສ້າງລັດເຮົາໃຫ້ເປັນລັດ ຂອງປະຊາຊົນ, ໂດຍປະຊາຊົນ ແລະເພື່ອປະຊາຊົນ ເປັນໜ້າທີ່ສຳຄັນອັນໜຶ່ງ ສຳລັບຊຸມປີຕໍ່ໜ້າ. ບັນຫາພື້ນຖານໃນດ້ານນີ້ແມ່ນຕັ້ງໜ້າເສີມຂະຫຍາຍພາລະບົດບາດ ຂອງບັນດາອົງການສິດອຳນາດແຫ່ງລັດ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ, ຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ ໃຫ້ເກີດດອກອອກຜົນຫລາຍຂຶ້ນ ແລະ ເຮັດໃຫ້ລະບອບປະຊາທິປະໄຕປະຊາຊົນ ມີຄວາມໜັກແໜ້ນໝັ້ນຄົງ.

ຕາມທິດທາງດັ່ງກ່າວນັ້ນ **ສະພາແຫ່ງຊາດ** ເຊິ່ງເປັນອົງການຕົວແທນແຫ່ງສິດອຳນາດຂອງປະຊາຊົນ ຄວນເປັນເຈົ້າການເສີມຂະຫຍາຍພາລະບົດບາດຂອງຕົນທີ່ລະບຸໄວ້ໃນລັດຖະທຳມະນູນ, ອັນສຳຄັນທີ່ສຸດແມ່ນ ຄວນເຊີດຊູຄວາມສາມາດ ໃນການຄົ້ນຄວ້າຕົກລົງບັນຫາສຳຄັນຂອງລັດ ເຊັ່ນ ການຄົ້ນຄວ້າ, ຮັບຮອງເອົາກົດໝາຍຕ່າງໆ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານປະຈຳປີ ແລະອື່ນໆ. ພ້ອມກັນນັ້ນ ກໍປັບປຸງການຈັດຕັ້ງ ຕິດພັນກັບການເສີມຂະຫຍາຍບົດບາດການເຄື່ອນໄຫວ ຂອງສະມາຊິກສະພາແຫ່ງຊາດ ເພື່ອຕິດຕາມກວດກາການປະຕິບັດກົດໝາຍ ແລະມະຕິຕ່າງໆ ຂອງສະພາແຫ່ງຊາດ, ປະສານສົມທົບຢ່າງແໜ້ນແຟ້ນກັບອົງການບໍລິຫານ, ອົງການຕຸລາການ ແລະອົງການຈັດຕັ້ງມະຫາຊົນ ເພື່ອຊອກເຫັນ ແລະ ດັດແປງຂໍ້ຂາດຕົກບົກພ່ອງຢ່າງທັນການ, ເຮັດໃຫ້ຕົວບົດກົດໝາຍ ແລະແຜນນະໂຍບາຍຂອງພັກ ແລະລັດ ມີຄວາມສອດຄ່ອງບໍລິບູນຍິ່ງຂຶ້ນ ທັງຮັບປະກັນຜົນປະໂຫຍດອັນຊອບທຳຂອງປະຊາຊົນ. ເປີດກວ້າງການພົວພັນຮ່ວມມື ຂອງສະພາແຫ່ງຊາດເຮົາ ກັບລັດຖະສະພາປະເທດອ້າຍນ້ອງເພື່ອນມິດ, ສະຫະພັນລັດຖະສະພາສາກົນ ແລະພາກພື້ນ.

ໃນຖານະເປັນອົງການບໍລິຫານແຫ່ງລັດ, **ລັດຖະບານ** ມີໜ້າທີ່ຕົ້ນຕໍໃນການຜັນຂະຫຍາຍແນວທາງແຜນນະໂຍບາຍຂອງພັກ ໃຫ້ເປັນແຜນຍຸດທະສາດການພັດທະນາປະເທດສຳລັບໄລຍະຍາວ, ໄລຍະກາງ, ໄລຍະສັ້ນ, ເປັນນະໂຍບາຍ, ລະບອບ, ລະບຽບການລະອຽດໃນແຕ່ລະດ້ານ; ຮັບປະກັນຄວາມເປັນເອກະພາບໃນການຄຸ້ມຄອງທົ່ວປະເທດ ແລະໃນການພົວພັນສາກົນ. ເພື່ອປະຕິບັດພາລະບົດບາດດັ່ງກ່າວນັ້ນໄດ້ດີຈະຕ້ອງຕັ້ງໜ້າ ບູລະນະລະບົບກົງຈັກການຈັດຕັ້ງ ໃຫ້ໜັກແໜ້ນ ເຮັດໃຫ້ການຄຸ້ມຄອງບໍລິຫານ ທັນສະໄໝ ແລະມີປະສິດທິຜົນສູງຂຶ້ນ ເປັນກ້າວໆ, ປະຕິບັດລະບອບການປະສານສົມທົບຢ່າງກົມກຽວ ລະຫວ່າງບັນດາຂະແໜງການສູນກາງ ກໍຄືລະຫວ່າງຂະແໜງການສູນກາງກັບທ້ອງຖິ່ນ, ລະຫວ່າງສາຍຕັ້ງກັບສາຍຂວາງ; ຍົກສູງລະດັບຄວາມສາມາດໃນການຄົ້ນຄວ້າຕົກລົງບັນຫາ ແລະຄວາມຮັບຜິດຊອບ ຂອງທົ່ວໜ້າຂະແໜງການ ແລະທ້ອງຖິ່ນຂຶ້ນຕື່ມອີກ ເພື່ອຈັດຕັ້ງປະຕິບັດແຜນການ, ໂຄງການ, ວຽກງານຕົວຈິງໃຫ້ເກີດໝາກເກີດຜົນ. ໃນຕໍ່ໜ້ານີ້ ໃຫ້ຄົ້ນຄວ້າອອກກົດໝາຍ ວ່າດ້ວຍການປົກຄອງ ທ້ອງຖິ່ນ ພ້ອມທັງອອກດຳລັດວ່າດ້ວຍການຈັດຕັ້ງປະຕິບັດບັນດາກົດໝາຍທີ່ໄດ້ປະກາດໃຊ້ໄປແລ້ວຢ່າງທັນການ.

ໃນລະບົບອຳນາດແຫ່ງລັດ ຂອງປະເທດເຮົາ, **ລະບົບອົງການຕຸລາການ** ມີບົດບາດສຳຄັນໃນການປົກປ້ອງກົດໝາຍ ແລະຮັບປະກັນຄວາມຍຸດຕິທຳໃນສັງຄົມ, ເຮັດໃຫ້ຄວາມສັກສິດ ຂອງກົດໝາຍ ນັບມື້ນັບພົ້ນເດັ່ນຂຶ້ນ. ສະນັ້ນ ພັກເຮົາຈຶ່ງຕ້ອງເພີ່ມທະວີການນຳພາ ຕໍ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຕຸລາການ ແນໃສ່ເສີມຂະຫຍາຍຄວາມສາມາດ ແລະຄວາມເປັນເຈົ້າ ຂອງແຕ່ລະອົງການ ໃນການປະຕິບັດພາລະບົດບາດ ຂອງຕົນໃຫ້ໄດ້ຢ່າງ ຖືກຕ້ອງ, ຄົບຖ້ວນ, ມີການປະສານສົມທົບກັນ ແຕ່ບໍ່ກ້າວກ່າຍວຽກງານຂອງກັນ, ມີຄວາມເປັນເອກະພາບ ແລະ ເດັດຂາດເຂັ້ມງວດນຳກັນ ບົນພື້ນຖານແນວທາງ, ນະໂຍບາຍ ແລະກົດໝາຍ. ໃນຊຸມປີສະເພາະໜ້ານີ້ ຈະໄດ້ສຸມໃສ່ບຳລຸງ ແລະກໍ່ສ້າງພະນັກງານຍຸດຕິທຳ ໃຫ້ມີລະດັບວິຊາສະເພາະ, ມີຈັນຍາທຳໜັກແໜ້ນ ແລະ ຮັກຄວາມຍຸດຕິທຳ ແນໃສ່ປັບປຸງອົງການສານປະຊາຊົນ ແລະອົງການໄອຍະການປະຊາຊົນທຸກຂັ້ນໃຫ້ມີຄຸນນະພາບສູງຂຶ້ນ, ພ້ອມກັນນັ້ນ ກໍເພີ່ມທະວີ ການພົວພັນອັນກົມກຽວ ລະຫວ່າງເຈົ້າໜ້າທີ່ກັບອົງການຕຸລາການ; ປັບປຸງ ແລະ ສ້າງພື້ນຖານວັດຖຸ-ເຕັກນິກ, ປະກອບພາຫະນະອັນຈຳເປັນໃຫ້ອົງການຕຸລາການຂັ້ນຕ່າງໆ.

### 6). ຂີດເຂດ ວຽກງານມະຫາຊົນແລະວຽກງານແນວໂຮມ.

ອີງຕາມບົດຮຽນທີ່ຖອດຖອນໄດ້ຈາກພຶດຕິກຳ, ພັກເຮົາຢືນຢັນວ່າ ວຽກງານຂົນຂວາຍ, ສຶກສາອົບຮົມ, ຈັດຕັ້ງ ແລະ ນຳພາມະຫາຊົນ ເປັນວຽກງານຍຸດທະສາດ. ການດຳເນີນວຽກງານມະຫາຊົນ ແມ່ນແນໃສ່ນຳເອົາແນວທາງ ຂອງພັກ, ນະໂຍບາຍ ແລະ ຂໍ້ກຳນົດກົດໝາຍ ຂອງລັດລົງສູ່ມະຫາຊົນ, ເສີມຂະຫຍາຍສິດເປັນເຈົ້າ ແລະປົກປ້ອງຜົນປະໂຫຍດອັນຊອບທຳ ຂອງມະຫາຊົນ, ເຮັດໃຫ້ສາຍພົວພັນລະຫວ່າງພັກ ແລະ ອຳນາດການປົກຄອງກັບປະຊາຊົນ ມີຄວາມແໜ້ນແຟ້ນ; ປຸກລະດົມ ແລະເຕົ້າໂຮມມະຫາຊົນຈັດຕັ້ງປະຕິບັດແນວທາງແຜນນະໂຍບາຍຂອງພັກ ແລະລະບຽບກົດໝາຍຂອງລັດ ໃຫ້ປະກົດຜົນເປັນຈິງ. ສະນັ້ນ ບັນດາອົງການຈັດຕັ້ງມະຫາຊົນ ຄວນເປັນເຈົ້າການ ປະຕິບັດພາລະບົດບາດຂອງຕົນ. *ແນວລາວສ້າງຊາດ* ໃນຖານະເປັນພື້ນຖານ ທາງດ້ານການເມືອງຂອງອຳນາດການປົກຄອງປະຊາຊົນນັ້ນ ມີໜ້າທີ່ ເຕົ້າໂຮມຄວາມສາມັກຄີ ເປັນອັນໜຶ່ງອັນດຽວ ລະຫວ່າງປະຊາຊົນທຸກເຜົ່າ, ທຸກຊັ້ນຄົນ ແລະສາສະໜາ ບົນພື້ນຖານ ພັນທະພາບກຳມະກອນ, ຊາວກະສິກອນ, ນັກຮຽນຮູ້ປັນຍາຊົນ ແລະ ບັນດາຊັ້ນຄົນທີ່ຮັກຊາດ ພາຍໃຕ້ການນຳພາ ຂອງພັກ; ເຮັດໃຫ້ຄວາມເປັນເອກະພາບແຫ່ງຊາດມີຄວາມໜັກແໜ້ນ, ລະດົມໄດ້ກຳລັງແຮງຂອງທົ່ວປວງຊົນ ເຂົ້າໃນພາລະກິດ ປົກປັກຮັກສາ ແລະສ້າງສາປະເທດຊາດ. *ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ* ມີໜ້າທີ່ເຕົ້າໂຮມຄົນຮຸ່ນໜຸ່ມ ແລະສຶກສາອົບຮົມ, ບຳລຸງສ້າງຊາວໜຸ່ມເຍົາວະຊົນ ໃຫ້ເປັນຜູ້ທີ່ຈົງຮັກພັກດີ ຕໍ່ປະເທດຊາດ ແລະສືບທອດພາລະກິດຂອງພັກ. *ສະຫະພັນແມ່ຍິງ* ມີໜ້າທີ່ສຶກສາອົບຮົມຍົກລະດັບຄວາມຮູ້ ແລະເພີ່ມທະວີຄວາມສາມາດ ພັດທະນາຕົນເອງ ໃນທຸກດ້ານ ໃຫ້ເພດຍິງ, ເພື່ອເຊີດຊູບົດບາດ ຂອງແມ່ຍິງໃນສັງຄົມຂຶ້ນຕື່ມອີກ ແລະເປັນເຈົ້າການປະຕິບັດສິດສະເໝີພາບລະຫວ່າງ ຍິງ-ຊາຍ; ພ້ອມກັນນັ້ນ ກໍຕ້ອງຕັ້ງໜ້າເສີມຂະຫຍາຍບົດບາດຂອງຕົນໃນການປົກປ້ອງຜົນປະໂຫຍດ ຂອງແມ່ ແລະເດັກ. *ສະຫະພັນກຳມະບານລາວ* ມີໜ້າທີ່ສຶກສາອົບຮົມ ກຳມະກອນ ໃຫ້ເປັນພົນລະເມືອງດີ, ມີສະຕິຊົນຊັ້ນ ແລະ ມີລະບຽບແບບແຜນ, ພ້ອມກັນນັ້ນ ກໍ່ຕ້ອງເປັນເຈົ້າການເຄື່ອນໄຫວປົກປ້ອງສິດທິ ແລະຜົນປະໂຫຍດອັນຊອບທຳຂອງຊາວຜູ້ອອກແຮງງານ.

ເພື່ອໃຫ້ອົງການຈັດຕັ້ງມະຫາຊົນເຮັດຫລ້ອນບົດບາດ ແລະໜ້າທີ່ຂອງຕົນດັ່ງກ່າວນັ້ນ ຈະຕ້ອງ ສືບຕໍ່ປັບປຸງລະບົບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງແຕ່ລະອົງການນັບທັງຂັ້ນສູນກາງ ແລະທ້ອງຖິ່ນ ໃຫ້ສອດຄ່ອງກັບສະພາບເສດຖະກິດ-ສັງຄົມ, ກໍຄືຄວາມນຶກຄິດຈິດໃຈ ແລະຄວາມເປັນຢູ່ຂອງມະຫາຊົນໃນໄລຍະໃໝ່; ອັນສຳຄັນທີ່ສຸດແມ່ນຄວນເລືອກເຟັ້ນເອົາຜູ້ທີ່ເຄື່ອນໄຫວຫ້າວຫັນ ໃນຂະບວນການຂອງມະຫາຊົນ, ຜູ້ມີຜົນງານ ແລະໄດ້ຮັບຄວາມເຊື່ອຖືໄວ້ວາງໃຈຈາກມະຫາຊົນ ປະກອບເຂົ້າໃນກົງຈັກການຈັດຕັ້ງຂອງແຕ່ລະອົງການ; ດັດແປງ, ແກ້ໄຂແບບແຜນວິທີເຮັດວຽກ ແລະການເຄື່ອນໄຫວໂດຍສຸມໃສ່ຂັ້ນຮາກຖານ ແລະບ່ອນທີ່ມີມະຫາຊົນເຕົ້າໂຮມຫລາຍ. ພ້ອມກັນນັ້ນ, ບັນດາອົງການຈັດຕັ້ງມະຫາຊົນ ກໍຄວນຮີບຮ້ອນຄົ້ນຄວ້າ ຮູບແບບການຈັດຕັ້ງ ແລະການເຄື່ອນໄຫວ ຂອງອົງການຈັດຕັ້ງສັງຄົມ ໂດຍສອດຄ່ອງກັບສາຂາອາຊີບ ແລະກິດຈະກຳຂອງມະຫາຊົນ ເຮັດໃຫ້ການຈັດຕັ້ງມີຫລາຍຮູບຫລາຍສີ, ເປັນຜົນປະໂຫຍດແກ່ປະເທດຊາດ ແລະມະຫາຊົນເອງ. ອົງການເຫລົ່ານີ້ຈັດຕັ້ງຂຶ້ນບົນພື້ນຖານລະບຽບກົດໝາຍຂອງລັດ ແລະຕາມຫລັກການສະໝັກໃຈ, ກຸ້ມຕົນເອງດ້ານການເງິນ ແລະ ຢູ່ພາຍໃຕ້ການນຳພາ-ຊີ້ນຳ ຂອງອົງການຈັດຕັ້ງມະຫາຊົນ ແລະຂະແໜງການທີ່ກ່ຽວຂ້ອງ.

ເພື່ອໃຫ້ອົງການຈັດຕັ້ງມະຫາຊົນ ເຄື່ອນໄຫວປະຕິບັດໜ້າທີ່ ຂອງຕົນໄດ້ດີ ເລັ່ງທວງໃຫ້ຄະນະພັກ ແລະ ອຳນາດການປົກຄອງທຸກຂັ້ນ ຕ້ອງເພີ່ມທະວີ ການນຳພາຊີ້ນຳ ແລະສ້າງເງື່ອນໄຂສະດວກໃຫ້ອົງການເຫລົ່ານັ້ນ; ສ່ວນອົງການຈັດຕັ້ງມະຫາຊົນເອງກໍຕ້ອງປະຕິບັດບົດບາດ ແລະໜ້າທີ່ຂອງຕົນດັ່ງທີ່ກ່າວມາເທິງນັ້ນ, ບຸກບືນສ້າງຄັງຂອງຕົນ ດ້ວຍການລະດົມການປະກອບສ່ວນຈາກສະມາຊິກ ແລະມະຫາຊົນ ຫລືດ້ວຍວິທີການອື່ນ ທີ່ສອດຄ່ອງກັບລະບຽບກົດໝາຍ ເພື່ອເພີ່ມເຕີມແຫລ່ງລາຍຮັບສຳລັບການເຄື່ອນໄຫວຂອງອົງການຕົນ.

ໃນການປະຕິບັດນະໂຍບາຍມະຫາສາມັກຄີທົ່ວປວງຊົນນັ້ນ, ພັກເຮົາຍາມໃດກໍມີທັດສະນະອັນຈະແຈ້ງຕໍ່ຊາວລາວທີ່ຢູ່ຕ່າງປະເທດ. ພວກເຮົາຊົມເຊີຍພີ່ນ້ອງຊາວລາວ ທີ່ຍັງມີນ້ຳໃຈຮັກເຊື້ອແພງຊາດ ມີນ້ຳໃຈຜູກພັນກັບບ້ານເກີດເມືອງນອນ, ມີຄວາມເຂົ້າໃຈ

ກ່ຽວກັບລະບອບປະຊາທິປະໄຕປະຊາຊົນ ແລະ ມີຈິດໃຈຢາກປະກອບສ່ວນ ຮ່ວມກັບວົງຄະນາຍາດແຫ່ງຊາດ ໃນການພັດທະນາສ້າງສາປະເທດ. ຈະສືບຕໍ່ປະຕິບັດນະໂຍບາຍໃຫ້ເຂົາເຈົ້າ ໄດ້ມາຢ້ຽມຢາມຍາດ ຕິພີ່ນ້ອງ ຂອງຕົນ, ສຳພັດກັບຄວາມເປັນຈິງ ຂອງປະເທດຊາດ ແລະ ສ້າງເງື່ອນໄຂສະດວກ ຕາມລະບຽບກົດໝາຍສຳລັບຜູ້ທີ່ມີທຶນຮອນ ແລະ ມີຄວາມປະສົງ ຢາກທຳມາຫາກິນຮ່ວມກັບພີ່ນ້ອງຮ່ວມຊາດຢູ່ພາຍໃນປະເທດ.

ສຳລັບຊາວຕ່າງດ້າວ ທີ່ດຳລົງຊີວິດຢູ່ປະເທດເຮົານັ້ນ, ພັກ ແລະ ລັດເຮົາ ຈະສ້າງເງື່ອນໄຂໃຫ້ເຂົາເຈົ້າໄດ້ເຄື່ອນໄຫວທຳມາຫາກິນເປັນປົກກະຕິຕາມລະບຽບ ກົດໝາຍຂອງ ສປປລາວ, ຮັບປະກັນສິດທິ ແລະ ຜົນປະໂຫຍດ ອັນຊອບທຳ ຂອງເຂົາເຈົ້າ ແລະ ຫວັງວ່າ ເຂົາເຈົ້າ ຈະປະກອບສ່ວນເຂົ້າໃນການສ້າງສາ ພັດທະນາປະເທດລາວ, ກໍຄືໃນການເສີມຂະຫຍາຍສາຍພົວພັນມິດຕະພາບລະຫວ່າງ ສ.ປ.ປ.ລາວ ກັບປະເທດ ຂອງເຂົາເຈົ້າ.

## ພາກທີ III
## ເພີ່ມທະວີການນຳພາຂອງພັກໃນພາລະກິດປ່ຽນແປງໃໝ່.

ສະຫາຍທັງຫລາຍ,

ລັດຖະທຳມະນູນແຫ່ງ ສປປລາວ ໄດ້ລະບຸແຈ້ງວ່າ ພັກປະຊາຊົນປະຕິວັດລາວ ແມ່ນແກນນຳ ໃນລະບົບການເມືອງ ຂອງລະບອບປະຊາທິປະໄຕປະຊາຊົນ. ນັ້ນແມ່ນພາລະກຳປະຫວັດສາດ ແລະກໍແມ່ນຄວາມຮັບຜິດຊອບ ອັນມີກຽດສະຫງ່າ ຂອງພັກເຮົາ. ສະນັ້ນ ການສືບຕໍ່ປັບປຸງ ກໍ່ສ້າງພັກ ໃຫ້ມີຄວາມໜັກແໜ້ນ ເຂັ້ມແຂງ ທັງທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ ແລະແບບແຜນ ຈຶ່ງແມ່ນໜ້າທີ່ສຳຄັນ ສຳລັບສະເພາະໜ້າ ແລະ ຍາວນານ. ການປັບປຸງກໍ່ສ້າງພັກ ແມ່ນແນໃສ່ເຮັດໃຫ້ພັກເຮົາ ມີຄວາມສາມາດ ແລະ ມີກຳລັງແຮງສູ້ຮົບໃໝ່ເລື້ອຍໆ, ສາມາດດຳລົງບົດບາດເປັນແກນນຳ ທີ່ແທ້ຈິງ ໃນລະບົບການເມືອງ ແລະ ເປັນຕົວແທນ ແຫ່ງຜົນປະໂຫຍດ ຂອງຊົນຊັ້ນກຳມະກອນ, ຂອງຊາວຜູ້ອອກແຮງງານ ແລະ ຂອງໝົດທັງຊາດ.

ເພື່ອນຳພາທົ່ວປວງຊົນ ກ້າວໄປສູ່ຜົນສຳເລັດໃໝ່ ທີ່ສະຫງ່າງາມ ຢ່າງບໍ່ຢຸດຢັ້ງ, ອີງໃສ່ບົດຮຽນທີ່ຖອດຖອນໄດ້ຈາກພຶດຕິກຳ, ຄະນະພັກຂັ້ນຕ່າງໆ ຕ້ອງຍຶດໝັ້ນ ແລະ ກຳແໜ້ນ 6 ຫລັກການພື້ນຖານ ຂອງພາລະກິດປ່ຽນແປງໃໝ່, ຖືອັນນັ້ນ ເປັນທິດນຳ ແລະເປັນໄມ້ຫລາວັດແທກ ຄຸນນະພາບ ແຫ່ງການເຄື່ອນໄຫວ ຂອງຕົນ. ໃນຊຸມປີຕໍ່ໜ້ານີ້ ຈະໄດ້ສຸມໃສ່ວຽກງານຈຳນວນໜຶ່ງດັ່ງນີ້:

1. *ເພີ່ມທະວີບົດບາດ ແລະຄວາມສາມາດນຳພາ ຂອງພັກຕໍ່ທົ່ວສັງຄົມ.* ການນຳພາ ຂອງພັກແມ່ນປັດໄຈພື້ນຖານ ທີ່ຮັບປະກັນໃຫ້ປະເທດຊາດ ກ້າວຂຶ້ນໄປສູ່ຄວາມວັດທະນະຖາວອນ. ພັກນຳພາໂດຍຜ່ານແນວທາງການເມືອງ, ການໂຄສະນາສຶກສາອົບຮົມ, ການປຸກລະດົມ ຂົນຂວາຍ ແລະການຈັດຕັ້ງຊີ້ນຳ, ຜ່ານຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ, ຜ່ານການກຳແໜ້ນພະນັກງານ ແລະການກວດກາ.

ໃນໄລຍະທີ່ຜ່ານມາ ພັກເຮົາໄດ້ເອົາໃຈໃສ່ຈົດຈໍ່ ຕໍ່ການວາງ ແລະບູລະນະແນວທາງແຜນນະໂຍບາຍ ໃຫ້ຖືກຕ້ອງ, ບໍລິບູນ ດ້ວຍການເສີມຂະຫຍາຍ ຄວາມເປັນເຈົ້າການປະດິດສ້າງ, ກຳແໜ້ນສະພາວະ ຄວາມເປັນຈິງ ຂອງປະເທດຊາດ ແລະຈຸດພິເສດຂອງສະພາບແວດລ້ອມສາກົນ ໃນແຕ່ລະໄລຍະ; ໃກ້ຊິດຕິດແທດ, ກຳແໜ້ນຄວາມມຸ່ງມາດປາຖະໜາ ແລະ ຄວາມຄິດຄວາມເຫັນ ຂອງມະຫາຊົນ; ເອົາໃຈໃສ່ສະຫລຸບ ແລະ

ຖອດຖອນບົດຮຽນຈາກພຶດຕິກຳ ຂອງຕົນ ແລະຊອກຮູ້ບົດຮຽນທີ່ດີ ຂອງບັນດາປະເທດໃນໂລກ. ພັກເຮົາຈະສືບຕໍ່ເສີມຂະຫຍາຍບົດຮຽນແຫ່ງຜົນສຳເລັດດັ່ງກ່າວນັ້ນ.

ເມື່ອມີແນວທາງຖືກຕ້ອງແລ້ວ ຄະນະພັກທຸກຂັ້ນ ຕ້ອງຄົ້ນຄວ້າ ເຊື່ອມຊຶມ ຢ່າງເລິກເຊິ່ງ, ປຶກສາຫາລື ເປັນໝູ່ຄະນະ ເພື່ອຫັນເປັນມະຕິ, ເປັນແຜນການ ແລະໂຄງການວຽກງານຂອງຄະນະພັກຕົນ. ພ້ອມກັນນັ້ນ ກໍແບ່ງງານຢ່າງຈະແຈ້ງ ໃຫ້ກຳມະການ ໃນຄະນະພັກ ຮັບຜິດຊອບນຳພາ-ຊີ້ນຳ ການຈັດຕັ້ງປະຕິບັດ. ເພື່ອເຮັດໃຫ້ແນວທາງ ຂອງພັກກາຍເປັນການກະທຳ ທີ່ເປັນເອກະພາບ ຂອງທົ່ວພັກ ທົ່ວປວງຊົນ, ຄະນະພັກແຕ່ລະຂັ້ນຕ້ອງຖືສຳຄັນ ການໂຄສະນາເຜີຍແຜ່ ແນວທາງນະໂຍບາຍ ຂອງພັກໃຫ້ພະນັກງານ, ສະມາຊິກພັກ ແລະ ມະຫາຊົນເຂົ້າໃຈ ແລະ ຈັດຕັ້ງຊີ້ນຳເຂົາເຈົ້າປະຕິບັດໃຫ້ເກີດໝາກເກີດ

ສະນັ້ນ ພວກເຮົາຕ້ອງຮີບຮ້ອນ ວາງແຜນກຳນົດ ກ່ຽວກັບການສ້າງພະນັກງານໄລຍະຍາວ ແລະໄລຍະສັ້ນ. ທັດສະນະ ຂອງພັກເຮົາ ກ່ຽວກັບການບຳລຸງ ແລະກໍ່ສ້າງພະນັກງານ ແມ່ນ ສົມທົບຢ່າງກົມກຽວ ລະຫວ່າງການບຳລຸງຍົກລະດັບ ກັບການກໍ່ສ້າງ; ລະຫວ່າງ ການສ້າງທັດສະນະຫລັກຫມັ້ນຊຶນຊັ້ນ ແລະ ຄຸນສົມບັດສິນທຳປະຕິວັດ ກັບການປະກອບ ຄວາມຮູ້ໃຫມ່ ດ້ານວິຊາສະເພາະ ແລະ ຄວາມຮູ້ທົ່ວໄປ; ສົມທົບລະຫວ່າງຜູ່ເກົ່າ ກັບຜູ່ ໃຫມ່; ຜູ່ຫນຸ່ມກັບຜູ່ອາວຸໂສ, ຮັບປະກັນລັກສະນະສືບທອດຕໍ່ເນື່ອງ; ດຳເນີນການບຳລຸງ ແລະກໍ່ສ້າງພະນັກງານ ປະເພດຕ່າງໆ ຢ່າງຄົບຊຸດ ຄື ພະນັກງານນຳພາ, ພະນັກງານ ຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ພະນັກງານ ທີ່ເຮັດວຽກພົວພັນກັບຕ່າງປະເທດ, ນັກວິຊາການ ຜູ່ຊ່ຽວຊານໃນແຕ່ລະດ້ານ ແລະ ພະນັກງານທຸລະກິດ ໂດຍໃຫ້ຄວາມສຳ ຄັນຢ່າງເຫມາະສົມ ແກ່ພະນັກງານຈາກທ້ອງຖິ່ນຮາກຖານ, ພະນັກງານຊົນເຜົ່າ ແລະພະ ນັກງານເພດຍິງ ຕິດພັນກັບຄວາມຕ້ອງການ ຂອງແຕ່ລະຕຳແຫນ່ງງານ.

ໃນສະເພາະຫນ້ານີ້ ຕ້ອງສືບຕໍ່ຈັດວາງ ແລະສັບຊ້ອນພະນັກງານ ໃນຕຳແຫນ່ງ ງານຕ່າງໆ ຕາມມາດຕະຖານ ທີ່ວາງໄວ້, ເອົາໃຈໃສ່ເລືອກເຟັ້ນ ແລະ ສັບຊ້ອນພະນັກ ງານປະກອບໃຫ້ອົງການທີ່ສ້າງຕັ້ງຂຶ້ນໃຫມ່ ຕາມຄວາມຈຳເປັນ ອັນຮີບດ່ວນ. ດຳເນີນ ການກວດສອບຄວາມສາມາດ ຂອງພະນັກງານ ເພື່ອຍົກລະດັບ ແລະ ບັນຈຸສັບຊ້ອນຄືນ ໃຫມ່ ໃຫ້ສົມເຫດສົມຜົນ, ປະຕິບັດລະບຽບລັດຖະກອນຢ່າງເຂັ້ມງວດ.

ປັບປຸງວຽກງານ ຄຸ້ມຄອງພະນັກງານ ໃຫ້ເປັນລະບົບເອກະພາບ, ມີຄວາມຫນັກ ແຫນ້ນ, ມີວິທະຍາສາດ ແລະທັນສະໄຫມຂຶ້ນເປັນກ້າວໆ, ເອົາໃຈໃສ່ນຳໃຊ້ພະນັກງານໃຫ້ ຫມົດຄຸນປະ ໂຫຍດ ແລະ ຕີລາຄາພະນັກງານ ຢ່າງພາວະວິໄສ, ປະຕິບັດລະບອບນະໂຍ ບາຍຕໍ່ເຂົາໃຈໃຫ້ຄົບຖ້ວນ ແລະທົ່ວເຖິງ, ສົ່ງເສີມຜູ່ທີ່ມີຄວາມສາມາດ ແລະມີຜົນງານດີ ເດັ່ນ, ຕໍ່ຜູ່ທີ່ປະຕິບັດຫນ້າທີ່ຢູ່ໃນເຂດທຸລະກັນດານຫຍຸ້ງຍາກ. ພ້ອມກັນນັ້ນ ກໍມີມາດຕະ ການສະກັດກັ້ນ ແລະແກ້ໄຂປະກົດການຫຍໍ້ທໍ້ ທີ່ເກີດຂຶ້ນໃນຖັນແຖວພະນັກງານ ຢ່າງທັນ ການ.

ວຽກງານພະນັກງານ ແມ່ນຄວາມຮັບຜິດຊອບໂດຍກົງ ຂອງຄະນະພັກທຸກຂັ້ນ ແລະ ຂອງພະນັກງານນຳພາທຸກຄົນ. ສະນັ້ນ ຈຶ່ງຕ້ອງເອົາໃຈໃສ່ຕິດຕາມ ຊີ້ນຳ, ກວດກາ ແລະບຳລຸງ ສ້າງພະນັກງານ ໃນຂະບວນການວຽກງານຕົວຈິງ ທັງໃຫ້ໄປຮ່ຳຮຽນ ຢູ່ໃນໂຮງ

ຮຸນ, ເຮັດໃຫ້ຖັນແຖວພະນັກງານ ທີ່ຂຶ້ນກັບຄວາມຮັບຜິດຊອບ ຂອງຕົນ ມີຄວາມກ້າວໜ້າຢ່າງບໍ່ຢຸດຢັ້ງ. ດ້ານໜຶ່ງກໍຕ້ອງເອົາໃຈໃສ່ປັບປຸງອົງການ ແລະພະນັກງານ ທີ່ເຮັດວຽກງານຈັດຕັ້ງ ໃຫ້ມີຄຸນນະພາບ ແລະເປັນເສນາທິການທີ່ດີ ໃຫ້ຄະນະພັກຂັ້ນຕ່າງໆ.

*5. ວຽກງານກວດກາ.*

ການກວດກາແມ່ນສ່ວນປະກອບອັນສຳຄັນ ຂອງການນຳພາຂອງພັກ. ທັດສະນະຂອງພັກເຮົາກ່ຽວກັບບັນຫານີ້ແມ່ນດຳເນີນວຽກງານກວດກາໃຫ້ມີຄວາມສັກສິດ ແລະມີຄຸນນະພາບດີຂຶ້ນແນໃສ່ *ຮັບປະກັນຄວາມສາມັກຄີເປັນເອກະພາບພາຍໃນພັກ ອັນໜັກແໜ້ນ, ກ່ອນອື່ນໝົດແມ່ນໃນຄະນະນຳ ຂອງພັກຂັ້ນຕ່າງໆ; ເຮັດໃຫ້ການເຄື່ອນໄຫວ ຂອງຄະນະພັກ ແລະອົງການປົກຄອງ ດຳເນີນໄປດ້ວຍຄຸນນະພາບທີ່ນັບມື້ນັບສູງຂຶ້ນ ແລະຖືກຕ້ອງຕາມກົດລະບຽບ, ຕາມແນວທາງຂອງພັກ ແລະກົດໝາຍຂອງລັດ; ເຮັດໃຫ້ຖັນແຖວສະມາຊິກພັກ ແລະພະນັກງານປະຕິບັດໜ້າທີ່ ດ້ວຍຄວາມຈົງຮັກພັກດີ ແລະຊື່ສັດ. ສະກັດກັ້ນ, ກຳຈັດພະຍາດອາດຍາສິດ ແລະ ການສໍ້ລາດບັງຫລວງທຸກຮູບແບບ.*

ອີງຕາມທັດສະນະດັ່ງກ່າວ, ພວກເຮົາຈະຕ້ອງດຳເນີນການກວດກາຢ່າງຮອບດ້ານເປັນປະຈຳໃນອົງການພັກ, ລັດ, ອົງການຈັດຕັ້ງມະຫາຊົນທຸກຂັ້ນ, ຫົວໜ່ວຍຜະລິດທຸລະກິດ ແລະ ກວດກາພະນັກງານທຸກຄົນ, ກ່ອນອື່ນແມ່ນພະນັກງານນຳພາຄຸ້ມຄອງຫລັກແຫລ່ງ ໃນການປະຕິບັດວຽກງານຕົວຈິງຂອງເຂົາເຈົ້າ, ເຮັດໃຫ້ການກວດກາ ເປັນມາດຕະການສຳຄັນຕົ້ນຕໍ ແລະເປັນເຄື່ອງມືອັນສັກສິດ ໃນການສຶກສາອົບຮົມ, ກະຕຸກຊຸກຍູ້ຄວາມຫ້າວຫັນ ແລະຄວາມເປັນເຈົ້າການ ຮັບຜິດຊອບຕໍ່ໜ້າທີ່ ຂອງພະນັກງານຂັ້ນຕ່າງໆ ໃຫ້ມີປະສິດທິຜົນ, ທັງຊ່ວຍເຕືອນແລະຊ່ວຍແກ້ຄວາມບົກພ່ອງຜິດພາດ ຂອງເຂົາເຈົ້າ. ສະນັ້ນ ຈຶ່ງບໍ່ໃຫ້ການຈັດຕັ້ງ ພັກ-ລັດ, ຫົວໜ່ວຍ, ກົມກອງໃດ ແລະ ບໍ່ໃຫ້ບຸກຄົນໃດຢູ່ນອກການກວດກາ. ຄະນະພັກທຸກຂັ້ນ, ສະມາຊິກພັກ ແລະພະນັກງານທຸກຄົນ ເຖິງຈະດຳລົງຕຳແໜ່ງໃດກໍ່ຕາມ ຕ້ອງເຂົ້າຮ່ວມຊີວິດສຳຫລວດກວດກາຢ່າງເປັນປົກກະຕິ, ປະກອບສ່ວນຊຸກຍູ້ສິ່ງເສີມແບບຢ່າງທີ່ດີ ໃນການເຮັດວຽກ ງານແລະໃນການດຳລົງຊີວິດທີ່ປອດໄສຈິບງາມ, ທັງຊ່ວຍເຫລືອກໍ່ສ້າງຊຶ່ງກັນ ແລະກັນ ຢ່າງທັນການ, ບໍ່ປ່ອຍປະໃຫ້ຂໍ້

ບົກພ່ອງ ແລະຄວາມຜິດພາດແກ່ຍືດແກ່ຍາວໄປ ເຊິ່ງຈະເປັນຜົນສະທ້ອນບໍ່ດີ ຕໍ່ການຈັດຕັ້ງ ແລະນຳເອົາຄວາມເສື່ອມເສຍ ມາໃຫ້ພະນັກງານເອງ. ຄະນະພັກ ແລະອຳນາດການປົກຄອງທຸກຂັ້ນ ຕ້ອງເສີມຂະຫຍາຍປະຊາທິປະໄຕ, ສົ່ງເສີມການຕິຊົມຕົນເອງ ແລະຕິຊົມກັນ ດ້ວຍຈິດໃຈເພື່ອນສະຫາຍ.

ອົງການກວດກາທຸກຂັ້ນ, ທຸກຂະແຫນງການ ຕ້ອງດຳເນີນການກວດກາຕາມພາລະບົດບາດຂອງຕົນຢ່າງເປັນປະຈຳ ດ້ວຍຄວາມຮອບຄອບນົ້ມນວນ, ລະອຽດເລິກເຊິ່ງ, ພາວະວິໄສ, ທັງເດັດຂາດ ແລະ ຖືກຕ້ອງເປັນທຳ. ຫລີກລ້ຽງ ການເຮັດແບບມະລຸ້ມມະລ້ວຍ, ຈິ່ງຈຽມກັນ, ເຫັນໃຈກັນ ແລະປົກປ້ອງເອົາກັນ. ສະນັ້ນ ຄະນະກວດກາຕ້ອງເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດ, ທັງບຳລຸງສ້າງ ທາງດ້ານວິຊາສະເພາະການກວດກາ ແລະລະບຽບກົດຫມາຍຕ່າງໆ ໃຫ້ແກ່ຖັນແຖວພະນັກງານ ຂອງຕົນຢ່າງເລິກເຊິ່ງ ແນໃສ່ເຮັດໃຫ້ຄະນະກວດກາແຕ່ລະຂັ້ນ ສາມາດປະຕິບັດຫນ້າທີ່ ຂອງຕົນໃນເງື່ອນໄຂໃຫມ່ໃຫ້ໄດ້ເປັນຢ່າງດີ, ປະກອບສ່ວນເຂົ້າໃນການກໍ່ສ້າງພັກ ແລະລັດເຮົາ ໃຫ້ມີຄວາມຫນັກແຫນ້ນ ເຂັ້ມແຂງຍິ່ງໆຂຶ້ນ .

ສະຫາຍທີ່ຮັກແພງທັງຫລາຍ,

ລາຍງານການເມືອງທີ່ໄດ້ສະເຫນີມານັ້ນ ໄດ້ທົບທວນຄືນ ການດຳເນີນພາລະກິດປ່ຽນແປງໃຫມ່ ແລະ ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ V ຂອງພັກເຮົາຢ່າງສັງລວມ, ຕີລາຄາຜົນໄດ້ຮັບ ແລະຂໍ້ຄົງຄ້າງຢ່າງຈະແຈ້ງ, ໄດ້ສະຫລຸບ ແລະຖອດຖອນບົດຮຽນກ່ຽວກັບການດຳເນີນພາລະກິດປ່ຽນແປງໃຫມ່ ໃນໄລຍະທີ່ຜ່ານມາ. ພ້ອມກັນນັ້ນກໍໄດ້ກຳນົດ ຈຸດຫມາຍ ແລະ ຄາດຫມາຍສູ້ຊົນ, ກໍ່ຄືແຜນນະໂຍບາຍ ແລະທິດທາງຫນ້າທີ່ໃນດ້ານຕ່າງໆ ສຳລັບຊຸມປີຕໍ່ຫນ້າ ຢ່າງເປັນລະບົບ.

ຂ້າພະເຈົ້າ ຫວັງວ່າ ບັນດາສະຫາຍຜູ່ແທນ ຈະເຊີດຊູຄວາມຮັບຜິດຊອບ ຂອງຕົນ, ຄົ້ນຄວ້າປະກອບຄວາມເຫັນຢ່າງເລິກເຊິ່ງ.

❋ ຂໍຂອບໃຈ ❋



# ລາຍງານ
# ຂອງຄະນະບໍລິຫານງານສູນກາງພັກ
# ກ່ຽວກັບການດັດແປງກົດລະບຽບ
# ຂອງພັກປະຊາຊົນປະຕິວັດລາວ
# ຕໍ່ກອງປະຊຸມໃຫຍ່ ຄັ້ງທີ VI ຂອງພັກ
( ຄັ້ງວັນທີ 19 / 3 / 96 )

---

*ສະເຫນີໂດຍ:* ສະຫາຍ ທອງສິງ ທຳມະວົງ
ກຳມະການກົມການເມືອງສູນກາງພັກ.

ຮຽນ ຄະນະປະທານ,
ສະຫາຍທີ່ຮັກແພງທັງຫລາຍ,

ລາຍງານການເມືອງ ຂອງຄະນະບໍລິຫານງານສູນກາງພັກ ສະເຫນີໂດຍ ສະຫາຍ ຄຳໄຕ ສີພັນດອນ ປະທານຄະນະບໍລິຫານງານສູນກາງພັກ ຕໍ່ກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກຄັ້ງນີ້ ໄດ້ເວົ້າເຖິງແນວທາງ ແຫ່ງການສືບຕໍ່ສ້າງ ແລະຂະຫຍາຍລະບອບປະຊາທິປະໄຕປະຊາຊົນ ສ້າງບັນດາປະຖົມປັດໃຈ ເພື່ອກ້າວຂຶ້ນສັງຄົມນິຍົມເທື່ອລະກ້າວ ເຊິ່ງມີພັກປະຊາຊົນປະຕິວັດລາວເປັນແກນນຳ.

ເພື່ອໃຫ້ສອດຄ່ອງ ກັບແນວທາງລວມ ແຫ່ງການປ່ຽນແປງໃຫມ່ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງວຽກງານກໍ່ສ້າງພັກໃນໄລຍະໃໝ່, ຈະຕ້ອງໄດ້ປັບປຸງ, ດັດແປງ ແລະເພີ້ມເຕີມກົດລະບຽບຂອງພັກ ໃຫ້ແທດເຫມາະກວ່າເກົ່າ.

ໃນການດັດແປງ ແລະເພີ້ມເຕີມກົດລະບຽບ ຂອງພັກຄັ້ງນີ້ ພວກເຮົາໄດ້ມີການຄົ້ນຄວ້າພຶດຕິກຳແຫ່ງການສ້າງພັກໃນໄລຍະທີ່ຜ່ານມາ, ໂດຍສະເພາະນັບແຕ່ກອງປະຊຸມໃຫຍ່

ອາດຈະແບ່ງອອກເປັນຫລາຍໜ່ວຍພັກ ແລ້ວສ້າງຕັ້ງຄະນະພັກຮາກຖານຂຶ້ນ ສຳລັບບັນດາໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານນັ້ນບໍ່ແມ່ນຂັ້ນໜຶ່ງຂອງພັກ ເປັນສ່ວນປະກອບຂອງອົງຄະນະພັກຮາກຖານເທົ່ານັ້ນ.

## ໝວດທີ ສີ່

## ການຈັດຕັ້ງພັກຢູ່ຂັ້ນກະຊວງ, ອົງການ, ແຂວງ ກຳແພງນະຄອນ ແລະເມືອງ.

ມາດຕາ 19: ກ່ຽວກັບໜ້າທີ່ ຂອງຄະນະບໍລິຫານງານພັກແຂວງ - ກຳແພງນະຄອນ ແລະເມືອງ.

ສະເໜີປັບປຸງ, ດັດແປງ ແລະຂຽນເພີ່ມຕື່ມໃຫ້ລະອຽດຈະແຈ້ງກວ່າເກົ່າຄື: ຈາກ 4 ໜ້າທີ່ເປັນ 7 ໜ້າທີ່ ໝາຍຄວາມວ່າເພີ່ມຕື່ມ 3 ໜ້າທີ່ດັ່ງນີ້:

1)- ນຳພາການເຄື່ອນໄຫວຂອງອົງຄະນະພັກລະຫວ່າງສອງກອງປະຊຸມໃຫຍ່ປະຕິບັດມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ; ປັບປຸງ, ເພີ່ມທະວີຄວາມສາມັກຄີເອກະພາບ ແລະແບບແຜນວິທີເຮັດວຽກ ຂອງຄະນະພັກ, ລະຫວ່າງຄະນະພັກ ກັບອຳນາດການປົກຄອງ ແລະອົງການຈັດຕັ້ງມະຫາຊົນໃຫ້ດີ.

2)- ພິຈາລະນາ ແລະອະນຸມັດບັນດາມະຕິ ຂອງຄະນະພັກຂັ້ນລຸ່ມຖັດຕົນ ໃນການດຳເນີນກອງປະຊຸມໃຫຍ່, ອະນຸມັດຮັບເອົາມະຫາຊົນເຂົ້າພັກ, ປະຕິບັດວິໄນສະມາຊິກພັກຜູ້ກະທຳຜິດທີ່ຢູ່ໃນສິດຄຸ້ມຄອງຂອງຕົນ.

3)- ຄົ້ນຄວ້າຈັດວາງສະມາຊິກພັກ, ຈັດຕັ້ງໜ່ວຍພັກ ແລະຄະນະພັກຮາກຖານໃຫ້ຖືກຕ້ອງສອດຄ່ອງກັບໜ້າທີ່ການເມືອງ ແລະດຳເນີນການຕິດຕາມກວດກາ, ຊຸກຍູ້ວຽກງານຢູ່ການຈັດຕັ້ງພັກຂັ້ນລຸ່ມຢ່າງເປັນປົກກະຕິ.

ມາດຕາ 20: ກ່ຽວກັບໜ້າທີ່ຂອງຄະນະພັກກະຊວງ, ອົງການ, ນີ້ແມ່ນເປັນມາດຕາໃໝ່ ເຊິ່ງມີເນື້ອໃນດັ່ງນີ້:

ໜ້າທີ່ຂອງຄະນະພັກກະຊວງ - ອົງການມີຄື:

1/- ຮັບຜິດຊອບໂດຍກົງຕໍ່ກົມການເມືອງສູນກາງພັກ ກ່ຽວກັບຜົນໄດ້, ຜົນເສຍໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງໃນທົ່ວຂະແໜງການຂອງຕົນ.

2/- ນໍາພາການເຄື່ອນໄຫວຂອງອົງຄະນະພັກ ລະຫວ່າງສອງກອງປະຊຸມໃຫຍ່ປະຕິບັດມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ ແລະມະຕິ, ຄໍາສັ່ງຂອງຄະນະພັກຂັ້ນເທິງ, ກົດລະບຽບຂອງພັກ ແລະກົດໝາຍຂອງລັດ.

3/- ປັບປຸງກໍ່ສ້າງພັກທາງດ້ານການເມືອງ, ແນວຄິດ ແລະ ການຈັດຕັ້ງ ໃນທົ່ວອົງຄະນະພັກຂອງຕົນໃຫ້ເຂັ້ມແຂງ, ຍົກສູງຄຸນນະພາບການນໍາພາຂອງໜ່ວຍພັກ ແລະສະມາຊິກພັກ. ພິຈາລະນາອະນຸມັດຮັບເອົາມະຫາຊົນເຂົ້າພັກ, ປະຕິບັດວິໄນຕໍ່ການຈັດຕັ້ງຂອງພັກ ແລະຕໍ່ສະມາຊິກພັກ ທີ່ກະທໍາຜິດ ຊຶ່ງຢູ່ໃນສິດຄຸ້ມຄອງຂອງຕົນ.

4/- ຄົ້ນຄວ້າ, ຈັດວາງສະມາຊິກພັກ, ໜ່ວຍພັກ ຈັດຕັ້ງຈຸພັກ ໃຫ້ຖືກຕ້ອງສອດຄ່ອງກັບໜ້າທີ່ການເມືອງ ແລະການຈັດຕັ້ງ. ພິຈາລະນາ ແລະອະນຸມັດບັນດາມະຕິຂອງຮາກຖານພັກທີ່ຂຶ້ນກັບຕົນ, ຊີ້ນໍາ, ນໍາພາບັນດາອົງການຈັດຕັ້ງ ມະຫາຊົນ ໃນຂອບເຂດຄວາມຮັບຜິດຊອບ, ເຄື່ອນໄຫວຕາມພາລະບົດບາດ ໜ້າທີ່ ເປັນປົກກະຕິ.

5/- ປັບປຸງແບບແຜນວິທີເຮັດວຽກ. ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ, ສາມັກຄີລະຫວ່າງຄະນະພັກກັບການນໍາໃນກະຊວງ-ອົງການ, ກັບບັນດາອົງການຈັດຕັ້ງມະຫາຊົນ ແລະນໍາພາເຕົ້າໂຮມຄວາມສາມັກຄີ ໃນຖັນແຖວພະນັກງານ ສະມາຊິກພັກໃນທົ່ວອົງຄະນະພັກຂອງຕົນ.

6/- ຕິດຕາມກວດກາປະກອບຄໍາຄິດຄໍາເຫັນຕໍ່ລັດຖະມົນຕີ ຫລືຫົວໜ້າອົງການໃນການວາງທິດທາງແຜນການ, ໂຄງການ ແລະວິທີການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ເຊິ່ງພົວພັນເຖິງຂະແໜງການ, ຕົກລົງກ່ຽວກັບວຽກງານພະນັກງານເຊັ່ນ: ການກໍ່ສ້າງ, ບໍາລຸງ, ຄຸ້ມຄອງ, ຈັດວາງ, ນໍາໃຊ້ພະນັກງານ ແລະປະຕິບັດນະໂຍບາຍຕໍ່ພະນັກງານ ສະມາຊິກພັກພາຍໃນກະຊວງ, ອົງການຂອງຕົນ, ຄຸ້ມຄອງການເງິນຂອງອົງຄະນະພັກຕົນ.

ມາດຕາ 21: ສະເໜີຊຽນເພີ່ມໃສ່ບາງຈຸດດັ່ງນີ້: "...ສໍາລັບກອງປະຊຸມຄັ້ງປະຖົມມະລຶກຂອງຄະນະພັກກະຊວງ-ອົງການໃຫ້ເລືອກຕັ້ງເລຂາ, ຮອງເລຂາ ແລະປະທານກວດກາພັກ.

- " ຄະນະພັກກະຊວງ, ອົງການ ດໍາເນີນກອງປະຊຸມເດືອນລະເທື່ອ, ເມື່ອມີວຽກງານຈໍາເປັນກໍຮຽກໂຮມກອງປະຊຸມວິສາມັນໄດ້.

- ຄະນະປະຈໍາພັກແຂວງ - ກໍາແພງນະຄອນ ແລະເມືອງ ດໍາເນີນກອງປະຊຸມເດືອນລະເທື່ອ ຖ້າມີວຽກງານຈໍາເປັນກໍ່ປະຊຸມວິສາມັນໄດ້ "

## ໝວດທີ ຫ້າ.

## ການຈັດຕັ້ງຂອງພັກຢູ່ຂັ້ນສູນກາງ.

ມາດຕາ 24: ກ່ຽວກັບໜ້າທີ່ຂອງຄະນະບໍລິຫານງານສູນກາງພັກສະເໜີເພີ່ມເຕີມບາງຈຸດດັ່ງນີ້:

"... ຕັດສິນບັນຫາສໍາຄັນທີ່ມີລັກສະນະຍຸດທະສາດທັງພາຍໃນ ແລະຕ່າງປະເທດ, ວຽກງານກໍ່ສ້າງພັກແລະວຽກງານມະຫາຊົນ ".

ມາດຕາ 25: ສະເໜີດັດແປງບາງຈຸດດັ່ງນີ້:

ປະທານຄະນະບໍລິຫານງານສູນກາງພັກ ຕາງໜ້າກົມການເມືອງສູນກາງພັກ ຊີ້ນໍາ ນໍາພາແກ້ໄຂວຽກງານທີ່ຂຶ້ນກັບຄວາມຮັບຜິດຊອບ ຂອງຄະນະບໍລິຫານງານສູນກາງພັກ ແລະກົມການເມືອງ, ຊີ້ນໍາ ແລະກວດກາບັນດາວຽກງານຂອງອົງການຈັດຕັ້ງພັກ ໃນທຸກຂະແໜງການ ແລະທ້ອງຖິ່ນ, ຊີ້ນໍາການປະສານສົມທົບລະຫວ່າງບັນດາອົງການຈັດຕັ້ງໃນລະບົບການເມືອງ ໃນການຈັດຕັ້ງປະຕິບັດມະຕິ, ຄໍາສັ່ງ, ຄໍາແນະນໍາ ຂອງກົມການເມືອງໃນແຕ່ລະໄລຍະ.

ກົມການເມືອງສູນກາງພັກ ແຕ່ງຕັ້ງຜູ່ປະຈໍາການຂອງຕົນເພື່ອຊ່ວຍປະທານຄະນະບໍລິຫານງານສູນກາງພັກ ແກ້ໄຂວຽກງານປະຈໍາວັນຕາມການມອບໝາຍ ຂອງປະທານຄະນະບໍລິຫານງານສູນກາງພັກ.

## ໝວດທີ ຫົກ.

## ພັກນຳພາລັດ ແລະບັນດາອົງການຈັດຕັ້ງມະຫາຊົນ.

ມາດຕາ 27: ກ່ຽວກັບການນຳພາຂອງພັກຢູ່ໃນອົງການລັດ ແລະອົງການຈັດຕັ້ງມະຫາຊົນ ໄດ້ດັດແປງຄືນໃຫມ່ບາງຈຸດເພື່ອໃຫ້ຊັດເຈນຈະແຈ້ງກວ່າເກົ່າດັ່ງນີ້ :

" ກວດກາການເຄື່ອນໄຫວປະຕິບັດແນວທາງແຜນນະໂຍບາຍຂອງພັກ "

"... ເສີມຂະຫຍາຍຄວາມສັກສິດໃນການຄຸ້ມຄອງທຸກດ້ານຂອງລັດຕາມລັດຖະທຳມະນູນ..."

"... ເພື່ອເສີມຂະຫຍາຍດ້ານຕັ້ງໜ້າ ແລະດັດແປງບັນດາຈຸດອ່ອນ, ຂໍ້ຄົງຄ້າງ ແລະປະກົດການຫຍໍ້ທໍ້ຕ່າງໆ ໃຫ້ທັນເວລາ ..."

\+ ພັກມີການຈັດຕັ້ງຂອງຕົນໃນບັນດາອົງການລັດ ແລະຢູ່ໃນຄະນະບໍລິຫານງານຂອງບັນດາອົງການຈັດຕັ້ງມະຫາຊົນ ເພື່ອຮັບປະກັນການນຳພາຂອງພັກຢູ່ໃນອົງການເຫລົ່ານັ້ນ. ການຈັດຕັ້ງການເຄື່ອນໄຫວ ແລະສາຍພົວພັນຂອງພັກກັບອົງການລັດ ແລະອົງການມະຫາຊົນຢູ່ຂັ້ນຕ່າງໆ ແມ່ນກົມການເມືອງສູນກາງພັກເປັນຜູ່ກຳນົດ.

## ໝວດທີ ເຈັດ.

## ພັກນຳພາກອງທັບປະຊາຊົນ ແລະ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ.

ມາດຕາ 31: ໃນມາດຕານີ້ສະເຫນີດັດແປງ ແລະເພີ່ມເຕີມດັ່ງນີ້:

" ຄະນະພັກກະຊວງປ້ອງກັນປະເທດ, ກະຊວງພາຍໃນ ເຄື່ອນໄຫວຢູ່ພາຍໃຕ້ການຊີ້ນຳໂດຍກົງຂອງກົມການເມືອງສູນກາງພັກ ແລະຄະນະກຳມະການປ້ອງກັນຊາດປ້ອງກັນຄວາມສະຫງົບຂັ້ນສູນກາງ. ກົມໃຫຍ່ການເມືອງກອງທັບ ແລະກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບເປັນເສນາທິການໃຫ້ຄະນະພັກກະຊວງປ້ອງກັນປະເທດ, ກະຊວງພາຍໃນ ກ່ຽວກັບວຽກງານການເມືອງແນວຄິດ ວຽກງານຈັດຕັ້ງກໍ່ສ້າງພັກ - ພະນັກງານ,

ວຽກງານນະໂຍບາຍ ແລະວຽກງານມະຫາຊົນຂອງພັກ ໃນກຳລັງປ້ອງກັນຊາດ ແລະປ້ອງກັນຄວາມສະຫງົບ. "

ການກຳນົດຄືດັ່ງກ່າວນີ້ ກໍເພື່ອໃຫ້ສອດຄ່ອງກັບບົດບາດການຈັດຕັ້ງພັກຢູ່ໃນກຳລັງປະກອບອາວຸດເພື່ອເຮັດໃຫ້ການນຳພາ ຂອງພັກຖືກຕ້ອງຕາມຫລັກການໂດຍກົງ, ລວມສູນເປັນເອກະພາບ ແລະຮອບດ້ານແທດເຖິງຕົວຈິງກວ່າເກົ່າ.

## ໝວດທີ ເກົ້າ.

### ຄະນະກຳມະການກວດກາພັກ.

ມາດຕາ 33: ສະເໜີດັດແປງບາງຈຸດດັ່ງນີ້: " ຄະນະບໍລິຫານງານສູນກາງພັກ, ຄະນະພັກກະຊວງ, ອົງການ, ຄະນະບໍລິຫານງານພັກແຂວງ, ກຳແພງນະຄອນ ແລະເມືອງແຕ່ງຕັ້ງຮອງປະທານ ແລະກຳມະການກວດກາຂັ້ນຂອງຕົນຂຶ້ນ ".

## ໝວດທີ ສິບ.

### ລະບຽບວິໄນຂອງພັກ.

ມາດຕາ 35: ສະເໜີດັດແປງບາງຈຸດຕື່ມດັ່ງນີ້ :

" ການຕິກລົງປະຕິບັດວິໄນນັບແຕ່ປົດຕຳແໜ່ງຂຶ້ນໄປ ຕ້ອງຂຽນເຂົ້າໃສ່ຊີວະປະຫວັດຂອງສະມາຊິກພັກຜູ້ນັ້ນຕະຫລອດໄປ ... "

## ໝວດທີ ສິບເອັດ.

### ການເງິນຂອງພັກ.

ມາດຕາ 37: ກ່ຽວກັບການເສຍເງິນສະຕິພັກ ຂອງສະມາຊິກພັກ ໄດ້ກຳນົດເປັນສອງປະເພດລະອຽດດັ່ງນີ້:

- ສຳລັບສະມາຊິກພັກ ຜູ້ທີ່ມີເງິນເດືອນແມ່ນເສຍເອກະພາບກັນເສຍ 200 ກີບຕໍ່ເດືອນ.

- ສຳລັບຜູ້ບໍ່ມີເງິນເດືອນແມ່ນເສຍເອກະພາບກັນ 50 ກີບຕໍ່ເດືອນ ການມອບເງິນສະຕິໃຫ້ຄະນະພັກຂັ້ນເທິງແມ່ນ 1/2 ຂອງຈຳນວນເງິນທັງໝົດ.

ກ່ຽວກັບການສະເຫນີດັດແປງກົດລະບຽບພັກສະບັບນີ້ ນອກຈາກໄດ້ສະເຫນີດັດແປງເນື້ອໃນສຳຄັນໃນແຕ່ລະມາດຕາແລ້ວ ຍັງໄດ້ປັບປຸງ, ດັດແປງສັບ ສຳນວນ ຈຳນວນຫນຶ່ງໃຫ້ຈະແຈ້ງ: ເຂົ້າໃຈງ່າຍ ແລະສອດຄ່ອງກວ່າເກົ່າ.

ສະຫາຍທີ່ຮັກແພງທັງຫລາຍ,

ເນື້ອໃນທັງຫມົດ ກ່ຽວກັບການດັດແປງກົດລະບຽບພັກ ທີ່ຂ້າພະເຈົ້າໄດ້ສະເຫນີມານັ້ນ ແມ່ນອີງໃສ່ສະພາບການຕົວຈິງ ແລະ ຫນ້າທີ່ການເມືອງຂອງພັກເຮົາ.

ດັ່ງນັ້ນ, ຂ້າພະເຈົ້າ ສະເຫນີບັນດາຜູ່ແທນ ຈົ່ງໄດ້ສຸມສະຕິປັນຍາ ແລະ ເຊີດຊູຄວາມຮັບຜິດຊອບ ຂອງຕົນໃຫ້ສູງ ເພື່ອຄົ້ນຄ້ວາພິຈາລະນາໃຫ້ເລິກເຊິ່ງ ແລະຮັບຮອງເອົາກົດລະບຽບສະບັບດັດແປງໃຫມ່ນີ້, ເພາະວ່າກົດລະບຽບ ຂອງພັກແມ່ນເອກະສານພື້ນຖານສຳລັບການປັບປຸງກໍ່ສ້າງພັກໃຫ້ເຂັ້ມແຂງທາງດ້ານການເມືອງ, ແນວຄິດ ແລະການຈັດຕັ້ງ, ເພື່ອ ໃຫ້ພັກເຮັດຫລ້ອນບົດບາດເປັນແກນນຳໃນລະບົບການເມືອງ ຂອງລະບອບປະຊາທິປະໄຕປະຊາຊົນຢູ່ປະເທດເຮົາ ແລະ ກ້າວຂຶ້ນຕາມອຸດົມຄະຕິຂອງພັກທີ່ໄດ້ກຳນົດໄວ້ຢ່າງມີໄຊ.

**ຂໍຂອບໃຈ**



ຄຳປາໄສອວຍພອນ

ຂອງສະຫາຍເລຂາທິການໃຫຍ່ໂດເມືອຍ

ຫົວຫນ້າຄະນະຜູ້ແທນພັກກອມມູນິດຫວຽດນາມ

ກ່າວຕໍ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ

ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ

ວຽງຈັນ ວັນທີ 18-03-1996

---

ຮຽນ ສະຫາຍປະທານ ຄຳໄຕ ສີພັນດອນ ທີ່ເຄົາລົບຮັກ,
ຮຽນ ຄະນະປະທານກອງປະຊຸມໃຫຍ່,
ຮຽນ ບັນດາຜູ້ແທນກອງປະຊຸມໃຫຍ່,
ຮຽນ ບັນດາຄະນະຜູ້ແທນສາກົນ,

ພວກຂ້າພະເຈົ້າ ມີຄວາມປິຕິຊົມຊື່ນ ເປັນຢ່າງຍິ່ງ ທີ່ໄດ້ຕາງຫນ້າ ໃຫ້ພັກກອມມູຍນິດ ຫວຽດນາມ ເຂົ້າຮ່ວມ ກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກປະຊາຊົນ ປະຕິວັດລາວ.

ໃນໂອກາດອັນສະຫງ່າລາສີນີ້ ພວກຂ້າພະເຈົ້າ ຂໍນຳເອົາຄວາມຄຳນັບອວຍພອນອັນອົບອຸ່ນ ມາຍັງ ກອງປະຊຸມໃຫຍ່ ກໍຄືພັກປະຊາຊົນປະຕິວັດລາວ ແລະ ປະຊາຊົນລາວອ້າຍນ້ອງຢ່າງສຸດອົກສຸດໃຈ.

ກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ ແມ່ນເຫດການທີ່ມີຄວາມຫມາຍສຳຄັນເປັນພິເສດ ໃນຊີວິດການເມືອງ ແລະ ສັງຄົມ ຂອງປະເທດລາວ ເຊື່ອແນ່ນອນວ່າກອງປະຊຸມໃຫຍ່ຄັ້ງນີ້ ຈະສ້າງບາດກ້າວຂະຫຍາຍຕົວອັນເຂັ້ມແຂງ ໃນພາລະກິດປ່ຽນແປງໃຫມ່, ສືບຕໍ່ສ້າງ ແລະຂະຫຍາຍລະບອບປະຊາທິປະໄຕ ປະຊາຊົນ, ສ້າງບັນດາປະຖົມປັດໃຈ ເພື່ອນຳເອົາປະເທດຊາດກ້າວຂຶ້ນສັງຄົມນິຍົມ ຢ່າງຫນັກແຫນ້ນ.

ຮຽນບັນດາສະຫາຍ,

ຄະນະຜູ່ແທນພັກກອມມູນິດຫວຽດນາມໄດ້ຕິດຕາມຮັບຟັງຢ່າງຈິດຈໍ່ບົດລາຍງານການເມືອງ ຂອງຄະນະ ບໍລິຫານງານ ສູນກາງພັກ ປະຊາຊົນປະຕິວັດລາວ ສະໄໝທີ V ສະເໜີໂດຍ ສະຫາຍ ຄຳໄຕ ສີພັນດອນ ປະທານ ຄະນະບໍລິຫານງານສູນກາງພັກ, ນັກຮົບຜູ້ກ້າແກ່ນ, ຜູ້ນຳທີ່ດີເດັ່ນ ຂອງພັກ ແລະ ຂອງປະຊາຊົນລາວ. ບົດລາຍງານດັ່ງກ່າວ ແມ່ນເອກະສານສະຫລຸບ ຈາກພຶດຕິກຳ ສະແດງໃຫ້ເຫັນ ຈິດໃຈເອກະລາດເປັນເຈົ້າຕົນເອງ, ເພິ່ງຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ວາງແນວທາງອັນຖືກຕ້ອງ ເພື່ອສືບຕໍ່ປະຕິບັດອຸດົມການ, ຈຸດໝາຍ ແລະ ຄວາມມຸ່ງມາດປາຖະນາ ຂອງປະຊາຊົນລາວ ບັນດາເຜົ່າ.

ໃນ 10 ປີທີ່ຜ່ານມາ, ພາຍໃຕ້ການນຳພາ ອັນສະຫລາດສ່ອງໃສ ຂອງພັກປະຊາຊົນປະຕິວັດລາວ, ປະຊາຊົນລາວ ເຜົ່າຕ່າງໆ ໄດ້ຜ່ານຜ່າຄວາມຫຍຸ້ງຍາກ ແລະສິ່ງທ້າທາຍນານາປະການ ເພື່ອດຳເນີນພາລະກິດປ່ຽນແປງໃໝ່ ແລະສາມາດບັນລຸຜົນສຳເລັດອັນໃຫຍ່ຫລວງ ແລະສຳຄັນຫລາຍປະການ.

- ເສດຖະກິດເຕີບໂຕຢ່າງຕໍ່ເນື່ອງ ເປັນຕົ້ນແມ່ນໃນ 5 ປີ ທີ່ຜ່ານມາ, ໂດຍສົມທົບແໜ້ນກັບການແກ້ໄຂບັນຫາສັງຄົມຕ່າງໆ ມີສະຖຽນລະພາບທາງການເມືອງ, ຊີວິດການເປັນຢູ່ ຂອງປະຊາຊົນລາວ ບັນດາເຜົ່າ ໄດ້ຮັບການປັບປຸງດີຂຶ້ນຢ່າງຈະແຈ້ງ.

- ລະບົບການເມືອງໄດ້ຮັບການບູລະນະ ເປັນກ້າວໆ.

- ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ຮັບການປັບປຸງ, ປົກປັກຮັກສາໝາກຜົນ ຂອງການປະຕິວັດໄວ້ໄດ້, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ມີການຮັບປະກັນ.

- ການພົວພັນກັບຕ່າງປະເທດ ໄດ້ເປີດກວ້າງ, ບົດບາດ ຂອງສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ຢູ່ໃນເວທີສາກົນ ນັບມື້ນັບໄດ້ຮັບການເຊີດຊູຂຶ້ນ.

ພັກກອມມູນິດຫວຽດນາມ ແລະ ປະຊາຊົນຫວຽດນາມຂໍຄຳນັບຊົມເຊີຍຜົນສຳເລັດທີ່ພັກ ແລະ ປະຊາຊົນລາວອ້າຍນ້ອງຍາດມາໄດ້ ອັນໄດ້ເຮັດໃຫ້ໃບໜ້າຂອງປະເທດລ້ານຊ້າງມີຄວາມສວຍສົດງົດງາມຍິ່ງໆ ຂຶ້ນ, ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນພາລະກິດ

ສັນຕິພາບ, ການຮ່ວມມື ແລະການພັດທະນາຢູ່ອາຊີອາຄະເນ ແລະ ພາກພື້ນອາຊີປາຊີຟິກ ນັ້ນຢ່າງສຸດອົກສຸດໃຈ !

ບົດລາຍງານການເມືອງ ທີ່ສະເໜີຕໍ່ກອງປະຊຸມໃຫຍ່ຄັ້ງນີ້ ຍັງໄດ້ວາງຈຸດໝາຍ, ທິດທາງ, ໜ້າທີ່, ບາດກ້າວເດີນແຫ່ງການປ່ຽນແປງໃໝ່ ຢູ່ລາວ ແຕ່ນີ້ຮອດປີ 2000 ຊຶ່ງສະແດງໃຫ້ເຫັນຄວາມ ປະດິດສ້າງຂອງການໝູນໃຊ້ລັດທິມາກ-ເລນິນ ເຂົ້າໃນສະພາບການຕົວຈິງ ຂອງລາວ ຢ່າງຖືກຕ້ອງ ສອດຄ່ອງ. ພ້ອມກັນນັ້ນກໍ່ເປັນການ ເພີ່ມທະວີການນຳພາ ຂອງພັກປະຊາຊົນປະຕິວັດລາວ, ປັບປຸງກໍ່ສ້າງ ກຳລັງສາມັກຄີ ເປັນເອກະພາບທົ່ວປວງຊົນລາວບັນດາເຜົ່າ, ເຊີດຊູຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ສົມທົບກຳລັງ ແຮງຂອງຊາດ ກັບກຳລັງແຮງຂອງຍຸກສະໄໝ. ສິ່ງດັ່ງກ່າວໄດ້ໄຂຊ່ອງທາງອັນສະຫວ່າງສະໄຫວ ໃຫ້ແກ່ສາທາລະນະລັດປະຊາ ທິປະໄຕ ປະຊາຊົນລາວ ກ້າວສູ່ ສະຕະວັດທີ 21, ທັງເສີມຂະຫຍາຍຫົວຄິດປະດິດສ້າງຂອງປະຊາຊົນ ຢ່າງແຂງແຮງ ໄປຄຽງຄູ່ກັບການເປີດກວ້າງ ການຮ່ວມມືກັບສາກົນ, ຂຸດຄົ້ນ ທຸກຄວາມອາດສາມາດບົ່ມຊ້ອນຂອງປະເທດລາວ ຢ່າງມີປະສິດທິຜົນ.

ໃນໂອກາດນີ້, ຂ້າພະເຈົ້າ ຂໍສະແດງຄວາມຂອບອົກຂອບໃຈ ຢ່າງຈິງໃຈ ແລະ ຕີລາຄາສູງ ຕໍ່ແຜນນະໂຍບາຍ ຂອງກອງປະຊຸມໃຫຍ່ ວ່າດ້ວຍການເພີ່ມທະວີຄວາມສາມັກຄີພິເສດ ແລະຊຸກຍູ້ການພົວພັນຮ່ວມມືຮອບດ້ານ ລະຫວ່າງສອງພັກ ແລະປະຊາຊົນສອງຊາດ ຫວຽດນາມ-ລາວອ້າຍນ້ອງ, ສືບຕໍ່ ປ່ຽນແປງໃໝ່ ແລະ ຍົກປະສິດທິຜົນຂອງການ ຮ່ວມມືດັ່ງກ່າວໃຫ້ສູງຂຶ້ນ ຢ່າງບໍ່ຢຸດຢັ້ງ.

ຮຽນ ບັດດາສະຫາຍ,

ປະຈຸບັນນີ້ ພວກຂ້າພະເຈົ້າ ພວມຕັ້ງໜ້າຫ້າງທາກະກຽມ ໃຫ້ແກ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ VIII ຂອງພັກກອມມູນິດ ຫວຽດນາມ ເພື່ອສະຫລຸບບົດຮຽນໃນ 10 ປີ ແຫ່ງການປ່ຽນແປງໃໝ່, ເພີ່ມເຕີມ ແລະບູລະນະ ແນວທາງ ປ່ຽນແປງໃໝ່ ໃຫ້ບໍລິບູນ, ພ້ອມທັງກຳນົດທິດທາງ, ໜ້າທີ່ແຜນພັດທະນາ ເສດຖະກິດ - ສັງຄົມໃນ 5 ປີ (1996-2000) ແລະ ຈຸດໝາຍສູ້ຊົນ ຮອດປີ 2020. ການປ່ຽນແປງໃໝ່ໃນໄລຍະ 10 ປີ ຜ່ານມາ ຫວຽດນາມ ສາມາດບັນລຸຜົນສຳເລັດອັນໃຫຍ່ຫລວງ ທີ່ມີ

ຄວາມໝາຍສຳຄັນຍິ່ງ. ໜ້າທີ່ ທີ່ກອງປະຊຸມໃຫຍ່ຄັ້ງທີ VII ຂອງພັກກອມມູນິດຫວຽດນາມ ວາງອອກ ສຳລັບ 5 ປີ (1991-1995) ໄດ້ຮັບການປະຕິບັດ ສຳເລັດໂດຍພື້ນຖານ. ປະເທດຊາດ ຂອງພວກຂ້າພະເຈົ້າ ໄດ້ຫລຸດພົ້ນອອກຈາກວິກິດການ ທາງດ້ານ ເສດຖະກິດ-ສັງຄົມ, ເຖິງວ່າຍັງມີບາງດ້ານ ບໍ່ທັນໄດ້ຮັບການປັບປຸງຢ່າງໜັກແໜ້ນ. ໜ້າທີ່ ທີ່ວາງອອກໃນຍ່ານທາງທຳອິດ ແຫ່ງໄລຍະຂ້າມຜ່ານ ແມ່ນການກະກຽມປະຖົມປັດໃຈ ໃຫ້ແກ່ການຫັນເປັນ ອຸດສາຫະກຳ ນັ້ນກໍໄດ້ຮັບການປະຕິບັດສຳເລັດໂດຍພື້ນຖານ, ສາມາດສ້າງຖ່ວງທ່າ ແລະກຳລັງແຮງ ເພື່ອນຳເອົາ ປະເທດຊາດໄປສູ່ໄລຍະຂະຫຍາຍຕົວໃໝ່, ຊຶ່ງໄດ້ແກ່ໄລຍະຍູ້ການຫັນເປັນອຸດສາຫະກຳ, ທັນເປັນທັນສະໄໝຢ່າງແຂງແຮງ, ແນໃສ່ເຮັດໃຫ້ປະເທດຫວຽດນາມກາຍເປັນປະເທດ ອຸດສາຫະກຳ ໃນສາມ- ສີ່ ທົດສະວັດ ຂ້າງໜ້ານີ້. ໜ້າທີ່ຂອງທົ່ວພັກ, ທົ່ວປວງຊົນພວກຂ້າພະເຈົ້າ ແຕ່ນີ້ຮອດປີ 2000 ແມ່ນຍູ້ພາລະກິດປ່ຽນແປງໃໝ່ ຢ່າງຮອບດ້ານ ແລະຄົບຊຸດຢ່າງແຂງແຮງ, ສືບຕໍ່ຂະຫຍາຍ ເສດຖະກິດຫລາຍພາກສ່ວນ, ເຄື່ອນໄຫວຕາມກົນໄກຕະຫລາດ ທີ່ມີການຄຸ້ມຄອງ ຂອງລັດ ແລະ ຕາມທິດ ສັງຄົມນິຍົມ ແນໃສ່ບັນລຸຈຸດໝາຍເຮັດໃຫ້ປະຊາຊົນຮັ່ງມີ, ປະເທດຊາດເຂັ້ມແຂງ, ສັງຄົມມີຄວາມ ຍຸດຕິທຳ, ສີວິໄລ.

ພວກຂ້າພະເຈົ້າ ຈະສືບຕໍ່ປະຕິບັດນະໂຍບາຍ ການຕ່າງປະເທດ ເອກະລາດ, ເປັນເຈົ້າຕົນເອງ, ເປີດກວ້າງ ການພົວພັນຕາມຫລາຍທິດ, ຫລາຍຮູບແບບ ແລະ ຫລາຍຝ່າຍ. ຈຸດໝາຍນຳໜ້າ ໃນ ນະໂຍບາຍ ການຕ່າງປະເທດ ຂອງພັກ ແລະ ລັດພວກຂ້າພະເຈົ້າແມ່ນເພີ່ມທະວີການພົວພັນມິດຕະພາບ ແລະ ການຮ່ວມມືຫລາຍດ້ານ ກັບປະເທດບ້ານໃກ້ເຮືອນຄຽງທີ່ມີຊາຍແດນຕິດຈອດກັນ ກໍຄືກັບປະເທດອື່ນໆ ຢູ່ພາກພື້ນ, ພ້ອມກັນນັ້ນ, ກໍເປີດກວ້າງການພົວພັນຮ່ວມມື ກັບທຸກໆ ປະເທດ ແລະ ໃຈກາງເສດຖະກິດ-ການເມືອງ ຢູ່ໃນໂລກ; ເຂົ້າຮ່ວມ ໃນກົນໄກຮ່ວມມືແບບຫລາຍຝ່າຍ ທີ່ເໝາະສົມຢ່າງຕັ້ງໜ້າ ບົນພື້ນຖານ ບັນດາຫລັກການ ເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ ແລະ ບໍ່ແຊກແຊງ ເຂົ້າກິດຈະການພາຍໃນ ຂອງກັນ ແລະ ກັນ, ຮ່ວມມືແບບສະເໝີພາບ, ຕ່າງຝ່າຍຕ່າງ ມີຜົນປະໂຫຍດ.

ພັກກອມມູນິດຫວຽດນາມ ສືບຕໍ່ເພີ່ມທະວີຄວາມສາມັກຄີ ແລະ ການພົວພັນຮ່ວມມືກັບບັນດາ ພັກກອມມູນິດ ແລະ ກຳມະກອນ, ກັບບັນດາພັກ, ບັນດາຂະບວນການ

ການເມືອງ ທີ່ກ້າວໜ້າ ແລະ ປະຊາຊົນຊາວໂລກ ທີ່ພວມຕໍ່ສູ້ ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າ ທາງສັງຄົມ. ພ້ອມກັນນັ້ນ ພັກພວກຂ້າພະເຈົ້າ ກໍສືບຕໍ່ຂະຫຍາຍການພົວພັນ ກັບພັກກໍາອໍານາດຕ່າງໆ ແນໃສ່ ຊຸກຍູ້ການພົວພັນດ້ານລັດ ແລະ ການພົວພັນຕ່າງປະເທດ ຂອງມະຫາຊົນ, ປະກອບສ່ວນເຂົ້າໃນການ ເພີ່ມທະວີມິດຕະພາບ ແລະ ຄວາມເຂົ້າອົກເຂົ້າໃຈ ຊຶ່ງກັນ ແລະ ກັນ ລະຫວ່າງປະຊາຊາດໃນໂລກ.

ຮຽນບັນດາສະຫາຍ,

ພັກກອມມູນິດຫວຽດນາມ ແລະ ພັກປະຊາຊົນປະຕິວັດລາວ ມີຕົ້ນກໍາເນີດ ແລະ ມີອຸດົມການອັນດຽວກັນ, ສະໜິດຕິດພັນກັນແໜ້ນແຟ້ນ ດ້ວຍສາຍພົວພັນ ມິດຕະພາບ, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ຖານອ້າຍນ້ອງ, ການພົວພັນຫວຽດນາມ-ລາວ ຊຶ່ງປະທານໂຮ່ຈີມິນ ທີ່ຍິ່ງໃຫຍ່ ແລະ ປະທານ ໄກສອນ ພົມວິຫານ ທີ່ເຄົາລົບຮັກ ໄດ້ຮ່ວມກັບພັກທັງສອງ ຂອງພວກເຮົາ ທຸ້ມເທື່ອ ເຫແຮງ, ເພີ່ມພູນຄູນສ້າງ ໂດຍຜ່ານການເວລາ, ຜ່ານການທົດສອບນັ້ນ ກໍຍິ່ງໝັ້ນຄົງຂະນົງແກ່ນຂຶ້ນ ເລື້ອຍໆ. ນັ້ນແມ່ນ ສາຍພົວພັນສາກົນທີ່ເປັນແບບຢ່າງ ອັນບໍລິສຸດຜຸດຜ່ອງ, ປອດໃສ ດັ່ງປະທານໂຮ່ຈີມິນ ເວົ້າວ່າ:

" ສອງຊາດລາວ-ຫວຽດໄດ້ ຝັງຄວາມຮັກຢູ່ໃນໃຈ ຮົ່ງຮ່າ ທັງ ແມ່ຂອງ ບໍ່ເລີກປຸນປານໄດ້ "

ຫ້າມຈຳໜ່າຍ

ຈາກສ່ວນເລິກຂອງຫົວໃຈ, ຊາວຫວຽດນາມຮຸ່ນສືບຮຸ່ນ ໃນວັນນີ້ ແລະ ວັນໜ້າ ຈະທະນຸຖະໜອມ ສາຍພົວພັນອັນໃກ້ຊິດສະໜິດສະໜົມ ອັນມີຄວາມໝາຍຍຸດທະສາດ ເຊິ່ງເປັນນໍລະດົກ ອັນລໍ້າຄ່າ ແລະ ເປັນມູນເຊື້ອ ອັນດີງາມນັ້ນ ໃຫ້ເປັນກໍາລັງແຮງ ອັນໃຫຍ່ຫລວງຂອງສອງພັກ, ສອງຊາດ ຫວຽດນາມ- ລາວພວກເຮົາ. ພວກຂ້າພະເຈົ້າ ຈະພະຍາຍາມສຸດຄວາມສາມາດຂອງຕົນ ເພື່ອປົກປັກຮັກສາ ແລະ ຂະຫຍາຍສາຍພົວພັນນັ້ນ ຢ່າງບໍ່ຢຸດຢັ້ງ, ຈະອອກແຮງ ປ່ຽນແປງໃໝ່ເນື້ອໃນ, ແບບແຜນ ກົດກົນໄກ ຮ່ວມມືລະຫວ່າງ ຫວຽດນາມ-ລາວ ໃນທຸກຂົງເຂດ ໂດຍສອດຄ່ອງກັບສະພາບການ ໃນໄລຍະໃໝ່ ແນໃສ່ບັນລຸປະສິດທິຜົນຕົວຈິງ ເພື່ອຜົນປະໂຫຍດ ຂອງປະຊາຊົນ ສອງປະເທດ,

ເພື່ອ ສັນຕິພາບ, ສະຖຽນລະພາບ ແລະການພັດທະນາ ຢູ່ອາຊີອາຄະເນ ແລະ ພາກພື້ນ ອາຊີ- ປາຊີຟິກ.

ນະເວທີອັນມີກຽດສະຫງ່າ ຂອງກອງປະຊຸມໃຫຍ່ ມື້ນີ້ ອີກເທື່ອໜຶ່ງ ຂ້າພະເຈົ້າ ຂໍຕາງໜ້າພັກ, ລັດ ແລະ ປະຊາຊົນຫວຽດນາມ, ສະແດງຄວາມຮູ້ບຸນຄຸນ ອັນເລິກເຊິ່ງ ຕໍ່ພັກ, ລັດ ແລະປະຊາຊົນ ລາວບັນດາເຜົ່າ ທີ່ໄດ້ມີມິດຈິດ ມິດໃຈ ສາມັກຄີ ແລະ ໃຫ້ຄວາມ ຊ່ວຍເຫລືອອັນໃຫຍ່ຫລວງ ຕໍ່ການປະຕິວັດ ຫວຽດນາມ ໃນຫລາຍທົດສະວັດແຫ່ງການ ຕໍ່ສູ້ກອບກູ້ເອກະລາດ, ທ້ອນໂຮມປະເທດຊາດ ເປັນເອກະພາບ ໃນເມື່ອກ່ອນ ກໍຄືໃນພາ ລະກິດປ່ຽນແປງໃໝ່, ສ້າງສາ ແລະ ປົກປັກຮັກສາ ປະເທດຊາດ ຂອງພວກຂ້າພະ ເຈົ້າໃນປະຈຸບັນ.

ຮຽນບັນດາສະຫາຍ,

ພວກຂ້າພະເຈົ້າ ມີຄວາມເຊື່ອໝັ້ນຢ່າງເລິກເຊິ່ງວ່າ ມະຕິກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກ ປະຊາຊົນປະຕິວັດລາວ ຈະເປັນແສງສະຫວ່າງເຍືອງທາງ ໃຫ້ປະຊາຊົນ ລາວບັນດາເຜົ່າ ສືບຕໍ່ກ້າວຂຶ້ນ ຢ່າງແຂງແຮງ, ຍາດເອົາໄຊຊະນະ ທີ່ໃຫຍ່ຫລວງກວ່າ ນີ້ອີກ ໃນພາລະກິດປ່ຽນແປງໃໝ່, ກໍຄືໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະ ນາປະເທດຕົນ.

ດ້ວຍມິດຈິດມິດໃຈ ຖານສະຫາຍອ້າຍນ້ອງ ອັນສະໜິດສະໜົມ, ຂ້າພະເຈົ້າ ຂໍອວຍພອນໃຫ້ກອງປະຊຸມໃຫຍ່ຄັ້ງທີ **VI** ຂອງພັກປະຊາຊົນປະຕິວັດລາວ ຈົ່ງສໍາເລັດຜົນ ຢ່າງຈົບງາມ.

- ພັກປະຊາຊົນປະຕິວັດລາວ ທີ່ມີກຽດສະຫງ່າໝັ້ນຍືນ !
- ນ້ຳໃຈມິດຕະພາບ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງ ສອງພັກ ແລະ ປະຊາຊົນ ສອງຊາດ ຫວຽດນາມ - ລາວ ຈົ່ງໝັ້ນຄົງຂະໜົງແກ່ນ ຕະ ຫລອດການລະນານ !

---




ຄຳປາໄສ ອວຍພອນ

ຂອງ ສະຫາຍ ອຸນຈາປາວ

ກຳມະການສຳຮອງກົມການເມືອງ,

ເລຂາໃນຄະນະເລຂາທິການສູນກາງພັກ

ຫົວໜ້າຄະນະຜູ່ແທນ ພັກກອມມູນິດຈີນ

ຕໍ່ກອງປະຊຸມໃຫຍ່ຄັ້ງທີ VI

ຂອງພັກປະຊາຊົນປະຕິວັດລາວ

*********************

ຮຽນ ຄະນະປະທານກອງປະຊຸມໃຫຍ່ຜູ່ແທນທົ່ວປະເທດ
ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ ທີ່ເຄົາລົບ,

ຮຽນ ບັນດາຜູ່ແທນທີ່ເຄົາລົບ,

ຮຽນ ບັນດາສະຫາຍ ແລະ ເພື່ອນມິດ,

ຂ້າພະເຈົ້າໄດ້ຮັບການມອບໝາຍ ຈາກຄະນະບໍລິຫານງານສູນກາງພັກກອມມູນິດຈີນ ນຳພາຄະນະຜູ້ແທນ ພັກກອມມູນິດຈີນ ເດີນທາງມາເຖິງວຽງຈັນ ນະຄອນຫລວງແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ປະເທດບ້ານໃກ້ເຮືອນຄຽງ ທີ່ມີໄມຕີຈິດຕໍ່ພວກຂ້າພະເຈົ້າ ເພື່ອເຂົ້າຮ່ວມກອງປະຊຸມໃຫຍ່ ຜູ່ແທນທົ່ວປະເທດ ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ. ຂ້າພະເຈົ້າ ຂໍຕາງໜ້າພັກກອມມູນິດຈີນ ນຳເອົາຄຳອວຍພອນອັນອົບອຸ່ນ ມາຍັງກອງປະຊຸມໃຫຍ່ ຜູ່ແທນທົ່ວປະເທດ ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ ແລະ ຜ່ານກອງປະຊຸມໃຫຍ່ ໄປຍັງສະມາຊິກພັກປະຊາຊົນປະຕິວັດລາວ ແລະ ປະຊາຊົນລາວທຸກຖ້ວນໜ້າ.

ພັກປະຊາຊົນປະຕິວັດລາວ ແມ່ນຜູ້ຈັດຕັ້ງ, ນໍາພາ ພາລະກິດປະຕິວັດ ແລະ ການສ້າງສາປະເທດຊາດ ຂອງປະຊາຊົນລາວ. ໂດຍຢູ່ໃຕ້ການນໍາພາ ຂອງພັກປະຊາຊົນປະຕິວັດລາວ, ປະຊາຊົນລາວໄດ້ຜ່ານການຕໍ່ສູ້ອັນຍາກລໍາບາກເປັນເວລາຍາວນານ ແລະ ໄດ້ຮັບໄຊຊະນະອັນຍິ່ງໃຫຍ່ ໃນພາລະກິດປະຕິວັດຊາດ ປະຊາທິປະໄຕ, ອັນໄດ້ນໍາໄປສູ່ການສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ໄຂສັງກາດໃຫມ່ໃນປະຫວັດສາດຂອງຊາດລາວ. ພາຍຫລັງການສະຖາປະນາປະເທດ, ພັກປະຊາຊົນປະຕິວັດລາວ ໄດ້ນໍາພາປະຊາຊົນລາວ ພັດທະນາເສດຖະກິດແຫ່ງຊາດ, ປົກປັກຮັກສາຫມາກຜົນຂອງການປະຕິວັດ. ພາຍຫລັງກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກໃນປີ 1986, ພັກປະຊາຊົນປະຕິວັດລາວ ໄດ້ເລີ່ມຈາກສະພາວະຄວາມເປັນຈິງ ຂອງປະເທດຊາດ ຊອກຄົ້ນເສັ້ນທາງທີ່ເຫມາະສົມໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດ ດ້ວຍການດໍາເນີນພາລະກິດປ່ຽນແປງໃຫມ່ ຢ່າງເປັນລະບົບເປັນກ້າວໆມາ. ໂດຍສະເພາະແມ່ນແຕ່ກອງປະຊຸມໃຫຍ່ຄັ້ງທີ V ຂອງພັກມານີ້, ໃນເງື່ອນໄຂທີ່ສະຖານະການ ຂອງໂລກມີຄວາມສັບສົນ ແລະ ປ່ຽນແປງຫລາຍ, ພັກປະຊາຊົນປະຕິວັດລາວ ໄດ້ຍຶດຫມັ້ນການນໍາພາຂອງພັກ, ຍຶດຫມັ້ນພາລະກິດປ່ຽນແປງໃຫມ່, ໄດ້ປັບປຸງນະໂຍບາຍເປີດກ້ວາງຕໍ່ພາຍໃນ ແລະ ຕ່າງປະເທດຕື່ມອີກ ແລະ ໄດ້ຮັບຜົນສໍາເລັດອັນຈະແຈ້ງ. ພັກກອມມູນິດຈີນ ແລະ ປະຊາຊົນຈີນ ມີຄວາມປິຕິຊົມຊື່ນ ແລະ ຊົມເຊີຍບັນດາຜົນສໍາເລັດ ຂອງພັກປະຊາຊົນປະຕິວັດລາວດັ່ງກ່າວນັ້ນດ້ວຍຄວາມຈິງໃຈ. ພວກຂ້າພະເຈົ້າເຊື່ອວ່າ ຜົນສໍາເລັດຂອງກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ ໃນຄັ້ງນີ້ ຈະເປັນການເຊີດຊູກໍາລັງໃຈ ແລະ ລະດົມຂົນຂວາຍສະມາຊິກພັກທັງຫມົດ ກໍຄືປະຊາຊົນທົ່ວປະເທດ ກ້າວຂຶ້ນຍາດເອົາຜົນສໍາເລັດໃຫມ່ໃຫຍ່ຫລວງກວ່າເກົ່າ ໃນການປັບປຸງລະບອບປະຊາທິປະໄຕປະຊາຊົນ, ເລັ່ງລັດການພັດທະນາເສດຖະກິດ, ນໍາເອົາການປ່ຽນແປງໃຫມ່ ແລະ ການເປີດກວ້າງລົງສູ່ລວງເລິກ.

ຈີນກັບລາວ ມີພູຜາປ່າດົງ ແລະ ແມ່ນໍ້າລໍາເຊຕິດຈອດກັນ, ປະຊາຊົນສອງຊາດມີສາຍພົວພັນມິດຕະພາບ ມາແຕ່ບູຮານນະການ. ໃນການຕໍ່ສູ້ປະຕິວັດອັນຍາວນານໃນເມື່ອກ່ອນນີ້, ສອງພັກ, ສອງປະເທດ ແລະ ປະຊາຊົນສອງຊາດຈີນ-ລາວ ຕ່າງກໍ່ສະຫນັບສະຫນູນກັນ ແລະ ຊ່ວຍເຫລືອຊຶ່ງກັນ ແລະກັນ, ໄດ້ມີສາຍພົວພັນມິດຕະພາບ ອັນເລິກເຊິ່ງ

ນຳກັນ. ພວກຂ້າພະເຈົ້າມີຄວາມປິຕິຊົມຊື່ນ ທີ່ເຫັນວ່າມາໃນໄລຍະໃຫມ່ນີ້, ຜູ່ນຳຂອງສອງພັກ ແລະ ສອງຊາດພວກເຮົາ ໄດ້ສືບຕໍ່ເພີ່ມທະວີການຢ້ຽມຢາມ, ໄດ້ມີການແລກປ່ຽນຄະນະຜູ່ແທນຂັ້ນຕ່າງໆ ແລະ ຖອດຖອນບົດຮຽນໃນທຸກດ້ານນຳກັນເປັນປະຈຳ, ຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທາງດ້ານເສດຖະກິດ, ການຄ້າ, ວິທະຍາສາດ - ເຕັກນິກ ແລະ ວັດທະນະທຳ ບົນພື້ນຖານຄວາມສະເຫມີພາບ ຕ່າງຝ່າຍຕ່າງມີຜົນປະໂຫຍດ, ເຮັດໃຫ້ການພົວພັນອັນເປັນມູນເຊື້ອລະຫວ່າງສອງພັກ, ສອງຊາດ ແລະ ປະຊາຊົນສອງປະເທດຈີນ - ລາວ ມີຄວາມສະຫນິດແຫນ້ນ ແລະຂະຫຍາຍຕົວຂຶ້ນສູ່ລະດັບໃຫມ່. ພວກຂ້າພະເຈົ້າເຊື່ອຫມັ້ນວ່າ ການພົວພັນທີ່ສອງພັກ ຈີນ ແລະ ລາວ ສ້າງຂຶ້ນບົນພື້ນຖານ 4 ຫລັກການຄື : ເຄົາລົບຄວາມເປັນເອກະລາດ ເປັນເຈົ້າຕົນເອງ, ສະເຫມີພາບ, ເຄົາລົບຊຶ່ງກັນ ແລະກັນ ແລະ ບໍ່ແຊກແຊງວຽກງານພາຍໃນຂອງກັນນັ້ນ ຈະໄດ້ຮັບການປັບປຸງ ແລະ ເສີມຂະຫຍາຍ, ການຮ່ວມມືກັນດ້ວຍໄມຕີຈິດມິດຕະພາບຖານບ້ານໃກ້ເຮືອນຄຽງທີ່ດີຕໍ່ກັນລະຫວ່າງຈີນແລະລາວນັ້ນ ຈະຂະຫຍາຍຕົວໃຫຍ່ຫລວງກວ່າເກົ່າ.

ຂໍອວຍພອນຢ່າງຈິງໃຈ ໃຫ້ກອງປະຊຸມໃຫຍ່ຜູ່ແທນທົ່ວປະເທດຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ ບັນລຸຜົນສຳເລັດຢ່າງງົດງາມ.

ມິດຕະພາບ ອັນເປັນມູນເຊື້ອ ຂອງສອງພັກ, ສອງປະເທດ ແລະ ປະຊາຊົນສອງຊາດ ຈີນ ແລະ ລາວ ຈົ່ງຫມັ້ນຄົງຊົ່ວນິລັນດອນ !

ຂໍຂອບໃຈ



**ຄຳປາໄສອວຍພອນ**
**ຂອງສົມເດັດ ເຈຍສີມ**
**ປະທານຄະນະພັກປະຊາຊົນກຳປູເຈຍ**
**ຕໍ່ກອງປະຊຸມໃຫຍ່ ຄັ້ງທີ VI**
**ຂອງພັກປະຊາຊົນປະຕິວັດລາວ**
**ວັນທີ 18 ມີນາ 1996**

-------- - ---------

ຮຽນ ພະນະທ່ານ ຄຳໄຕ ສີພັນດອນ
ປະທານຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ,
ຮຽນ ຄະນະຜູ່ແທນພັກ ຂອງປະເທດອ້າຍນ້ອງ
ຮຽນ ກອງປະຊຸມໃຫຍ່,

ຕາງໜ້າໃຫ້ພັກປະຊາຊົນ ກຳປູເຈຍ, ກ່ອນອື່ນ ຂ້າພະເຈົ້າ ຂໍສະແດງຄວາມປິຕິຍິນດີ ແລະເບີກບານມ່ວນຊື່ນເປັນຢ່າງຍິ່ງ ທີ່ໄດ້ຮັບກຽດເຂົ້າຮ່ວມກອງປະຊຸມໃຫຍ່ ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ, ເຊິ່ງເປັນວັນປະຫວັດສາດ ແລະເຕັມໄປດ້ວຍຄວາມທະນົງໃຈເປັນຢ່າງຍິ່ງ ຂອງປະຊາຊົນລາວພີ່ນ້ອງ. ຂ້າພະເຈົ້າ ຂໍນຳເອົາໄມຕີຈິດມິດຕະພາບ ແລະຄວາມສາມັກຄີອັນດູດດື່ມ ຂອງພະບາດສົມເດັດ ໂນໂຣດົມ ສີຫານຸ ວໍຣະມັນ ພະມະຫາກະສັດ ແຫ່ງລາຊະອານາຈັກກຳປູເຈຍ, ພ້ອມດ້ວຍມະເຫສີ ແລະປະຊາຊົນກຳປູເຈຍ ທຸກຖ້ວນໜ້າ ມາສູ່ກອງປະຊຸມໃຫຍ່ ແລະປະຊາຊົນລາວ ທີ່ໄດ້ກ້າວໄປໜ້າ ແລະກຳລັງກ້າວໄປໜ້າ ດ້ວຍວິລະກຳ ແລະກຽດສັກສີ ອັນສູງສົ່ງໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ ມານະໂອກາດນີ້ດ້ວຍ.

ພະນະທ່ານ ຫນູຮັກ ພູມສະຫວັນ ປະທານປະເທດ ແຫ່ງສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ບົນດິນແດນກຳປູເຈຍ ແລະ ການສະເດັດຢ້ຽມຢາມ ຂອງພະບາດສົມເດັດ ໂນໂຣດົມ ສີຫານຸ ວໍຣະມັນ ພະມະຫາກະສັດ ແຫ່ງລາຊະອານາຈັກກຳປູເຈຍ ບົນດິນແດນລາວ ໃນໄລຍະທີ່ຜ່ານມາ ໄດ້ປັບປຸງພື້ນຖານ ແຫ່ງສາຍສຳພັນ ລະຫວ່າງປະເທດທັງສອງ ໃຫ້ນັບມື້ນັບເຂັ້ມແຂງ ແລະ ຫມັ້ນຄົງຂະນົງແກ່ນຕະຫລອດໄປ.

ພ້ອມດຽວກັນນີ້, ສາຍສຳພັນລະຫວ່າງຄະນະພັກປະຊາຊົນກຳປູເຈຍ ກັບຄະນະພັກ ປະຊາຊົນປະຕິວັດລາວ ກໍຍັງຢືນຢົງຄົງຫມັ້ນ ແລະ ດຳເນີນໄປຢ່າງເຂັ້ມແຂງ ໃນໄລຍະໃຫມ່, ທັງນີ້ກໍ່ຍ້ອນພັກທັງສອງ ເຄີຍມີມູນເຊື້ອຕໍ່ສູ້ຮ່ວມກັນໃນທຸກໄລຍະ ເພື່ອຄວາມເປັນເອກະລາດ, ອິດສະລະພາບ ແລະ ຄວາມສົມບູນພູນສຸກ ຂອງປະຊາຊົນ. ອັນນີ້ເປັນມູນເຊື້ອທີ່ໄດ້ຈາລຶກໄວ້ໃນຫນ້າປະຫວັດສາດ ຂອງພັກທັງສອງ, ບົດຮຽນ ຈາກພຶດຕິກຳໄດ້ສ່ອງແສງໃຫ້ເຫັນວ່າ ເຖິງວ່າຈະຕົກຢູ່ໃນສະພາວະການໃດກໍ່ຕາມ, ຫລືໃນເວລາໃດກໍ່ຕາມ ຖ້າພວກເຮົາຢຶດຫມັ້ນໃນຈິດໃຈສາມັກຄີ ອັນເປັນມູນເຊື້ອ ລະຫວ່າງປະຊາຊົນສອງຊາດ ແລະພັກທັງສອງແລ້ວ ເວລານັ້ນ ປະເທດທັງສອງຂອງພວກເຮົາ ກໍຈະສາມາດຮັກສາສາຍສຳພັນມິດຕະພາບ ແລະ ການຮ່ວມມືອັນລ້ຳຄ່ານີ້ໄວ້ໄດ້. ຄະນະພັກປະຊາຊົນກຳປູເຈຍ ພວກຂ້າພະເຈົ້າຈະເຮັດທຸກສິ່ງທຸກຢ່າງ ເພື່ອປົກປັກຮັກສາ ແລະເພີ່ມພູນຄູນສ້າງຄວາມສຳພັນດັ່ງກ່າວນັ້ນ ໃຫ້ນັບມື້ເຕີບໃຫຍ່ຂະຫຍາຍຕົວ ເພື່ອຜົນປະໂຫຍດຂອງປະຊາຊົນທັງສອງປະເທດ ພວກເຮົາ. ພ້ອມດຽວກັນນີ້ ຄະນະພັກປະຊາຊົນກຳປູເຈຍ ກໍ່ມີນະໂຍບາຍປັບປຸງ ແລະ ເສີມຂະຫຍາຍຄວາມສຳພັນກັບບັນດາພັກ ໃນພາກພື້ນ ແລະໃນໂລກ ເພື່ອພາລະກິດສັນຕິພາບ, ສະຖຽນລະພາບ ການຮ່ວມມື ແລະ ຄວາມວັດທະນະຖາວອນ.

ພະນະທ່ານ,

ການກ້າວໄປຫນ້າ ຂອງກຳປູເຈຍ ເຖິງຈະພົບຄວາມຫຍຸ້ງຍາກສັບສົນກໍຈິງ ແຕ່ສະຖານະການການເມືອງ ແລະເສດຖະກິດໃນປະຈຸບັນ ໄດ້ສ້າງຄວາມເຊື່ອຫມັ້ນ ໃຫ້ພວກຂ້າພະເຈົ້າ ໃນການບຸກບືນເຮັດໃຫ້ເປົ້າຫມາຍໃນການກໍ່ສ້າງປະເທດກຳປູເຈຍໃຫ້ເປັນປະເທດສັນຕິພາບ, ເອກະພາບ, ປະຊາທິປະໄຕ ແລະວັດທະນະຖາວອນ ບົນພື້ນຖານຂອງຄວາມເປັນເອກະລາດ ອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງຕົນ.

ເພື່ອກ້າວໄປສູ່ເປົ້າຫມາຍດັ່ງກ່າວ ຄະນະພັກປະຊາຊົນກຳປູເຈຍຈະສືບຕໍ່ຍຶດຫມັ້ນ ແລະ ປະຕິບັດນະໂຍບາຍຖືກຕ້ອງປອງດອງຊາດ ທີ່ພວມແຕກດອກອອກຜົນຢ່າງງົດງາມ ບົນພື້ນຖານການສະກັດກັ້ນ ການກັບຄືນມາ ຂອງພວກດັບສູນເຊື້ອຊາດ, ເພີ່ມທະວີການຮ່ວມມື ຢ່າງຈິງໃຈ ກັບກຳລັງການເມືອງຕ່າງໆ ພາຍໃນສັງຄົມ ໂດຍສະເພາະຢ່າງຍິ່ງຮ່ວມມືກັບຄະນະພັກ ຟຸນຊິນເປັກ ເພື່ອປົກປັກຮັກສາສະຖຽນລະພາບ ທາງດ້ານການເມືອງ, ປົກປັກຮັກສາອະທິປະໄຕຂອງຊາດ, ຊຸກຍູ້ການຟື້ນຟູ ແລະການພັດທະນາປະເທດພາຍໃຕ້ກົດຫມາຍລັດຖະທຳມະນູນອັນຫນຶ່ງອັນດຽວ.

ຂ້າພະເຈົ້າ ຂໍສະຫນັບສະຫນູນ ຢ່າງເຕັມປ່ຽມ ຕໍ່ນະໂຍບາຍການຕ່າງປະເທດສັນຕິພາບ ມິດຕະພາບ ແລະ ຮ່ວມມືກັບທຸກປະເທດ ໂດຍບໍ່ຈຳແນກທ່າອ່ຽງການເມືອງບົນພື້ນຖານແຫ່ງຄວາມເຄົາລົບເອກະລາດ ອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນ ບໍ່ແຊກແຊງກິດຈະການພາຍໃນຂອງກັນ ສະເຫມີພາບ ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະຕໍ່ຕ້ານຢ່າງເດັດດ່ຽວ ການສວຍໃຊ້ດິນແດນຂອງປະເທດຫນຶ່ງ ເປັນແປ້ນຢັ້ນ ເພື່ອກໍ່ການບຽດຍຶດ ແລະຮຸກຮານອີກປະເທດຫນຶ່ງ. ໂດຍສະເພາະຢ່າງຍິ່ງເອົາໃຈໃສ່ເພີ່ມທະວີຄວາມສຳພັນ ກັບປະເທດບ້ານໃກ້ເຮືອນຄຽງ ແລະບັນດາປະເທດໃນພາກພື້ນ ແນໃສ່ກໍ່ສ້າງອາຄານຮ່ວມ ຂອງບັນດາປະເທດອາຊີອາຄະເນ ທີ່ເຕັມໄປດ້ວຍຄວາມຜາສຸກ, ຄວາມເຂົ້າອົກເຂົ້າໃຈຊຶ່ງກັນ ແລະກັນ ແລະຄວາມຈະເລີນຮຸ່ງເຮືອງ. ຕໍ່ຈຸດຫມາຍດັ່ງກ່າວນີ້ ຂ້າພະເຈົ້າສະຫນັບສະຫນູນເຈຕະນາລົມຂອງລັດຖະບານ ກຳປູເຈຍ ທີ່ຈະເຂົ້າຮ່ວມເປັນສະມາຊິກ ຂອງປະຊາຄົມບັນດາປະເທດອາຊີອາຄະເນ (ອາຊຽນ) ໃນເວລາອັນຮີບດ່ວນຂ້າງຫນ້ານີ້.

ສຸດທ້າຍນີ້ ຂ້າພະເຈົ້າ ຂໍອວຍພອນ ພັກ ລັດຖະບານ ແລະປະຊາຊົນລາວພີ່ນ້ອງຈົ່ງບັນລຸຜົນສຳເລັດໃຫມ່ໃຫຍ່ຫລວງກວ່າເກົ່າ ໃນການປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ.

ຂໍອວຍພອນໃຫ້ຄະນະຜູ່ແທນຕ່າງປະເທດທັງຫມົດ ຈົ່ງມີສຸຂະພາບເຂັ້ມແຂງ ແລະໄດ້ຮັບໄຊຊະນະທຸກປະການ.

**ຂໍ ຂອບ ໃຈ**



**ຄໍາປາໄສອວຍພອນ**
**ຂອງສົມເດັດ ກົມພະໂນໂຣດົມ ຣະນະຣິດ**
**ປະທານຄະນະພັກຟຸນຊິນເປັກ**
**ຕໍ່ກອງປະຊຸມໃຫຍ່ຄັ້ງທີ VI**
**ຂອງພັກປະຊາຊົນປະຕິວັດລາວ**
**ວັນທີ 18 ມີນາ 1996**

**************

ຮຽນ ພະນະທ່ານ ຄໍາໄຕ ສີພັນດອນ
ປະທານຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ,
ຮຽນ ບັນດາພະນະທ່ານຫົວໜ້າຄະນະຜູ່ແທນຕ່າງປະເທດ,
ຮຽນ ກອງປະຊຸມໃຫຍ່,

ໂດຍຕາງໜ້າຄະນະພັກຟຸນຊິນເປັກ ແລະ ໃນນາມສ່ວນຕົວ ກ່ອນອື່ນຂ້າພະເຈົ້າຂໍສະແດງຄວາມປິຕິຍິນດີ ແລະ ເບີກບານມ່ວນຊື່ນເປັນຢ່າງຍິ່ງ ທີ່ໄດ້ຮັບກຽດ ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ. ພ້ອມກັນນີ້ກໍຂໍສະແດງຄວາມຊົມເຊີຍຢ່າງອົບອຸ່ນທີ່ສຸດ ຕໍ່ວັນປະຫວັດສາດ ທີ່ປຽມດ້ວຍຄວາມເອກອ້າງທະນົງໃຈຂອງປະເທດຊາດ ແລະ ປະຊາຊົນລາວອ້າຍນ້ອງ.

ພາຍໃຕ້ການນໍາພາອັນຖືກຕ້ອງ ຂອງພັກປະຊາຊົນປະຕິວັດລາວ ຊຶ່ງມີພະນະທ່ານ ໄກສອນ ພົມວິຫານ ຜູ້ນໍາທີ່ຍິ່ງໃຫຍ່ໃນອະດີດ ແລະມີ ພະນະທ່ານ ຄໍາໄຕ ສີພັນດອນ ເປັນປະທານ ໃນປັດຈຸບັນ ປະເທດຊາດ ແລະປະຊາຊົນລາວ ໄດ້ມີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ ແລະ ເຂັ້ມແຂງ ໄດ້ຮັບໄຊຊະນະທີ່ໜ້າພາກພູມໃຈ ໃນການປົກປັກ

ຮັກສາເອກະລາດ ຜືນແຜ່ນດິນອັນຄົບຖ້ວນ ແລະອະທິປະໄຕ ຂອງຊາດ, ຮັບປະກັນສະຖຽນລະພາບ ທາງດ້ານການເມືອງ ຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ໄວ້ໄດ້ຢ່າງໜັກແໜ້ນ. ປັດໄຈອັນເປັນພື້ນຖານ ແລະສຳຄັນດັ່ງກ່າວນັ້ນໄດ້ເຮັດໃຫ້ປະເທດຊາດ ແລະ ປະຊາຊົນລາວ ສາມາດບັນລຸຜົນສຳເລັດ ອັນໃຫຍ່ຫລວງ ແລະ ພັດທະນາ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ຢ່າງບໍ່ຢຸດຢັ້ງໃນທຸກດ້ານ, ທັງເສີມຂະຫຍາຍການຮ່ວມມືລະຫວ່າງປະເທດ ຢ່າງກວ້າງຂວາງ ແຕ່ກໍ່ສາມາດປົກປັກຮັກສາ ຮີດຄອງປະເພນີວັດທະນະທຳ ອັນດີງາມ ຂອງຊາດ ແລະ ຂອງປະຊາຊົນລາວ ໄວ້ໄດ້ ຢ່າງໝັ້ນຄົງ. ຜົນສຳເລັດ ແລະໄຊຊະນະດັ່ງກ່າວນັ້ນ ຈະບໍ່ສາມາດເກີດຂຶ້ນໄດ້, ຖ້າຫາກບໍ່ມີໂຄງການການເມືອງ ແລະ ທິດທາງຈຸດໝາຍອັນຖືກຕ້ອງ ຂອງພັກປະຊາຊົນປະຕິວັດລາວ ເຊິ່ງໃນຫລາຍສິບປີທີ່ຜ່ານມານັ້ນ ໄດ້ວາງອອກຢ່າງສອດຄ່ອງ ກັບເງື່ອນໄຂຕົວຈິງ ຂອງປະເທດ ແລະເຈດຕະນາອັນສູງສົ່ງ ຂອງປະຊາຊົນລາວ.

ຄະນະພັກພຸ້ນຊົນເປັກ ຂໍສະແດງຄວາມສັນລະເສີນ, ຊົມເຊີຍຢ່າງຈິງໃຈ ແລະອົບອຸ່ນທີ່ສຸດ ຕໍ່ກອງປະຊຸມໃຫຍ່ຄັ້ງທີ V ທີ່ຜ່ານມາ ຂອງພັກປະຊາຊົນ ປະຕິວັດລາວ ທີ່ໄດ້ວາງແນວທາງການເມືອງ ອອກຢ່າງຖືກຕ້ອງ ເຊິ່ງໄດ້ພາປະເທດ ແລະ ປະຊາຊົນລາວຍາດໄດ້ຜົນສຳເລັດ ແລະໄຊຊະນະອັນສະຫງ່າລາສີ.

ປະເທດ ແລະ ປະຊາຊົນກຳປູເຈຍ ເຄີຍມີປະຫວັດສາດ ແຫ່ງໄມຕີຈິດມິດຕະພາບ ແລະ ຄວາມສາມັກຄີ ຊຶ່ງເປັນມູນເຊື້ອ ມາແຕ່ໂບຮານນະການ ກັບປະເທດ ແລະ ປະຊາຊົນລາວ ຈົນບໍ່ສາມາດແຍກອອກຈາກກັນໄດ້ ໂດຍສະເພາະຢ່າງຍິ່ງ ສາຍພົວພັນ ແລະການຮ່ວມມື ໃນສະໄໝສັງຄົມລາດນິຍົມ ພາຍໃຕ້ການນຳພາ ຂອງພະບາດສົມເດັດໂນໂຣດົມ ສີຫານຸ ວໍຣະມັນ, ເຖິງແມ່ນວ່າ ທັງສອງປະເທດພວກເຮົາ ໄດ້ປະສົບ ແລະ ຜ່ານຜ່າຄວາມຍາກລຳບາກ ແລະມີບັນຫາພາຍໃນ ເປັນເວລາຫລາຍສິບປີກໍຕາມ ແຕ່ສາຍພົວພັນ ລະຫວ່າງສອງປະເທດພວກເຮົາກໍ່ຍັງສືບຕໍ່ຕະຫລອດມາ.

ຜົນສຳເລັດອັນສະຫງ່າງາມ ແຫ່ງການຢ້ຽມຢາມ ຂອງຜູ່ແທນຂັ້ນສູງເຊິ່ງນຳໂດຍພະນະທ່ານ ໜູຮັກ ພູມສະຫວັນ ປະທານປະເທດແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ບົນດິນແດນແຫ່ງລາຊະອານາຈັກກຳປູເຈຍ ແລະ ການຢ້ຽມຢາມຂອງ

ພະບາດ ສົມເດັດ ໂນໂຣດົມ ສີຫານຸ ວໍຣະມັນ ພະມະຫາກະສັດ ແຫ່ງລາຊະອານາຈັກກຳປູເຈຍ ບົນດິນແດນລາວ ທີ່ຜ່ານມານັ້ນ ໄດ້ຢັ້ງຢືນໃຫ້ເຫັນແຈ້ງເຈດຕະນາອັນແນ່ວແນ່ ແຫ່ງການປັບປຸງ ເສີມຂະຫຍາຍຄວາມສຳພັນ ແລະ ການຮ່ວມມື ອັນໃກ້ຊິດສະໜິດແໜ້ນ ລະຫວ່າງສອງປະເທດພວກເຮົາ.

ຄະນະພັກຟຸນຊິນເປັກພວກຂ້າພະເຈົ້າ ທີ່ໄດ້ຍຶດໝັ້ນແນວຄິດສີຫານຸ ແລະເປັນຄະນະພັກ ທີ່ມີພື້ນຖານ ແລະມີຕົ້ນກຳເນີດໂດຍກົງ ຈາກຜົນງານ ຂອງພະບາດສົມເດັດສີຫານຸ ວໍຣະມັນ ອັນເປັນທີ່ເຄົາລົບນັບຖື ເທີດທູນນັ້ນ ຂໍຍຶດໝັ້ນ ແລະ ຢືນຢັນຢ່າງໜັກແໜ້ນ ໃນໂອກາດນີ້ວ່າ : ຄະນະພັກຟຸນຊິນເປັກ ຈະສືບຕໍ່ປົກປັກຮັກສາ, ປັບປຸງ ແລະ ເສີມຂະຫຍາຍ ສາຍພົວພັນ ແຫ່ງໄມຕີຈິດອັນດູດດື່ມ ແລະ ການຮ່ວມມື ກັບພັກປະຊາຊົນປະຕິວັດລາວ ກໍຄືກັບລັດຖະບານ ແລະ ປະຊາຊົນລາວອ້າຍນ້ອງ ໃຫ້ດີຂຶ້ນ ຢ່າງບໍ່ຢຸດຢັ້ງ.

ຄະນະພັກຟຸນຊິນເປັກ ມີຄວາມເອກອ້າງທະນົງໃຈ ແລະ ມີຄວາມເຊື່ອໝັ້ນຢ່າງໜັກແໜ້ນວ່າ : ດ້ວຍໄມຕີຈິດ ມິດຕະພາບ ອັນດູດດື່ມ ແລະ ການຮ່ວມມືອັນດີງາມ ລະຫວ່າງພັກ ຂອງສອງປະເທດ ໂດຍສະເພາະລະຫວ່າງ ພັກປະຊາຊົນປະຕິວັດລາວ ກັບພັກຟຸນຊິນເປັກນັ້ນ ທຸກບັນຫາທີ່ອາດເກີດຂຶ້ນຈະສາມາດແກ້ໄຂໄດ້ໂດຍສັນຕິວິທີ ແລະມີຜົນສັກສິດ. ຂໍໃຫ້ໄມຕີຈິດມິດຕະພາບອັນດູດດື່ມ ແລະການຮ່ວມມືດັ່ງກ່າວນັ້ນຈົ່ງແຕກດອກອອກຜົນ, ເຕີບໃຫຍ່ຂະຫຍາຍຕົວ ແລະໝັ້ນຄົງຊົ່ວກາລະນານ.

ທ້າຍສຸດນີ້ ຂ້າພະເຈົ້າ ຂໍອວຍພອນ ໃຫ້ກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ ບັນລຸຜົນສຳເລັດຢ່າງຈົບງາມ, ຂໍໃຫ້ປະຊາຊົນລາວ ຈົ່ງມີຜົນສຳເລັດໃໝ່ ໃຫຍ່ຫລວງກວ່າເກົ່າ ໃນການປະຕິບັດມະຕິ ຂອງກອງປະຊຸມໃຫຍ່ຄັ້ງທີ VI.

ຂໍອວຍພອນອັນປະເສີດ ແດ່ຄະນະຜູ້ແທນຕ່າງປະເທດ ຈົ່ງມີສຸຂະພາບເຂັ້ມແຂງ, ໄດ້ຮັບຜົນສຳເລັດ ແລະໄຊຊະນະທຸກປະການ.

ຂໍຂອບໃຈ.




# ບົດລາຍງານ
# ຜົນຂອງການເລືອກຕັ້ງອົງການນຳສູງສຸດ
# ຂອງພັກປະຊາຊົນປະຕິວັດລາວ
# ສະໄຫມທີ VI.

---

ສະເຫນີໂດຍ: ສະຫາຍ ທອງສິງ ທຳມະວົງ

ຄະນະປະທານກອງປະຊຸມ ທີ່ນັບຖື,
ແຂກຜູ້ມີກຽດທີ່ຮັກແພງ ທັງຫລາຍ,
ສະຫາຍທີ່ຮັກແພງ ທັງຫລາຍ,

ຕາມການມອບຫມາຍ ຂອງຄະນະປະທານກອງປະຊຸມໃຫຍ່, ຂ້າພະເຈົ້າ ຂໍແຈ້ງຜົນການເລືອກຕັ້ງຄະນະບໍລິຫານງານສູນກາງພັກ ທີ່ຖືກເລືອກຕັ້ງຂຶ້ນໃນກອງປະຊຸມໃຫຍ່ຜູ່ແທນທົ່ວປະເທດຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ. ຄະນະບໍລິຫານງານສູນກາງພັກສະໄຫມທີ VI ປະກອບມີ 49 ສະຫາຍ, ໃນນັ້ນເພດຍິງມີ 4 ສະຫາຍ. ຄະນະບໍລິຫານງານສູນກາງພັກຄັ້ງນີ້ ປະກອບດ້ວຍບັນດາສະຫາຍເຊິ່ງມີກະສຽນອາຍຸດັ່ງນີ້:

- ອາຍຸແຕ່ 60 ປີຂື້ນໄປ ກວມ 20,41 %;
- ອາຍຸແຕ່ 46 ຫາ 59 ປີ ກວມ 63,27%;
- ອາຍຸ 45 ປີລົງມາ ກວມ 16,32 %;

- ຜູ້ມີອາຍຸສູງສຸດ 72 ປີ, ຜູ້ມີອາຍຸຕ່ຳສຸດ 40 ປີ, ອາຍຸສະເລ່ຍ 53 ປີ.
- ມີ 3 ສະຫາຍ ເປັນສະມາຊິກພັກກອມມູນິດອິນດູຈີນ.
- ເຂົ້າພັກກ່ອນປີ 1975 ກວມ 75,51 % ແລະເຂົ້າພັກຫລັງປີ 1975 ກວມ 24,49%.

ບັນດາສະຫາຍທີ່ຖືກເລືອກຕັ້ງໃນຄັ້ງນີ້ 89,80% ໄດ້ຜ່ານການປະຕິວັດຊາດປະຊາທິປະໄຕ ແລະ ທັງຫມົດ 49 ສະຫາຍ ລ້ວນແຕ່ໄດ້ຮັບການທົດສອບຫຼໍ່ຫຼອມຈາກຂະບວນການຕົວຈິງ, ເປັນຜູ້ທີ່ຕັ້ງຫນ້າຫ້າວຫັນ ໃນພາລະກິດປ່ຽນແປງໃຫມ່, ໄດ້ເປັນແບບຢ່າງທີ່ດີໃຫ້ແກ່ຖັນແຖວ ພະນັກງານ, ສະມາຊິກພັກ ແລະ ປະຊາຊົນ ໃນພາລະກິດປົກປັກຮັກສາ ແລະ ກໍ່ສ້າງປະເທດຊາດໃນ 20 ປີຜ່ານມາ. ກຳມະການສູນກາງພັກຊຸດໃຫມ່ນີ້ ສ່ວນໃຫຍ່ແມ່ນໄດ້ຮັບການສຶກສາອົບຮົມທິດສະດີ ທັງລະບົບປຳລຸງ ແລະ ກໍ່ສ້າງ, ໃນນັ້ນ ຈົບຊັ້ນສູງຂຶ້ນໄປກວມ 90 %. ມີບັນດາສະຫາຍ ທີ່ມີລະດັບການສຶກສາ ດ້ານວິຊາສະເພາະເຕັກນິກ-ວິທະຍາສາດ ນັບແຕ່ຊັ້ນສູງຂຶ້ນໄປ ກວມ 53% ແລະໃນນັ້ນເຫນືອມະຫາວິທະຍາໄລ ກວມ 10%.

**ລາຍຊື່ຂອງຄະນະບໍລິຫານງານສູນກາງພັກສະໄຫມທີ VI ມີດັ່ງຕໍ່ໄປນີ້:**

1/- ສະຫາຍ ຄຳໄຕ ສີພັນດອນ

2/- ສະຫາຍ ສະຫມານ ວິຍະເກດ

3/- ສະຫາຍ ຈູມມະລີ ໄຊຍະສອນ

4/- ສະຫາຍ ອຸດົມ ຂັດທິຍະ

5/- ສະຫາຍ ທອງສິງ ທຳມະວົງ

6/- ສະຫາຍ ໂອສະກັນ ທຳມະເທວາ

7/- ສະຫາຍ ບຸນຍັງ ວໍລະຈິດ

8/- ສະຫາຍ ສີສະຫວາດ ແກ້ວບຸນພັນ

9/- ສະຫາຍ ອາຊາງ ລາວລີ

10/- ສະຫາຍ ວົງເພັດ ໄຊເກີຍາຈິງຕົວ

11/- ສະຫາຍ ຄຳບູ່ ສຸນີໄຊ

12/- ສະຫາຍ ສົມສະຫວາດ ເລັ່ງສະຫວັດ

13/- ສະຫາຍ ນະຄອນ ສີສະນິບ

14/- ສະຫາຍ ອິນປົງ ໄຄ້ຍະວົງ

15/- ສະຫາຍ ທອງລຸນ ສີສຸລິດ

16/- ສະຫາຍ ພິມມະສອນ ເລືອງຄຳມາ

17/- ສະຫາຍ ນ.ອ່ອນຈັນ ທຳມະວົງ

18/- ສະຫາຍ ຄຳປານ ພິລາວົງ

19/- ສະຫາຍ ສີເຫລືອ ບຸນຄ້ຳ

20/- ສະຫາຍ ນ.ປານີ ຢາທໍ່ຕູ້

21/- ສະຫາຍ ສົມພັນ ແພງຄຳມີ

22/- ສະຫາຍ ດວງໃຈ ພິຈິດ

23/- ສະຫາຍ ບຸນເຮືອງ ດວງພະຈັນ

24/- ສະຫາຍ ໄຊສົມພອນ ພົມວິຫານ

25/- ສະຫາຍ ຄຳໜັ້ນ ສູນວິເລີດ

26/- ສະຫາຍ ທອງຫວັງ ສີຫາຈັກ

27/- ສະຫາຍ ຈັນສີ ໂພສີຄຳ

28/- ສະຫາຍ ອ່ອນເນື້ອ ພົມມະຈັນ

29/- ສະຫາຍ ຫມູນແກ້ວ ອໍລະບູນ

30/- ສະຫາຍ ສົມເພັດ ທິບມາລາ

31/- ສະຫາຍ ພູມີ ທິບພະວອນ

32/- ສະຫາຍ ບົວທອງ ວົງລໍຄຳ

33/- ສະຫາຍ ອຸ່ນຫລ້າ ໄຊຍະສານ

34/- ສະຫາຍ ຈະເລີນ ເຢຍປາວເຮີ

35/- ສະຫາຍ ທອງສີ ອິນທະພົນ

36/- ສະຫາຍ ສຸລິວົງ ດາລາວົງ

37/- ສະຫາຍ ນ.ດາວອນ ວົງສັກ

38/- ສະຫາຍ ນ.ບຸນເພັງ ມູນໂພໄຊ

39/- ສະຫາຍ ສຸກັນ ມະຫາລາດ

40/- ສະຫາຍ ບົວສອນ ບຸບຜາວັນ

41/- ສະຫາຍ ບຸນທອງ ຈິດມະນີ

42/- ສະຫາຍ ສຸດໃຈ ທຳມະສິດ

43/- ສະຫາຍ ຄຳພວງ ຈັນທະພົມມາ

44/- ສະຫາຍ ພັນດວງຈິດ ວົງສາ

45/- ສະຫາຍ ເຄນ ຜາລິວົງ

46/- ສະຫາຍ ບຸນປອນ ບຸດຕະນະວົງ

47/- ສະຫາຍ ຄຳເກີດ ເວີນຄຳ.

48/- ສະຫາຍ ຄຳບຸ່ນ ດວງປັນຍາ

49/- ສະຫາຍ ແສງຍົງ ວົງຈັນຄຳ

ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງປະຖົມມະລຶກໄດ້ເປັນເອກະສັນກັນ ເລືອກຕັ້ງກົມການເມືອງສູນກາງພັກ ປະກອບດ້ວຍ 9 ສະຫາຍ ຊຶ່ງມີລາຍຊື່ດັ່ງນີ້:

1/- ສະຫາຍ ຄຳໄຕ ສີພັນດອນ

2/- ສະຫາຍ ສະໜານ ວິຍະເກດ

3/- ສະຫາຍ ຈູມມະລີ ໄຊຍະສອນ

4/- ສະຫາຍ ອຸດົມ ຂັດທິຍະ

5/- ສະຫາຍ ທອງສິງ ທຳມະວົງ

6/- ສະຫາຍ ໂອສະກັນ ທຳມະເທວາ

7/- ສະຫາຍ ບຸນຍັງ ວໍລະຈິດ

8/- ສະຫາຍ ສີສະຫວາດ ແກ້ວບຸນພັນ

9/- ສະຫາຍ ອາຊາງ ລາວລີ

ສະຫາຍທີ່ຮັກແພງທັງຫລາຍ,

ດ້ວຍການຮັບຮູ້ ຄຸນງາມຄວາມດີ ອັນໃຫຍ່ຫລວງ ແລະ ການອຸທິດ ຢ່າງບໍ່ຮູ້ອິດຮູ້ເມື່ອຍ ຂອງ ສະຫາຍ ຄຳໄຕ ສີພັນດອນ ຮ່ວມກັບກົມການເມືອງ ແລະ ຄະນະບໍລິຫານ

ງານສູນກາງພັກ ໃນການນຳພາ ການປະຕິວັດ ຢູ່ປະເທດເຮົາ, ໂດຍສະເພາະແມ່ນພາລະກິດປ່ຽນແປງໃໝ່ ໃຫ້ດຳເນີນໄປຢ່າງຖືກຕ້ອງ ແລະ ໜັກແໜ້ນ, ກອງປະຊຸມຄົບຄະນະຄັ້ງປະຖົມມະລືກ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ VI ກໍໄດ້ເປັນເອກະສັນກັນຢ່າງສົມບູນ ເລືອກຕັ້ງ ສະຫາຍ ຄຳໄຕ ສີພັນດອນ ທີ່ເຄົາລົບຮັກ ເປັນປະທານຄະນະບໍລິຫານງານສູນກາງພັກ ອີກເທື່ອໃໝ່. (ຊົມເຊີຍ)

ກອງປະຊຸມຄົບຄະນະຄັ້ງປະຖົມມະລືກ ຂອງ ຄະນະບໍລິຫານງານສູນກາງພັກ ສະໄໝທີ VI ໄດ້ເປັນເອກະສັນຢ່າງສົມບູນ ເລືອກຕັ້ງເອົາສະຫາຍ ວົງເພັດ ໄຊເກີຢາຈົ່ງຕົວເປັນປະທານ ຄະນະກຳມະການກວດກາພັກຂັ້ນສູນກາງ. (ຊົມເຊີຍ)

ອີງໃສ່ຄຸນງາມຄວາມດີ, ບົດຮຽນຈາກພຶດຕິກຳໃນວຽກງານດ້ານຕ່າງໆຂອງພັກ ກໍຄືຄຸນລັກສະນະຈຳເພາະສ່ວນຕົວ ຂອງສະຫາຍ ໜູຮັກ ພູມສະຫວັນ ສະນັ້ນກອງປະຊຸມຄົບຄະນະຄັ້ງປະຖົມມະລືກ ຂອງຄະນະບໍລິຫານງານສູນກາງພັກ ໄດ້ເປັນເອກະສັນຢ່າງສົມບູນ ຕົກລົງໃຫ້ສະຫາຍ ໜູຮັກ ພູມສະຫວັນ ເປັນທີ່ປຶກສາຂອງຄະນະບໍລິຫານງານສູນກາງພັກ. (ຊົມເຊີຍ)

ບັນດາສະຫາຍທີ່ຮັກແພງ,

ການເລືອກຕັ້ງ ອົງການນຳສູງສຸດ ຂອງພັກເຮົາໃນເທື່ອນີ້ ໄດ້ດຳເນີນໄປຢ່າງມີປະຊາທິປະໄຕຢ່າງແທ້ຈິງ, ສະແດງເຖິງສະຕິປັນຍາ ແລະ ຄວາມສາມັກຄີເປັນເອກະພາບ ທີ່ເປັນມູນເຊື້ອອັນດີງາມ ຂອງພັກ, ຮັບປະກັນລັກສະນະຕໍ່ເນື່ອງ ແລະສືບທອດແຫ່ງການນຳພາອັນໜັກແໜ້ນຂອງພັກເຮົາ.

ດ້ວຍຄວາມໄວ້ເນື້ອເຊື່ອໃຈຈາກຜູ່ແທນ ບັນດາສະຫາຍກຳມະການສູນກາງພັກ ທີ່ໄດ້ຮັບເລືອກຕັ້ງຈາກກອງປະຊຸມໃຫຍ່ໃນຄັ້ງນີ້ ຈະສຸມສະຕິປັນຍາ ກຳລັງວັງຊາ ສາມັກຄີເປັນຈິດໜຶ່ງໃຈດຽວ ເພື່ອແບກຫາບພາລະໜ້າທີ່ອັນສູງສົ່ງ ແລະ ໜັກໜ່ວງ ທີ່ກອງປະຊຸມໃຫຍ່ຄັ້ງນີ້ໄດ້ມອບໝາຍໃຫ້

ວຽງຈັນ, ວັນທີ 20/3/ 1996

ຂໍຂອບໃຈ

# ກົມການເມືອງສູນກາງພັກ



ຄຳໄຕ ສີພັນດອນ



ສະໝານ ວິຍາເກດ



ຈູມມະລີ ໄຊຍະສອນ



ອຸດົມ ຂັດທິຍະ



ທອງສິງ ທຳມະວົງ



ໂອສະກັນ ທຳມະເທວາ



ບຸນຍັງ ວໍລະຈິດ



ສີສະຫວາດ ແກ້ວບຸນພັນ



ອາຊາງ ລາວລີ

# ຄະນະບໍລິຫານງານສູນກາງພັກ



ຄຳໄຕ ສີພັນດອນ



ສະໝານ ວິຍະເກດ



ຈູມມະລີ ໄຊຍະສອນ



ອຸດົມ ຂັດຕິຍະ



ທອງສິງ ທຳມະວົງ



ໂອສະກັນ ທຳມະເທວາ



ບຸນຍັງ ວໍລະຈິດ



ສີສະຫວາດ ແກ້ວບຸນພັນ



ອາຊາງ ລາວລີ



ວົງເພັດ ໄຊເກີຍາຈົງຕົວ



ຄຳບູ່ ສຸນີໄຊ



ສົມສະຫວາດ ເລັ່ງສະຫວັດ



ນະຄອນ ສີສະນິນ



ອິນປົງ ໄຕ້ຍະວົງ



ທອງລຸນ ສີສຸລິດ



ພິມມະສອນ ເລືອງຄຳມາ



ນາງ ອ່ອນຈັນ ທຳມະວົງ



ຄຳຝານ ພິລາວົງ



ສີເຫລືອ ບຸນຄ້ຳ



ນາງ ປານີ ຢາທໍ່ຕູ້



ສົມພັນ ແພງຄຳມີ



ດວງໃຈ ພິຈິດ



ບຸນເຮືອງ ດວງພະຈັນ



ໄຊສົມພອນ ພົມວິຫານ

ห้ามจำหน่าย



ຄຳຫມັ້ນ ສູນວິເລີດ



ທອງຫວັງ ສີຫາຈັກ



ຈັນສີ ໂພສີຄຳ



ອ່ອນເນື້ອ ພົມມະຈັນ



ຫມູນແກ້ວ ອໍລະບູນ



ສົມເພັດ ທິບມາລາ



ພູມີ ທິບພະວອນ



ບົວທອງ ວົງລໍຄໍາ



ອຸ່ນຫລ້າ ໄຊຍະສານ



ຈະເລີນ ເຢຍປາວເຮີ



ທອງສີ ອິນທະພົນ



ສຸລີວົງ ດາລາວົງ



ນາງ ດາວອນ ວົງສັກ



ນາງ ບຸນເພັງ ມູນໂພໄຊ



ສຸກັນ ມະຫາລາດ



ບົວສອນ ບຸບຜາວັນ



ບຸນທອງ ຈິດມະນີ



ສຸດໃຈ ທຳມະສິດ



ຄຳພວງ ຈັນທະພົມມາ



ພັນດວງຈິດ ວົງສາ



ເຄນ ຜາລີວົງ



ບຸນປອນ ບຸດຕະນະວົງ



ຄຳເກີດ ເວີນຄຳ



ຄຳບຸ່ນ ດວງປັນຍາ



ແສງຍົງ ວົງຈັນຄຳ

# ທີ່ປຶກສາ ຂອງຄະນະບໍລິຫານງານສູນກາງພັກ



ທ່ານ ໜູຮັກ ພູມສະຫວັນ



# ມະຕິ
# ກອງປະຊຸມໃຫຍ່ຄັ້ງທີ VI
# ຂອງພັກປະຊາຊົນປະຕິວັດລາວ

ກອງປະຊຸມໃຫຍ່ຜູ່ແທນທົ່ວປະເທດຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ ໄດ້ດຳເນີນມາແຕ່ວັນທີ 18 ຫາວັນທີ 20 ເດືອນມີນາ 1996 ທີ່ນະຄອນຫລວງວຽງຈັນ. ເຂົ້າຮ່ວມໃນກອງປະຊຸມໃຫຍ່ ມີຜູ່ແທນ 381 ສະຫາຍ ທີ່ມາຈາກບັນດາຂະແຫນງການອ້ອມຂ້າງສູນກາງ, ທ້ອງຖິ່ນ ແລະ ຮາກຖານຕ່າງໆ ໃນທົ່ວປະເທດ, ເຊິ່ງເປັນຕົວແທນໃຫ້ສະມາຊິກພັກທັງຫມົດກວ່າ 78.000 ສະຫາຍ.

1. ພາຍຫລັງທີ່ໄດ້ຄົ້ນຄວ້າປະກອບຄວາມເຫັນຢ່າງເລິກເຊິ່ງ ກອງປະຊຸມໃຫຍ່ໄດ້ເປັນເອກະສັນຢ່າງສົມບູນກັບລາຍງານການເມືອງ ຂອງຄະນະບໍລິຫານງານສູນກາງພັກສະໄຫມທີ V ທີ່ສະເຫນີໂດຍ ປະທານ ຄຳໄຕ ສີພັນດອນ. ລາຍງານການເມືອງໄດ້ທົບທວນຄືນການດຳເນີນພາລະກິດປ່ຽນແປງໃຫມ່ ແລະ ການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ຄັ້ງທີ V ຢ່າງສັງລວມ, ໂດຍຢືນຢັນວ່າ: ພາລະກິດປ່ຽນແປງໃຫມ່ ຢູ່ປະເທດເຮົາໄດ້ບັນລຸຫມາກຜົນອັນສຳຄັນຫລາຍປະການ, ເຮັດໃຫ້ປະເທດເຮົາ ມີການຫັນປ່ຽນ ທີ່ຕັ້ງຫນ້າໃນຫລາຍດ້ານຄື: ລະບົບການເມືອງ ປະຊາທິປະໄຕປະຊາຊົນ ໄດ້ຮັບການບູລະນະ ແລະ

ມີສະຖຽນລະພາບ ອັນໜັກແໜ້ນ; ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ມີການຮັບປະກັນໂດຍພື້ນຖານ; ການພັດທະນາເສດຖະກິດສັງຄົມໄດ້ຮັບຜົນອັນຈະແຈ້ງ, ເສດຖະກິດແຫ່ງຊາດໄດ້ຂະຫຍາຍຕົວດີຂຶ້ນດ້ວຍຈັງຫວະຕໍ່ເນື່ອງ, ສ້າງໄດ້ປັດໄຈໃຫມ່ຈໍານວນຫນຶ່ງ ດ້ານໂຄງລ່າງ ແລະພື້ນຖານວັດຖຸ-ເຕັກນິກ ທີ່ຈະຊຸກຍູ້ໃຫ້ການພັດທະນາເສດຖະກິດ-ສັງຄົມໃນຊຸມປີຕໍ່ຫນ້າ ມີບາດກ້າວ ແລະຖ່ວງທ່າໃຫມ່, ປະຊາຊົນບັນດາເຜົ່າມີຊີວິດການເປັນຢູ່ດີຂຶ້ນ ເປັນກ້າວໆ; ມີຄວາມສາມັກຄີເປັນປຶກແຜ່ນ ແລະ ມີຄວາມເຊື່ອຫມັ້ນຕື່ມອີກ ຕໍ່ແນວທາງ ຂອງພັກ ແລະ ອະນາຄົດຂອງປະເທດຊາດ; ການພົວພັນຮ່ວມມືລະຫວ່າງປະເທດເຮົາກັບສາກົນໄດ້ເປີດກວ້າງອອກ.

ຜົນສໍາເລັດອັນສໍາຄັນ ທີ່ບັນລຸໄດ້ນັ້ນ ແມ່ນຫມາກຜົນລວມຍອດ ແຫ່ງຄວາມສາມັກຄີພ້ອມພຽງກັນ ແລະ ຄວາມບາກບັ່ນ ພະຍາຍາມບຸກບືນສູ້ຊົນ ຂອງທົ່ວພັກ, ທົ່ວກອງທັບ ແລະທົ່ວປວງຊົນເຮົາ ທີ່ໄດ້ເຊີດຊູນໍ້າໃຈຮັກຊາດ, ຈິດໃຈເອກະລາດ ເປັນເຈົ້າຕົນເອງໃນການສ້າງສາພັດທະນາປະເທດຊາດ. ຜົນສໍາເລັດດັ່ງກ່າວ ໄດ້ມາຍ້ອນການສົມທົບຢ່າງກົມກຽວລະຫວ່າງ ກໍາລັງແຮງສັງລວມພາຍໃນຊາດ ກັບການສະຫນັບສະຫນູນ, ການຮ່ວມມືຊ່ວຍເຫລືອ ຂອງບັນດາປະເທດອ້າຍນ້ອງ ແລະ ເພື່ອນມິດສາກົນ ທັງຢູ່ໃກ້ ແລະຢູ່ໄກ. *ຜົນສໍາເລັດອັນສໍາຄັນດັ່ງກ່າວ ໄດ້ຢັ້ງຢືນຢ່າງຈະແຈ້ງກ່ຽວກັບຄວາມຖືກຕ້ອງຂອງແນວທາງປ່ຽນແປງໃຫມ່ ທີ່ພັກເຮົາ ໄດ້ມີຄວາມກ້າຫານປະດິດສ້າງ ວາງອອກ ຢ່າງທັນການ, ເຊິ່ງປະທານ ໄກສອນ ພົມວິຫານ ຜູ້ນໍາທີ່ເຄົາລົບຮັກ ໄດ້ມີຜົນງານປະກອບສ່ວນອັນໃຫຍ່ຫລວງ ໃນຖານະຜູ້ນໍາພາລິເລີ່ມ ພາລະກິດປ່ຽນແປງໃຫມ ຢູ່ໃນປະເທດເຮົາ.*

ພ້ອມກັບຜົນສໍາເລັດອັນພົ້ນເດັ່ນ ແລະ ເປັນພື້ນຖານດັ່ງກ່າວນັ້ນ, ລາຍງານການເມືອງ ກໍ່ໄດ້ຍົກໃຫ້ເຫັນແຈ້ງກ່ຽວກັບຄວາມບົກພ່ອງ ແລະ ຂໍ້ຄົງຄ້າງ, ກໍຄືສາເຫດຕົ້ນຕໍຈໍານວນຫນຶ່ງ ທີ່ພາໃຫ້ການຈັດຕັ້ງປະຕິບັດ ແນວທາງແຜນນະໂຍບາຍຂອງພັກ ບໍ່ທັນໄດ້ຮັບຜົນຫລາຍເທົ່າທີ່ຄວນ, ກ່ອນອື່ນຫມົດ ແມ່ນຄວາມເປັນເຈົ້າການ, ຄວາມຮັບຜິດຊອບແລະນໍ້າໃຈບຸກບືນສູ້ຊົນເຮັດແທ້ທໍາຈິງ ຂອງຄະນະພັກ, ອໍານາດການປົກຄອງ ກໍຄືຂອງພະນັກ ງານສະມາຊິກພັກ ຂອງພວກເຮົາ ຍັງບໍ່ທັນສູງ; ການລະດົມກໍາລັງແຮງສັງລວມ ຂອງທົ່ວສັງຄົມ ເຂົ້າໃນການພັດທະນາສ້າງສາປະເທດຊາດ ຍັງເຮັດບໍ່ທັນຕັ້ງຫນ້າ ແລະເຮັດບໍ່

ໄດ້ເຕັມເມັດເຕັມໜ່ວຍ; ການປະສານສົມທົບລະຫວ່າງຂະແໜງການຕ່າງໆ ທີ່ກ່ຽວຂ້ອງ ແລະລະຫວ່າງສາຍຕັ້ງກັບສາຍຂວາງ ຍັງບໍ່ທັນກົມກຽວເປັນເອກະພາບ, ການນຳພາ-ຊີ້ນຳ ບໍ່ທັນເລິກເຊິ່ງແທດຕົວຈິງ, ພະຍາດອາດຍາສິດ ແລະການຟຸມເຟືອຍ ຍັງບໍ່ທັນໄດ້ຮັບການ ແກ້ໄຂຢ່າງເຖິງຖອງ.

ບົນພື້ນຖານ ການໄຈ້ແຍກຜົນໄດ້ຮັບ ແລະ ຂໍ້ຂາດຕົກບົກພ່ອງ, ລາຍງານການ ເມືອງ ກໍໄດ້ມີຂໍ້ສະຫລຸບ ແລະ ຖອດຖອນບົດຮຽນ ຈາກພຶດຕິກຳອັນມີຊີວິດຊີວາ ແຫ່ງ ການດຳເນີນພາລະກິດປ່ຽນແປງໃໝ່ ໃນ 10 ປີ ຜ່ານມາຄື :

*ໜຶ່ງ, ການເພີ່ມທະວີຄວາມສາມັກຄີເປັນເອກະພາບ ໃນທົ່ວພັກ, ທົ່ວປວງຊົນ ຕິດແໜ້ນກັບການເຊີດຊູນ້ຳໃຈຮັກຊາດ, ເສີມຂະຫຍາຍຈິດໃຈເອກະລາດ, ເປັນເຈົ້າ ຕົນເອງ, ເພິ່ງຕົນເອງ ແລະສ້າງຄວາມເຂັ້ມແຂງດ້ວຍຕົນເອງ ແມ່ນປັດໄຈຕັດສິນຜົນ ສຳເລັດ ຂອງພາລະກິດປ່ຽນແປງໃໝ່.*

*ສອງ, ອີງໃສ່ປະຊາຊົນ, ເສີມຂະຫຍາຍກຳລັງແຮງອັນມະຫາສານ ຂອງປະຊາ ຊົນ ແລະເຮັດທຸກສິ່ງທຸກຢ່າງ ເພື່ອຜົນປະໂຫຍດ ຂອງປະຊາຊົນ.*

*ສາມ, ການຮັບປະກັນສະຖຽນລະພາບທາງການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ແມ່ນເງື່ອນໄຂອັນຈຳເປັນສຳລັບການປ່ຽນແປງ ໃໝ່. ແຕ່ຢາກໃຫ້ພາລະກິດປ່ຽນແປງໃໝ່ ມີຜົນສຳເລັດ ຕ້ອງດຳເນີນໄປຢ່າງຄົບ ຊຸດ, ຮອບຄອບດ້ວຍບາດກ້າວອັນເໝາະສົມ.*

*ສີ່, ການເພີ່ມທະວີບົດບາດນຳພາ ຂອງພັກໃນທຸກຂົງເຂດວຽກງານ ແລະການ ເຊີດຊູຄວາມສັກສິດແຫ່ງການຄຸ້ມຄອງຂອງລັດ* ແມ່ນເງື່ອນໄຂຮັບປະກັນ ໃຫ້ການປ່ຽນ ແປງໃໝ່ ດຳເນີນໄປຢ່າງຖືກຕ້ອງ ຕາມແນວທາງ ແລະຈຸດໝາຍຂອງພັກ.

*ຫ້າ, ການເສີມຂະຫຍາຍກຳລັງແຮງ ຂອງຊາດ ສົມທົບກັບກຳລັງແຮງຂອງຍຸກ ສະໄໝ; ຍາດແຍ່ງເອົາການສະໜັບສະໜູນ ແລະ ການຊ່ວຍເຫລືອຈາກສາກົນ ຢ່າງມີຫລັກການ ແມ່ນສິ່ງທີ່ຂາດບໍ່ໄດ້ ສຳລັບການສ້າງສາພັດທະນາປະເທດຊາດ.*

ຄອງ ຂອງລັດ ຕາມກົນໄກເສດຖະກິດຕະຫລາດ ທີ່ທັງຮ່ວມມື ຮ່ວມສຳພັນກັນ, ທັງແຂ່ງຂັນກັນ, ແຕ່ຫາກມີພັນທະຮ່ວມກັນ ຄືປະກອບສ່ວນເຂົ້າໃນການພັດທະນາປະເທດໃຫ້ຈະເລີນຮຸ່ງເຮືອງ.

ເພື່ອສືບຕໍ່ແຜນນະໂຍບາຍຫັນເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າ, ຈຳເປັນ ຕ້ອງມີນະໂຍບາຍສົ່ງເສີມ ພາກສ່ວນເສດຖະກິດຕ່າງໆ ຢ່າງເປັນລະບົບຄົບຊຸດກວ່າເກົ່າ, ໃນນັ້ນ ຖືເອົາຄອບຄົວເປັນຈຸດເລີ່ມ, ເຮັດໃຫ້ຄອບຄົວຕົວແບບດ້ານການຜະລິດ, ການປຸງແຕ່ງເປັນສິນຄ້າ ແລະ ການບໍລິການ ຂະຫຍາຍຕົວຢ່າງແຜ່ຫລາຍ. ພ້ອມດຽວກັນນີ້ ກໍ່ສົ່ງເສີມພາກສ່ວນເສດຖະກິດແບບຮ່ວມມືຂອງປະຊາຊົນທີ່ມີຫລາຍຮູບການ, ຫລາຍຂະໜາດ ແລະ ຫລາຍລະດັບທີ່ແຕກຕ່າງກັນ, ເຊິ່ງຈັດຕັ້ງຂຶ້ນບົນພື້ນຖານຄວາມສະໝັກໃຈ ແລະ ຕາມຄວາມຮຽກຮ້ອງຕ້ອງການຕົວຈິງ ໂດຍແທດເໝາະກັບຈຸດພິເສດ ຂອງແຕ່ລະບ່ອນ. ເພື່ອເພີ່ມຄວາມສາມາດດ້ານການລົງທຶນ, ຍົກລະດັບເຕັກນິກ ແລະເຕັກໂນໂລຢີການຜະລິດ, ການປຸງແຕ່ງ ແລະການບໍລິການ ໃຫ້ນັບມື້ນັບທັນສະໄໝ ແລະນຳໃຊ້ບົດຮຽນທີ່ກ້າວໜ້າເຂົ້າໃນການຄຸ້ມຄອງ, ພວກເຮົາສືບຕໍ່ ຊຸກຍູ້ສົ່ງເສີມ ຮູບການຮ່ວມສຳພັນລະຫວ່າງພາກສ່ວນເສດຖະກິດຕ່າງໆ ເຊັ່ນ ລະຫວ່າງລັດກັບເອກະຊົນ, ລະຫວ່າງເອກະຊົນດ້ວຍກັນ, ລະຫວ່າງພາຍໃນກັບຕ່າງປະເທດ. ພວກເຮົາ ສືບຕໍ່ປັບປຸງ ແລະກໍ່ສ້າງພາກສ່ວນເສດຖະກິດ ຂອງລັດໃຫ້ມີປະສິດທິຜົນສູງຂຶ້ນ ດ້ວຍການຍົກລະດັບເຕັກນິກ, ເຕັກໂນໂລຢີການຜະລິດ ແລະ ການຄຸ້ມຄອງໃຫ້ທັນສະໄໝ, ທັງນີ້ກໍເພື່ອສາມາດດຳລົງບົດບາດເປັນຫລັກແຫລ່ງໃນບາງຂະແໜງການຜະລິດ, ການບໍລິການ ແລະຜະລິດຕະພັນ ທີ່ເປັນທ່າແຮງ ເພື່ອປະຕິບັດ ຈຸດໝາຍທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມຂອງພັກ ແລະ ລັດເຮົາໄດ້ດີກວ່າເກົ່າ, ມີກຳລັງແຮງຮ່ວມກັບພາກສ່ວນເສດຖະກິດອື່ນໆ ເພື່ອພັດທະນາປະເທດຊາດຢ່າງຕໍ່ເນື່ອງ ແລະໜັກແໜ້ນ.

ເພື່ອເສີມຂະຫຍາຍທ່າແຮງ ແລະຄວາມອາດສາມາດບົ່ມຊ້ອນ ຂອງປະເທດເຮົາເວົ້າລວມ ແລະ ຂອງເຂດແຄວ້ນຕ່າງໆ ເວົ້າສະເພາະ ພັກເຮົາສືບຕໍ່ແຜນນະໂຍບາຍສ້າງ *ໂຄງປະກອບເສດຖະກິດກະສິກຳ-ປ່າໄມ້ ຕິດແໜ້ນກັບອຸດສາຫະກຳ ແລະການບໍລິການຕັ້ງແຕ່ຫົວທີ, ຖືເອົາການກະສິກຳ-ປ່າໄມ້ເປັນພື້ນຖານ ແລະເອົາການສ້າງອຸດສາ*

*ທະກຳທີ່ເປັນທ່າແຮງ ເປັນຈຸດສຸມເລັ່ງລັດ; ຊຸກຍູ້ສົ່ງເສີມການພັດທະນາຂະແໜງບໍລິການ ໃຫ້ຂະຫຍາຍຕົວຢ່າງແຂງແຮງ ໄປຕາມທິດທັນສະໄໝຂຶ້ນເປັນກ້າວໆ .*

ເພື່ອເຮັດໃຫ້ໂຄງປະກອບ ຂະແໜງເສດຖະກິດ ດັ່ງກ່າວນັ້ນ ປະກົດເປັນຈິງ ພັກເຮົາຖືສຳຄັນ ແລະສືບຕໍ່ຊຸກຍູ້ຢ່າງແຂງແຮງ ການພັດທະນາເສດຖະກິດ-ສັງຄົມ ຕາມເຂດແຄວ້ນ ຕາມທິດນຳ ສຸມໃສ່ພັດທະນາເຂດແຄວ້ນ ທີ່ມີທ່າແຮງພຽງພໍ ແລະມີເງື່ອນໄຂສະດວກກ່ອນ ແນໃສ່ສ້າງເປັນພື້ນຖານ ແລະເປັນກຳລັງແຮງຊ່ວຍຊູຍູ້ໜູນ ເຂດແຄວ້ນອື່ນໃຫ້ຂະຫຍາຍຕົວໄປນຳກັນ ໂດຍສະເພາະແມ່ນບໍລິເວນພູດອຍ ແລະ ຖານທີ່ໝັ້ນເກົ່າ ທີ່ຍັງຫລ້າຫລັງໃນປັດຈຸບັນ. ສະນັ້ນ ຕ້ອງກຳນົດໂຄງປະກອບເສດຖະກິດ ແລະ ວາງແຜນພັດທະນາໃຫ້ສອດຄ່ອງ ກັບແຕ່ລະເຂດແຄວ້ນ, ທັງຕິດແທ້ນັບກັບແຜນລວມ ຂອງການພັດທະນາທົ່ວປະເທດ, ເຮັດໃຫ້ການພັດທະນາເຂດແຄວ້ນ ຂອງປະເທດເຮົາ ຕິດພັນກັບໂຄງການ ພັດທະນາລະຫວ່າງຊາດ ໃນອະນຸພາກພື້ນ. ໃນຕໍ່ໜ້ານີ້ ໃຫ້ຮີບຮ້ອນຄົ້ນຄວ້າສ້າງແຜນຍຸດທະສາດພັດທະນາປະເທດໄລຍະຍາວ (ແຜນຍຸດທະສາດຮອດປີ2020) ເພື່ອຜັນຂະຫຍາຍມະຕິ ຂອງກອງປະຊຸມໃຫຍ່ ຄັ້ງທີ VI ເປັນທິດທາງ, ໜ້າທີ່ ແລະຄາດໝາຍສູ້ຊົນແຕ່ລະດ້ານ.

ເພີ່ມທະວີບົດບາດ ແລະ ຄວາມສຳຄັນຂອງແຜນການປີ ແລະ 5 ປີ ເພື່ອກຳນົດທິດແກ່ການພັດທະນາ ແລະສ້າງຄວາມກົມກຽວ ລະຫວ່າງເສດຖະກິດກັບການເມືອງ, ວັດທະນະທຳ-ສັງຄົມ ແລະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ລະຫວ່າງທົ່ງພຽງກັບພູດອຍ ແລະລະຫວ່າງເສດຖະກິດກັບສິ່ງແວດລ້ອມ, ໂດຍມີການຄິດໄລ່ຄວາມສາມາດດ້ານທຶນຮອນ, ພາຫະນະ ແລະ ກຳລັງຄົນ ໃຫ້ພໍກັບຄວາມຈຳເປັນ ໃນການປະຕິບັດໂຄງການ. ສືບຕໍ່ປັບປຸງ ແລະເພີ່ມທະວີການຄຸ້ມຄອງ ຂອງລັດຕໍ່ເສດຖະກິດແຫ່ງຊາດດ້ວຍກົດໝາຍ, ດ້ວຍລະບົບນະໂຍບາຍ ແລະເຄື່ອງມືຄຸ້ມຄອງອື່ນໆ ຢ່າງຄົບຊຸດ, ໃຫ້ທິດແນະນຳ ພາກສ່ວນເສດຖະກິດຕ່າງໆ ຂະຫຍາຍຕົວໄປຕາມໂຄງປະກອບ ແລະ ແຜນກຳນົດລວມຂອງການພັດທະນາເສດຖະກິດແຫ່ງຊາດ, ທັງສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ຫົວໜ່ວຍຜະລິດທຸລະກິດ ຂອງພາກສ່ວນເສດຖະກິດຕ່າງໆ ໄດ້ເຄື່ອນໄຫວຢ່າງມີປະສິດທິພາບ ແລະສາມາດແຂ່ງຂັນກັບຕະຫລາດຕ່າງປະເທດໄດ້.

ນອກຈາກແຜນນະໂຍບາຍລວມໃນຂົງເຂດເສດຖະກິດດັ່ງທີ່ກ່າວມານັ້ນ, ລາຍງານການເມືອງຍັງໄດ້ກຳນົດທິດທາງໜ້າທີ່ວຽກງານໃນດ້ານຕ່າງໆ ຢ່າງເປັນລະບົບ ຄື : ໄດ້ຖືວຽກງານພັດທະນາຊົນນະບົດ ເປັນວຽກທີ່ມີຄວາມໝາຍຍຸດທະສາດ ໂດຍຈະສຸມໃສ່ສ້າງເສດຖະກິດຄອບຄົວຊາວກະສິກອນ, ຂະຫຍາຍຄອບຄົວຕົວແບບ ແລະສ້າງໃຫ້ເກີດມີກຸ່ມເສດຖະກິດ-ວັດທະນະທຳ ເຊິ່ງໃນນັ້ນ ການຜະລິດເປັນສິນຄ້າຂະຫຍາຍຕົວ, ປະຊາຊົນມີຄວາມຮູ້, ມີພະລະນາໄມສົມບູນ ແລະ ຊີວິດການເປັນຢູ່ດີຂຶ້ນເທື່ອລະກ້າວ, ບ້ານຊ່ອງມີຄວາມສະຫງົບ ແລະລະບົບການເມືອງຢູ່ຂັ້ນບ້ານ ມີຄວາມໜັກແໜ້ນ. ຢາກໃຫ້ໄດ້ແນວນັ້ນ ແມ່ນຕ້ອງເສີມຂະຫຍາຍຈິດໃຈເປັນເຈົ້າ ຂອງປະຊາຊົນ ໂດຍເອົາໃຈໃສ່ຊຸກຍູ້ການຜະລິດຂອງຄອບຄົວ ແລະສ້າງນັກພັດທະນາກັບທີ່ໃຫ້ໄດ້, ພ້ອມກັນນັ້ນລັດຕ້ອງມີນະໂຍບາຍຊ່ວຍໜູນ ແລະສົ່ງເສີມໃຫ້ພາກສ່ວນເສດຖະກິດຕ່າງໆເຂົ້າຮ່ວມ. ສະເພາະເຂດພູດອຍຊົນເຜົ່າທີ່ທຸລະກັນດານ ແລະຖານທີ່ໝັ້ນເກົ່າ ລັດຕ້ອງເປັນຜູ້ຊ່ວຍໜູນຕົ້ນຕໍ, ທັງປຸກລະດົມກຳລັງແຮງຂອງທົ່ວສັງຄົມເຂົ້າຮ່ວມ.

ກ່ຽວກັບການກະສິກຳປ່າໄມ້, ຕ້ອງເອົາໃຈໃສ່ພັດທະນາຢ່າງຕັ້ງໜ້າ ໂດຍຖືເອົາການຍົກສະມັດຖະພາບການຜະລິດໃຫ້ສູງຂຶ້ນ ຕິດແໜ້ນກັບການປົກປັກຮັກສາ, ຟື້ນຟູລະນະດິນ, ປ່າໄມ້ ແລະນ້ຳ ໃຫ້ອຸດົມສົມບູນ ເປັນໜ້າທີ່ຕົ້ນຕໍ. ສູ້ຊົນຜະລິດເຂົ້າໃຫ້ກຸ້ມກິນ ແລະມີແຮໄວ້ສ່ວນໜຶ່ງ.

ພ້ອມກັບການກະສິກຳ, ພວກເຮົາຕ້ອງຊຸກຍູ້ຢ່າງແຂງແຮງ ການພັດທະນາອຸດສາຫະກຳທີ່ເປັນທ່າແຮງ ເຊັ່ນ ຂະແໜງພະລັງງານໄຟຟ້າ ແລະບໍ່ແຮ່ ແນໃສ່ສ້າງການສະສົມເບື້ອງຕົ້ນ ແລະ ສ້າງປະຖົມປັດໄຈ ສຳລັບການຫັນເປັນອຸດສາຫະກຳໃນຂັ້ນຕໍ່ໄປ; ເຮັດໃຫ້ການຄົມມະນາຄົມ ແລະ ໂທລະຄົມມະນາຄົມ ທີ່ພວກເຮົາຖືເປັນຂະແໜງປາຍແຫລມມີຄວາມທັນສະໄໝ, ສະດວກວ່ອງໄວ ແລະ ທະລຸໄປສູ່ຈຸດສຳຄັນຕ່າງໆ ໃນທົ່ວປະເທດ, ທັງເຊື່ອມຕໍ່ເຂົ້າກັບປະເທດໃກ້ຄຽງ ເປັນກ້າວໆ ເພື່ອເສີມຂະຫຍາຍທ່າແຮງ ດ້ານທີ່ຕັ້ງພູມສາດຂອງປະເທດເຮົາ.

ພວກເຮົາມີແຜນນະໂຍບາຍ ຊຸກຍູ້ຂະແໜງການບໍລິການອື່ນໆ ໃຫ້ຂະຫຍາຍຕົວໄປຕາມທິດທັນສະໄໝ ແລະ ມີຄຸນນະພາບດີຂຶ້ນເລື້ອຍໆ. ເພີ່ມທະວີຄວາມສັກສິດ ໃນ

ການຄຸ້ມຄອງເສດຖະກິດຕະຫລາດດ້ວຍການຕັ້ງໜ້າປັບປຸງນະໂຍບາຍດ້ານການຄ້າ, ການເງິນ ແລະເງິນຕາ, ພ້ອມທັງຈັດຕັ້ງປະຕິບັດນະໂຍບາຍ ເຫລົ່ານັ້ນຢ່າງເຂັ້ມງວດ ແນໃສ່ເຮັດໃຫ້ຕະຫລາດ ມີຄວາມປົກກະຕິ ໂດຍພື້ນຖານ, ຮັກສາສະຖຽນລະພາບດ້ານເງິນຕາ, ຄວບຄຸມລາຄາສິນຄ້າ ແລະອັດຕາເງິນເຟີ້ ບໍ່ໃຫ້ເພີ່ມຂຶ້ນແບບຮ້າຍແຮງ, ຮັກສາຄ່າ ແລະຄວາມສາມາດຊື້ຂອງເງິນກີບ, ເຮັດໃຫ້ອັດຕາແລກປ່ຽນລະຫວ່າງເງິນກີບກັບເງິນຕາຕ່າງປະເທດ ມີຄວາມສະຫງົບປົກກະຕິ. ພວກເຮົາສືບຕໍ່ແຜນນະໂຍບາຍເປີດກວ້າງການຮ່ວມມືທາງດ້ານເສດຖະກິດ ກັບພາຍນອກ ແລະສົ່ງເສີມການລົງທຶນ ຂອງຕ່າງປະເທດ ຢ່າງຕັ້ງໜ້າ ແນໃສ່ສົມທົບກຳລັງແຮງພາຍໃນກັບກຳລັງແຮງພາຍນອກ ຢ່າງກົມກຽວ ເພື່ອສ້າງຖ່ວງທ່າໃຫມ່ໃນການພັດທະນາ ແລະເຮັດໃຫ້ເສດຖະກິດ ຂອງປະເທດເຮົາ ເຊື່ອມເຂົ້າກັບສາກົນ ເທື່ອລະກ້າວ.

ໂດຍຍຶດຫມັ້ນໃນທັດສະນະພື້ນຖານ ແລະຈຸດຫມາຍຂອງຕົນທີ່ວ່າ ເຮັດທຸກສິ່ງທຸກຢ່າງ ເພື່ອຄວາມສົມບູນພູນສຸກ ຂອງປະຊາຊົນບັນດາເຜົ່າ, ລາຍງານການເມືອງ ໄດ້ກຳນົດແຜນນະໂຍບາຍອັນຈະແຈ້ງ ກ່ຽວກັບການພັດທະນາສັງຄົມ ໄປຄຽງຄູ່ ກັບການຂະຫຍາຍເສດຖະກິດ, ເຮັດໃຫ້ສັງຄົມມີຄວາມສີວິໄລຍຸດຕິທຳຍິ່ງຂຶ້ນ. ພັກເຮົາໃຫ້ຄວາມສຳຄັນຕໍ່ການພັດທະນາຊັບພະຍາກອນມະນຸດ ໂດຍກຳນົດຈຸດຫມາຍສ້າງຄົນ ໃຫ້ເປັນພົນລະເມືອງດີ, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ ແລະມີສະຕິເຄົາລົບກົດຫມາຍ; ມີຄວາມຮູ້, ມີວິຊາຊີບ, ມີສຸຂະພາບ ພະລະນາໄມສົມບູນ ແລະ ມີຄວາມສີວິໄລທາງດ້ານຈິດໃຈ. ການສຶກສາ ເຊິ່ງແມ່ນຂະແຫນງໃຈກາງ ຂອງການພັດທະນາຊັບພະຍາກອນມະນຸດ ຕ້ອງສຸມໃສ່ການຍົກລະດັບຄວາມຮູ້ ຂອງປະຊາຊົນ, ປະກອບວິຊາອາຊີບໃຫ້ລູກຫລານ ຂອງປະຊາຊົນບັນດາເຜົ່າ ແລະສ້າງຖັນແຖວປັນຍາຊົນ ໃຫ້ນັບມື້ນັບຫລາຍຂຶ້ນເພື່ອຕອບສະຫນອງຄວາມຕ້ອງການດ້ານບຸກຄະລາກອນ ທີ່ມີຄວາມຮູ້ຄວາມສາມາດ ແກ່ການພັດທະນາປະເທດ ໃນຊຸມປີຕໍ່ຫນ້າ. ຂະຫຍາຍຕາຫນ່າງການບໍລິການດ້ານສາທາລະນະສຸກໃຫ້ປະຊາຊົນເຜົ່າຕ່າງໆ ນັບມື້ນັບທົ່ວເຖິງ ແລະມີຄຸນນະພາບດີຂຶ້ນ; ຊຸກຍູ້ຂະບວນການກິລາກາຍະກຳໃນຫມູ່ມະຫາຊົນ ໃຫ້ຂະຫຍາຍຕົວຢ່າງກວ້າງຂວາງ. ພ້ອມກັນນັ້ນ ກໍ່ເອົາໃຈໃສ່ຕໍ່ການປະຕິບັດລະບອບນະໂຍບາຍຕ່າງໆ ຕໍ່ລັດຖະກອນ, ຕໍ່ພະນັກງານບຳນານ, ຕໍ່ຜູ້ທີ່ມີຄຸນງາມຄວາມດີ ແລະຄອບຄົວຂອງຜູ້ທີ່ເສຍສະຫຼະຊີວິດ ເພື່ອພາລະກິດປະ

ຕິວັດ ດ້ວຍກຳລັງແຮງຂອງລັດ ສົມທົບກັບການປຸກລະດົມການປະກອບສ່ວນຈາກທົ່ວສັງຄົມ; ແກ້ໄຂບັນຫາແຮງງານດ້ວຍມາດຕະການ ທີ່ເປັນລະບົບຄົບຊຸດ; ຮັບປະກັນຄວາມຍຸດຕິທຳສັງຄົມໃຫ້ໄດ້ດີກວ່າເກົ່າ. ປະຕິບັດນະໂຍບາຍເຜົ່າຊົນຢ່າງຈິດຈໍ່ ເພື່ອເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ ແລະຄວາມເປັນເອກະພາບ ຂອງຊາດໃຫ້ແໜ້ນແຟ້ນຍິ່ງຂຶ້ນ; ຊຸກຍູ້ ແລະສົ່ງເສີມໃຫ້ທົ່ວສັງຄົມ ເຂົ້າຮ່ວມໃນການປົກປັກຮັກສາ ແລະເສີມຂະຫຍາຍມູນມໍລະດົກວັດທະນະທຳ ຂອງຊາດ ແລະຂອງເຜົ່າຕ່າງໆ ຕິດພັນກັບການຮັບເອົາສິ່ງທີ່ດີງາມ ແລະກ້າວໜ້າຂອງໂລກ; ສ້າງວັດທະນະທຳທີ່ມີລັກສະນະຊາດ, ລັກສະນະມະຫາຊົນ ແລະກ້າວໜ້າ.

ລາຍງານການເມືອງໄດ້ເນັ້ນເຖິງຄວາມສຳຄັນຂອງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະໄດ້ຢືນຢັນ ກ່ຽວກັບການສືບຕໍ່ປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ, ເຮັດໃຫ້ວຽກງານດັ່ງກ່າວ ກາຍເປັນສະຕິ ແລະ ເປັນຄວາມຮັບຜິດຊອບຂອງປະຊາຊົນ, ຂອງພະນັກງານ ສະມາຊິກພັກ, ຂອງສຳນັກງານ, ອົງການ, ຫົວໜ່ວຍຜະລິດທຸລະກິດ ແລະຮາກຖານຕ່າງໆ ໃນທົ່ວປະເທດ.

ໃນດ້ານການຕ່າງປະເທດ, ພວກເຮົາຈະສືບຕໍ່ຍຶດໝັ້ນ ໃນແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະຮ່ວມມືກັບນາໆປະເທດ ບົນພື້ນຖານຫລັກການເຄົາລົບເອກະລາດ, ອະທິປະໄຕ ແລະບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ ແລະກັນ, ສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະຢູ່ຮ່ວມກັນໂດຍສັນຕິ.

ເພີ່ມທະວີສາຍພົວພັນມິດຕະພາບ, ຄວາມສາມັກຄີພິເສດອັນເປັນມູນເຊື້ອ ແລະ ການຮ່ວມມືອັນເກີດດອກອອກຜົນກັບສາທາລະນະລັດສັງຄົມນິຍົມຫວຽດນາມ; ເສີມຂະຫຍາຍຄວາມສາມັກຄີ ມິດຕະພາບ, ການຮ່ວມມືຮອບດ້ານ ແລະ ການສະໜັບສະໜູນຊ່ວຍເຫລືອກັນ ກັບສາທາລະນະລັດປະຊາຊົນຈີນ ແລະປະເທດສັງຄົມນິຍົມອື່ນໆ. ຖືສຳຄັນການເສີມສ້າງມິດຕະພາບ ແລະການຂະຫຍາຍການຮ່ວມມື ກັບບັນດາປະເທດໃກ້ຄຽງ, ສືບຕໍ່ຕັ້ງໜ້າກະກຽມເງື່ອນໄຂອັນຈຳເປັນ ສຳລັບການເຂົ້າເປັນສະມາຊິກອາຊຽນ ແລະ ເປັນເຈົ້າການເຄື່ອນໄຫວຮ່ວມກັບບັນດາປະເທດສະມາຊິກ. ພ້ອມກັນນັ້ນ ກໍ່ເປີດກວ້າງການພົວພັນຮ່ວມມືກັບປະເທດຕ່າງໆ ໃນໂລກ, ກັບສະຖາບັນການເງິນ ແລະອົງການຈັດ

ຕັ້ງທີ່ບໍ່ແມ່ນຂອງລັດຖະບານ; ປະກອບສ່ວນຢ່າງສົມກຽດເຂົ້າໃນພາລະກິດສັນຕິພາບ, ມິດຕະພາບ ແລະການຮ່ວມມື ເພື່ອການພັດທະນາຂອງອົງການສະຫະປະຊາຊາດ ແລະບັນດາອົງການຈັດຕັ້ງວິຊາສະເພາະຂອງອົງການດັ່ງກ່າວ, ຂອງຂະບວນການບໍ່ຮ່ວມກຸ່ມ ແລະຂອງບັນດາປະເທດທີ່ໃຊ້ພາສາຝະລັ່ງ. ເປີດກວ້າງການພົວພັນ ກັບບັນດາພັກກຳອຳນາດ, ພັກການເມືອງ ແລະຂະບວນການຕ່າງໆ ບົນພື້ນຖານການເຄົາລົບ ເອກະລາດ ແລະຄວາມເປັນເຈົ້າຕົນເອງຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ປະກອບສ່ວນເຂົ້າໃນການເພີ່ມທະວີມິດຕະພາບ ແລະການຮ່ວມມືລະຫວ່າງລັດຕໍ່ລັດ.

ລາຍງານການເມືອງໄດ້ກຳນົດແຜນນະໂຍບາຍ ກ່ຽວກັບການປັບປຸງ ແລະກໍ່ສ້າງລັດເຮົາໃຫ້ເປັນລັດຂອງປະຊາຊົນ, ໂດຍປະຊາຊົນ ແລະເພື່ອປະຊາຊົນ, ເສີມຂະຫຍາຍພາລະບົດບາດຂອງແຕ່ລະອົງການອຳນາດແຫ່ງລັດໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ, ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະລັດໃຫ້ເກີດດອກອອກຜົນຫລາຍຂຶ້ນ, ເຮັດໃຫ້ລະບອບປະຊາທິປະໄຕປະຊາຊົນມີຄວາມໜັກແໜ້ນໝັ້ນຄົງ.

ລາຍງານການເມືອງໄດ້ຖືວຽກງານມະຫາຊົນ ແລະວຽກງານແນວໂຮມເປັນວຽກທີ່ມີຄວາມສຳຄັນຍຸດທະສາດ, ໂດຍໄດ້ເລັ່ງທວງ ໃຫ້ບັນດາອົງການຈັດຕັ້ງມະຫາຊົນ ຂອງພັກຮີບຮ້ອນປັບປຸງຕົນເອງ ແລະ ປະຕິບັດພາລະບົດບາດຢ່າງຕັ້ງໜ້າກວ່າເກົ່າ ເພື່ອເສີມຂະຫຍາຍສິດເປັນເຈົ້າແລະ ປົກປ້ອງຜົນປະໂຫຍດອັນຊອບທຳ ຂອງມະຫາຊົນ, ລະດົມກຳລັງແຮງສັງລວມຂອງທົ່ວສັງຄົມໃຫ້ໄດ້ຢ່າງກວ້າງຂວາງເຂົ້າໃນພາລະກິດປ່ຽນແປງໃໝ່. ພ້ອມກັນນັ້ນ ກໍ່ສືບຕໍ່ປະຕິບັດນະໂຍບາຍຕໍ່ພີ່ນ້ອງຊາວລາວ ທີ່ຢູ່ຕ່າງປະເທດ ແລະຈະສ້າງເງື່ອນໄຂສະດວກຕາມລະບຽບກົດໝາຍສຳລັບຜູ່ທີ່ມີທຶນຮອນ ແລະມີຄວາມປະສົງ ຢາກມາປະກອບສ່ວນຮ່ວມກັບພີ່ນ້ອງຮ່ວມຊາດ ຢູ່ພາຍໃນປະເທດ ເພື່ອສ້າງສາປິຕຸພູມ ຂອງພວກເຮົາໃຫ້ຈະເລີນກ້າວໜ້າຍິ່ງໆຂຶ້ນ. ດ້ານໜຶ່ງອີກ ກໍ່ຈະຮັບປະກັນສິດທິ ແລະ ຜົນປະໂຫຍດອັນຊອບທຳ ຂອງຊາວຕ່າງດ້າວ ທີ່ດຳລົງຊີວິດຢູ່ ສປປລາວ ແລະ ຈະສ້າງເງື່ອນໄຂໃຫ້ເຂົາເຈົ້າ ໄດ້ປະກອບສ່ວນ ເຂົ້າໃນການສ້າງສາປະເທດລາວ, ກໍຄືໃນການເສີມຂະຫຍາຍ ສາຍພົວພັນມິດຕະພາບ ລະຫວ່າງ ສປປລາວ ກັບປະເທດຂອງເຂົາເຈົ້າ.

ລາຍງານການເມືອງໄດ້ຖືສຳຄັນເປັນພິເສດ ວຽກງານກໍ່ສ້າງພັກ. ໄດ້ຢືນຢັນ ກ່ຽວກັບການສືບຕໍ່ປັບປຸງກໍ່ສ້າງພັກ ໃຫ້ມີຄວາມສາມາດນຳພາ ແລະ ມີກຳລັງແຮງສູ້ຮົບໃຫມ່ເລື້ອຍໆ ເພື່ອດຳລົງບົດບາດເປັນແກນນຳທີ່ແທ້ຈິງໃນລະບົບການເມືອງ, ເປັນຕົວແທນແຫ່ງຜົນປະໂຫຍດຂອງຊົນຊັ້ນກຳມະກອນ, ຂອງຊາວຜູ້ອອກແຮງງານ ແລະຂອງຫມົດທັງຊາດ. ພ້ອມກັນນັ້ນ ກໍ່ໄດ້ເລັ່ງທວງໃຫ້ຄະນະພັກຂັ້ນຕ່າງໆ ແລະສະມາຊິກພັກທຸກຄົນຍຶດຫມັ້ນໃນ 6 ຫລັກການພື້ນຖານ ຂອງພາລະກິດປ່ຽນແປງໃຫມ່, ຖືອັນນີ້ ເປັນທິດນຳ ແລະເປັນໄມ້ຫລາວັດແທກຄຸນນະພາບແຫ່ງການເຄື່ອນໄຫວ ຂອງອົງຄະນະພັກທຸກຂັ້ນ. ລາຍງານການເມືອງກໍໄດ້ກຳນົດທິດທາງວຽກງານ ກ່ຽວກັບການເພີ່ມທະວີບົດບາດ ແລະ ຄວາມສາມາດນຳພາຂອງພັກຕໍ່ທົ່ວສັງຄົມ ໂດຍເນັ້ນຫນັກເຖິງການບູລະນະແນວທາງ ຂອງພັກຢ່າງບໍ່ຢຸດຢັ້ງ, ດຳເນີນວຽກງານອົບຮົມການເມືອງນຳພາແນວຄິດ ຢ່າງຕັ້ງຫນ້າ ທັງຢູ່ພາຍໃນພັກ ແລະໃນທົ່ວສັງຄົມ, ເພີ່ມທະວີຄວາມເປັນແບບຢ່າງນຳຫນ້າຂອງສະມາຊິກພັກໃນວຽກງານ ແລະໃນການດຳລົງຊີວິດ ທີ່ປອດໃສ; ເອົາໃຈໃສ່ກຳແຫນ້ນພະນັກງານ ແລະ ເພີ່ມທະວີການກວດກາຂອງພັກ. ໃນດ້ານຫນຶ່ງອີກ ກໍ່ຕ້ອງຍົກສູງຄຸນນະພາບຂອງວຽກງານແນວຄິດທິດສະດີຂຶ້ນຕື່ມ, ຕັ້ງຫນ້າບູລະນະການຈັດຕັ້ງ ແລະ ດັດແປງແບບວິທີນຳພາ ຂອງພັກໃຫ້ສອດຄ່ອງກັບເງື່ອນໄຂໃຫມ່. ກ່ອນອື່ນຫມົດ ຕ້ອງເອົາໃຈໃສ່ປັບປຸງ ແລະກໍ່ສ້າງຫນ່ວຍພັກໃຫ້ເປັນຫນ່ວຍພັກທີ່ເຂັ້ມແຂງ ຮູ້ນຳພາຮອບດ້ານ; ປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະພັກຂັ້ນຕ່າງໆ ຕິດພັນກັບການດັດແປງແບບວິທີນຳພາ ໂດຍຍຶດຫມັ້ນໃນຫລັກການລວມສູນປະຊາທິປະໄຕ, ເພີ່ມທະວີການຕິດແທດກັບຮາກຖານ ແລະ ວຽກງານຕົວຈິງ, ກຳຈັດແກ້ໄຂພະຍາດອາດຍາສິດທຸກຮູບແບບ.

ລາຍງານການເມືອງໄດ້ເນັ້ນເຖິງບົດບາດຕັດສິນຂອງພະນັກງານ ແລະໄດ້ເລັ່ງທວງໃຫ້ດຳເນີນວຽກງານບຳລຸງ ແລະກໍ່ສ້າງພະນັກງານຢ່າງຕັ້ງຫນ້າ ເພື່ອຍົກລະດັບຄຸນນະພາບ ແລະຄວາມສາມາດຂອງພະນັກງານໃຫ້ສູງຂຶ້ນ, ທັງມີຈຳນວນພຽງພໍສຳລັບຄວາມຕ້ອງການຂັ້ນພື້ນຖານ. ພ້ອມກັນນັ້ນ ກໍ່ໄດ້ກຳນົດທັດສະນະ ກ່ຽວກັບການດຳເນີນວຽກງານກວດກາຢ່າງຈະແຈ້ງ ແນໃສ່ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ, ເຮັດໃຫ້ຖັນແຖວພະນັກງານ ສະມາຊິກພັກ ປະຕິບັດຫນ້າທີ່ດ້ວຍຄວາມຈົງຮັກພັກດີ ແລະຊື່ສັດ, ສະກັດກັ້ນ ແລະກຳຈັດປະກົດການຫຍໍ້ທໍ້ຕ່າງໆ ໃຫ້ຫມົດໄປເປັນກ້າວໆ.

ກອງປະຊຸມໃຫຍ່ຮຽກຮ້ອງຄະນະພັກ ແລະອຳນາດການປົກຄອງທຸກຂັ້ນ, ພະນັກງານ, ສະມາຊິກພັກທຸກຄົນ ກ່ອນອື່ນແມ່ນພະນັກງານຫຼັກແຫຼ່ງນຳພາ ຢູ່ແຕ່ລະບ່ອນ ຈົ່ງຕັ້ງໜ້າຄົ້ນຄວ້າເຊື່ອມຊຶມລາຍງານການເມືອງຢ່າງເລິກເຊິ່ງ ເພື່ອຜັນຂະຫຍາຍເປັນມະຕິຂອງຄະນະພັກ, ເປັນໂຄງການ ແລະແຜນການວຽກງານ ຂອງອົງການ, ຂະແໜງການ, ທ້ອງຖິ່ນຂອງຕົນ.

2. ກອງປະຊຸມໃຫຍ່ໄດ້ຟັງການລາຍງານກ່ຽວກັບການເຄື່ອນໄຫວ ນຳພາ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ V ແລະ ໄດ້ຕີລາຄາສູງ ຕໍ່ຄະນະບໍລິຫານງານສູນກາງພັກ ທີ່ໄດ້ມີຄວາມບາກບັ່ນພະຍາຍາມ ເສີມຂະຫຍາຍ ຄວາມສາມາດປະດິດສ້າງຂອງຕົນ ນຳພາທົ່ວພັກ, ທົ່ວປວງຊົນ ຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ ໄດ້ຮັບຜົນຢ່າງໜ້າຊົມຊື່ນຍິນດີ. ພ້ອມກັນນັ້ນ ບັນດາຜູ້ແທນກອງປະຊຸມໃຫຍ່ ກໍ່ໄດ້ປະກອບຄວາມເຫັນຕິຊົມຢ່າງກົງໄປກົງມາຕໍ່ຄວາມບົກພ່ອງຂອງໝູ່ຄະນະກໍຄືສ່ວນບຸກຄົນ ໃນຄະນະບໍລິຫານງານສູນກາງພັກ.

3. ກອງປະຊຸມໃຫຍ່ໄດ້ຮັບຟັງການລາຍງານ ກ່ຽວກັບການດັດແປງກົດລະບຽບຂອງພັກ, ໄດ້ປະກອບຄວາມຄິດຄວາມເຫັນຢ່າງເລິກເຊິ່ງ ແລະ ໄດ້ເປັນເອກະສັນຮັບຮອງເອົາກົດລະບຽບສະບັບດັດແປງ, ທີ່ໄດ້ສິ່ງແສງເຖິງຄວາມສອດຄ່ອງ ຂອງແນວທາງການຈັດຕັ້ງ ກັບແນວທາງການເມືອງ ຂອງພັກໃນໄລຍະໃໝ່. ກົດລະບຽບສະບັບດັດແປງມີຜົນບັງຄັບໃຊ້ ເລີ່ມຕັ້ງແຕ່ ວັນທີ 1 ເດືອນ ພຶດສະພາ ປີ 1996 ເປັນຕົ້ນໄປ.

4. ກອງປະຊຸມໃຫຍ່ໄດ້ເລືອກຕັ້ງຄະນະບໍລິຫານງານສູນກາງພັກ ສະໄໝທີ VI ເພື່ອນຳພາ ແລະຊີ້ນຳການຈັດຕັ້ງປະຕິບັດ ແນວທາງແຜນນະໂຍບາຍ ທີ່ກອງປະຊຸມໃຫຍ່ຄັ້ງທີ VI ວາງອອກໃຫ້ເກີດໝາກເກີດຜົນ. ກອງປະຊຸມຄົບຄະນະຄັ້ງປະຖົມມະລືກ ຂອງຄະນະບໍລິຫານງານສູນກາງພັກ ໄດ້ເປັນເອກະພາບຢ່າງສົມບູນເລືອກຕັ້ງ ສະຫາຍ ຄຳໄຕ ສີພັນດອນ ເປັນປະທານຄະນະບໍລິຫານງານສູນກາງພັກ.

5. ກອງປະຊຸມໃຫຍ່ ຍ້ອງຍໍສັນລະເສີນພະນັກງານ, ສະມາຊິກພັກ, ນັກຮົບ, ປະຊາຊົນທຸກເຜົ່າ ທຸກຊັ້ນຄົນ ແລະພະສົງສາມະເນນ ທີ່ໄດ້ປະກອບສ່ວນ ດ້ວຍສະຕິປັນຍາ,

ເຫື່ອແຮງ, ກຳລັງຊັບ ແລະກຳລັງວັດຖຸ ຕະຫລອດເຖິງຊີວິດເລືອດເນື້ອ ເພື່ອຜົນສຳເລັດອັນສະຫງ່າງາມ ຂອງພາລະກິດປ່ຽນແປງໃຫມ່ ແລະ ອະນາຄົດອັນສະຫວ່າງສະໄຫວຂອງປະເທດຊາດ.

ກອງປະຊຸມໃຫຍ່ ໄດ້ຮຽກຮ້ອງໄປຍັງທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນ ຈົ່ງເສີມຂະຫຍາຍ ມູນເຊື້ອຮັກຊາດ ແລະຈິດໃຈເອກະລາດ ເປັນເຈົ້າຕົນເອງ, ກໍ່ຄືມູນເຊື້ອສາມັກຄີເປັນປຶກແຜ່ນ ແລະດຸຫມັ່ນຂະຫຍັນພຽນ ອີງໃສ່ກຳລັງແຮງສັງລວມພາຍໃນ ແລະຊັບພະຍາກອນຂອງຊາດ ສົມທົບກັບກຳລັງແຮງຈາກການຮ່ວມມື ແລະການສະຫນັບສະຫນູນຊ່ວຍເຫລືອ ຂອງສາກົນ ເພື່ອສ້າງສາພັດທະນາ ປະເທດຊາດ ໃຫ້ຈະເລີນກ້າວຫນ້າ ຂຶ້ນເລື້ອຍໆ.

ທັງຫມົດນັ້ນ ແມ່ນແນໃສ່ສ້າງພື້ນຖານ ແລະ ຖວ່ງທ່າອັນຫນັກແຫນ້ນ ເພື່ອກ້າວສູ່ຄວາມຈະເລີນວັດທະນາ, ຄວາມຮັ່ງມີຜາສຸກ ແລະ ຄວາມສີວິໄລຍຸດຕິທຳ ເປັນກ້າວໆ .

ວຽງຈັນ, ວັນທີ 20 ມີນາ 1996

ກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ



ສູນທອນພົດ
ຂອງ ສະຫາຍ ຄຳໄຕ ສີພັນດອນ
ປະທານຄະນະບໍລິຫານງານສູນກາງພັກ
ກ່າວອັດກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກ
( ວັນທີ 20 ມີນາ 1996, ທີ່ວຽງຈັນ )

---

ຮຽນ ຄະນະປະທານ,
ຂໍນະມັດສະການ ພະເຖລານຸເຖລະ,
ບັນດາແຂກ ທັງພາຍໃນ ແລະຕ່າງປະເທດທີ່ນັບຖື,
ບັນດາ ທູຕານຸທູດ ແລະຜູ່ຕາງໜ້າອົງການຈັດຕັ້ງສາກົນ ທີ່ນັບຖື,
ບັນດາສະຫາຍຜູ່ແທນກອງປະຊຸມໃຫຍ່ທີ່ຮັກແພງ,

ກອງປະຊຸມໃຫຍ່ ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ ທີ່ໄດ້ດຳເນີນໃນບັນຍາກາດອັນພົດພື້ນ ແລະ ມີຄວາມໝາຍອັນເລິກເຊິ່ງ, ມາຮອດນີ້ ໄດ້ສິ້ນສຸດລົງ ດ້ວຍຜົນສຳເລັດອັນສະຫງ່າງາມ.

ຜົນສຳເລັດຂອງກອງປະຊຸມໃຫຍ່ຄັ້ງນີ້ ໄດ້ຢັ້ງຢືນໃຫ້ເຫັນແຈ້ງ ອີກເທື່ອໜຶ່ງ ກ່ຽວກັບຄວາມສາມັກຄີເປັນເອກະພາບ ແລະຄວາມຮັບຜິດຊອບການເມືອງ ໃນລະດັບສູງຂອງບັນດາຜູ່ແທນ ກໍຄືຂອງທົ່ວພັກເຮົາ ຕໍ່ຊະຕາກຳ ແລະອະນາຄົດ ຂອງປະເທດຊາດ. ທຸກບັນຫາທີ່ຍົກຂຶ້ນ ໃນກອງປະຊຸມໃຫຍ່ ລ້ວນແຕ່ໄດ້ຮັບການຄົ້ນຄວ້າພິຈາລະນາ ຢ່າງເລິກເຊິ່ງ ແລະໄດ້ຖືກຮັບຮອງເອົາຢ່າງເປັນເອກະສັນ. ພວກເຮົາມີຄວາມພາກພູມໃຈ ທີ່ເຫັນວ່າກອງປະຊຸມໃຫຍ່ ໃນຄັ້ງນີ້ ໄດ້ຢືນຢັນຢ່າງໜັກແໜ້ນ ກ່ຽວກັບການສືບຕໍ່ ເສີມຂະຫຍາຍ

ແນວທາງປ່ຽນແປງໃໝ່ ຮອບດ້ານ ຢ່າງມີຫລັກການ ຂອງພັກເຮົາ, ແນໃສ່ສ້າງພື້ນຖານ ແລະຖ່ວງທ່າອັນໜັກແໜ້ນ ໃຫ້ແກ່ການບູລະນະລະບອບປະຊາທິປະໄຕປະຊາຊົນ, ສ້າງປະເທດເຮົາ ໃຫ້ເປັນປະເທດສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນະຖາວອນ.

ນັ້ນແມ່ນການຕັດສິນໃຈທີ່ຖືກຕ້ອງ ທີ່ຢັ້ງຢືນຢ່າງເດັ່ນຊັດ ເຖິງມານະຈິດ ອັນແນ່ວແນ່ ແລະທັດສະນະຫລັກໝັ້ນ ອັນສະເໝີຕົ້ນສະເໝີປາຍ ຂອງພັກເຮົາ ທີ່ຍາມໃດກໍຈົງຮັກພັກດີ ຕໍ່ຜົນປະໂຫຍດ ຂອງຊາດ ແລະຄວາມມຸ່ງມາດປາຖະໜາ ຂອງປະຊາຊົນບັນດາເຜົ່າ. ພວກເຮົາພ້ອມກັນຊົມເຊີຍມູນເຊື້ອອັນສະຫງ່າງາມ ຂອງພັກເຮົາ ດັ່ງກ່າວນັ້ນຢ່າງສຸດອົກສຸດໃຈ !

ກອງປະຊຸມໃຫຍ່ ຂອງພວກເຮົາ ຮູ້ສຶກປິຕິຍິນດີ ແລະ ຂໍສະແດງຄວາມຂອບອົກຂອບໃຈ ຕໍ່ພະນັກງານປະຕິວັດອາວຸໂສ, ຕົວແທນຂອງປະຊາຊົນບັນດາເຜົ່າ ແລະ ບັນດາຊັ້ນຄົນ, ຕະຫລອດເຖິງພະສົງອົງເຈົ້າ ທີ່ໄດ້ນຳເອົາກຳລັງແຮງ ແຫ່ງການສະໜັບສະໜູນອຸ້ມຊູ ຂອງທົ່ວປວງຊົນ ມາສູ່ກອງປະຊຸມໃຫຍ່ຂອງພວກເຮົາຢ່າງສຸດອົກສຸດໃຈ ! ຂໍອວຍໄຊໃຫ້ພອນທຸກໆ ທ່ານ ຈົ່ງມີສຸຂະພາບເຂັ້ມແຂງ, ມີອາຍຸໝັ້ນຍືນ, ສືບຕໍ່ປະກອບສ່ວນຕາມເຫື່ອແຮງ ແລະດ້ວຍປະສົບການອັນອຸດົມຮັ່ງມີ ຂອງຕົນ ເຂົ້າໃນການຊຸກຍູ້ຂະບວນການຈັດຕັ້ງປະຕິບັດມະຕິ ຂອງກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກ, ກໍຄືພາລະກິດປ່ຽນແປງໃໝ່ ໃຫ້ເກີດດອກອອກຜົນຫລາຍຂຶ້ນເລື້ອຍໆ.

ກອງປະຊຸມໃຫຍ່ຂອງພວກເຮົາ ຖືເປັນກຽດຢ່າງສູງ ແລະ ຂໍຂອບໃຈຢ່າງຈິງໃຈ ຕໍ່ຄະນະຜູ້ແທນພັກກອມມູນິດຫວຽດນາມ ແລະ ຄະນະຜູ້ແທນພັກກອມມູນິດຈີນ ທີ່ໄດ້ນຳເອົາອາລົມຈິດແຫ່ງຄວາມສາມັກຄີມິດຕະພາບອັນເປັນມູນເຊື້ອ, ກຳລັງໃຈ ແລະ ການສະໜັບສະໜູນຖານສະຫາຍອ້າຍນ້ອງ ມາສູ່ພັກ ແລະ ປະຊາຊົນເຮົາ. ກອງປະຊຸມໃຫຍ່ຂອງພວກເຮົາ ຖືເປັນກຽດ ແລະ ສະແດງຄວາມຂອບໃຈ ຢ່າງຈິງໃຈ ຕໍ່ຄະນະຜູ້ແທນພັກປະຊາຊົນກຳປູເຈຍ ແລະ ພັກ ຟູນຊິນເປັກ ທີ່ໄດ້ນຳເອົາມິດຕະພາບ ອັນສະໜິດສະໜົມທີ່ມີມາແຕ່ໂບຮານນະການ ຂອງປະຊາຊົນກຳປູເຈຍ ມາສູ່ປະຊາຊົນເຮົາ. ພວກເຮົາຂໍສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ພັກອ້າຍນ້ອງ ແລະ ພັກຕ່າງໆ ທີ່ໄດ້ສະແດງຄວາມ

ພິມທີ່ໂຮງພິມແຫ່ງລັດ
ຕາມ ທບ 27/ຫພປ 260496
ຂະໜາດ 18×24
ຈຳນວນ 5.000 ຫົວ
ພິມແລ້ວ ວັນທີ 1.7.96

2.355